**ຄະນະໂຄສະນາສຶກສາ ກວາງຈິ**

# ສາຍພົວພັນມິດຕະພາບພິເສດຫວຽດນາມ-ລາວ, ລະຫວ່າງກວາງຈິ-ສະຫວັນນະເຂດ ແຕ່ປີ 1930 ມາຮອດປັດຈຸບັນ

(ເອກະສານໂຄສະນາເພື່ອປີສາມັກຄີມິດຕະພາບ ຫວຽດນາມ - ລາວ 2022)

*ກວາງຈິ, 8/2022*

**ຄຳນຳ**

A. ສາຍພົວພັນມິດຕະພາບພິເສດ ຫວຽດນາມ-ລາວ ……………..11

B. ສາຍພົວພັນມິດຕະພາບຮ່ວມມືລະຫວ່າງແຂວງກວາງຈິ ແລະ ແຂວງສະຫວັນນະເຂດ. ……………………………………..…………30

ພາກທີ I. ກວາງຈິ - ສະຫວັນນະເຂດ ເປັນບ້ານໃກ້ເຮືອນຄຽງທີ່ໃກ້ຊິດ, ມີມູນເຊື້ອອັນດີງາມ ໃນການຕໍ່ສູ້ປົດປ່ອຍປະເທດຊາດ ……………..………30

I.ວ່າດ້ວຍລັກສະນະທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳຂອງແຂວງກວາງຈິ-ສະຫວັນນະເຂດ ………………………………………30

1.ວ່າດ້ວຍລັກສະນະທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳຂອງແຂວງກວາງຈິ ………………………………………………………....30

2.ວ່າດ້ວຍລັກສະນະທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳຂອງແຂວງສະຫວັນນະເຂດ ………………………………………..……..33

II. ກວາງຈິ ແລະ ສະຫວັນນະເຂດ ມີການພົວພັນທາງດ້ານປະຫວັດສາດ ແລະ ມູນເຊື້ອອັນຍາວນານ ………………………………………….42

III. ກວາງຈິ ແລະ ສະຫວັນນະເຂດ ຢືນຄຽງຂ້າງກັນໃນການຕໍ່ສູ້ປົດປ່ອຍປະເທດຊາດ (1930-1975). ……………………………………….46

1. ກວາງຈິ-ສະຫວັນນະເຂດ ສາມັກຄີກັນຕ້ານພວກຣຸກຣານ ແລະ ລຸກຮືຂຶ້ນ ເພື່ອຍຶດອຳນາດການປົກຄອງ (1930-1945). ……………………46

2. ກອງທັບ ແລະ ປະຊາຊົນ ແຂວງກວາງຈິ ພ້ອມກັບ ກອງທັບ ແລະ ປະຊາຊົນສະຫວັນນະເຂດ ໄດ້ເປັນພັນທະມິດເພື່ອຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝລັ່ງ ຣຸກຣານ (1945 - 1954). ……………………..………………..47

3. ກອງທັບ ແລະປະຊາຊົນແຂວງກວາງຈິ ພ້ອມກັບກອງທັບ ແລະ ປະຊາຊົນແຂວງສະຫວັນນະເຂດ ໄດ້ເປັນພັນທະມິດຕ້ານຈັກກະພັດອາເມລິກາ ຣຸກຣານ (1954 - 1975). ………………………………………..53

ພາກທີ II. ຜົນງານຂອງການພົວພັນຮ່ວມມືບົນບັນດາຂົງເຂດລະຫວ່າງ ກວາງຈິ ແລະ ສະຫວັນນະເຂດ ແຕ່ປີ 1975 ມາຮອດປະຈຸບັນ …………....73

I. ກວາງຈິ ແລະ ສະຫວັນນະເຂດ ກໍ່ສ້າງ ແລະ ພັດທະນາການພົວພັນ ມິດຕະພາບ ໄລຍະ 1975 – 1989. ……………………………….73

1. ການຮ່ວມມືດ້ານປ້ອງກັນປະເທດ - ປ້ອງກັນຄວາມສະຫງົບ, ສ້າງເສັ້ນ ຊາຍແດນສັນຕິພາບ, ມິດຕະພາບ. ……………………………………73

2. ການຮ່ວມມືດ້ານເສດຖະກິດ ………………………..………78

3. ການຮ່ວມມືດ້ານວັດທະນະທຳ-ສັງຄົມ, ການສຶກສາ-ກໍ່ສ້າງ, ສາທາລະ ນະສຸກ ……………………………………………………………..82

4. ການຊ່ວຍເຫຼືອຟື້ນຟູໄພທຳມະຊາດ …………………………85

II. ກວາງຈິ ແລະສະຫວັນນະເຂດໄດ້ກໍ່ສ້າງ ແລະພັດທະນາສາຍພົວພັນ ມິດຕະພາບ ໄລແຕ່ຍະປີ 1989 ມາຮອດປັດຈຸບັນ. ………………..……86

1. ການຮ່ວມມືດ້ານປ້ອງກັນປະເທດ, ປ້ອງກັນຄວາມສະຫງົບ, ສ້າງເສັ້ນ ຊາຍແດນສັນຕິພາບ, ມິດຕະພາບ. ……………………………………94

2. ການພົວພັນຮ່ວມມືທາງດ້ານເສດຖະກິດ ........................108

2.1. ການຮ່ວມມືດ້ານກະສິກຳ ແລະ ປ່າໄມ້ ........................108

2.2. ການຮ່ວມມືດ້ານອຸດສາຫະກຳແລະການກໍ່ສ້າງ. ................114

2.3. ການຮ່ວມມືດ້ານຄົມມະນາຄົມ-ຂົນສົ່ງ ........................118

2.4. ການຮ່ວມມືດ້ານການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ....121

2.5. ການຮ່ວມມືໃນການຄຸ້ມຄອງເຄື່ອນໄຫວການຄ້າຊາຍແດນ.....128

3. ການຮ່ວມມືດ້ານວັດທະນະທຳ-ສັງຄົມ, ການສຶກສາ-ກໍ່ສ້າງ, ວິທະຍາສາດ ແລະ ເຕັກໂນໂລຊີ ແລະ ບັນດາດ້ານອື່ນໆ .............................129

3.1. ການຮ່ວມມືດ້ານວັດທະນະທຳ ແລະ ກິລາ. ....................129

3.2. ການຮ່ວມມືດ້ານສາທາລະນະສຸກ. ............................133

3.3. ການຮ່ວມມືດ້ານການສຶກສາ-ກໍ່ສ້າງ, ຍົກສູງຄຸນນະພາບແຫຼ່ງຊັບພະຍາກອນມະນຸດ. ..................................................137

3.4. ການຮ່ວມມືດ້ານວິທະຍາສາດ ແລະ ເຕັກໂນໂລຊີ .............139

ພາກທີ III. ສືບຕໍ່ເພີ່ມພູນຄູນສ້າງສາຍພົວພັນຮ່ວມມືມິດຕະພາບລະຫວ່າງແຂວງກວາງຈີ ແລະ ສະຫວັນນະເຂດ ນັບໃຫ້ມື້ນັບໜັ້ນຄົງ ..........141

ສະຫຼຸບ ...........................................................................148

## ຄຳນຳ

ຫວຽດນາມ ແລະລາວແມ່ນສອງປະເທດບ້ານໃກ້ເຮືອນຄຽງທີ່ມີພູເຂົາ ແລະແມ່ນ້ຳເຊື່ອມຕໍ່ກັນເປັນເສັ້ນທາງດຽວ. ການພົວພັນສະໜິດຕິດພັນລະຫວ່າງສອງປະເທດທີ່ໄດ້ກໍ່ຮ່າງສ້າງຕົວ ແລະຝຶກຝົນຫຼໍ່ຫຼອມໃນປະຫວັດສາດນັບເປັນພັນປີແຫ່ງການສ້າງປະເທດ ແລະປ້ອງກັນປະເທດ. ໂດຍສະເພາະໃນ 90 ປີທີ່ຜ່ານມາ, ການພົວພັນທີ່ເປັນມູນເຊື້ອອັນດີງາມ, ການຕິດພັນກັບຄວາມສັດຊື່ບໍລິສຸດລະຫວ່າງປະຊາຊົນສອງປະເທດໂດຍແມ່ນ ປະທານ ໂຮ່ຈີມິນ ແລະປະທານ ໄກສອນ ພົມວິຫານ, ປະທານ ສຸພານຸວົງ ເປັນຜູ້ສ້າງຕັ້ງພື້ນຖານ, ບັນດາການນຳຣຸ່ນສືບທອດ ແລະປະຊາຊົນສອງຊາດໄດ້ທຸ້ມເທເຫື່ອແຮງ, ເພີ່ມພູນຄູນສ້າງ, ກາຍເປັນ "ກົດເກນເປັນຕາຍ ແລະກຳລັງແຮງມະຫັດສະຈັນ" ນຳໄປສູ່ໄຊຊະນະອັນຍິ່ງໃຫຍ່ຂອງພາລະກິດປະຕິວັດ ໃນການຕໍ່ສູ້ເພື່ອຍາດເອົາອຳນາດການປົກຄອງ, ຕໍ່ສູ້ຕ້ານພວກລ່າເມືອງຂຶ້ນ ແລະຈັກກະພັດຜູ້ຮຸກຮານ, ກໍຄືພາລະກິດປ່ຽນແປງ ໃໝ່ທີ່ພາໃຫ້ສອງປະເທດພ້ອມກັນພັດທະນາໄປຕາມເສັ້ນທາງສັງຄົມນິຍົມ. ສອງຝ່າຍລ້ວນແຕ່ຢືນຢັນວ່າສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະການຮ່ວມມືຮອບດ້ານແມ່ນຊັບສິນລວມອັນລ້ຳຄ່າຂອງສອງພັກ ແລະສອງປະເທດຊາດ, ທີ່ຕ້ອງຮັກສາ, ເສີມຂະຫຍາຍ ແລະສືບຕໍ່ສືບທອດໃຫ້ຄົນລຸ້ນຫຼັງ ເພື່ອຮ່ວມກັນສ້າງປະເທດຫວຽດນາມ ແລະລາວໃຫ້ວັດທະນະຖາວອນ, ຄວາມຮັ່ງມີຜາສຸກ, ປະກອບ

ສ່ວນເພື່ອປັບປຸງສັນຕິພາບ, ສະຖຽນລະພາບ, ການຮ່ວມມື ແລະພັດທະນາຢູ່ໃນພາກພື້ນ ແລະໂລກ.

ຕິດພັນກັບປະຫວັດສາດສາຍພົວພັນແບບພິເສດຫວຽດນາມ - ລາວ, ໃນຕະຫຼອດໄລຍະການກໍ່ສ້າງ ແລະພັດທະນາ, ແຂວງກວາງຈິ (ຫວຽດນາມ) ແລະແຂວງສະຫວັນນະເຂດ (ລາວ) ສືບຕໍ່ເພີ່ມທະວີການພົວພັນຮ່ວມມື ແລະຊ່ວຍເຫຼືອເຊິ່ງກັນ ແລະກັນໃນທຸກດ້ານ. ແຂວງກວາງຈິມີເສັ້ນຊາຍແດນທາງບົກ 187,864 ກິໂລແມັດ ທີ່ໄດ້ຕິດຈອດກັບສອງແຂວງສະຫວັນນະເຂດ ແລະສາລະວັນ, ສປປ ລາວ; ເສັ້ນຊາຍແດນລາວ-ຫວຽດນາມ ຄຸ້ມຄອງໂດຍແຂວງສະຫວັນນະເຂດ ແລະກວາງຈິມີຄວາມຍາວ 108 ກວ່າ ກິໂລແມັດ, ຄຸ້ມຄອງແຕ່ຫຼັກໝາຍເລກທີ 576+865ມ ຫາຫຼັກໝາຍເລກທີ 607 (1,2), ລວມທັງ 50 ຈຸດທີ່ຕັ້ງ/ 66 ຫຼັກໝາຍແຫ່ງຊາດ ແລະເສົາໝາຍ. ມີດ່ານຊາຍແດນສາກົນ ລາວບາວ ແມ່ນສະດວກເພື່ອການເຊື່ອມຕໍ່ບົນເສັ້ນທາງແລວເສດຖະກິດຕາເວັນອອກ-ຕາເວັນຕົກ, ເປັນເສັ້ນທາງຍຸດທະສາດທີ່ມີຄວາມໝາຍສຳຄັນດ້ານເສດຖະກິດ ແລະການປ້ອງກັນປະເທດບໍ່ພຽງແຕ່ຂອງສອງແຂວງເທົ່ານັ້ນ ຫາກຍັງແມ່ນຂອງທັງສອງປະເທດອີກດ້ວຍ.

ຈາກສາຍພົວພັນ "ບ້ານໃກ້ເຮືອນຄຽງ" ໃນໄລຍະຕົ້ນແຫ່ງການປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ, "ຄວາມສາມັກຄີແບບພິເສດ, ພັນທະມິດຕໍ່ສູ້" ໃນການຕໍ່ຕ້ານສັດຕູຮ່ວມກັນ, ແຂວງກວາງຈິ ແລະແຂວງສະຫວັນນະເຂດໄດ້ຊຸກຍູ້ "ສາຍພົວພັນມິດຕະພາບແບບພິເສດ, ການຮ່ວມມືຢ່າງຮອບດ້ານ" ໃນພາລະກິດປົກປັກຮັກສາ ແລະສ້າງສາພັດທະນາ ປະເທດຊາດ. ເສີມຂະຫຍາຍຄວາມສາມັກຄີອັນບໍລິສຸດຜຸດຜ່ອງ ລະຫວ່າງປະຊາຊົນສອງປະເທດໃນການຕໍ່ຕ້ານສັດຕູ

ຮ່ວມກັນ, ມາຮອດປັດຈຸບັນນີ້, ແຂວງກວາງຈິ ແລະແຂວງສະຫວັນນະເຂດ ໄດ້ມີການພົວພັນຮ່ວມມືໃນຫຼາຍດ້ານ, ບັນລຸໄດ້ບັນດາຜົນງານທີ່ສຳຄັນ, ຊີວິດທາງດ້ານວັດຖຸ ແລະຈິດໃຈຂອງປະຊາຊົນ, ການປ້ອງກັນຄວາມສະຫງົບ ຢູ່ເຂດຊາຍແດນຂອງສອງແຂວງນັບມື້ນັບໄດ້ປົກກະຕິ, ປະກອບສ່ວນຊຸກຍູ້ໃຫ້ການພົວພັນແບບພິເສດລະຫວ່າງຫວຽດນາມ - ລາວ ນັບມື້ນັບພັດທະນາ.

ປີ 2022 ແມ່ນຂີດໝາຍສຳຄັນໃນປະຫວັດສາດແຫ່ງການພົວພັນຮ່ວມມືລະຫວ່າງສອງປະເທດ, ສະເຫຼີມສະຫຼອງແຫ່ງວັນສ້າງຕັ້ງສາຍພົວພັນທາງການທູດຫວຽດນາມ - ລາວ ຄົບຮອບ 60 ປີ (5/9/1962-5/9/2022) ແລະວັນເຊັນສົນທິສັນຍາມິດຕະພາບ ແລະການຮ່ວມມືລະຫວ່າງຫວຽດນາມ - ລາວ ຄົບຮອບ 45 ປີ (18/7/1977 – 18/7/2022). ເປັນສົນທິ ສັນຍາມີຄວາມໝາຍສຳຄັນທີ່ສຸດ, ແມ່ນພື້ນຖານທາງດ້ານນິຕິກຳທີ່ໜັກແໜ້ນໃຫ້ການເພີ່ມທະວີ ແລະເປີດກວ້າງການພົວພັນແບບພິເສດຫວຽດນາມ - ລາວ ໃນໄລຍະໃໝ່; ສ້າງພື້ນຖານໃຫ້ແກ່ສອງຝ່າຍເພື່ອຈະລົງນາມໃນບັນດາສັນຍາຮ່ວມມືລະຫວ່າງສອງປະເທດໃນໄລຍະຈະມາເຖິງ. ເພື່ອປົກປັກຮັກສາ, ເພີ່ມພູນຄູນສ້າງ ແລະເສີມຂະຫຍາຍການພົວພັນແບບພິເສດຫວຽດນາມ - ລາວ, ລາວ - ຫວຽດນາມ, ການພົວພັນມິດຕະພາບຮ່ວມມືຢ່າງຮອບດ້ານ ລະຫວ່າງແຂວງກວາງຈິ ແລະແຂວງສະຫວັນນະເຂດໃນປັດຈຸບັນ ແລະອະນາຄົດ, ຄະນະໂຄສະນາສຶກສາແຂວງກວາງຈິໄດ້ສົມທົບກັບຄະນະໂຄສະນາອົບຮົມ ແຂວງສະຫວັນນະເຂດເພື່ອຮຽບຮຽງເອກະສານໂຄສະນາເຜີຍແຜ່ສອງພາສາຫວຽດນາມ - ລາວ **"ສາຍພົວພັນມິດຕະພາບ, ການຮ່ວມມືແບບພິເສດຫວຽດນາມ - ລາວ; ລະຫວ່າງແຂວງກວາງຈິ - ສະຫວັນນະເຂດ ແຕ່ປີ 1930 ມາຮອດ ປັດຈຸບັນ".**

ເອກະສານລວມມີບັນດາເນື້ອໃນຕົ້ນຕໍຄື: ສະພາບລວມຂອງໄລຍະກໍ່ຮ່າງສ້າງຕົວຂຶ້ນ ແລະພັດທະນາສາຍພົວພັນແບບພິເສດຫວຽດນາມ - ລາວ, ລາວ - ຫວຽດນາມ ໃນ ວິວັດການຕໍ່ສູ້ປະຕິວັດ ແລະກິດຈະການປົກປັກຮັກສາ ແລະສ້າງສາ ພັດທະນາ ປະເທດຊາດໃນປັດຈຸບັນ; ການພົວພັນມິດຕະພາບ, ການຮ່ວມມື ລະຫວ່າງແຂວງກວາງຈິ ແລະແຂວງສະຫວັນນະເຂດ ຈາກເພື່ອນບ້ານໃກ້ຄຽງຕາມ ມູນເຊື້ອ, ແລ້ວຄຽງຂ້າງກັນໃນພາລະກິດຕໍ່ສູ້ຍາດເອົາເອກະລາດແຫ່ງຊາດ; ບັນດາ ຜົນງານທີ່ບັນລຸໄດ້ໃນ ສາຍພົວພັນມິດຕະພາບຢ່າງຮອບດ້ານ ແລະໂດຍພິເສດແມ່ນ ຂອງສາມແຂວງນັບແຕ່ໄດ້ໂຮມປະເທດຊາດເປັນເອກະພາບມາຮອດປັດຈຸບັນ; ສືບ ຕໍ່ເສີມສ້າງສາຍພົວພັນ ລະຫວ່າງແຂວງກວາງຈິ ແລະແຂວງສະຫວັນນະເຂດນັບມື້ ນັບໜັ້ນຄົງ.

ເອກະສານໄດ້ຮຽບຮຽງຢ່າງພິຖີພິຖັນ ແລະຈິງຈັງ, ແມ່ນເອກະສານໂຄສະນາ ເຜີຍແຜ່ທີ່ມີຄວາມໝາຍອັນສໍາຄັນ, ເພື່ອແຜ່ກະຈາຍໃຫ້ພະນັກງານ, ສະມາຊິກພັກ, ປະຊາຊົນ, ພິເສດແມ່ນຄົນຮຸ່ນໜຸ່ມໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງກວ່າກ່ຽວກັບ ສາຍພົວພັນສະໜິດແໜ້ນແຟ້ນ ຫວຽດນາມ - ລາວ, ສາຍພົວພັນລະຫວ່າງ ແຂວງກວາງຈິ ແລະແຂວງສະຫວັນນະເຂດ, ປະກອບສ່ວນປົກປັກຮັກສາ ແລະ ພັດທະນາສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ, ສາມັກຄີ ແລະການຮ່ວມມືຢ່າງ ຮອບດ້ານ ລະຫວ່າງສອງປະເທດ.

ໃນຂະບວນການຮຽບຮຽງແນ່ນອນວ່າຈະມີຂໍ້ຜິດພາດ ແລະຂໍ້ຈໍາກັດທີ່ຫຼີກ ລ່ຽງບໍ່ໄດ້, ຄະນະບັນນາທິການຂໍຮັບຮູ້ຢ່າງຈິງໃຈ ແລະນັບຖືບັນດາຄໍາຄິດເຫັນ ປະກອບຂອງບັນດາຜູ້ເຖົ້າຜູ້ແກ່ປະຕິວັດ; ບັນດາພະນັກງານ, ນັກຮົບທີ່ເຄີຍ

ເຂົ້າຮ່ວມການສູ້ຮົບ, ຕິດພັນ, ເສີມສ້າງ ແລະເພີ່ມທະວີສາຍພົວພັນມິດຕະພາບ, ຮອບດ້ານລະຫວ່າງແຂວງກວາງຈິ ແລະສະຫວັນນະເຂດ; ພ້ອມກັບບັນດາສະຫາຍ ແລະຜູ້ອ່ານ.

ໃນໂອກາດນີ້, ຄະນະບັນນາທິການ ຂໍສະແດງຄວາມຂອບໃຈມາຍັງຄະນະໂຄສະນາອົບຮົມ ແຂວງສະຫວັນນະເຂດ, ບັນດາໜ່ວຍງານ ແລະທ້ອງຖິ່ນ ທັງພາຍໃນ ແລະຕ່າງແຂວງທີ່ໄດ້ສົມທົບ ແລະສະໜັບສະໜູນບັນດາສາລະຄະດີອັນລ້ຳຄ່າ ເພື່ອປະກອບເຂົ້າໃນເອກະສານ.

*ກວາງຈິ, 8/2022*

## ກ. ສາຍພົວພັນມິດຕະພາບພິເສດ ຫວຽດນາມ-ລາວ

ໃນປະຫວັດສາດການພົວພັນສາກົນແຕ່ກ່ອນມາຮອດປັດຈຸບັນ, ສາຍພົວພັນມິດຕະພາບ, ຄວາມສາມັກຄີແບບພິເສດ ແລະການຮ່ວມມືຮອບດ້ານລະຫວ່າງຫວຽດນາມ ແລະລາວ ແມ່ນແບບຢ່າງທີ່ເປັນເອກະລັກສະເພາະຂອງໂລກ. ຜ່ານຜ່າຫຼາຍໄລຍະ ແລະເຫດການຂອງປະຫວັດສາດ, ສອງປະເທດຫວຽດນາມ - ລາວ ໄດ້ພ້ອມກັນອີງໃສ່ສາຍພູຫຼວງໃຫຍ່ໂຕມະໂຫຖານ, ຄຽງບ່າຄຽງໄຫຼ່ກັນ, ເພີ່ມພູນຄູນສ້າງສາຍພົວພັນສາມັກຄີແບບພິເສດຫວຽດນາມ - ລາວທີ່ຈີບງາມລໍ້າເລີດ. ເປັນແບບຢ່າງທີ່ຫາຍາກ ກ່ຽວກັບຄວາມສະໜິດຕິດພັນຢ່າງໝັ້ນແກ່ນ, ຈິງຮັກພັກດີ, ໂປ່ງໃສ ແລະມີປະສິດທິຜົນລະຫວ່າງສອງປະເທດໃນການຕໍ່ສູ້ ເພື່ອເອກະລາດ, ເສລີພາບ ແລະຄວາມກ້າວໜ້າຂອງສັງຄົມ.

ດ້ວຍເສັ້ນຊາຍແດນລວມຍາວ 2.300 ກວ່າ ກິໂລແມັດ, ມີວັດທະນະທຳທີ່ຄ້າຍຄືກັນ, ສອງຊົນເຜົ່າຫວຽດນາມ ແລະ ລາວ ໄດ້ຮ່ວມມືກັນຂຽນບັນດາໜ້າປະຫວັດສາດທີ່ສະຫງ່າອົງອາດ, ປັກຮອຍບັນດາຫຼັກໝາຍອັນຮຸ່ງເຮືອງເຫຼືອງເຫຼື້ອມກ່ຽວກັບຄວາມຜູກພັນຮັກໄຄ່ເໝືອນດັ່ງອ້າຍນ້ອງຮ່ວມທ້ອງດຽວ, ເປັນຕາຍຮ່ວມກັນ: ປະຊາຊົນລາວໄດ້ຕັ້ງໜ້າຕໍ່ສູ້ຕ້ານລະບອບລ່າຫົວເມືອງຂຶ້ນ, ປະສານສົມທົບ, ສະໜັບສະໜູນການປະຕິວັດຫວຽດນາມ ໄລຍະ 1930-1939 ແລະປະຕິບັດການເຄື່ອນໄຫວລຸກຮືຂຶ້ນດ້ວຍການປະກອບອາວຸດຍຶດອຳນາດໃນໄລຍະ 1939-1945. ຮ່ວມມືຊ່ວຍເຫຼືອເຊິ່ງກັນ ແລະກັນ ຕ້ານການຮຸກຮານ ຂອງພວກລ່າເມືອງ

ຂຶ້ນຝຣັ່ງ; ປະສານສົມທົບໃນການຕໍ່ສູ້ເພື່ອປະຕິບັດສັນຍາເຢແນເວີ, ຕ້ານຍຸດທະສາດສົງຄາມພິເສດຂອງຈັກກະພັດອາເມລິກາ, ແລະ ສ້າງຕັ້ງສາຍພົວພັນທາງການທູດ (1954-1962); ພັດທະນາພັນທະມິດຕໍ່ສູ້, ເອົາຊະນະບັນດາຍຸດທະສາດສົງຄາມຂອງຈັກກະພັດອາເມລິກາ, ຍາດເອົາໄຊຊະນະຢ່າງສົມບູນ (1973-1975); ການພົວພັນແບບພິເສດຫວຽດນາມ - ລາວ, ລາວ - ຫວຽດນາມ ໃນໄລຍະທົດສອບ, ໄດ້ປູທາງໃຫ້ແກ່ການປ່ຽນໃໝ່ (1976 - 1986). ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ຫວຽດນາມ - ລາວ, ລາວ - ຫວຽດນາມ ໃນໄລຍະປ່ຽນໃໝ່ ແລະການເຊື່ອມໂຍງເຂົ້າສາກົນ (1986 - ປັດຈຸບັນ).

ໃນວິວັດການປະຕິວັດດັ່ງກ່າວ, ແຕ່ລະບາດກ້າວພັດທະນາຂອງການປະຕິວັດລາວໄດ້ສ້າງກໍາລັງໜູນ ໃຫ້ການປະຕິວັດຫວຽດນາມເພື່ອຍາດເອົາໄດ້ໄຊຊະນະ ແລະກົງກັນຂ້າມ, ການໄຊຊະນະຂອງປະຕິວັດຫວຽດນາມໄດ້ສ້າງເງື່ອນໄຂໃຫ້ການປະຕິວັດລາວມີຄວາມເຂັ້ມແຂງ ແລະໄດ້ຮັບໄຊຊະນະ. ການພົວພັນນັ້ນແມ່ນມາຈາກຄວາມຮຽກຮ້ອງພາວະວິໄສຂອງການຕໍ່ສູ້ ປົດປ່ອຍຖືທາດແທ້ສາກົນກໍາມາຊີບ, ພາໃຫ້ມີປະສິດທິຜົນຢ່າງຊັດເຈນ. ສະນັ້ນ, ສາຍພົວພັນນັ້ນຈຶ່ງກາຍເປັນມໍລະດົກອັນລໍ້າຄ່າ, ເປັນກົດເກນແຫ່ງການຄົງຕົວ ແລະພັດທະນາຂອງສອງປະເທດ ແລະທັງເປັນສາຍພົວພັນທີ່ຈົງຮັກພັກດີ, ບໍລິສຸດ, ພິເສດ ແລະຫາຍາກໃນການພົວພັນສາກົນ. ໃນພາລະກິດລວມນັ້ນ, ລາວ ແລະຫວຽດນາມ ໄດ້ກາຍເປັນເພື່ອນມິດ, ສະຫາຍ, ເປັນອ້າຍນ້ອງຮ່ວມທ້ອງແມ່ດຽວ, ຮ່ວມທຸກຮ່ວມສຸກ, ຮ່ວມສັດຕູດຽວກັນ, ຮ່ວມຊຸມຕະຄອງດຽວກັນ ຕໍ່ສູ້ກັບພວກລ່າເມືອງຂຶ້ນຝລັ່ງ ແລະຈັກກະພັດອາເມລິກາ. ນັ້ນແມ່ນສາຍພົວພັນເຖິງວ່າແຕ່ກ່ອນຫຼືປັດຈຸບັນນີ້ກໍຫາ

ຍາກ - ເປັນສາຍພົວພັນບ້ານໃກ້ເຮືອນຄຽງແບບທຳມະຊາດ, ມີປະຫວັດສາດອັນຍາວນານ, ຮ່ວມສາຍພູຫຼວງ, ຮ່ວມແມ່ນ້ຳຂອງ, ຮ່ວມອຸດົມຄະຕິ... ສາຍພົວພັນພິເສດ ຫວຽດນາມ - ລາວ, ລາວ - ຫວຽດນາມ ໄດ້ຜ່ານຜ່າການທົດສອບທີ່ດຸເດືອດເຄັ່ງຄັດຫຼາຍຢ່າງ. ດ້ວຍການເສຍ ສະຫຼະຢ່າງທຸກຍາກລຳບາກເພື່ອເອກະລາດແລະເສລີພາບ, ຄວາມຜາສຸກຂອງສອງປະເທດ ແລະປະຊາຊົນສອງປະເທດໄດ້ກາຍເປັນພະລັງອັນມະຫັດສະຈັນ ທີ່ນຳເອົາໄຊຊະນະອັນໃຫຍ່ຫຼວງຂອງຫວຽດນາມ ແລະລາວໃນການຕໍ່ສູ້ຍາດເອົາອຳນາດຕໍ່ສູ້ຕ້ານລ່າເມືອງຂຶ້ນຝລັ່ງ ແລະຈັກກະພັດອາເມລິກາຜູ້ຮຸກຮານ; ດຳເນີນພາລະກິດປ່ຽນໃໝ່ພາສອງປະເທດພ້ອມກັນພັດທະນາໄປຕາມເສັ້ນທາງສັງຄົມນິຍົມຢ່າງສຳເລັດ. ສຳລັບປະຊາຊົນສອງປະເທດຫວຽດນາມ ແລະລາວ, ສາຍພົວພັນທີ່ຕິດພັນສະໜິດແໜ້ນໄດ້ຖືວ່າແມ່ນເຫດຜົນຂອງຊີວິດ, ເປັນຄວາມຜູກພັນຮັກໄຄ່ເລືອດເນື້ອເຊື້ອດຽວສະໜິດສະໜົມ, ກ່ອນແລະຫຼັງ ເຊັ່ນດຽວກັນ, ບໍ່ສາມາດແຍກອອກຈາກກັນໄດ້.

ພິເສດໃນຫຼາຍທົດສະວັດທີ່ຜ່ານມາ, ສາຍພົວພັນມິດຕະພາບທີ່ເປັນມູນເຊື້ອອັນດີງາມ, ຄວາມຕິດພັນສັດຊື່ບໍລິສຸດລະຫວ່າງປະຊາຊົນສອງປະເທດໂດຍທ່ານ ປະທານ ໂຮ່ຈີມິນ ແລະປະທານ ໄກສອນ ພົມວິຫານ ສ້າງຕັ້ງ, ໃຫ້ບັນດາການນຳຮຸ່ນສືບທອດຂອງສອງພັກ, ສອງລັດ ແລະປະຊາຊົນສອງປະເທດທຸ້ມເທເຫື່ອແຮງເພີ່ມພູນຄູນສ້າງ, ໄດ້ຫຼໍ່ຫຼອມຜ່ານຫຼາຍການທົດສອບ ແລະໄດ້ຝຶກຝົນຫຼໍ່ຫຼອມແບບຖະນຸຖະໜອມ, ພັດທະນາຢ່າງບໍ່ຢຸດຢັ້ງ ແລະໄດ້ກາຍເປັນສາຍພົວພັນແບບພິເສດ, ຈິງຮັກພັກດີ, ບໍລິສຸດ ແລະເປັນແບບຢ່າງທີ່ຫາຍາກໃນສາຍພົວພັນສາກົນໃນປັດຈຸບັນນີ້.

ທ່ານປະທານໂຮ່ຈີມິນ ໄດ້ກ່າວວ່າ: "ສອງຊົນຊາດຫວຽດນາມ ແລະ ລາວ ໄດ້ດຳລົງຊີວິດຢູ່ຄຽງຄູ່ກັນບົນຜືນແຜ່ນດິນອັນດຽວກັນ, ມີຮ່ວມກັນສາຍພູຫຼວງ. ສອງຊົນຊາດພວກເຮົາໄດ້ເພິ່ງພາອາໄສເຊິ່ງກັນ ແລະ ກັນ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ... ນ້ຳໃຈປະເທດບ້ານໃກ້ເຮືອນຄຽງອ້າຍນ້ອງ ຫວຽດ - ລາວ ເປັນໜ້າດູດດື່ມເຊິ່ງບໍ່ມີວັນທີ່ຈືດຈາງໄດ້". ປະທານ ໄກສອນ ພົມວິຫານ ເຄີຍກ່າວໄວ້ວ່າ: "ເຖິງວ່າພູຈະເຈື່ອນ, ແມ່ນ້ຳລຳເຊຈະເຫືອດແຫ້ງ, ແຕ່ສາຍພົວພັນມິດຕະພາບ ລາວ-ຫວຽດນາມ ຈະໝັ້ນຄົງຄະໜົງແກ່ນ ຊົ່ວກາລະນານ". ແນວຄິດອັນໃຫຍ່ຫຼວງຂອງການນຳສອງປະເທດໄດ້ກາຍເປັນເຂັມທິດຊີ້ນຳ, ເຊິ່ງໄດ້ພັກ, ລັດຖະບານ ແລະ ປະຊາຊົນສອງປະເທດປະຕິບັດຢ່າງສະເໝີຕົ້ນສະເໝີປາຍໃນຕະຫຼອດຊຸມປີຕໍ່ສູ້ຕ້ານສັດຕູຮ່ວມກັນ, ຍາດເອົາເອກະລາດ,ໃຫ້ປະເທດເປັນເອກະພາບສັນຕິພາບ, ກໍ່ສ້າງ, ປ່ຽນໃຫມ່, ເຊື່ອມໂຍງ ແລະພັດທະນາ.

ຫວນຄືນມູນເຊື້ອປະຫວັດສາດວິລະຊົນໃນເມື່ອກ່ອນ, ປະຊາຊົນສອງຊາດມີຄວາມເອກອ້າງທະນົງໃຈໃນຂະບວນການສ້າງສາ ແລະພັດທະນາສາຍພົວພັນແບບພິເສດ ແລະຫາຍາກລະຫວ່າງປະຊາຊົນສອງປະເທດ. ການກຳເນີດຂອງລັດຖະບານ ປະເທດສາທາລະນະລັດປະຊາທິປະໄຕຫວຽດນາມ (2/9/1945) ແລະລັດຖະບານລາວອິດສະຫຼະ (12/10/1945) ດ້ວຍບັນດາຄວາມມຸ່ງມາດປາດຖະໜາຂອງສອງຝ່າຍກ່ຽວກັບການສ້າງສາຍພົວພັນປອງດອງກັນ ແລະໝັ້ນແກ່ນເປັນໜຶ່ງໃນບັນດາ ພື້ນຖານເພື່ອນຳເອົາຄວາມສາມັກຄີ ແລະຊ່ວຍເຫຼືອເຊິ່ງກັນ ແລະກັນຂຶ້ນສູ່ລະດັບພັນທະມິດຕໍ່ສູ້ໂດຍພື້ນຖານນິຕິກຳທຳອິດ ແມ່ນສົນທິສັນຍາຊ່ວຍເຫຼືອເຊິ່ງ

ກັນ ແລະກັນລາວ-ຫວຽດນາມ ແລະສັນຍາວ່າດ້ວຍກອງທະຫານພັນທະມິດລາວ-ຫວຽດນາມ.

ວັນທີ 5 ກັນຍາ 1962, ຫວຽດນາມ ແລະລາວ ໄດ້ສ້າງຕັ້ງການພົວພັນທາງການທູດຢ່າງເປັນທາງການ, ໄດ້ໄຂໄລຍະໃໝ່ໃນປະຫວັດສາດຂອງການພົວພັນສອງປະເທດ. ພັນທະມິດຕໍ່ສູ້ຂອງກອງທັບ ແລະປະຊາຊົນສອງປະເທດ ຫວຽດນາມ - ລາວ ນັບມື້ນັບໄດ້ເພີ່ມທະວີ ແລະສາຍພູຫຼວງທີ່ໃຫຍ່ໂຕມະໂຫຖານດ້ວຍສອງເບື້ອງສາຍພູຫຼວງຕາເວັນອອກ - ສາຍພູຫຼວງຕາເວັນຕົກໄດ້ກາຍເປັນພາບພົດທີ່ມີຊີວິດຊີວາຂອງສາຍພົວພັນແບບສະໜິດແໜ້ນ “ເຂົ້າເມັດຫັກ ຜັກເສັ້ນໜຶ່ງກໍແບ່ງປັນກັນກິນ” ໃນຊຸມປີທີ່ຫຍຸ້ງຍາກລໍາບາກແຕ່ກໍເຕັມໄປດ້ວຍຄວາມສະຫງ່າອົງອາດ, ໄດ້ຮ່ວມກັນປະກອບສ່ວນອັນໃຫຍ່ຫຼວງເຂົ້າໃນການຊ່ວຍເຫຼືອປະຊາຊົນ ແລະກໍາລັງປະກອບອາວຸດຂອງສອງປະເທດຜ່ານຈາກໄຊຊະນະໜຶ່ງໄປສູ່ອີກໄຊຊະນະໜຶ່ງ. ເຊິ່ງສຸດຍອດແມ່ນວັນມະຫາໄຊໃນລະດູບານໃໝ່ 30 ເມສາ 1975 ຢູ່ ຫວຽດນາມ ແລະໄຊຊະນະ ວັນທີ 2 ທັນວາ 1975 ຢູ່ລາວ.

ພາຍຫຼັງຫວຽດນາມ ໄດ້ສໍາເລັດການໂຮມປະເທດຊາດເປັນເອກະພາບ ແລະສາທາລະນະລັດ ປະຊາທິປະໄຕ ປະຊາທິປະໄຕປະຊາຊົນລາວ ໄດ້ເກີດຂຶ້ນໃນປີ 1975, ສາຍພົວພັນ ຫວຽດນາມ - ລາວ ໄດ້ກ້າວເຂົ້າສູ່ໄລຍະໃໝ່. ຈາກການເປັນພັນທະມິດເພື່ອຕໍ່ສູ້ຮ່ວມກັນໃນຊຸ່ມຕະຄອງດຽວກັນມາເປັນການຮ່ວມມືຮອບດ້ານລະຫວ່າງສອງປະເທດທີ່ມີເອກະລາດ ແລະອະທິປະໄຕ. ນັ້ນແມ່ນສາຍພົວພັນມິດຕະພາບ, ຄວາມສາມັກຄີແບບພິເສດ ແລະການຮ່ວມມືຮອບດ້ານລະຫວ່າງສອງພັກ ແລະສອງລັດໂດຍອີງຕາມສົນທິສັນຍາມິດຕະພາບ ແລະການຮ່ວມມືລະຫວ່າງ

ຫວຽດນາມ - ລາວ ໄດ້ລົງນາມໃນວັນທີ 18 ກໍລະກົດ 1977. ເຫດການເປັນຂີດໝາຍບາດລ້ຽວໃນການພົວພັນລະຫວ່າງສອງປະເທດແມ່ນຄະນະຜູ້ແທນຂັ້ນສູງຂອງພັກ ແລະ ລັດຖະບານຫວຽດນາມ ນໍາໂດຍທ່ານ ເລຢ້ວນ ເລຂາທິການໃຫຍ່ ແລະທ່ານ ຟ້າມວັນດົ່ງ ນາຍົກລັດຖະມົນຕີ ໄດ້ມາຢ້ຽມຢາມລາວຢ່າງເປັນທາງການແຕ່ວັນທີ 15-18 ກໍລະກົດ 1977. ໃນການຢ້ຽມຢາມຄັ້ງນີ້, ສອງປະເທດໄດ້ລົງນາມຢ່າງເປັນທາງການບັນດາສົນທິສັນຍາທີ່ເປັນຂີດໝາຍບາດລ້ຽວໃໝ່ໃນການພົວພັນລະຫວ່າງສອງປະເທດ, ລວມມີ: ສົນທິສັນຍາມິດຕະພາບ ແລະການຮ່ວມມືລະຫວ່າງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແລະສາທາລະນະລັດປະຊາທິປະໄຕຂອງປະຊາຊົນລາວ; ສົນທິສັນຍາວ່າດ້ວຍການວາງກໍານົດເຂດຊາຍແດນແຫ່ງຊາດ ລະຫວ່າງສາທາລະນະລັດສັງຄົມນິຍົມຫວຽດນາມ ແລະສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ; ໄດ້ອອກຖະແຫຼງການຮ່ວມກ່ຽວກັບການເພີ່ມທະວີຄວາມໄວ້ເນື້ອເຊື່ອໃຈ ແລະການຮ່ວມມືອັນຍາວນານລະຫວ່າງສອງປະເທດ. ‘‘ສອງຝ່າຍໃຫ້ຄໍາໝັ້ນສັນຍາເພື່ອປົກປັກຮັກສາ ແລະ ພັດທະນາສາຍພົວພັນແບບພິເສດຫວຽດນາມ - ລາວ, ລາວ - ຫວຽດນາມ, ເພີ່ມທະວີຄວາມສາມັກຄີ ແລະເຊື່ອໃຈເຊິ່ງກັນ ແລະ ກັນຢ່າງບໍ່ຢຸດຢັ້ງ, ການຮ່ວມມືຢ່າງຍາວນານ ແລະການຊ່ວຍເຫຼືອເຊິ່ງກັນ ແລະກັນໃນທຸກດ້ານບົນຈິດໃຈຂອງລັດທິສາກົນກໍາມະຊີບ ແລະບົນຫຼັກການຄວາມສະເໝີພາບຢ່າງສົມບູນ, ເຄົາລົບເອກະລາດ, ອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງກັນ, ເຄົາລົບຜົນປະໂຫຍດອັນຊອບທໍາຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ”. ສົນທິສັນຍາດັ່ງກ່າວໄດ້ສ້າງຂອບກົດໝາຍເພື່ອຊຸກຍູ້ການຮ່ວມມືຮອບດ້ານ. ໄດ້ລົງນາມໃນບັນດາເອກະສານ, ສັນຍາຮ່ວມມື

ຫຼາຍສະບັບ, ສ້າງການປ່ຽນແປງຍິ່ງໃຫຍ່ກ່ຽວກັບດ້ານຄຸນນະພາບການພົວພັນແບບພິເສດລະຫວ່າງສອງປະເທດໃນທຸກຂົງເຂດ ການເມືອງ, ເສດຖະກິດ, ການຕ່າງປະເທດ, ປ້ອງກັນຄວາມສະຫງົບ, ປ້ອງກັນຊາດ, ການສຶກສາ, ສາທາລະນະສຸກ, ວັດທະນະທຳ... ການຮ່ວມມືຢ່າງແໜ້ນແຟ້ນລະຫວ່າງສອງລັດຖະບານໄດ້ສ້າງສາຍຮ່ວມເຂົ້າກັນຢ່າງແໜ້ນແຟ້ນ, ຄ້ຳຊູກັນ ແລະສ້າງເງື່ອນໄຂສະດວກໃຫ້ແກ່ການພາລະກິດພັດທະນາຂອງທັງຫວຽດນາມ ແລະລາວ.

ການລົງນາມໃນບັນດາສົນທິສັນຍາ ຍັງມີຄວາມໝາຍສາກົນທີ່ສຳຄັນ, ຍົກສູງຈິດໃຈສາກົນອັນບໍລິສຸດລະຫວ່າງສອງປະເທດພວມພ້ອມກັນມຸ່ງໄປເຖິງຈຸດໝາຍສ້າງສາລັດທິສັງຄົມນິຍົມ ແລະເສີມຂະຫຍາຍ ອິດທິພົນຢ່າງຕັ້ງໜ້າໃນພາກພື້ນ. ພາຍຫຼັງໄດ້ລົງນາມໃນສົນທິສັນຍາມິດຕະພາບ ແລະການຮ່ວມມື, ການພົວພັນຮ່ວມມືຮອບດ້ານລະຫວ່າງຫວຽດນາມ - ລາວ ໄດ້ຮັບການປັບປຸງ, ປ່ຽນໃໝ່ ແລະພັດທະນາຢ່າງເລິກເຊິ່ງຢ່າງບໍ່ຢຸດຢັ້ງ. ເນື້ອໃນຂອງການຮ່ວມມືເພີ່ມຄວາມແທດຈິງ, ປະສິດທິຜົນການຮ່ວມມືສືບຕໍ່ໄດ້ຮັບການຍົກສູງ ແລະເພີ່ມທະວີໃນທຸກຂົງເຂດ. ການພົວພັນດ້ານການເມືອງໄດ້ຮັບການຊຸກຍູ້ຢ່າງແຮງ, ນັບມື້ນັບຕິດພັນກັນຢ່າງເຊື່ອໝັ້ນ, ສອງຝ່າຍໄດ້ສົມທົບກັນຈັດຕັ້ງບັນດາການຢ້ຽມຢາມ, ພົບປະລະຫວ່າງການນຳຂັ້ນສູງຂອງສອງພັກ ແລະສອງລັດ

ໃນທ້າຍຊຸມປີ 80, ຕົ້ນຊຸມປີ 90 ຂອງສະຕະວັດທີ XX ເປັນຕົ້ນມາ, ຄຽງຄູ່ກັບການປະຕິບັດນະໂຍບາຍການຕ່າງປະເທດທີ່ເປີດກວ້າງ, ລາວ ແລະຫວຽດນາມຍັງສືບຕໍ່ໃຫ້ບຸລິມະສິດຮັດແໜ້ນ ແລະພັດທະນາສາຍພົວພັນມິດຕະພາບພິເສດລະຫວ່າງສອງປະເທດ. ຍິ່ງໄປກວ່ານັ້ນ, "ພາລະກິດປ່ຽນແປງໃໝ່ຢູ່ສອງປະເທດໃນ

ໄລຍະນີ້ມີຫຼາຍຈຸດທີ່ຄ້າຍຄືກັນ ແລະກ່ຽວຂ້ອງກັນຢ່າງແໜ້ນແຟ້ນ. ທຸກການຜັນປ່ຽນດ້ານການເມືອງ, ສັງຄົມ ແລະເສດຖະກິດຂອງລາວຢູ່ໃນລະດັບຕ່າງກັນລ້ວນແຕ່ໄດ້ມີການຜົນກະທົບໂດຍກົງຕໍ່ຫວຽດນາມ ແລະກົງກັນຂ້າມ. ສະນັ້ນ, ເພີ່ມທະວີການພົວພັນຮ່ວມມືແມ່ນໜ້າທີ່ສຳຄັນຂອງພັກ, ລັດຖະບານ ແລະປະຊາຊົນລາວກໍຄືຫວຽດນາມ. ການພົວພັນຮ່ວມມືດ້ານການເມືອງລະຫວ່າງລາວ ແລະຫວຽດນາມໃນໄລຍະນີ້ສອງຝ່າຍສືບຕໍ່ຮັກສາ ແລະຊຸກຍູ້ບັນດາການພົວພັນ ແລະແລກປ່ຽນສອງຝ່າຍ ໂດຍຜ່ານການຢ້ຽມຢາມ ແລະເຮັດວຽກຂອງຄະນະ ຜູ້ແທນຂັ້ນສູງ. ດ້ວຍທ່າອ່ຽງເປີດກວ້າງຮ່ວມມືໃນພາກພື້ນ ແລະສາກົນ, ເພື່ອຮັກສາສາຍພົວພັນມິດຕະພາບພິເສດ ແລະການຮ່ວມມືຮອບດ້ານລາວ - ຫວຽດນາມ ພັດທະນາຢ່າງບໍ່ຢຸດຢັ້ງ, ລັດຖະບານສອງປະເທດໄດ້ປັບປຸງບັນດາວິທີການ ແລະກົນໄກຮ່ວມມື.

ປີ 1991, ຫວຽດນາມ ແລະ ລາວ ໄດ້ລົງນາມໃນສັນຍາສຳຄັນຫຼາຍສະບັບ. ປີ 1992, ຄະນະກຳມະການຮ່ວມມືລະຫວ່າງລັດຖະບານ ຫວຽດນາມ - ລາວ ໄດ້ສ້າງຕັ້ງຂຶ້ນເພື່ອສ້າງເງື່ອນໄຂໃຫ້ລັດຖະບານ ສອງປະເທດຜັນຂະຫຍາຍບັນດາຂໍ້ຕົກລົງຮ່ວມມືໃຫ້ສະດວກກວ່າ. ຫວຽດນາມ ແລະລາວ ຕັ້ງໜ້າຜັນຂະຫຍາຍບັນດາສັນຍາລະຫວ່າງສອງລັດຖະບານ ແລະບັນດາຂໍ້ຕົກລົງຕ່າງໆທີ່ກອງປະຊຸມຂອງຄະນະກຳມະການລະຫວ່າງລັດຖະບານ; ຕັ້ງໜ້າຜັນຂະຫຍາຍຂໍ້ຕົກລົງວ່າດ້ວຍຍຸດທະສາດການຮ່ວມມືດ້ານເສດຖະກິດ, ວັດທະນະທຳ, ການສຶກສາ, ວິທະຍາສາດ ແລະເຕັກນິກ ຫວຽດນາມ - ລາວ; ເພີ່ມທະວີວຽກງານແນະນຳ, ກວດກາ, ຊຸກຍູ້, ຕັ້ງໜ້າລົບລ້າງຄວາມຫຍຸ້ງຍາກ ແລະສິ່ງກີດຂວາງ, ສືບຕໍ່ການລົງນາມໃນເອກະສານຮ່ວມມື

ຫຼາຍສະບັບ, ສ້າງແລວທາງດ້ານກົດໝາຍຢ່າງຄົບຊຸດ ເພື່ອຊຸກຍູ້ການຮ່ວມມື ລະຫວ່າງສອງປະເທດ.

ກ້າວເຂົ້າສູ່ສະຕະວັດທີ XXI, ນີ້ແມ່ນໄລຍະທີ່ສອງປະເທດເພີ່ມທະວີ ຄວາມສາມັກຄີແບບພິເສດ, ການຮ່ວມມື ຮອບດ້ານທັງລວງກວ້າງ ແລະລວງເລິກ, ຄວາມເຊື່ອໝັ້ນ ແລະພັດທະນາ, ບົນພື້ນຖານສອງປະເທດໄດ້ບັນລຸບັນດາຜົນງານ ອັນສຳຄັນ, ມີຄວາມໝາຍທາງດ້ານປະຫວັດສາດໃນວິວັດການປ່ຽນໃໝ່. ບັນດາ ຜົນງານທີ່ບັນລຸໄດ້ຈາກການຮ່ວມມືດ້ານການເມືອງ, ການຕ່າງປະເທດ, ປ້ອງກັນຊາ ດ-ປ້ອງກັນຄວາມສະຫງົບຈົນຮອດດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ-ເຕັກນິກ, ການຮ່ວມມືລະຫວ່າງທ້ອງຖິ່ນ ໄດ້ປະກອບສ່ວນຊຸກຍູ້ຢ່າງຕັ້ງໜ້າເຂົ້າໃນ ການກໍ່ສ້າງ, ພັດທະນາ, ເຊື່ອມໂຍງເຂົ້າກັບພາກພື້ນ ແລະສາກົນຂອງແຕ່ລະປະເທດ. ຫຼາຍກິດຈະການ ແລະໂຄງການຮ່ວມມືຢ່າງແທດຈິງລະຫວ່າງສອງປະເທດຄື: ເຄືອ ຂ່າຍໂທລະຄົມ, ຄົມມະນາຄົມ, ໄຟຟ້ານ້ຳຕົກ, ປູກຢາງພາລາ, ກາເຟ, ໂຮງຮຽນ, ໂຮງໝໍ... ໄດ້ສ້າງສຳເລັດ ແລະນຳໃຊ້ຢູ່ຫຼາຍເຂດ, ເຂດຫ່າງໄກສອກຫຼີກ ແລະ ຫຍຸ້ງຍາກຂອງລາວ. ປະກອບສ່ວນສຳຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ.

ພາຍຫຼັງ 30 ປີແຫ່ງການດຳເນີນການປ່ຽນໃໝ່ (ເດືອນ 11/2016), ສອງ ພັກໄດ້ອອກຖະແຫຼງການຮ່ວມທີ່ລະບຸແຈ້ງວ່າ: “ສອງຝ່າຍຢືນຢັນສາຍພົວພັນ ມິດຕະພາບທີ່ເປັນມູນເຊື້ອ, ຄວາມສາມັກຄີແບບພິເສດ ແລະການຮ່ວມມືຮອບດ້ານ ຫວຽດນາມ - ລາວ ໄດ້ຮັບການຮັກສາເພີ່ມພູນຄູນສ້າງຈາກປະທານໂຮ່ຈີມິນ ທີ່ຍິ່ງ ໃຫຍ່ ແລະປະທານ ໄກສອນ ພົມວິຫານ, ປະທານ ສຸພານຸວົງ ທີ່ຮັກແພງພ້ອມກັ

ບບັນດາການນຳຂອງສອງພັກ, ສອງລັດ ແລະປະຊາຊົນສອງປະເທດ, ເຊິ່ງເປັນຊັບສົມບັດລວມອັນລ້ຳຄ່າຂອງສອງພັກ ແລະປະຊາຊົນສອງປະເທດ". ສອງຝ່າຍໄດ້ເຫັນດີຍົກລະດັບຈາກການພົວພັນ "ມິດຕະພາບແບບມູນເຊື້ອ" ຂຶ້ນເປັນ"ມິດຕະພາບທີ່ຍິ່ງໃຫຍ່" ເນື່ອງໃນໂອກາດເດີນທາງໄປຢ້ຽມຢາມລາວຢ່າງເປັນທາງການຂອງທ່ານເລຂາທິການໃຫຍ່ ຫງວຽນຟູ້ຈ້ອງ (ວັນທີ 2 ກຸມພາ 2019) ຖືວ່າເປັນຂີດໝາຍປະຫວັດສາດທີ່ສຳຄັນ; ສ້າງບາດກ້າວບຸກທະລຸໃນການຮ່ວມມືລະຫວ່າງສອງປະເທດ. ຜ່ານບັນດາການພົບປະຂັ້ນສູງເປັນປະຈຳທຸກໆປີ, ສອງຝ່າຍໄດ້ແລກປ່ຽນບັນດາບົດຮຽນອັນລ້ຳຄ່າໃນຂະບວນການປ່ຽນໃໝ່ ແລະສ້າງສາປະເທດຊາດ.

ພິເສດ, ວັນທີ 28 ມິຖຸນາ 2021, ທ່ານເລຂາທິການໃຫຍ່, ປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທ່ານ ທອງລຸນ ສີສຸລິດ ໄດ້ມາຢ້ຽມຢາມຫວຽດນາມ ເຊິ່ງເປັນເຫດການການເມືອງທີ່ມີຄວາມໝາຍອັນສຳຄັນ. ສອງຝ່າຍໄດ້ອອກຖະແຫຼງການຮ່ວມ, ໄດ້ເຊັນເອກະສານຮ່ວມມືສຳຄັນ 7 ສະບັບ ແລະບາງສະບັບສັນຍາເສດຖະກິດລະຫວ່າງວິສາຫະກິດ ຫວຽດນາມ - ລາວ, ພ້ອມກັນນັ້ນໄດ້ແລກປ່ຽນຄຳເຫັນກ່ຽວກັບບັນດາບັນຫາພາກພື້ນ ແລະສາກົນທີ່ສອງຝ່າຍໄດ້ເອົາໃຈໃສ່. ນີ້ກໍເປັນການພິສູດໃຫ້ເຫັນຕື່ມວ່າ ການພົວພັນຮ່ວມມືລະຫວ່າງສອງພັກ ແລະລັດຖະບານນັບມື້ນັບພັດທະນາຢ່າງເລິກເຊິ່ງ, ສ້າງບາດກ້າວບຸກທະລຸ, ພາໃຫ້ສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະການຮ່ວມມືຮອບດ້ານ ຫວຽດນາມ - ລາວ ໄດ້ຮັບປະສິດທິຜົນ ແລະແທດເໝາະກັບຕົວຈິງໃນທຸກຂົງເຂດ, ປະກອບສ່ວນໃນການປະຕິບັດມະຕິກອງປະຊຸມໃຫຍ່ຂອງແຕ່ລະພັກ, ຍຸດທະສາດການຮ່ວມມື 10 ປີ ລະຫວ່າງຫວຽດນາມ - ລາວ.

ນີ້ແມ່ນການຢືນຢັນນະໂຍບາຍການຕ່າງປະເທດກ່ອນ ແລະຫຼັງກໍເປັນແບບດຽວກັນ ໃນການປົກປັກຮັກສາ ແລະເສີມຂະຫຍາຍການພົວພັນຮ່ວມມືແບບພິເສດ ຫວຽດນາມ - ລາວ.

ການພົວພັນການຕ່າງປະເທດຂອງປະຊາຊົນ ລະຫວ່າງຫວຽດນາມ - ລາວ ແມ່ນການເຄື່ອນໄຫວອັນໜຶ່ງທີ່ສຳຄັນ. ໃນຊຸມປີທີ່ຜ່ານມາ, ການເຄື່ອນໄຫວນີ້ໄດ້ຮັບຄວາມເອົາໃຈໃສ່ເປັນພິເສດ ແລະມີການພັດທະນາຢ່າງກົມກຽວກັນ. ສອງຝ່າຍໄດ້ສ້າງຕັ້ງສະມາຄົມມິດຕະພາບ ຫວຽດນາມ - ລາວ, ລາວ - ຫວຽດນາມ ເປັນຮ້ອຍແຫ່ງ; ບັນດາຄະນະກຳມະການສັນຕິພາບ ແລະຄວາມສາມັກຄີຫວຽດນາມ - ລາວ; ບັນດາສະໂມສອນມິດຕະພາບແຕ່ສູນກາງຮອດທ້ອງຖິ່ນໄດ້ມີການສົມທົບຢ່າງແໜ້ນແຟ້ນ, ລາຍການເຄື່ອນໄຫວໄດ້ອຸດົມສົມບູນ ແລະມີຄວາມໝາຍແທດຈິງຄື: ງານວາງສະແດງຮູບແຕ້ມ ແລະຮູບພາບ, ຈັດຕັ້ງບັນດາການໂອ້ລົມສົນທະນາ, ກອງປະຊຸມສຳມະນາ, ງານແຂ່ງຂັນ... ດ້ວຍຫົວຂໍ້ກ່ຽວກັບການພົວພັນຫວຽດນາມ - ລາວ ດ້ວຍບັນດາການເຄື່ອນໄຫວທີ່ມີເນື້ອແທ້, ກວ້າງຂວາງ, ປະສິດທິຜົນ, ດຶງດູດສະມາຊິກຫຼາຍແສນຄົນ ເຊິ່ງເປັນນັກຮົບເກົ່າອາສາສະໝັກ, ອະດີດນັກຊ່ຽວຊານ, ອະດີດນັກສຶກສາຕ່າງປະເທດ, ບັນດານັກວິສາຫະກິດ ແລະປະຊາຊົນທຸກຊັ້ນວັນນະເປັນຈຳນວນຫຼວງຫຼາຍ ຈາກທົ່ວທຸກຂົງເຂດ ແລະທຸກຮຸ່ນຄົນລ້ວນແຕ່ໄດ້ເຂົ້າຮ່ວມຢ່າງຕັ້ງໜ້າ.

ດ້ວຍເສັ້ນຊາຍແດນລວມຍາວກວ່າ 2.300 ກິໂລແມັດ, ການຮ່ວມມືໃນຂົງເຂດປ້ອງກັນຊາດ, ປ້ອງກັນຄວາມສະຫງົບລະຫວ່າງສອງປະເທດບັນລຸໄດ້ບັນດາໝາກຜົນທີ່ສຳຄັນ. ສອງຝ່າຍເຫັນດີເພີ່ມທະວີການຮ່ວມມືເພີ່ມເຕີມກ່ຽວກັບດ້ານ

ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຮັບປະກັນເປັນບ່ອນອີງອັນໜັກແໜ້ນໃຫ້ກັນເພື່ອປະເຊີນກັບບັນດາສິ່ງທ້າທາຍນັບມື້ນັບຫຼາຍຮູບແບບ, ສັບສົນ, ປະກອບສ່ວນຮັກສາຄວາມສະຖຽນລະພາບດ້ານການເມືອງ, ປ້ອງກັນຊາດ ແລະປ້ອງກັນຄວາມສະຫງົບ ຢູ່ແຕ່ລະປະເທດ. ສ້າງເສັ້ນຊາຍແດນ ຫວຽດນາມ ແລະ ລາວ ໃຫ້ມີສັນຕິພາບ, ມິດຕະພາບ, ສະຖຽນລະພາບ, ຮ່ວມມື ແລະພັດທະນາແບບຍືນຍົງ. ໂຄງການປັກຫຼັກໝາຍຖີ່ ແລະບູລະນະ ລະບົບຫຼັກໝາຍແຫ່ງຊາດ ຫວຽດນາມ - ລາວ ໄດ້ສຳເລັດແລ້ວ; ສັນຍາ ແລະອະນຸສັນຍາທີ່ກ່ຽວຂ້ອງໄດ້ລົງນາມໃນວັນທີ 16 ມີນາ 2016. ນີ້ແມ່ນບາດກ້າວສຳຄັນໃນການເພີ່ມທະວີການຄຸ້ມຄອງຊາຍແດນແຫ່ງຊາດ ຫວຽດນາມ - ລາວ, ປະກອບສ່ວນກໍ່ສ້າງພື້ນຖານນິຕິກຳທີ່ໝັ້ນແກ່ນໃຫ້ແກ່ການຮ່ວມມືລະຫວ່າງ ສອງຝ່າຍໃນບັນຫາປ້ອງກັນ ແລະຄຸ້ມຄອງຊາຍແດນຜືນແຜ່ນດິນ[1].

ໃນຂົງເຂດເສດຖະກິດ, ການຄ້າ, ສອງຝ່າຍໄດ້ສືບຕໍ່ເອົາໃຈໃສ່ຊຸກຍູ້ ແລະເຈລະຈາລົງນາມໃນຫຼາຍ ເອກະສານທີ່ສຳຄັນ, ປະກອບສ່ວນປັບປຸງກົດໝາຍກ່ຽວກັບການຄ້າໃຫ້ສົມບູນແບບ ແລະບົນພື້ນຖານສະເໝີພາບພ້ອມກັນມີຜົນປະໂຫຍດ, ເຄົາລົບມູນເຊື້ອການຮ່ວມມື ແລະປະເພນີການຄ້າສາກົນ: ສັນຍາການຄ້າສອງຝ່າຍສະບັບໃໝ່, ສັນຍາການຄ້າຊາຍແດນ, ອະນຸສັນຍາສະບັບປັບປຸງສັນຍາການຢືມທາງ

---

[1] ສອງຝ່າຍໄດ້ບູລະນະ ແລະ ປັກຫຼັກໝາຍໃໝ່ 905 ຈຸດທີ່ຕັ້ງ, ເທົ່າກັບ 1.002 ເສົາຫຼັກໝາຍ, ໃນນັ້ນ ໄດ້ເພີ່ມ 168 ເສົາ; ກຳນົດລວມລວງຍາວຂອງເສັ້ນຊາຍແດນຫວຽດນາມ - ລາວ ແມ່ນ 2,337,459 ກິໂລແມັດ.

ສິນຄ້າຫວຽດນາມ - ລາວ, ຮ່າງແຜນພັດທະນາການຄ້າຊາຍແດນ ຫວຽດນາມ - ລາວ...; ເປັນເຈົ້າການ ແລະຕັ້ງໜ້າຜັນຂະຫຍາຍບັນດາເອກະສານທີ່ໄດ້ລົງນາມ ແລະກົນໄກ "ປະຕູດຽວ" ຢູ່ຄູ່ດ່ານຊາຍແດນ ສາກົນລາວບາວ-ແດນສະຫວັນ; ເພີ່ມທະວີບັນດາມາດຕະການສົ່ງເສີມການຄ້າ, ສ້າງເງື່ອນໄຂໃຫ້ການຄ້າສອງຝ່າຍໄດ້ພັດທະນາແບບຍືນຍົງ. ດ້ວຍຄວາມມານະພະຍາຍາມ, ການແລກປ່ຽນການຄ້າຫວຽດນາມ - ລາວ ນັບມື້ນັບເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ. ໃນໄລຍະ 2016 – 2020, ວົງເງິນການຄ້າໄດ້ຂະຫຍາຍຕົວ, ມາຮອດປະຈຸບັນ ບັນລຸໄດ້ 1 ຕື້ກວ່າ USD ແລະໄດ້ມີບັນດາ

ບາດກ້າວພັດທະນາຢ່າງຕັ້ງໜ້າດ້ວຍບັນດາການຫັນປ່ຽນທາງດ້ານຄຸນນະພາບແບບຍືນຍົງ[2]. ມາຮອດປະຈຸບັນ, ຫວຽດນາມ ຢູ່ໃນອັນດັບທີ 3 ຂອງບັນດາປະເທດທີ່ໄດ້ລົງທຶນຢູ່ລາວ (ຖັດຈາກ ຈີນ ແລະ ໄທ) ມີ 209 ໂຄງການທີ່ຍັງມີຜົນສັກສິດ, ຍອດຈຳນວນທຶນຈົດທະບຽນປະມານ 5,18 ຕື້ USD, ເພີ່ມຂຶ້ນ 35% ເມື່ອທຽບ

---

[2] ໃນການຢ້ຽມຢາມຫວຽດນາມ ຂອງ ທ່ານ ທອງລຸນ ສີສຸລິດ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ສອງຝ່າຍໄດ້ເຫັນດີສືບຕໍ່ຊຸກຍູ້ບັນດາມາດຕະການສົ່ງເສີມການຄ້າ ເພື່ອພາວົງເງິນສອງສົ້ນໄດ້ເຕີບໂຕຢ່າງປົກກະຕິ ແຕ່ 10% – 15%/ ປີ".

ແຕ່ປີ 2016 ມາຮອດ 2020, ສອງຝ່າຍໄດ້ຕັ້ງໜ້າປະຕິບັດ ແລະ ໄດ້ເອົາເຂົ້ານຳໃຊ້ 28 ກິດຈະການ ແລະ ໂຄງການທີ່ນຳໃຊ້ແຫຼ່ງທຶນຊ່ວຍເຫຼືອ, ໃນນັ້ນມີໂຄງການຈຸດສຸ້ມເຊັ່ນ: ໂຮງໝໍມິດຕະພາບຢູ່ແຂວງຫົວພັນ ແລະ ແຂວງຊຽງຂວາງຂອງລາວ. ພິເສດ, ສອງຝ່າຍໄດ້ສຳເລັດໂຄງການກໍ່ສ້າງຫໍສະພາແຫ່ງຊາດລາວ ຫຼັງໃໝ່. ນີ້ແມ່ນຂອງຂວັນຂອງພັກ, ລັດ ແລະ ປະຊາຊົນ ຫວຽດນາມ ມອບໃຫ້ແກ່ພັກ, ລັດ ແລະ ປະຊາຊົນລາວ, ເຊິ່ງເປັນເຄື່ອງໝາຍແຫ່ງການພົວພັນແບບພິເສດ ຫວຽດນາມ - ລາວ.

ໃສ່ ປີ 2010[3] ກ່ຽວກັບ ດ້ານໂຄງປະກອບ ການລົງທຶນ, ສຸມໃສ່ຕົ້ນຕໍແມ່ນບັນດາຂົງເຂດພະລັງງານໄຟຟ້ານ້ຳຕົກປະມານ 26%; ກະສິກຳ-ປ່າໄມ້ 23%; ບໍລິການພື້ນຖານ ໂຄງລ່າງ 20%; ການຂຸດຄົ້ນບໍ່ແຮ່ 19%; ການເງິນ, ທະນາຄານ 3%. ໄລຍະ 2021 – 2025, ຫວຽດນາມ ໄດ້ຮັບຮອງເອົາບ້ວງຊ່ວຍເຫຼືອລ້າໃຫ້ລາວເກືອບ 3.600 ຕື້ດົ່ງ (ເພີ່ມຂຶ້ນ 10% ເມື່ອທຽບໃສ່ໄລຍະກ່ອນ); ປີ 2021, ໄດ້ຈັດວາງການຊ່ວຍເຫຼືອ 715 ກວ່າ ຕື້ດົ່ງ. ໃນປີ 2021, ມີ 03 ໂຄງການຊ່ວຍເຫຼືອໄດ້ເປີດ ແລະນຳໃຊ້, ພິເສດແມ່ນກິດຈະການ ຫໍສະພາແຫ່ງຊາດລາວ. ໂຄງການໃຫຍ່ຈຳນວນໜຶ່ງໄດ້ສ້າງສຳເລັດ, ເສີມຂະຫຍາຍຢ່າງມີປະສິດທິຜົນ, ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນລາວ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາຂອງແຕ່ລະປະເທດ. ບັນດາກົນໄກບຸລິມະສິດກ່ຽວກັບພາສີນຳເຂົ້າສົ່ງອອກສຳລັບສິນຄ້າທີ່ມີແຫຼ່ງກຳເນີດຈາກສອງປະເທດ ສືບຕໍ່ໄດ້ປະຕິບັດຕາມບັນຊີລາຍຊື່ນັບມື້ນັບເປີດກວ້າງ. ຫຼາຍໂຄງການລົງທຶນໄດ້ເສີມຂະຫຍາຍຄວາມປະສິດທິຜົນ, ການຜະລິດ ແລະດຳເນີນທຸລະກິດໄດ້ມີຜົນກຳໄລ, ປະກອບສ່ວນຢ່າງຕັ້ງໜ້າ

---

[3] ແຕ່ປີ 2016 ມາຮອດ 2020, ສອງຝ່າຍໄດ້ຕັ້ງໜ້າປະຕິບັດ ແລະ ໄດ້ເອົາເຂົ້ານຳໃຊ້ 28 ກິດຈະການ ແລະ ໂຄງການທີ່ນຳໃຊ້ແຫຼ່ງທຶນຊ່ວຍເຫຼືອ, ໃນນັ້ນມີໂຄງການຈຸດສຸ້ມເຊັ່ນ: ໂຮງໝໍມິດຕະພາບຢູ່ແຂວງຫົວພັນ ແລະ ແຂວງຊຽງຂວາງຂອງລາວ. ພິເສດ, ສອງຝ່າຍໄດ້ສຳເລັດໂຄງການກໍ່ສ້າງຫໍສະພາແຫ່ງຊາດລາວ ຫໍໃໝ່. ນີ້ແມ່ນຂອງຂວັນຂອງພັກ, ລັດ ແລະ ປະຊາຊົນ ຫວຽດນາມ ມອບໃຫ້ແກ່ພັກ, ລັດ ແລະ ປະຊາຊົນລາວ, ເຊິ່ງເປັນເຄື່ອງໝາຍແຫ່ງການພົວພັນແບບພິເສດ ຫວຽດນາມ - ລາວ.

ເຂົ້າໃນການພັດທະນາຂອງສອງປະເທດ, ສ້າງວຽກເຮັດງານທຳ, ເພີ່ມສະຫວັດດີການສັງຄົມ, ຊ່ວຍລາວປະຕິບັດໄດ້ດີນະໂຍບາຍ ລຶບລ້າງຄວາມທຸກຍາກ.

ກ່ຽວກັບການຄົມມະນາຄົມ, ສອງຝ່າຍໄດ້ສືບຕໍ່ປະຕິບັດບົດບັນທຶກຊ່ວຍຈຳລະຫວ່າງສອງລັດຖະບານ ກ່ຽວກັບຍຸດທະສາດການຮ່ວມມືດ້ານຄົມມະນາຄົມໄລຍະ 2016 - 2025, ວິໄສທັດຮອດປີ 2030, ຕາມນັ້ນ, ສອງຝ່າຍໄດ້ສົມທົບຄົ້ນຄວ້າ ແລະ ຊຸກຍູ້ ຊອກຫາແຫຼ່ງທຶນເພື່ອຜັນຂະຫຍາຍບັນດາໂຄງການຈຸດສຸມຄື: ເສັ້ນທາງດ່ວນ ຮ່າໂນ້ຍ-ວຽງຈັນ, ທາງລົດໄຟຫວຸງແອ່ງ-ເຕີນເອີບ-ທ່າແຂກ-ວຽງຈັນ ແລະໂຄງການເຊື່ອມຕໍ່ຄົມມະນາຄົມທີ່ສຳຄັນອື່ນໆ. ແຕ່ລະກ້າວແກ້ໄຂຄວາມຫຍຸ້ງຍາກ, ຂໍ້ຄົງຄ້າງເພື່ອຊຸກຍູ້ບັນດາໂຄງການຄື: ສະໜາມບິນ ໜອງຄ້າງ, ທ່າກຳປັ່ນ 1, 2 ແລະ3 ທ່າກຳປັ່ນ ຫວູແອ່ງ.

ກ່ຽວກັບອຸດສະຫະກຳພະລັງງານໄຟຟ້າ, ສອງຝ່າຍໄດ້ເອົາໃຈໃສ່ຊຸກຍູ້ ແລະບັນລຸບາງໝາກຜົນທີ່ຕັ້ງໜ້າ. ສອງຝ່າຍໄດ້ລົງນາມໃນບົດບັນທຶກຊ່ວຍຈຳລະຫວ່າງລັດຖະບານສອງປະເທດກ່ຽວກັບການພັດທະນາໂຄງການໄຟຟ້ານ້ຳຕົກຢູ່ລາວ ແລະການຊື້-ຂາຍໄຟຟ້າລະຫວ່າງສອງປະເທດຮອດປີ 2030 ດ້ວຍປະລິມານໄຟຟ້າທັງໝົດ 5000 MW ແລະ ສັນຍາວ່າດ້ວຍການຮ່ວມມືພັດທະນາບັນດາກິດຈະການພະລັງງານໄຟ້າ ແລະບໍ່ແຮ່[4]; ໄດ້ລົງນາມບົດບັນທຶກຊ່ວຍຈຳວ່າດ້ວຍການຮ່ວມມືໃນການຊື້-ຂາຍ ໄຟຟ້າຈາກບັນດາກິດຈະການໄຟຟ້າຂອງລາວ. ຜັນຂະຫຍາຍໂຄງການກໍ່ສ້າງເຂື່ອນໄຟຟ້າຫຼວງພະບາງ, ແກ້ໄຂບັນຫາເຂື່ອນໄຟຟ້າເຊກະໝານ 3,

---

[4] ສອງໂຄງການທີ່ດີເດັ່ນຂອງບັນດາວິສາຫະກິດຫວຽດນາມ ແມ່ນໂຄງການເຂື່ອນໄຟຟ້າເຊກະໝານ 1 ແລະ ເຊກະໝານຊານໄຊ

ຫວຽດນາມໄດ້ຊື້ໄຟຟ້າຈາກ 2 ໂຮງງານດ້ວຍກຳລັງຕິດຕັ້ງ 572 ເມກາວັດ ແລະເຊັນສັນຍາຊື້ ໄຟຟ້າຈາກລາວ 20 ສະບັບ, ດ້ວຍກຳລັງຕິດຕັ້ງ 1500 ເມກາວັດ...

ໃນຂົງເຂດວັດທະນະທຳ, ການສຶກສາ, ສາທາລະນະສຸກ, ການທ່ອງທ່ຽວ, ວິທະຍາສາດ ແລະ ເຕັກນິກ, ສອງຝ່າຍຫວຽດນາມ - ລາວ ມີຄວາມສົນໃຈເປັນພິເສດ. ໃນນັ້ນ, ແຜນຮ່າງຍົກສູງຄຸນນະພາບ ແລະປະສິດທິຜົນການຮ່ວມມື ຫວຽດນາມ - ລາວ ໃນຂົງເຂດການສຶກສາ ແລະ ພັດທະນາຊັບພະຍາກອນມະນຸດ ໄລຍະ 2011 - 2020 ໄດ້ສ້າງການປ່ຽນແປງຢ່າງຕັ້ງໜ້າໃນວຽກງານບຳລຸງສ້າງແຫຼ່ງບຸກຄະລາກອນຂອງລາວ. ໄລຍະ 2021-2030, ສອງຝ່າຍໄດ້ລົງນາມ ແລະ ຜັນຂະຫຍາຍແຜນຮ່າງຍົກສູງຄຸນນະພາບ ແລະປະສິດທິຜົນການຮ່ວມມື ຫວຽດນາມ - ລາວ ໃນຂົງເຂດການສຶກສາ ແລະພັດທະນາ ແຫຼ່ງ ຊັບພະຍາກອນມະນຸດ ໄລຍະ 2021 – 2030 ຕາມການຕົກລົງແຕ່ລະປີຫວຽດນາມຈະໃຫ້ລາວທຶນການບຳລຸງ ແລະອົບຮົມ 1,000 ກວ່າທຶນ, ແລະລາວໃຫ້ຫວຽດນາມ 60 ທຶນ. ໂດຍສະເພາະໃນປີ 2022, ຫວຽດນາມໃຫ້ລາວ 1.100 ທຶນການສຶກສາ. ການຝຶກອົບຮົມຖັນແຖວພະນັກງານ ແລະຊັບພະຍາກອນມະນຸດຂອງລາວນັບມື້ນັບໄດ້ເພີ່ມທະວີທັງດ້ານປະລິມານ ແລະຄຸນນະພາບ[5]. ໃນຂົງເຂດສາທາລະນະສຸກ, ວຽກ

[5] ໄລຍະ 2011-2020, ຫວຽດນາມ ໄດ້ຝຶກອົບຮົມໃຫ້ລາວເກືອບ 30.000 ຄົນ ດ້ວຍໂຄງປະກອບອາຊີບ ແລະ ລະດັບການຝຶກອົບຮົມທີ່ແຕກຕ່າງກັນ, ໃນນັ້ນຕາມສັນຍາແມ່ນເກືອບ 5.000 ຄົນ. ໃນໄລຍະ 2011-2019, ລາວໄດ້ຮັບນັກສຶກສາຫວຽດນາມ 395 ຄົນໄປຮ່ຳຮຽນ, ໃນນັ້ນມີປະລິນຍາໂທ 44 ຄົນ, ປະລິນຍາຕີ 289 ຄົນ ແລະ ນັກຮຽນພາສາລາວ 62 ຄົນ.

ງານກວດພະຍາດ, ປິ່ນປົວພະຍາດໃຫ້ພະນັກງານ ແລະປະຊາຊົນລາວຢູ່ຫວຽດນາມ, ໂດຍພິເສດແມ່ນບັນດາແຂວງທີ່ມີຮ່ວມເສັ້ນຊາຍແດນ ແລະວຽກງານສົມທົບເພື່ອກວດພະຍາດ ແລະປິ່ນປົວພະຍາດທາງໄກ ສືບຕໍ່ໄດ້ເອົາໃຈໃສ່ ແລະຊຸກຍູ້. ຫວຽດນາມ ກຳລັງໜູນຊ່ວຍລາວສ້າງໂຮງໝໍມິດຕະພາບໃໝ່ 2 ແຫ່ງ ຢູ່ 2 ແຂວງ (ແຂວງຫົວພັນດ້ວຍມູນຄ່າປະມານ 20 ລ້ານ USD ແລະແຂວງຊຽງຂວາງດ້ວຍມູນຄ່າປະມານ 17,6 ລ້ານ USD). ຫວຽດນາມ ຍາມໃດກໍຕັ້ງໜ້າ ໜູນຊ່ວຍລາວກ່ຽວກັບປະສົບການ, ບຳລຸງສ້າງພະນັກງານແພດ, ອຸປະກອນ ການແພດ...; ປະສານສົມທົບຢ່າງແໜ້ນແຟ້ນໃນວຽກງານປ້ອງກັນ ແລະຄວບຄຸມການແຜ່ລະບາດ Covid-19.

ຄຽງຄູ່ກັບການຮ່ວມມືໃນຂອບເຂດສອງຝ່າຍ, ຄວາມສາມັກຄີແບບອ້າຍນ້ອງລະຫວ່າງຫວຽດນາມ ແລະ ລາວ ກໍໄດ້ຮັບການສະແດງໃຫ້ເຫັນຢ່າງຈະແຈ້ງດ້ວຍຄວາມເຫັນດີເຫັນພ້ອມສູງຢູ່ບັນດາເວທີປາໄສພາກພື້ນ ແລະສາກົນ ເຊັ່ນ: ສະຫະປະຊາຊາດ, ສະມາຄົມບັນດາປະເທດອາຊີອາຄະເນ (ອາຊຽນ), ອົງການຮ່ວມມືເສດຖະກິດຍຸດທະສາດສາມແມ່ນ້ຳ (ACMECS), ເວທີປາໄສຮ່ວມມືອາຊີ - ເອີລົບ (ASEM), ເຂດສາມຫຼ່ຽມພັດທະນາ ກຳປູເຈຍ - ລາວ - ຫວຽດນາມ (CLV), ຮ່ວມມືກຳປູເຈຍ - ລາວ - ມຽນມາ - ຫວຽດນາມ (CLMV), ອົງການຍຸດທະສາດຮ່ວມມືເສດຖະກິດ Ayeyarwady - Chao Phraya - ແມ່ນ້ຳຂອງ (ACMECS) ແລະບັນດາກົນໄກການຮ່ວມມືອະນຸພາກພື້ນແມ່ນນ້ຳຂອງ, ອະນຸພາກພື້ນແມ່ນນ້ຳຂອງເປີດກວ້າງ (GMS), ຮ່ວມມື 4 ປະເທດ ກຳປູເຈຍ - ລາວ - ມຽນມາ - ຫວຽດນາມ (CLMV). ເຂດສາມຫຼ່ຽມພັດທະນາ ຫວຽດນາມ - ລາວ -

ກຳປູເຈຍ;... ປະກອບສ່ວນຍົກສູງອິດທິພົນ ແລະຖານະບົດບາດຂອງແຕ່ລະປະເທດໃນພາກພື້ນ ແລະໂລກ. ກ່ຽວກັບການຮ່ວມມືຫຼາຍຝ່າຍ, ນັບແຕ່ເວລາເຂົ້າຮ່ວມອົງການອາຊຽນ, ຫວຽດນາມ ແລະລາວ ໄດ້ປະສານສົມທົບ, ສະໜັບສະໜູນກັນຜັນຂະຫຍາຍບັນດາການເຄື່ອນໄຫວທີ່ສະມາຄົມໄດ້ວາງອອກ. ສອງປະເທດໄດ້ສະໜັບສະໜູນຫຼັກໝັ້ນຂອງກັນໃນຫຼາຍບັນຫາທີ່ໄດ້ຕັ້ງອອກມາເພື່ອປຶກສາຫາລືຢູ່ບັນດາເວທີອາຊຽນ. ພ້ອມກັນເພີ່ມທະວີຊຸກຍູ້ບັນດາການຮ່ວມມືໂດຍສະເພາະແມ່ນກ່ຽວກັບການປ້ອງກັນຄວາມສະຫງົບ - ປ້ອງກັນຊາດ ເພື່ອກ້າວສູ່ອະນາຄົດທີ່ສັນຕິພາບ, ສະຖຽນລະພາບ ແລະວັດທະນະຖາວອນ ກວ່າ. ສອງຝ່າຍໄດ້ສະໜັບສະໜູນເຊິ່ງກັນແລະກັນຢ່າງມີປະສິດທິຜົນໃນການຈັດຕັ້ງສຳເລັດບັນດາກອງປະຊຸມກ່ຽວກັບການເມືອງ, ປ້ອງກັນຄວາມສະຫງົບ ແລະປ້ອງກັນຊາດໃນຊຸມປີທີ່ລາວ ຫຼືຫວຽດນາມໄດ້ຖືບົດບາດເປັນປະທານອາຊຽນ.

ຫວນຄືນປະຫວັດສາດສາຍພົວພັນແບບພິເສດ ຫວຽດນາມ-ລາວ ໃນໄລຍະ 9 ທົດສະວັດກວ່າ ນັບແຕ່ການສ້າງຕັ້ງ ພັກກອມມູນິດອິນດູຈີນມາຮອດປັດຈຸບັນ ແລະໄລຍະປະຫວັດສາດທີ່ສະຫງ່າອົງອາດ ໃນ 60 ປີ ທີ່ຜ່ານມາ, ພິເສດແມ່ນຜ່ານ 45 ປີ ແຫ່ງການຈັດຕັ້ງປະຕິບັດສົນທິສັນຍາມິດຕະພາບ ແລະການຮ່ວມມື. ປະຊາຊົນຫວຽດນາມ ແລະລາວສາມາດເອກອ້າງທະນົງໃຈ ຕໍ່ສາຍພົວພັນສັດຊື່ບໍລິສຸດ, ສາມັກຄີແບບພິເສດ ແລະ ຫາຍາກ ລະຫວ່າງສອງຊົນຊາດ. ເບິ່ງໄປອະນາຄົດ, ພວກເຮົາເຫັນໄດ້ຢ່າງຈະແຈ້ງເຖິງຄວາມຈຳເປັນທີ່ຕ້ອງປົກປັກຮັກສາ, ພັດທະນາ, ພ້ອມກັນນັ້ນ ຈົ່ງມີສະຕິລະວັງຕົວ, ຕໍ່ສູ້ຢ່າງບໍ່ຜ່ອນຜັນກັບບັນດາທຳນອງປໍລະປັກ, ທຳລາຍສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ, ການຮ່ວມ

ມິຣອບດ້ານຫວຽດນາມ - ລາວ. ທ່ານເລຂາທິການໃຫຍ່ ຫງວຽນຝູ່ຈ້ອງ ໄດ້ຢືນຢັນວ່າ: “ພວກເຮົາມີຄວາມພາກພູມໃຈທີ່ສຸດຕໍ່ສາຍພົວພັນແບບພິເສດຫວຽດນາມ - ລາວ ເຊິ່ງພວມພັດທະນາຢ່າງບໍ່ຢຸດຢັ້ງ ແລະເກີດດອກອອກຜົນ. ສາຍພົວພັນນີ້ໄດ້ກາຍເປັນກົດເກນການພັດທະນາ, ເປັນປັດໄຈອັນສຳຄັນເພື່ອຮັບປະກັນການໄຊຊະນະຂອງພາລະກິດປະຕິວັດຂອງແຕ່ລະປະເທດ ແລະເປັນຊັບສິນບັດລວມອັນລ້ຳຄ່າຂອງສອງພັກ, ສອງຊົນຊາດເຊິ່ງຮຸ່ນຄົນໃນປະຈຸບັນຕ້ອງໄດ້ຮັກສາ, ປ້ອງກັນ, ເພີ່ມພູນຄູນສ້າງ ແລະສົ່ງຕໍ່ໃຫ້ຄົນລຸ້ນຕໍ່ໆໄປ” . ສະຫາຍ ໄກສອນ ພົມວິຫານ ເຄີຍຢັ້ງຢືນວ່າ: “ພວກເຮົາຕ້ອງຮັບຮູ້ວ່າ ສາຍພົວພັນ ລະຫວ່າງ ລາວ-ຫວຽດນາມ ເຖິງວ່າຈະມີຄຸນຄ່າກວ່າເພັດພອຍອັນລ້ຳຄ່າທີ່ສຸດກໍ່ຕາມ, ແຕ່ກໍຍັງຕ້ອງໄດ້ເອົາໃຈໃສ່ ເບິ່ງແຍງດູແລ ແລະເພີ່ມພູນຄູນສ້າງເປັນປະຈຳໃຫ້ມີຄວາມໂປ່ງໃສກວ່າ. ພວກເຮົາເຊື່ອໝັ້ນວ່າ, ດ້ວຍມູນເຊື້ອທີ່ໄດ້ຮັບການທົດສອບຜ່ານປະຫວັດສາດ ພ້ອມກັບບັນດາຜົນງານທີ່ບັນລຸໄດ້ລະຫວ່າງສອງປະເທດ, ສາຍພົວພັນແບບພິເສດຫວຽດນາມ - ລາວຈະ“ຂຽວສົດງົດງາມ, ໝັ້ນຄົງຂະໜົງແກ່ນໄປຊົ່ວກາລະນານ” .

## ຂ. ການພົວພັນມິດຕະພາບຮ່ວມມືລະຫວ່າງແຂວງກວາງຈິ ແລະ ແຂວງສະຫວັນນະເຂດ

## ພາກທີ I.

## ກວາງຈິ-ສະຫວັນນະເຂດ ເປັນບ້ານໃກ້ເຮືອນຄຽງທີ່ໃກ້ຊິດ, ມູນເຊື້ອອັນດີງາມໃນການຕໍ່ສູ້ປົດປ່ອຍປະເທດຂອງຊາດ.

### I. ວ່າດ້ວຍລັກສະນະທຳມະຊາດ, ປະຫວັດສາດ, ວັດທະນະທຳຂອງແຂວງກວາງຈິ ແລະ ແຂວງສະຫວັນນະເຂດ

#### *1. ວ່າດ້ວຍລັກສະນະທຳມະຊາດ, ປະຫວັດສາດ, ວັດທະນະທຳຂອງແຂວງກວາງຈິ*

*ລັກສະນະທຳມະຊາດ:*

ທີ່ຕັ້ງພູມີປະເທດ ແລະພູມສັນຖານ: ກວາງຈິແມ່ນແຂວງໜຶ່ງຢູ່ທິດເໜືອພາກກາງ, ນອນຢູ່ຈຸດທີ່ຕັ້ງ $16^0 18'$ ຫາ $17^0 10'$ ເສັ້ນຂະໜານເໜືອ, ຈາກ $106^0 28'55''$ ຫາ $107^0 23'58''$ ເສັ້ນແວງຕາເວັນອອກ. ທິດເໜືອກວາງຈິຕິດກັບແຂວງກວາງບິ່ງ; ທິດໃຕ້ຕິດກັບແຂວງເທື່ອທຽນເຫວ້; ທິດຕາເວັນຕົກຕິດກັບແຂວງສະຫວັນນະເຂດ ແລະແຂວງສາລະວັນ, ສ.ປ.ປ ລາວ ດ້ວຍເສັ້ນຊາຍແດນແມ່ນ 179,345 ກິໂລແມັດ, ໃນນັ້ນ, ຕິດກັບແຂວງສະຫວັນນະເຂດແມ່ນ

108,476 ກິໂລແມັດ; ທິດຕາເວັນອອກມີຊາຍແດນຕິດກັບທະເລຕາເວັນອອກ ດ້ວຍລວງຍາວຝັ່ງທະເລ 75 ກິໂລແມັດ. ເນື້ອທີ່ທຳມະຊາດແມ່ນ 4,746 ກິໂລແມັດມົນທົນ.

ກວາງຈິມີທາງຫຼວງແຫ່ງຊາດເລກທີ 1A, ທາງລົດໄຟແຕ່ເໜືອຕະຫຼອດໃຕ້ຫວຽດນາມ ແລະເສັ້ນທາງໂຮ່ຈີມິນ ທີ່ແລ່ນຜ່ານ; ມີທາງຫຼວງແຫ່ງຊາດເລກ 9 ຂ້າມອາຊີ; ມີທ່າກຳປັ່ນທະເລເກືອຫວຽດ, ໝີຖຸຍ ແລະ2 ດ່ານຊາຍແດນສາກົນລາວບາວ ແລະລາໄລ.

ກວາງຈິມີເນື້ອທີ່ເກີນ 4/5 ເປັນເຂດເນີນພູ, ອຸດົມສົມບູນໄປດ້ວຍລະບົບນິເວດຈາກພູເຂົາ, ພູພຽງ bazan, ຫາເນີນພູ, ທົ່ງພຽງ ແລະເຂດຊາຍຝັ່ງທະເລ. ກວາງຈິແມ່ນນອນຢູ່ໃນເຂດລົມມໍລະສຸມເຂດຮ້ອນທີ່ມີອຸນຫະພູມສູງ, ສະພາບອາກາດຮ້າຍແຮງ ແລະມີການປ່ຽນແປງທີ່ຜິດປົກກະຕິ.

ແມ່ນ້ຳລຳເຊແຂວງກວາງຈິຖືກແບ່ງອອກ ແຕ່ທິດເໜືອຮອດທິດໃຕ້ຂອງແຂວງ. ສາມລະບົບແມ່ນ້ຳທີ່ໃຫຍ່ແມ່ນ: ແມ່ນນ້ຳເບັນຫາຍ, ແທກຫານ ແລະໂອເລົາ. ນອກຈາກນີ້, ຍັງຕິດກັບສອງສາຍແມ່ນ້ຳຂອງລະບົບແມ່ນ້ຳຂອງຄື: ແມ່ນນ້ຳເຊບັງຮຽງ ແລະແມ່ນນ້ຳເຊໂປນ. ເຂດທະເລກວາງຈິມີເນື້ອທີ່ກວ້າງພໍສົມຄວນ, ແມ່ນເຂດຫາປາທີ່ມີແຫຼ່ງອາຫານທະເລທີ່ອຸດົມສົມບູນ, ມີຫຼາຍຊັບພະຍາກອນພິເສດທີ່ມີຄຸນຄ່າດ້ານໂພຊະນາການ ແລະເສດຖະກິດສູງ.

ກວາງຈິມີປາກນ້ຳ 2 ແຫ່ງຄື: ເກືອຫວຽດ ແລະເກືອຕຸ່ງ, ເຊິ່ງເປັນແຫຼ່ງທ່ອງທ່ຽວ ແລະຄົມມະນາຄົມທີ່ສຳຄັນ. ບັນດາຫາດຊາຍຕ່າງໆ ນັບແຕ່ເມືອງຫວິງລິງ ຫາເມືອງຫາຍລັງລ້ວນແຕ່ໄດ້ຮັບການຂຸດຄົ້ນ ເພື່ອຮັບໃຊ້ການທ່ອງທ່ຽວ ແລະ

ພັກຜ່ອນຢ່ອນອາລົມ. ເກາະໂກນກໍ່ຫ່າງຈາກແຜ່ນດິນ 25 ກິໂລແມັດ, ເປັນທີ່ຕັ້ງຍຸດທະສາດກ່ຽວກັບການທະຫານ, ພ້ອມກັນນັ້ນຍັງມີຄວາມບົ່ມຊ້ອນໃນການພັດທະນາເສດຖະກິດທາງທະເລ ແລະການທ່ອງທ່ຽວ.

ຈຳນວນພົນລະເມືອງຂອງແຂວງກວາງຈິມີ 630.000 ກວ່າຄົນ, ສ່ວນຫຼາຍແມ່ນໃນອາຍຸການເຮັດວຽກ. ແຂວງກວາງຈິ ມີ 3 ຊົນເຜົ່າກຳລັງດຳລົງຊີວິດຄື: ເຜົ່າກິງ, ເຜົ່າບຣູ-ເວີນກ່ຽວ ແລະ ເຜົ່າປາໂກ-ຕະໂອ້ຍ.

ປະຫວັດແຫ່ງການສ້າງຕັ້ງ: ແຜ່ນດິນກວາງຈິໄດ້ສ້າງຕັ້ງຂຶ້ນເມື່ອ 2100 ກວ່າປີກ່ອນ. ພາຍຫຼັງການປະຕິວັດເດືອນສິງຫາ ປີ 1945 ໄດ້ຮັບຜົນສຳເລັດ, ກວາງຈິເປັນແຂວງໜຶ່ງຢູ່ພາກກາງຂອງຫວຽດນາມ.

ທ້າຍເດືອນກໍລະກົດ ປີ 1954, ຕາມສັນຍາເຊີແນວ, ແມ່ນ້ຳເບັນຫາຍ (ກວາງຈິ) ຖືກເລືອກເປັນເສັ້ນຂີດຂັ້ນການ ທະຫານຊົ່ວຄາວແບ່ງແຍກປະເທດ. ທິດໃຕ້ຂອງແມ່ນ້ຳເບັນຫາຍ ຖືກຄຸ້ມຄອງໂດຍລັດຖະບານໄຊງ່ອນ. ທິດເໜືອຂອງແມ່ນ້ຳເບັນຫາຍ (ເມືອງວິງລິງ) ຖືກຄຸ້ມຄອງໂດຍສາທລະນະລັດປະຊາທິປະໄຕຫວຽດນາມ. ວັນທີ 1 ພຶດສະພາ 1972, ແຂວງກວາງຈິໄດ້ຮັບການປົດປ່ອຍ. ປີ 1976, ສີ່ຫົວໜ່ວຍການປົກຄອງແຂວງກວາງບິ່ງ, ກວາງຈິ, ເທື່ອທຽນ ແລະເຂດວິງລິງ ເຊິ່ງໄດ້ໂຮມກັນເປັນແຂວງບິ່ງຈິທຽນ.

ວັນທີ 1 ກໍລະກົດ 1989, ແຂວງບິ່ງຈິທຽນໄດ້ແບ່ງອອກເປັນ 3 ແຂວງຄື: ກວາງບິ່ງ, ກວາງຈິ ແລະ ເທື່ອທຽນເຫວ້. ແຂວງກວາງຈິ ໄດ້ກັບຄືນສູ່ເຂດແດນປົກຄອງເດີມ. ປັດຈຸບັນ, ແຂວງກວາງຈິມີ 10 ຫົວໜ່ວຍການປົກຄອງຄື: ນະຄອນດົງ

ຣ່າ, ເທດສະບານກວາງຈີ, ເມືອງວີງລີງ, ເມືອງເກາະໂກນກໍ໊, ເມືອງຢໍລີງ, ເມືອງການໂລ້, ເມືອງຈ້ຽວຟອງ, ເມືອງຫາຍລັງ, ເມືອງເຮືອງຮວາ ແລະເມືອງດາກະໂຣງ.

ມູນເຊື້ອປະຫວັດສາດ, ວັດທະນະທຳ: ກວາງຈິເປັນສະຖານທີ່ແຫ່ງການພົບປະແລກປ່ຽນ ແລະເຕົ້າໂຮມຂອງ ວັດທະນະທຳຫຼາຍໆເຜົ່າ (ຊາວເຜົ່າປາໂກ ແລະເວີນກ່ຽວ ຢູ່ບັນດາເມືອງທີ່ມີຊາຍແດນຕິດຈອດກັບລາວ ມີວັດທະນະທຳຫຼາຍສິ່ງທີ່ຄ້າຍຄືກັນກັບບັນດາຊົນເຜົ່າລາວຢູ່ເຂດຊາຍແດນ); ມີງານບຸນຫຼາຍງານເຊິ່ງເປັນວັດທະນະທຳທີ່ມີສີສັນພິເສດ. ຄົນກວາງຈິມີຄວາມສະຫຼາດ, ພາກພຽນໃນການຮຽນ. ກວາງຈິແມ່ນບ້ານເກີດເມືອງນອນຂອງການນຳຂອງພັກ ແລະລັດຫຼາຍໆທ່ານ, ເຊິ່ງພົ້ນເດັ່ນແມ່ນ ທ່ານເລຢ້ວນ ເລຂາທິການໃຫຍ່ , ທ່ານ ເຈີ່ນຫືວຢຶກ ຮອງນາຍົກລັດຖະມົນຕີ, ທ່ານພົນເອກ ເຈີ່ນກວຽນ , ທ່ານ ດວ່ານເຄ ລັດຖະມົນຕີກະຊວງປ້ອງກັນປະເທດ ...

### *2. ວ່າດ້ວຍລັກສະນະທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳຂອງແຂວງສະຫວັນນະເຂດ*

ແຂວງສະຫວັນນະເຂດ ເປັນແຂວງໜຶ່ງຕັ້ງຢູ່ທາງພາກກາງຂອງປະເທດສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ມີຊາຍແດນຕິດກັບໄທ, ມີຂົວມິດຕະພາບ 2 ຂ້າມແມ່ນ້ຳຂອງທີ່ເຊື່ອມຕໍ່ກັບແຂວງມຸກດາຫານ-ລາຊະອານາຈັກໄທ, ເຊິ່ງເປັນຫົວຂົວໜຶ່ງທາງການຄ້າທີ່ສຳຄັນຂອງລາວ, ທິດເໜືອຕິດກັບແຂວງຄຳມ່ວນ, ທິດໃຕ້ຕິດກັບແຂວງສາລະວັນ, ທິດຕາເວັນອອກ ຕິດກັບແຂວງກວາງຈິຂອງຫວຽດນາມ ແລະທິດຕາເວັນຕົກຕິດກັບແຂວງມຸກດາຫານຂອງລາຊະອານາຈັກໄທ. ຊື່ສະຫວັນນະເຂດ ໄດ້ມາຈາກຄຳວ່າ ສຸວັນນະເຂດ ເຊິ່ງເປັນຄຳໃນ

ພາສາບາລີ ເຊິ່ງມີຄວາມໝາຍວ່າດິນແດນອັນກວ້າງໃຫຍ່ໄພສານ, ອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະມີຊັບພະຍາກອນອັນລ້ຳຄ່າຫຼາຍຢ່າງທີ່ເຊື່ອງຊ້ອນໄວ້ໃນພື້ນແຜ່ນດິນ. ຄຳວ່າສະຫວັນນະເຂດກໍໄດ້ອະທິບາຍມາຈາກຄຳວ່າສະຫວັນນະຄອນຊຶ່ງແປວ່າ "ເມືອງສະຫວັນ".

ແຂວງສະຫວັນນະເຂດ ມີທົ່ງພຽງກວ້າງໃຫຍ່ຢູ່ໃຈກາງ, ທິດຕາເວັນອອກ ແລະທິດໃຕ້ເປັນພູຜາ ແລະທົ່ງພຽງແຄບ ກະຈາຍຢູ່ຫຼາຍບ່ອນ. ຈຸດຕ່ຳສຸດເມື່ອທຽບຈາກໜ້ານ້ຳທະເລແມ່ນ 100 ແມັດ ແລະລະດັບສູງສຸດທຽບກັບໜ້ານ້ຳທະເລແມ່ນ 1,321 ແມັດ. ພູມສັນຖານແບ່ງອອກເປັນສາມເຂດທີ່ແຕກຕ່າງກັນ: ເຂດພູພຽນ, ທົ່ງພຽງ ແລະພູດອຍ. ໃນນັ້ນ, ເຂດທົ່ງພຽງ ໃຈກາງມີ 6 ເມືອງ, ມີເນື້ອທີ່ 6.303,2 ກມ2; ເຂດພູພຽງ ມີ 4 ເມືອງ ດ້ວຍເນື້ອທີ່ 3.516.2 ກມ2; ເຂດພູດອຍມີ 5 ເມືອງ ດ້ວຍເນື້ອທີ່ 11.954.60 ກມ2.

ຕັ້ງຢູ່ຈຸດພິກັດ $16\text{-}17^0$ ອົງສາເສັ້ນຂະໜານເໜືອ, ຢູ່ໃນເຂດຮ້ອນຊຸ່ມ ແລະໄດ້ຮັບລົມຮ້ອນຈາກທິດຕາເວັນອອກ ສະນັ້ນສະຫວັນນະເຂດເປັນເຂດທີ່ມີຝົນຕົກຫຼາຍ, ອາກາດຮ້ອນ ແລະອາກາດອົບອຸ່ນຕະຫຼອດປີ. ທົ່ວແຂວງມີ 14 ເມືອງ, 01 ນະຄອນ, ປະກອບມີ: ນະຄອນໄກສອນພົມວິຫານ, ເມືອງອຸທຸມພອນ, ເມືອງອາດສະພັງທອງ, ເມືອງພີນ, ເມືອງເຊໂປນ, ເມືອງນອງ, ເມືອງທ່າປາງທອງ, ເມືອງສອງຄອນ, ເມືອງຈຳພອນ, ເມືອງຊົນນະບູລີ, ເມືອງໄຊບູລີ, ເມືອງອາດສະພອນ, ເມືອງໄຊພູທອງ, ເມືອງວິລະບູລີ, ເມືອງພະລານໄຊ. ແຂວງສະຫວັນນະເຂດມີ 1,543 ບ້ານດ້ວຍ 131,118 ຄົວເຮືອນ. ແຂວງສະຫວັນນະເຂດມີພົນລະເມືອງ 1,026,442 ຄົນ (ຍິງ 513,685 ຄົນ). ຄວາມໜາແໜ້ນຂອງປະຊາກອນ 37

ຄົນ/ກິໂລແມັດມົນທົນ. ເນື້ອທີ່ກະສິກຳຂອງແຂວງມີປະມານ 700,000 ເຮັກຕາ. ໃນນັ້ນ, ເນື້ອທີ່ປູກເຂົ້າປະມານ 200.000 ເຮັກຕາ, ເນື້ອທີ່ປູກພືດອຸດສາຫະກຳ ປະມານ 171.000 ເຮັກຕາ. ທົ່ງພຽງຂອງແຂວງສະຫວັນນະເຂດແມ່ນກວ້າງໃຫຍ່ ໄພສານ ແລະເປັນ ດິນສັນດອນຕະຫຼອດປີສະນັ້ນຈຶ່ງມີຄວາມອຸດົມສົມບູນ ແລະມັ່ງ ຄັ່ງ, ສ້າງເງື່ອນໄຂຄວາມສະດວກໃຫ້ແກ່ການພັດທະນາ ກະສິກຳ ແລະປ່າໄມ້ ທຳ ການຜະລິດບັນດາຜະລິດຕະພັນເປັນສິນຄ້າ. ແຂວງສະຫວັນນະເຂດ ມີເນື້ອທີ່ທົ່ງ ຫຍ້າທຳມະຊາດອັນກວ້າງໃຫຍ່ເນື້ອທີ່ 334.000 ເຮັກຕາ, ເໝາະສົມໃຫ້ແກ່ການ ລ້ຽງສັດໃຫຍ່.

ຊັບພະຍາກອນປ່າໄມ້ຂອງແຂວງສະຫວັນນະເຂດ ມີຄວາມອຸດົມສົມບູນ ເນື້ອທີ່ 1,3 ລ້ານກວ່າເຮັກຕາ. ສ່ວນໃຫຍ່ເປັນ ປ່າດົງດິບມີສັດ ແລະພືດພັນຫຼາຍ ຊະນິດທີ່ຫາຍາກ, ປະລິມານປ່າໄມ້ຫຼາຍ. ແມ່ນ້ຳຂອງອັນກວ້າງໃຫຍ່ໄພສານ ແລະ ແມ່ນ້ຳເຊເປັນຈຳນວນຫຼາຍສາຍ ເຊັ່ນ: ເຊບັ້ງໄຟ, ເຊໂປນ, ເຊລະນອງ, ເຊຈຳພອນ, ເຊຊັ່ງຊອຍ, ເຊກອກ, ເຊບັ້ງນວນ ແລະສາຍນ້ຳສາຂາແຫ່ງຕ່າງໆ... ໄດ້ເຮັດໃຫ້ ແຂວງສະຫວັນນະເຂດມີຊັບພະຍາກອນທາງນ້ຳ ທີ່ອຸດົມສົມບູນສ້າງເງື່ອນໄຂເໝາະ ສົມໃຫ້ການຕິດຕັ້ງບັນດາສະຖານີສູບນ້ຳ ແລະບັນດາກິດຈະການອື່ນໆ ຮັບໃຊ້ໃຫ້ ການຜະລິດກະສິກຳ. ນອກຈາກນັ້ນ, ຍັງມີສາຍນ້ຳນ້ອຍໆຫຼາຍສາຍທີ່ເໝາະສົມ ກັບການກໍ່ສ້າງລະບົບຊົນລະປະທານ ແລະອ່າງເກັບນ້ຳເພື່ອຮັບໃຊ້ໃຫ້ການລ້ຽງ ສັດນ້ຳ. ແຂວງສະຫວັນນະເຂດມີແຫຼ່ງຊັບພະຍາກອນແຮ່ທາດທີ່ອຸດົມສົມບູນ, ໄດ້ ຈັດແບ່ງຢູ່ຫຼາຍເຂດທີ່ແຕກຕ່າງກັນ. ແຮ່ທາດບາງແຫ່ງໄດ້ຮັບການສຳຫຼວດ ແລະ ຂຸດຄົ້ນຄື: ດິນດາກຂາວ, ຫີນການິດ... ຄຳ ແລະທອງ ເປັນແຮ່ທາດ 2 ຊະນິດ ທີ່ມີ

ຄ່າກຳລັງໄດ້ຂຸດຄົ້ນຢູ່ເມືອງ ວີລະບູລີ, ໄດ້ເພີ່ມລາຍຮັບໃຫ້ປະເທດ ແລະສ້າງວຽກເຮັດງານທຳໃຫ້ປະຊາຊົນຢູ່ບັນດາທ້ອງຖິ່ນ. ຄວາມອຸດົມສົມບູນຂອງ ຊັບພະຍາກອນແຮ່ທາດແມ່ນເງື່ອນໄຂທີ່ເອື້ອອຳນວຍໃຫ້ແກ່ແຂວງສະຫວັນນະເຂດ ໃນການພັດທະນາຂະແໜງອຸດສາຫະກຳ ຂຸດຄົ້ນບໍ່ແຮ່ ແລະປຸງແຕ່ງໃນອະນາຄົດ.

ແຂວງສະຫວັນນະເຂດມີທ່າດີທາງດ້ານຄົມມະນາຄົມ. ທາງຫຼວງແຫ່ງຊາດເລກ 13 ເໜືອ-ໃຕ້ ແລ່ນຜ່ານແຂວງ ສະຫວັນນະເຂດດ້ວຍຄວາມຍາວ 150 ກິໂລແມັດ. ພິເສດແມ່ນມີເສັ້ນທາງເລກ 9 ໄປທິດຕາເວັນອອກເຊື່ອມຕໍ່ກັບຫວຽດນາມ. ທິດຕາເວັນຕົກຂອງແຂວງ ມີແມ່ນ້ຳຂອງເຊື່ອມຕໍ່ກັບລາຊະອານາຈັກໄທມີຄວາມຍາວ 246 ກິໂລແມັດ. ທ້າຍປີ 2006, ຂົວມິດຕະພາບແຫ່ງທີ 2 ຂ້າມແມ່ນ້ຳຂອງ ລະຫວ່າງສອງປະເທດ ລາວ-ໄທ ຢູ່ແຂວງສະຫວັນນະເຂດ (ລາວ) ແລະແຂວງມູກດາຫານ (ລາຊະອານາຈັກໄທ) ໄດ້ເຮັດພິທີເປີດ ແລະເປີດນຳໃຊ້. ຂົວແຫ່ງນີ້ເຊື່ອມຕໍ່ທາງເລກ 9 ຈາກລາວໄປໄທແລະມຽນມາ. ນີ້ແມ່ນທ່າໄດ້ປຽບອັນສຳຄັນທີ່ພາໃຫ້ແຂວງສະຫວັນນະເຂດໃນການພັດທະນາເສດຖະກິດ, ການບໍລິການຂ້າມຊາຍແດນ, ສ້າງກຳລັງແຮງໃໝ່ໃຫ້ແກ່ການຂະຫຍາຍຕົວ ແລະການປ່ຽນໃໝ່ຕໍ່ພື້ນຖານເສດຖະກິດ, ວັດທະນະທຳ-ສັງຄົມ.

ສະຫວັນນະເຂດ ເປັນບ່ອນດຳລົງຊີວິດ, ເຕົ້າໂຮມຂອງຫຼາຍຊົນເຜົ່າທີ່ແຕກຕ່າງກັນ, ແຕ່ຜ່ານບັນດາຮຸ່ນຄົນ, ເຂົາເຈົ້າກໍ ໄດ້ສາມັກຄີ, ຮ່ວມແຮງຮ່ວມໃຈເພື່ອກໍ່ສ້າງ ແລະປົກປັກຮັກສາປະເທດຊາດ. ໃນເງື່ອນໄຂຂອງປະເທດໜຶ່ງທີ່ມີພື້ນຖານ ເສດຖະກິດກະສິກຳທີ່ກຸ້ມຕົວເອງດ້ວຍລະດັບການຜະລິດທີ່ຍັງຈຳກັດ, ເຄິ່ງທຳມະຊາດ, ບໍ່ເທົ່າທຽມກັນ, ແຕ່ອ້າຍເອື້ອຍນ້ອງບັນດາເຜົ່າຢູ່ແຂວງສະຫວັນນະ

ເຂດໄດ້ຮູ້ຈັກເພິ່ງພາອາໄສ, ຊ່ວຍເຫຼືອເຊິ່ງກັນ ແລະກັນໃນການດຳລົງຊີວິດ. ບົນພື້ນຖານວັດທະນະທຳລວມຂອງເຂດອາຊີຕາເວັນອອກສ່ຽງໃຕ້, ແຕ່ລະຊົນຊາດແລະຊົນເຜົ່າຢູ່ທີ່ນີ້ ກໍມີບັນດາລັກສະນະວັດທະນະທຳສະເພາະຂອງຕົນ. ລັກສະນະຈຳເພາະເຫຼົ່ານີ້ມີການກະທົບ ແລະອິດທິພົນເຊິ່ງກັນ ແລະກັນເພື່ອພ້ອມກັນສ້າງຂຶ້ນພື້ນຖານ ວັດທະນະທຳລາວທີ່ມີເອກະລັກຫຼາຍຢ່າງ. ປະຊາຊົນຊາວສະຫວັນນະເຂດມີມູນເຊື້ອອັນດຸໝັ່ນ, ມີນ້ຳໃຈຮັກຊາດ ແລະມີ ຈິດໃຈສາມັກຄີຮັກແພງກັນ. ຕັ້ງແຕ່ສະໄໝບູຮານ, ບັນດາຊົນເຜົ່າທີ່ຂຶ້ນກັບໝວດລາວລຸ່ມ ແລະລາວເທິງຕ່າງໆທີ່ຢູ່ສະຫວັນນະເຂດ ໄດ້ປະກອບເຫື່ອແຮງຂອງຕົນເຂົ້າໃນການຕໍ່ສູ້ກັບສັດຕູຮຸກຮານຂອງສະຫຍາມ ແລະພະມ້າ. ໃນສັດຕະວັດທີ XIV, ຊາວລາວເທິງໄດ້ເຂົ້າຮ່ວມຢ່າງຕັ້ງໜ້າພ້ອມກັບຊາວລາວລຸ່ມ, ນຳພາໂດຍວິລະຊົນ ເຈົ້າຟ້າງຸ່ມ ໄດ້ນຳພາການຕໍ່ສູ້ດ້ວຍຄວາມອົງອາດກ້າແກ່ນ ແລະພິລະອາດຫານເປັນເວລາຍືດເຍື້ອຍາວນານ ເພື່ອປົດປ່ອຍ ແລະທ້ອນໂຮມປະເທດເປັນ ເອກະພາບ, ສ້າງຕັ້ງອານາຈັກລ້ານຊ້າງຂຶ້ນເຊິ່ງເປັນອານາຈັກແຫ່ງທຳອິດໃນປະຫວັດສາດຂອງປະເທດລາວ. ຕະຫຼອດຫຼາຍໆສັດຕະວັດຜ່ານມາ, ປະຊາຊົນແຂວງສະຫວັນນະເຂດ ກໍມີມູນເຊື້ອອົງອາດກ້າຫານແລະລຸກຂຶ້ນເຂົ້າຮ່ວມບັນດາຂະບວນການ ຕໍ່ສູ້ຂອງບັນດາຊົນເຜົ່າຈຳນວນໜ້ອຍໄດ້ຕ້ານການກົດຂີ່ຂູດຮີດຂອງພວກສັກດີນາ ແລະຜູ້ຮຸກຮານ.

ພາຍຫຼັງທີ່ຖືກພວກລ່າເມືອງຂຶ້ນຝຣັ່ງມາຮຸກຮານ (1893), ຫຼາຍຂະບວນການຕໍ່ສູ້ຂອງປະຊາຊົນໄດ້ເກີດຂຶ້ນຢ່າງ ຕໍ່ເນື່ອງໃນທົ່ວປະເທດລາວ. ເລີ່ມຕົ້ນແມ່ນຂະບວນການຕໍ່ສູ້ຂອງພໍ່ກະດວດຢູ່ສະຫວັນນະເຂດ (ແຕ່ປີ 1901-1903), ໃນເວລາ ດຽວກັນກັບຂະບວນການອົງແກ້ວ ແລະອົງກົມມະດຳ ຂອງຊົນເຜົ່າທາງແຂວງ

ພາກໃຕ້ລວມມີ ເຜົ່າແງະ, ລະເວນ, ລາເວ, ອາລັກ, ຕຣຽງ, ໂອຍ, ຊ່ວຍ... ເຊິ່ງເປັນຂະບວນການທີ່ມີພັນທະມິດຊົນຊາດທີ່ກວ້າງຂວາງທີ່ສຸດ, ແລະຍັງເປັນຂະບວນການຕໍ່ສູ້ທີ່ຍືດເຍື້ອຍາວນານທີ່ສຸດ (ແກ່ຍາວເຖິງ 38 ປີ, ແຕ່ 1901 ຫາ 1937). ການລຸກຮືຂຶ້ນຂອງປະຊາຊົນພາຍໃຕ້ການນໍາພາຂອງ ພໍ່ກະດວດ ແຕ່ປີ 1901-1903 ສະແດງໃຫ້ເຫັນເຈດຈໍານົງ, ນໍ້າໃຈຮັກຊາດ, ຄວາມກ້າຫານທີ່ເສຍສະຫຼະເພື່ອປົກປັກຮັກສາ ບ້ານເກີດເມືອງນອນ ແລະ ປະເທດຊາດກໍຄືຊາວແຂວງສະຫວັນນະເຂດ. ເຖິງຢ່າງໃດກໍຕາມ, ເຊັ່ນດຽວກັບຫຼາຍຂະບວນການຕໍ່ສູ້ແບບກະແຈກກະຈາຍໃນສະໄໝນັ້ນ, ການລຸກຮືຂຶ້ນຂອງພໍ່ກະດວດກໍຖືກປະລາໄຊ. ຈົນເມື່ອມາຮອດພັກກອມມູນິດອິນດູຈີນໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1930 ແລະຈາກນັ້ນກໍ່ມີການສ້າງຕັ້ງຄະນະພັກແຄວ້ນລາວໃນປີ 1934 (ອົງການທໍາອິດຂອງພັກປະຊາຊົນປະຕິວັດລາວໃນທຸກມື້ນີ້), ການຕໍ່ສູ້ຂອງປະຊາຊົນບັນດາເຜົ່າລາວຈຶ່ງມີແນວທາງນໍາພາອັນຖືກຕ້ອງ. ນັ້ນເປັນ ປັດໄຈສໍາຄັນ ແລະມີຄວາມໝາຍ, ສ້າງຄວາມສາມັກຄີ, ພັນທະມິດລະຫວ່າງບັນດາຊົນຊາດເພື່ອຍາດເອົາໄຊຊະນະ ແລະຍຶດເອົາອໍານາດການປົກຄອງຢູ່ລາວໃນປີ 1945. ໃນການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງ ແລະຈັກກະພັດອາເມລິກາ, ປະຊາຊົນຊາວສະຫວັນນະເຂດໄດ້ຢູ່ຄຽງຂ້າງທະຫານປະເທດລາວ ແລະທະຫານຫວຽດນາມ ເພື່ອຕໍ່ສູ້ກັບຜູ້ຮຸກຮານ ແລະຍາດເອົາເອກະລາດ, ເສລີພາບໃຫ້ແກ່ປະເທດຊາດ. ຜ່ານໄລຍະ 30 ປີ ແຫ່ງການຕໍ່ສູ້ຍືດເຍື້ອຍາວນານ, ປະຊາຊົນແຂວງສະຫວັນນະເຂດຕ້ອງທົນກັບ ຄວາມລໍາບາກ, ຄວາມສູນເສຍ, ຄວາມເຈັບປວດ. ລູກຫຼານຂອງບັນດາຊົນເຜົ່າລາວຫຼາຍ

ຄົນຢູ່ສະຫວັນນະເຂດໄດ້ເສຍສະຫຼະຊີວິດຢູ່ໃນສະໜາມຣົບ ແລະມີມູນເຊື້ອພິລະອາດຫານຕໍ່ສູ້ຕ້ານພວກຮຸກຮານລ່າເມືອງຂຶ້ນ.

ທຸກວັນນີ້, ດ້ວຍແນວທາງ, ນະໂຍບາຍອັນຖືກຕ້ອງ ແລະສະເໝີຕົ້ນສະເໝີປາຍຂອງພັກປະຊາຊົນປະຕິວັດລາວ, ຂອງປະເທດສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ແຂວງສະຫວັນນະເຂດໄດ້ພະຍາຍາມເພື່ອຜ່ານຜ່າຄວາມຫຍຸ້ງຍາກ ແລະສິ່ງທ້າທາຍຫຼາຍປະການ, ໄດ້ຂຸດຄົ້ນທ່າແຮງບົ່ມຊ້ອນ ເພື່ອພັດທະນາເສດຖະກິດ-ສັງຄົມ. ອັດຕາການຂະຫຍາຍຕົວເສດຖະກິດບັນລຸໄດ້ 7,02%/ປີ, ລວມຍອດການຜະລິດຕະພັນພາຍໃນ ປີ 2021 ບັນລຸໄດ້ 22,199 ຕື້ກີບ, ສະເລ່ຍຕໍ່ຫົວຄົນບັນລຸໄດ້ 2,190 USD/ປີ. ໂຄງປະກອບເສດຖະກິດ: ຂະແໜງກະສິກຳກວມ 26,20%, GDP (ອັດຕາການຂະຫຍາຍຕົວ 3,80%), ຂະແໜງອຸດສາຫະກຳ 39,51% GDP (ອັດຕາການຂະຫຍາຍຕົວ 10,51%), ຂະແໜງບໍລິການກວມເອົາ 34,29%, GDP (ອັດຕາການຂະຫຍາຍຕົວ 5,59%).

ໃນດ້ານວັດທະນະທຳສັງຄົມ: ສຸມໃສ່ລາຍການພັດທະນາແບບຍືນຍົງ (SDGs). ລາຍການຍຸດທະສາດພັດທະນາການສຶກສາ ແລະນະໂຍບາຍສະໜັບສະໜູນການສຶກສາເພື່ອບັນລຸເປົ້າໝາຍ. ຈຳນວນນັກຮຽນທີ່ໄດ້ໄປໂຮງຮຽນນັບມື້ນັບເພີ່ມຂຶ້ນ, ຈຳນວນເດັກນ້ອຍປະລະຮຽນ ຫຼືເສັງບໍ່ຈົບ ຫຼືສອບເສັງຄືນກໍນັບມື້ນັບຫຼຸດລົງ. ພົ້ນເດັ່ນກວ່າໝູ່ແມ່ນທົ່ວແຂວງໄດ້ປະກາດໃຫ້ນັກຮຽນຢູ່ຊັ້ນມັດທະຍົມ ແລະໄດ້ຈົບຊັ້ນມັດທະຍົມຕອນຕົ້ນ. ເດັກນ້ອຍທີ່ຮອດອາຍຸກໍຄວນຈະໄດ້ເຂົ້າໂຮງຮຽນ.

ເຄືອຂ່າຍການສຶກສາກວມທົ່ວແຂວງ, ຊຸມຊົນຫ່າງໄກສອກຫຼີກໄດ້ມີໂອກາດເຂົ້າຮ່ວມພົບປະແລກປ່ຽນ ແລະຂະບວນ ກິລາ ແລະອອກກຳລັງກາຍຢ່າງກວ້າງຂວາງ. ກ່ຽວກັບດ້ານສາທາລະນະສຸກປະຕິບັດດ້ານຍຸດທະສາດຕິດພັນກັບນະໂຍບາຍຍົກສູງຄຸນນະພາບການບໍລິການສາທາລະນະສຸກທຸກຂັ້ນ, ພົ້ນເດັ່ນແມ່ນໄດ້ປະຕິບັດນະໂຍບາຍປິ່ນປົວດ້ວຍກອງທຶນປະກັນ ສຸຂະພາບ,ໃນນັ້ນລວມມີການປິ່ນປົວໂດຍບໍ່ຕ້ອງເສຍຄ່າສຳລັບແມ່ຍິງຖືພາຜູ້ທີ່ທຸກຍາກ ແລະເດັກນ້ອຍທັງໝົດທີ່ມີອາຍຸຕໍ່າກວ່າ 5 ປີ. ການສ້າງບ້ານ ແລະໝູ່ບ້ານຕາມມາດຕະຖານຕົວແບບການແພດບັນລຸໄດ້ 69,3% ເປົ້າໝາຍ, ອັດຕາຄອບຄົວໄດ້ນຳໃຊ້ນ້ຳສະອາດກວມເອົາ 97,1%, ອັດຕາການນຳໃຊ້ຫ້ອງນ້ຳບັນລຸ 75,2% (ເພີ່ມຂຶ້ນ 8,9%). ປ້ອງກັນ ແລະຕ້ານການແຜ່ລະບາດຂອງພະຍາດຕາມລະດູການ, ໂດຍສະເພາະແມ່ນການປ້ອງກັນພະຍາດໂຄວິດ-19. ເອົາໃຈໃສ່ ແລະຮັກສາສຸຂະພາບແມ່ແລະເດັກ, ສັກຢາກັນພະຍາດໃຫ້ແກ່ກຸ່ມຄົນເພື່ອຕ້ານພະຍາດອັນຕະລາຍ, ຫຼຸດຜ່ອນການຕາຍ. ຍູ້ແຮງການໂຄສະນາເຜີຍແຜ່ບັນດາແນວທາງນະໂຍບາຍຂອງພັກ ແລະກົດໝາຍຂອງລັດ, ເຜີຍແຜ່ຂໍ້ມູນຂ່າວສານທີ່ສຳຄັນໃຫ້ປະຊາຊົນ. ທາງດ້ານວັດທະນະທຳ ແລະຮີດຄອງປະເພນີຂອງຊາວເຜົ່າລາວໄດ້ຮັບການອະນຸລັກ ແລະຍົກສູງ. ກິດຈະກຳວັດທະນະທຳໄດ້ຮັບການປັບປຸງ. ການສ້າງບ້ານວັດທະນະທຳບັນລຸ 78,12% ແລະຄອບຄົວວັດທະນະທຳບັນລຸ 67,89%.

ສຳລັບວຽກງານລຶບລ້າງຄວາມທຸກຍາກ: ການນຳແຂວງສະຫວັນນະເຂດໄດ້ສຸມໃສ່ນຳພາ ແລະຊີ້ນຳການປະຕິຮູບການຈັດສັນທີ່ດິນໃຫ້ປະຊາຊົນ, ສ້າງເງື່ອນໄຂໃຫ້ປະຊາຊົນບັນດາເຜົ່າມີອາຊີບຄົງທີ່. ຍູ້ແຮງການພັດທະນາບັນດາເຂດໃຈກາງ

ຂອງແຂວງ ຕິດພັນກັບການລົງທຶນກໍ່ສ້າງບັນດາໂຄງການຂອງພັກ ແລະລັດ, ປະກອບສ່ວນຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ, ໃຫ້ມີລາຍຮັບສະເລ່ຍສູງກວ່າເກົ່າ. ຄອບຄົວຜູ້ທຸກຍາກໄດ້ຫຼຸດລົງເທື່ອລະກ້າວ, ປັດຈຸບັນທົ່ວແຂວງໄດ້ຫຼຸດລົງ 125.400 ຄອບຄົວ ແລະ626 ບ້ານທຸກຍາກ.

ຂະແໜງບໍລິການທ່ອງທ່ຽວ ແລະທຸລະກິດຮ້ານອາຫານ, ໂຮງແຮມ, ບໍລິການບັນເທີງໄດ້ມີການພັດທະນາ ແລະຍົກລະດັບຢ່າງຈະແຈ້ງ. ວຽກງານຄຸ້ມຄອງແຮງງານຕ່າງປະເທດ ແລະການສົ່ງແຮງງານລາວໄປຕ່າງປະເທດໄດ້ຮັບປະກັນຖືກຕ້ອງຕາມການກຳນົດຂອງກົດໝາຍ. ນະໂຍບາຍຜູ້ທີ່ມີຜົນງານ ແລະຄຸນງາມຄວາມດີຕໍ່ປະເທດຊາດແມ່ນໄດ້ຮັບການເອົາໃຈໃສ່ຢ່າງສົມເຫດສົມຜົນ. ກອງທຶນປະກັນສັງຄົມໄດ້ມີການຂະຫຍາຍຕົວຢ່າງກ້ວາງຂວາງ, ສ້າງຕັ້ງຢູ່ບັນດາຂັ້ນແຂວງ, ນະຄອນ ແລະເມືອງ. ບູລະນະ, ສ້ອມແປງ ແລະຕົບແຕ່ງເຂດອະນຸສອນສະຖານ ປະທານ ໄກສອນ ພົມວິຫານ ແລະກໍ່ສ້າງບັນດາອະນຸສາວະລີ ແລະອະນຸສອນສະຖານອື່ນໆຂອງແຂວງ.

ຂົງເຂດການຕ່າງປະເທດ, ມິດຕະພາບແບບພິເສດກັບສາທາລະນະລັດສັງຄົມນິຍົມຫວຽດນາມ: ກຳແໜ້ນ ແລະຜັນຂະຫຍາຍແນວທາງ "ສັນຕິພາບ, ເອກະລາດ, ມິດຕະພາບ ແລະການຮ່ວມມືອັນຊື່ສັດ ແລະເປັນເຈົ້າຕົນເອງ, ຊຸກຍູ້ການພົວພັນຮ່ວມມືຫຼາຍຝ່າຍຫຼາຍຮູບແບບ, ຫຼາຍລະດັບ, ເຄົາລົບເຊິ່ງກັນ ແລະກັນບົນຫຼັກການສະເໝີພາບ, ສອງຝ່າຍໄດ້ຮັບ ຜົນປະໂຫຍດຮ່ວມກັນ" ເຊິ່ງພັກປະຊາຊົນປະຕິວັດລາວໄດ້ວາງອອກ. ການພົວພັນມິດຕະພາບ, ຄວາມສາມັກຄີແບບພິເສດ ແລະການຮ່ວມມືຮອບດ້ານລະຫວ່າງສອງປະເທດລາວ-ຫວຽດນາມ

ເວົ້າລວມ, ເວົ້າສະເພາະກໍຄືແຂວງສະຫວັນນະເຂດ ແລະແຂວງກວາງຈິ ໃນທຸກ ຂົງເຂດການເມືອງ, ເສດຖະກິດ, ວັດທະນະທຳ, ວຽກງານປ້ອງກັນຊາດ-ປ້ອງກັນ ຄວາມສະຫງົບ, ປົກປັກຮັກສາ ຊາຍແດນນັບມື້ນັບມີປະສິດທິຜົນ, ແທດເໝາະກັບ ຕົວຈິງ ແລະນັບມື້ນັບເກີດດອກອອກຜົນ. ແຂວງສະຫວັນນະເຂດໄດ້ຮັບການ ສະໜັບສະໜູນລົງທຶນຈາກ ສ.ສ ຫວຽດນາມ ໃນຫຼາຍໂຄງການໃຫຍ່ ໃນນັ້ນມີ ຫໍວັດທະນະທຳ ໄກສອນ ພົມວິຫານ, ໂຮງຮຽນມັດທະຍົມຕອນປາຍບ້ານດົງ, ໂຮງຮຽນອະນຸບານສຸນັນທາ, ໂຮງຮຽນການເມືອງ-ການປົກຄອງແຂວງ, ແລະສູນ ພາສາຫວຽດນາມ. ກອງທັບ ແລະປະຊາຊົນແຂວງສະຫວັນນະເຂດ ໄດ້ມີຄວາມສາ ມັກຄີຮ່ວມມືກໍ່ສ້າງບ້ານເກີດເມືອງນອນ, ສ້າງນ້ຳໃຈສາມັກຄີ, ມິດຕະພາບກັບ ຊາວກວາງຈິ (ຫວຽດນາມ). ນີ້ແມ່ນສິ່ງທີ່ມີຄວາມໝາຍອັນຍິ່ງໃຫຍ່ສຳລັບພາລະ ກິດປົກປັກຮັກສາ, ສ້າງສາພັດທະນາປະເທດຂອງສອງແຂວງ ແລະສອງປະເທດ.

## II. ກວາງຈິ ແລະ ສະຫວັນນະເຂດ ມີການພົວພັນທາງດ້ານປະຫວັດສາດ ແລະ ມູນເຊື້ອອັນຍາວນານ

ພ້ອມກັນອີງຫຼັງໃສ່ສາຍພູຫຼວງທີ່ໃຫຍ່ໂຕມະໂຫຖານ ແລະຮ່ວມກັນດື່ມນ້ຳ ໃນລຳແມ່ນ້ຳຂອງ, ຫວຽດນາມ ແລະລາວ ແມ່ນສອງປະເທດບ້ານໃກ້ເຮືອນຄຽງ ເຊິ່ງມີສາຍສຳພັນສາມັກຄີ, ມິດຕະພາບທີ່ຕິດພັນຢ່າງສະໜິດແໜ້ນມາແຕ່ດົນນານ. ໃນປະຫວັດສາດຂອງຕົນ, ທັງສອງຊົນຊາດລ້ວນແຕ່ໄດ້ຕໍ່ສູ້ກັບສັດຕູທີ່ມີອຳນາດ ຄືຜູ້ຮຸກຮານງວຽນ-ມົງໂກນ, ສະຫຍາມ, ຝຣັ່ງ, ຍີ່ປຸ່ນ, ແລະອາເມລິກາ. ຜ່ານໄລຍະ ການປະຕິວັດຂອງແຕ່ລະປະເທດ, ການຮ່ວມມື ແລະການຊ່ວຍເຫຼືອເຊິ່ງກັນ ແລະ ກັນໄດ້ຮັບການກໍ່ສ້າງ, ພັດທະນາ ແລະນັບມື້ນັບໝັ້ນແກ່ນ, ນີ້ແມ່ນພື້ນຖານໃຫ້

ການກໍ່ສ້າງ ແລະພັດທະນາສາຍພົວພັນແບບພິເສດ 2 ແຂວງ: ກວາງຈິ (ຫວຽດນາມ) - ສະຫວັນນະເຂດ (ລາວ).

ທາງດ້ານທຳມະຊາດ, ສອງແຂວງແມ່ນຕັ້ງຢູ່ເຂດສາຍພູຫຼວງໜືອ, ນອນຢູ່ພາກກາງເປັນທີ່ຕັ້ງແຄບທີ່ສຸດຂອງຫວຽດນາມ ແລະລາວ. ເຖິງວ່າຖືກຂັ້ນກັນດ້ວຍສາຍພູຫຼວງ, ແຕ່ຍ້ອນພູມສັນຖານເປັນພູດອຍຕ່ຳ ແລະໂນນຄ້ອຍບໍ່ມີຫຼາຍ ສະນັ້ນການເດີນທາງໄປມາຂອງປະຊາຊົນສອງເບື້ອງຊາຍແດນແມ່ນສະດວກດີ.

ກວາງຈິ ແລະ ສະຫວັນນະເຂດ ລ້ວນແຕ່ມີຊັບພະຍາກອນທຳມະຊາດທີ່ອຸດົມສົມບູນ ແລະຫຼາຍຮູບແບບ, ເປັນຕົ້ນ ແມ່ນຊັບພະຍາກອນປ່າໄມ້ ແລະຫີນປູນທີ່ກວ້າງໃຫຍ່ໄພສານ, ປົກຄຸມທັງສອງເບື້ອງທິດຕາເວັນອອກ ແລະທິດຕາເວັນຕົກຂອງສາຍພູຫຼວງ. ນີ້ແມ່ນເງື່ອນໄຂທຳມະຊາດທີ່ສຳຄັນໃນການລີ້ໄພ ແລະກໍ່ສ້າງປ້ອມດ້ານໃນການຕໍ່ສູ້ຕ້ານຜູ້ຮຸກຮານ ແລະຮັບໃຊ້ວຽກງານພັດທະນາເສດຖະກິດ - ສັງຄົມ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ; ພ້ອມກັນນັ້ນ, ໄດ້ເປີດກວ້າງຄວາມສາມາດໃນຮ່ວມມືພັດທະນາການທ່ອງທ່ຽວບົນແລວເສດຖະກິດຕາເວັນອອກ-ຕາເວັນຕົກ.

ຄຽງຄູ່ກັບລັກສະນະຄ້າຍຄືກັນກ່ຽວກັບທຳມະຊາດ, ລະຫວ່າງສອງແຂວງກໍ່ມີຄວາມຄ້າຍຄືກັນທາງດ້ານວັດທະນະທຳ-ສັງຄົມ. ນອກຈາກເອກະລັກວັດທະນະທຳສະເພາະຂອງແຕ່ລະຊົນເຜົ່າແລ້ວ, ຊາວເມືອງສອງແຂວງຍັງມີມູນເຊື້ອ ແລະປະເພນີວັດທະນະທຳທີ່ຄ້າຍຄືກັນຄື: ຊື່ສັດ, ເມດຕາຈິດ, ຮັກແຂກແພງຄົນ, ຄວາມກະລຸນາ. ມີງານບຸນ, ຮີດຄອງປະເພນີຫຼາຍຢ່າງຂອງປະຊາຊົນດຳລົງຊີວິດບົນຂອບເຂດສອງ

ແຂວງຄື: ການຜະລິດແບບປະເພນີດັ້ງເດີມ, ການດຳລົງຊີວິດ, ງານສົບ, ງານແຕ່ງດອງ, ງານບຸນ, ຄວາມເຊື່ອຖື, ຈິດວິນຍານ... ແມ່ນໃກ້ຄຽງ ແລະຄ້າຍຄືກັນ.

ໃນໄລຍະຜ່ານມາ, ບັນດາເຜົ່າທີ່ດຳລົງຊີວິດຢູ່ສອງແຂວງ ກວາງຈີ-ສະຫວັນນະເຂດ ສ່ວນຫຼາຍແມ່ນອາໄສຊັບພະຍາກອນ ທຳມະຊາດ, ໃນນັ້ນຕົ້ນຕໍແມ່ນແຫຼ່ງຊັບພະຍາກອນປ່າໄມ້ເພື່ອທຳການຜະລິດ ແລະຄຽງຄູ່ກັບການພັດທະນາຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ, ປະຊາຊົນໄດ້ຫັນໄປສູ່ການຜະລິດກະສິກຳເທື່ອລະກ້າວ. ປະຊາຊົນສອງແຂວງໄດ້ແບ່ງປັນປະສົບການໃນການຜະລິດ, ວິທີການປູກຝັງ, ແລກປ່ຽນ, ຊື້ຂາຍສິນຄ້າ, ຜະລິດຕະພັນ ແລະການບໍລິການຮັບໃຊ້ການພັດທະນາເສດຖະກິດ - ສັງຄົມຢ່າງເປັນປະຈຳ. ປະຊາຊົນສອງແຂວງໄດ້ຊອກຫາບັນດາຮູບແບບທີ່ໃກ້ຊິດໃນການລ້ຽງສັດ ແລະການປູກຝັງ ແລະຍິນດີທີ່ແບ່ງປັນ ແລະໜູນຊ່ວຍເຊິ່ງກັນ ແລະກັນເພື່ອພ້ອມກັນພັດທະນາ.

ຄວາມຄ້າຍຄືກັນກ່ຽວກັບບັນດາປັດໄຈທາງດ້ານທຳມະຊາດ, ເສດຖະກິດ ແລະສັງຄົມ ໄດ້ປະກອບສ່ວນເຂົ້າ ໃນຄວາມສະໜິດຂອງສາຍພົວພັນບ້ານໃກ້ເຮືອນຄຽງອັນໃກ້ຊິດ, ພິເສດແມ່ນລະຫວ່າງສອງແຂວງ ກວາງຈີ - ສະຫວັນນະເຂດ.

ເປັນເວລາດົນນານ, ປະຊາຊົນສອງແຂວງກວາງຈີ - ສະຫວັນນະເຂດ ໄດ້ດຳລົງຊີວິດຢູ່ສອງເບື້ອງສາຍພູຫຼວງໄດ້ມີສາຍພົວພັນຢ່າງສະໜິດຊິດເຊື້ອ, ຄວາມຄ້າຍຄືກັນໃນທາງດ້ານພາສາ ແລະຮີດຄອງປະເພນີຫຼາຍດ້ານ, ໄດ້ໄປມາເພື່ອແລກປ່ຽນ, ຊື້ຂາຍ ແລະຢ້ຽມຢາມເຊິ່ງກັນ ແລະກັນ. ພິເສດແມ່ນປະຊາຊົນແຂວງກວາງຈີ ພ້ອມກັບຊາວສະຫວັນນະເຂດ ຄຽງບ່າຄຽງໄລ່ຕໍ່ສູ້ສັດຕູຜູ້ຮຸກຮານ, ປ້ອງກັນຊາຍແດນ, ຮັກສາຜືນແຜ່ນດິນຂອງປະເທດ.

ປະຊາຊົນແຂວງກວາງຈີ ແລະແຂວງສະຫວັນນະເຂດໄດ້ຮ່ວມກັນຕໍ່ສູ້ຕ້ານພວກສະຫຍາມມາຮຸກຮານເປັນຫຼາຍຄັ້ງ. ອັນເດັ່ນແມ່ນການສູ້ຮົບສາມຄັ້ງແຕ່ເດືອນທັນວາປີ (1833) ເຖິງເດືອນມີນາຂອງປີ (1834). ຫຼັງຈາກການພ່າຍແພ້ຢ່າງໜັກໜ່ວງທັງສາມຄັ້ງ, ພວກສະຫຍາມກໍບໍ່ກ້າບຸກເຂົ້າມາໃນດິນແດນຂອງພວກເຮົາອີກ. ໄຊຊະນະອັນສະຫງ່າລາສີນີ້ບໍ່ພຽງແຕ່ໄດ້ຮັກສາຜືນແຜ່ນດິນອັນຄົບຖ້ວນຂອງປະເທດຫວຽດນາມເທົ່ານັ້ນ, ຫາກຍັງຮັກສາຄວາມເອກະລາດຂອງອານາຈັກລາວຢ່າງໝັ້ນຄົງຕໍ່ໄພຮຸກຮານຂອງພວກສັກດີນາສະຫຍາມອີກດ້ວຍ.

ປີ 1885, ພາຍຫຼັງເຫດການກຳແພງວັງເຫວ້, ທ່ານໂຕນເທີດທ໋ວຽດໄດ້ພາເຈົ້າຊີວິດຫ່າມງີໄປກຳແພງເມືອງເຕີນເຊີ (ກວາງຈີ). ຕໍ່ກັບການໄລ່ຈັບແລະປິດລ້ອມຂອງກອງທັບຝະລັ່ງ, ທ່ານໂຕນເທີດທ໋ວຽດຕ້ອງພາເຈົ້າຊີວິດ ຫ່າມງີ ຂ້າມເມືອງລາວບາວ (ວັນທີ 27 ສິງຫາ 1885) ຜ່ານປ່າ, ຂ້າມຫ້ວຍໄປຫາດິນແດນລາວ, ໄປຮອດບ້ານຕ່າງໆຢູ່ຝັ່ງເບື້ອງນັ້ນຂອງສາຍພູຫຼວງເຊັ່ນບ້ານກຽນ,ຮ່າມທາວ, ເມືອງມະລາໄຊ, ມາຮອດກືວເຈີນ (ເປັນບ້ານໜຶ່ງໃນແຂວງສະຫວັນນະເຂດ - ລາວ) ໃນວັນທີ 2 ສິງຫາ 1885. ບົນເສັ້ນທາງທີ່ເຕັມໄປດ້ວຍຄວາມອຸປະສັກ, ສິ່ງກີດຂວາງແຕ່ເຈົ້າຊີວິດກໍໄດ້ຮັບຄວາມຊ່ວຍເຫລືອຈາກປະຊາຊົນບັນດາເຜົ່າລາວຢ່າງສຸດໃຈ, ເພື່ອໄປຫາກຳແພງເມືອງແຂວງຮ່າຕິ້ງສືບຕໍ່ການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງ.

ປີ 1915, ນັກໂທດການເມືອງຢູ່ຄຸກລາວບາວໄດ້ລຸກຮືຂຶ້ນ. ຫຼັງຈາກຖອຍໄປໃນປ່າແລ້ວ, ກອງກຳລັງລຸກຮືຂຶ້ນໄດ້ຕັ້ງຖານ ທັບເພື່ອຕ້ານຝຣັ່ງຢູ່ທີ່ບ້ານບານຕະຈະແຂວງສະຫວັນະເຂດ (ລາວ). ດ້ວຍການຊ່ວຍເຫຼືອຂອງປະຊາຊົນລາວບັນດາເຜົ່າ, ຢູ່ທີ່ນີ້, ການສູ້ຮົບຢ່າງດຸເດືອດໄດ້ເກີດຂຶ້ນໃນວັນທີ 11/10/1915, ກອງທັບຝຣັ່ງ

ບໍ່ສາມາດເຂົ້າໄປໃນບ້ານໄດ້. ມື້ຕໍ່ມາ, ເມື່ອສັດຕູເຂົ້າມາ ໃນບ້ານ, ກອງກຳລັງລຸກຮື ຂຶ້ນໄດ້ຖອນຕົວແລ້ວ. ມາຮອດວັນທີ 15 ຕຸລາ, ກອງກຳລັງລຸກຮືຂຶ້ນຖືກພົບກັບ ພວກສັດຕູຢູ່ບ້ານຕະລອຍ (ສະຫວັນນະເຂດ) ໂດຍໄດ້ຮັບການຊ່ວຍເຫຼືອຂອງ ປະຊາຊົນໃນບ້ານຊ່ວຍເຫຼືອ, ກອງກຳລັງລຸກຮືຂຶ້ນໄດ້ຕໍ່ສູ້ຢ່າງເດັດດ່ຽວ, ດັບສູນ ກອງລຳລຽງຂອງສັດຕູ, ໄດ້ເກັບສະບຽງອາຫານ ແລະລູກປືນເປັນຈຳນວນຫຼວງ ຫຼາຍ. ການສູ້ຮົບໄດ້ເກີດຂຶ້ນໃນຫຼາຍມື້ຕໍ່ມາ, ແຕ່ຍ້ອນໂດດດ່ຽວ, ໜັດຮ່ຽວໜັດ ແຮງ, ກອງກຳລັງລຸກຮືຂຶ້ນຖືກອ່ອນແອລົງ, ຜູ້ນຳສອງຄົນກໍ່ເສຍສະຫຼະແລະໃນທີ່ສຸດ ກໍຖືກປະລາໄຊ.

ປະຫວັດແຫ່ງສາຍພົວພັນແບບພິເສດລະຫວ່າງແຂວງກວາງຈິ ແລະແຂວງ ສະຫວັນນະເຂດເມື່ອຍັງບໍ່ທັນມີພັກກໍໄດ້ວາງໄວ້ບັນດາຮອຍປະທັບອັນເລິກເຊິ່ງ. ມູນເຊື້ອນັ້ນນັບມື້ນັບໄດ້ເສີມຂະຫຍາຍຕື່ມອີກ ຫຼັງຈາກພັກກອມມູນິດອິນດູຈີນ ໄດ້ຮັບການສ້າງຕັ້ງຂຶ້ນ.

## III. **ກວາງຈິ ແລະສະຫວັນນະເຂດ ຄຽງຂ້າງກັນໃນການຕໍ່ສູ້ ປົດປ່ອຍຊາດ** (1930-1975).

### ***1. ກວາງຈິ - ສະຫວັນນະເຂດ ສາມັກຄີກັນຕ້ານພວກຣຸກຣານ ແລະ ລຸກຮືຂຶ້ນເພື່ອຍຶດອຳນາດ (1930-1945).***

ໃນເດືອນເມສາ ປີ 1930, ຄະນະພັກຊົ່ວຄາວແຂວງກວາງຈິ ໄດ້ຮັບການ ສ້າງຕັ້ງຂຶ້ນ. ຮອດເດືອນກໍລະກົດ ປີ 1930, ໜ່ວຍພັກດົງຮ່າໄດ້ຮັບການສ້າງຕັ້ງຂຶ້ນ ໂດຍແມ່ນສະຫາຍ ຫາງວຽນຫາງອາເຕິມ ເປັນເລຂາພັກ. ໂດຍຜ່ານ ສະຫາຍ ຫາງວຽນຫາງອາເຕິມ, ພັກຄອມມູນິດຫວຽດນາມແຂວງກວາງຈິ ໄດ້ຕິດຕໍ່ພົວພັນ ກັບບັນດາອົງການຈັດຕັ້ງພັກເກົ່າເຕີນຫວຽດ ທີ່ເຄື່ອນໄຫວຢູ່ລາວ, ກໍ່ສ້າງຖານ ທີ່ໝັ້ນຢູ່ຕ່າງປະເທດ, ເພື່ອເປັນປະຖົມປັດໄຈໃນການສ້າງຕັ້ງພັກຄອມມູນິດ

ອິນດູຈີນຢູ່ລາວ. ດ້ວຍເສັ້ນທາງດັ່ງກ່າວ, ພັກໄດ້ສ້າງຕັ້ງໜ່ວຍພັກສະຫວັນນະເຂດ, ໜ່ວຍພັກປາກເຊ ແລະຮັບຮອງເອົາສະມາຊິກພັກຈຳນວນ ໜຶ່ງຢູ່ທ່າແຂກ, ບໍແນ່ງ... ເອກະສານຢູ່ລາວສິ່ງຫາຄະນະພັກແຂວງກວາງຈິ ເຊິ່ງລ້ວນແຕ່ໄດ້ເອົາຊື່ສະຫາຍ ຫງວຽນແອວົງ - ສະມາຊິກພັກຂອງໜ່ວຍພັກດົງຮ່າ.

ແຕ່ວ່າ, ພາຍຫຼັງການບຸກໂຈມຕີຂອງສັດຕູ, ສະຫາຍ ຫງວຽນຕ໊ຽດເກືອງ, ເຈົ້າໜ້າທີ່ຈະລາຈອນຂອງພັກ, ຂຶ້ນກຳປັ່ນ "Prangxit Gacsniee" ແລ່ນຕາມແມ່ນໍ້າຂອງຖືກສັດຕູຈັບໄດ້ ພ້ອມກັບບັນດາເອກະສານສຳຄັນຕ່າງໆ. ຈາກນັ້ນ, ພວກສັດຕູໄດ້ຮູ້ຖານທີ່ໝັ້ນຂອງພັກຢູ່ລາວ, ຄົ້ນພົບເສັ້ນທາງຕິດຕໍ່ລະຫວ່າງດົງຮ່າ - ສະຫວັນນະເຂດ. ອົງການຈັດ ຕັ້ງພັກ ຢູ່ດົງຮ່າກໍ່ຄືຢູ່ລາວຖືກທຳລາຍມ້າງເພ. ແນວໃດກໍ່ຕາມ, ຈາກອົງການຈັດຕັ້ງຄັ້ງທຳອິດນີ້, ອົງການຈັດຕັ້ງພັກຄອມມຸນິດອິນດູຈີນຢູ່ສະຫວັນນະເຂດ, ປາກເຊໄດ້ມີປະຖົມປັດໄຈເພື່ອກໍ່ສ້າງຖານທີ່ໝັ້ນຄືນໃໝ່, ສືບຕໍ່ຊີ້ນຳ-ນຳພາປະຊາຊົນປະກອບ ສ່ວນເຂົ້າໃນການຕໍ່ສູ້.

ໃນໄລຍະກ່ອນການລຸກຮື້ຂຶ້ນປີ 1945, ອົງການຈັດຕັ້ງພັກຢູ່ແຂວງສະຫວັນນະເຂດໄດ້ສົ່ງພະນັກງານໄປແຂວງກວາງຈິເພື່ອຝຶກອົບຮົມການທະຫານ, ກໍ່ສ້າງກຳລັງປະກອບອາວຸດເພື່ອກະກຽມຄວາມພ້ອມກັບການລຸກຮື້ຂຶ້ນ. ໄລຍະເວລາແມ່ນປະມານ 1 ອາທິດ. ແຂວງກວາງຈິໄດ້ປະຕິບັດສຳເລັດໜ້າທີ່ສາກົນອັນສຳຄັນນີ້.

### *2. ກອງທັບ ແລະ ປະຊາຊົນແຂວງກວາງຈິ ພ້ອມກັບກອງທັບ ແລະ ປະຊາຊົນຂອງແຂວງສະຫວັນນະເຂດ ພັນທະມິດ ຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງ (1945 - 1954).*

ວັນທີ 23 ກັນຍາ 1945, ໄດ້ຮັບການຊ່ວຍເຫຼືອຈາກກອງທັບອັງກິດ, ພວກລ່າເມືອງຂຶ້ນຝຣັ່ງໄດ້ເປີດບັ້ນຮົບບຸກໂຈມຕີ ຫວຽດນາມຄັ້ງທີ່ 2. ໃນບໍລິເວນແຂວງກວາງຈິ, ພາຍຫຼັງຍີ່ປຸ່ນກໍ່ລັດຖະປະຫານຝຣັ່ງ (9-3-1945), ທະຫານຝຣັ່ງທີ່ຍັງເຫຼືອຈຳນວນໜຶ່ງໄດ້ໜີອອກຈາກແຂວງ ແລະບັນດາຄ້າຍກອງທັບໄປລີ້ໄພຢູ່ເຂດຊາຍແດນຫວຽດນາມ-ລາວ, ຕິດກັບບັນດາເສັ້ນທາງຈະລາຈອນ

ທີ່ສຳຄັນ. ພິເສດແມ່ນຢູ່ເສັ້ນທາງເລກ 9 ມີປະມານ 1 ກອງພັນທະຫານບົກ ຂຶ້ນກັບກອງພັນນ້ອຍ ທະຫານບົກຫົວເມືອງຂຶ້ນອິນດູຈີນ, ໂດຍແມ່ນທ່ານ ພັນເອກ ຕົວກ ແກງ (Tourquin) ເປັນຜູ້ ບັນຊາການ, ຍຶດຄອງເຂດວົງນອກ ເຊໂປນ, ເມືອງພີນ, ພະລານ (ສະຫວັນນະເຂດ) ແລະ ໄດ້ແກ່ຍາວຮອດເມືອງຄຳເກີດ, ຫຼັກຊາວ. ໂດຍເຈດຕະນາຢາກຮຸກຮານປະເທດຂອງພວກເຮົາອີກຄັ້ງ, ໃນທ້າຍ ເດືອນຕຸລາ 1945, ພວກທະຫານທີ່ຍັງເຫຼືອເຫຼົ່ານີ້ໄດ້ຮັບການຊ່ວຍເຫຼືອຈາກ ທະຫານກະບິດ ໄດ້ບຸກໂຈມຕີ ເຂົ້າດ້ານຕາເວັນຕົກກວາງຈີ ຕາມເສັ້ນທາງເລກ 9 ເພື່ອຍຶດເອົາເມືອງລາວບາວ, ແຄແຊງ ເພື່ອແນ່ໃສ່ເຮັດໃຫ້ບ່ອນດັ່ງກ່າວນີ້ ເປັນຖານທັບເພື່ອບຸກໂຈມຕີແລະຍຶດຄອງເອົາເຂດທົ່ງພຽງ, ບັງຄັບໃຫ້ບັນດາກົມກອງທະຫານຍີ່ປຸ່ນທີ່ປະຈຳການຢູ່ເສັ້ນທາງ 9ຕ້ອງມອບບັນດາທີ່ຕັ້ງຂອງຍີ່ປຸ່ນ ໃຫ້ກັບຝຣັ່ງ.

ສະກັດກັ້ນກົນອຸບາຍຂອງສັດຕູຢ່າງທັນການ, ຄະນະປະຈຳພັກແຂວງກວາງຈີ ໄດ້ແຕ່ງຕັ້ງກອງທະຫານປົດປ່ອຍ ຫງວຽນທຽນທວດ ນຳພາໂດຍສະຫາຍ ຫງວຽນດັງຈິ່ງ ເປັນຜູ້ນຳພາຊ່ວຍແຂວງສະຫວັນນະເຂດ ກໍ່ສ້າງຂະບວນການເຄື່ອນໄຫວການປະຕິວັດ ແລະ ຕໍ່ສູ້ກັບບັນດາທະຫານຝຣັ່ງທີ່ຍັງເຫຼືອ.

ອີງຕາມສົນທິສັນຍາເບື້ອງຕົ້ນລະຫວ່າງຫວຽດນາມ ແລະ ຝຣັ່ງ, ຫຼັງຈາກວັນທີ 6/3/1946, ບັ້ນຮົບຕໍ່ສູ້ຕ້ານທະຫານ ຝຣັ່ງທີ່ຍັງເຫຼືອຕາມເສັ້ນທາງເລກ 9 ໄດ້ ຢຸດຕິລົງຊົ່ວຄາວ ແລະຕາມການຕົກລົງລະຫວ່າງຄະນະຜູ້ແທນຂອງພວກເຮົາ (ກວາງຈີ - ສະຫວັນນະເຂດ) ກັບກອງທັບຝຣັ່ງ, ພວກເຮົາໃຫ້ກອງທັບຝຣັ່ງຢືມເສັ້ນທາງເລກ 9 ແລະ ເສັ້ນທາງເລກ 1 (ຈາກດົງຮ່າໄປຫາ ເຫວ້) ເພື່ອນຳກອງທັບ ຝຣັ່ງຈຳນວນໜຶ່ງຈາກຕອນລຸ່ມລາວໄປຮອດເຫວ້.

ແຕ່ໃນຄວາມຈິງພວກເຂົາພຽງແຕ່ຍ້າຍທະຫານ ບາງສ່ວນໄປເຫວ້ເທົ່ານັ້ນ, ສ່ວນທີ່

ຍັງເຫຼືອແມ່ນສິ່ງທະຫານຈາກພາກຕາເວັນອອກ ຂອງລາວລົງໄປສະຫວັນນະເຂດ ແລະສາລະວັນ, ຕິດກັບແຂວງກວາງຈິ, ເທື່ອທຽນ ເພື່ອດໍາເນີນບຸກໂຈມຕີຫວຽດນາມເປັນຄັ້ງທີ 2.

ຄຽງຂ້າງພ້ອມກັນຕໍ່ສູ້ກັບກອງທັບ ແລະ ປະຊາຊົນແຂວງກວາງຈິມີກໍາລັງຮັກຊາດຂອງເພື່ອນລາວຢູ່ແຂວງສະຫວັນນະເຂດ, ນໍາພາໂດຍແມ່ນ ສະຫາຍ ທ້າວ ໂອໜູຮັກ, ໄດ້ສ້າງຕັ້ງກອງທັບພັນທະມິດຫວຽດນາມ - ລາວ. ນັບແຕ່ນັ້ນເປັນຕົ້ນມາການຕໍ່ສູ້ສາມັກຄີມິດຕະພາບແບບພິເສດລະຫວ່າງແຂວງ ກວາງຈິ ແລະສະຫວັນນະເຂດໄດ້ຮັບການຍົກສູງຂຶ້ນ, ເຊິ່ງທີ່ມີລັກສະນະຄວາມຕັດສິນໃຈຕໍ່ຜົນສໍາເລັດຂອງຂະບວນການເຄື່ອນໄຫວການປະຕິວັດຂອງສອງແຂວງ ແລະ ມີບົດບາດ ສໍາຄັນໃຫ້ແກ່ການປະຕິວັດຂອງສອງປະເທດ.

ໃນຊຸມເດືອນທ້າຍປີ 1945 ພວກລ່າເມືອງຂຶ້ນຝຣັ່ງໄດ້ບຸກໂຈມຕີແຕ່ລາວໄປຫາກວາງຈິ, ພັນທະມິດຕໍ່ສູ້ກວາງຈິ - ສະຫວັນນະເຂດໄດ້ຕໍ່ຕ້ານພວກສັດຕູຢ່າງບໍ່ຢຸດຢັ້ງ. ກອງທະຫານປົດປ່ອຍ ຫງວຽນທຽນທວດ (ກວາງຈິ) ໄດ້ຢືນຄຽງຂ້າງກັບບັນດາກໍາລັງຮັກຊາດຂອງແຂວງສະຫວັນນະເຂດ ນໍາພາໂດຍສະຫາຍທ້າວໂອໜູຮັກ ພ້ອມກັນຕໍ່ສູ້ຕ້ານສັດຕູ. ນີ້ແມ່ນການຮ່ວມມືຄັ້ງທໍາອິດລະຫວ່າງກໍາລັງປະກອບອາວຸດກວາງຈິ ກັບເພື່ອນລາວ ຮ່ວມສົມທົບຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງ ແລະ ປະກອບສ່ວນສ້າງຕັ້ງພັນທະມິດຕໍ່ສູ້ຫວຽດນາມ - ລາວ.

ຕົ້ນເດືອນທັນວາ ປີ 1945, ກອງທັບ ແລະປະຊາຊົນກວາງຈິມີຄວາມອົງອາດກ້າຫານໄດ້ຕີຂັບໄລ່ສັດຕູໃຫ້ພົ້ນຈາກແຄແຊນ, ລາວບາວ. ຕໍ່ຈາກນັ້ນ, ທະຫານແຂວງກວາງຈິ ໄດ້ສົມທົບກັບກໍາລັງປະກອບອາວຸດ ແຂວງສະຫວັນນະເຂດໄດ້ບຸກໂຈມຕີສັດຕູຢູ່ເມືອງເຊໂປນແລະ ຈັບສັດຕູໄດ້53 ຄົນ, ສາມາດຍຶດໄດ້ອາວຸດຍຸດໂທປະກອນຂອງສັດຕູຝຣັ່ງທັງໝົດ. ຫຼັງຈາກນັ້ນສືບຕໍ່ບຸກໂຈມຕີສັດຕູຢູ່ເມືອງພີນ, ພະລານ, ຫ້ວຍໄກ່, ຂົວທ່າໂຂງ, ໄດ້ສ້າງຄວາມເສຍຫາຍໃຫ້ແກ່ພວກມັນຢ່າງ

ຫຼວງຫຼາຍ. ໃນໄລຍະເວລານີ້, ຕາມທິດຊີ້ນຳຂອງສູນກາງ, ກອງທັບເສັ້ນທາງເລກ 9 ໄດ້ຈັດຕັ້ງນຳຂະບວນການເພື່ອເອົາຄະນະຜູ້ແທນເຈົ້າຊີວິດສຸພານຸວົງກັບຄືນປະເທດ ເພື່ອປະກອບສ່ວນເພີ່ມພູນຄູນສ້າງນ້ຳໃຈສາມັກຄີຕໍ່ສູ້ລະຫວ່າງສອງປະເທດ ຫວຽດນາມ - ລາວ.

ຍ້ອນຄວາມຮຽກຮ້ອງຕ້ອງການຍູ້ແຮງການຕໍ່ສູ້ຕ້ານສົງຄາມ, ປີ 1948, ຕາມຄວາມຮຽກຮ້ອງຕ້ອງການຂອງ "ພັນທະມິດຕໍ່ສູ້ຫວຽດນາມ - ລາວ", ຫົວໜ້າກອງຊັນຊາການທະຫານແຂວງກວາງຈີ ໄດ້ຈັດສົ່ງທະຫານລາດທ້ອງຖິ່ນເຮືອງຮວາກຸ່ມໜຶ່ງ, ນຳພາໂດຍສະຫາຍ ເຈີ່ນຊວຽນເຕີມ ໄປຊ່ວຍເພື່ອນລາວ ກໍ່ສ້າງຖານທີ່ໝັ້ນໃຫ້ແກ່ບັນດາສະຫາຍ ໃນຄະນະບໍລິຫານງານພັກຄອມມູນິດອິນດູຈີນລາວ, ໃນນັ້ນມີ ສະຫາຍ ສຸພານຸວົງ ຢູ່ນ້ຳຊະໂລ (ສະຫວັນນະເຂດ). ນີ້ແມ່ນເຂດປອດໄພ, ຊ່ວຍເຫຼືອແຂວງສະຫວັນນະເຂດສ້າງ, ປັບປຸງກຳລັງ, ນຳພາປະຊາຊົນຍາດເອົາໄຊຊະນະ.

ເພື່ອຂະຫຍາຍຖານທີ່ໝັ້ນຫວຽດນາມ - ລາວ , ສະຫາຍ ຟານຢູ, ເລຂາຄະນະພັກເມືອງເຮືອງຮວາ, ສະຫາຍ ເລຊານ ປະທານຄະນະກຳມະການຕໍ່ຕ້ານເມືອງໄດ້ເຫັນດີເປັນເອກະພາບທາງດ້ານນະໂຍບາຍ, ຊ່ວຍແຂວງສະຫວັນນະເຂດກໍ່ສ້າງພື້ນຖານຢູ່ເມືອງເຊໂປນ. ຍ້ອນການພົວພັນໄດ້ເປີດກວ້າງ, ໃຫ້ບັນດາສະຫາຍໄດ້ບຸກລະດົມ ພໍ່ແມ່ປະຊາຊົນຊ່ວຍຊື້ເຂົ້າສານຈາກລາວມາຫວຽດນາມ; ເອົາເກືອແລກປ່ຽນມັນຕົ້ນໃຫ້ແກ່ປະຊາຊົນເພື່ອເປັນແຫຼ່ງສະບຽງອາຫານແຮໄວ້; ຕັ້ງໜ້າໂຄສະນາ ແລະ ປຸກລະດົມປະຊາຊົນສອງເບື້ອງຊາຍແດນ ບໍ່ໃຫ້ເຂົ້າຮ່ວມກຸ່ມນຳສັດຕູ. "ຍ້ອນບັນດາພະນັກງານ, ສະມາຊິກພັກໄດ້ຮູ້ຈັກ ລົງເລິກ, ໃກ້ຊິດຕິດແທດກັບຮາກຖານ, ປາກເວົ້າ, ມືເຮັດ, ພ້ອມກັນກິນ, ພ້ອມກັນຢູ່, ຮ່ວມເຄື່ອນໄຫວກັບປະຊາຊົນບັນດາຊົນເຜົ່າ, ສະນັ້ນຈຶ່ງກຳໄດ້ແນວຄິດຈິດໃຈ, ຄວາມມຸ່ງມາດ

ປາດຖະໜາຂອງປະຊາຊົນ, ປະຊາຊົນໃຫ້ຄວາມເຄົາລົບ ພະນັກງານການປະຕິວັດຂອງລຸງໂຮ່. ນອກຈາກຄວາມດຸໝັ່ນຂະຫຍັນພຽນອອກແຮງງານ ຢູ່ໄຮ່ນາ, ປະຊາຊົນຍູ້ແຮງການຂຸດຄົ້ນເຄື່ອງປ່າເຄື່ອງພື້ນເມືອງ, ກໍ່ສ້າງເຄືອຂ່າຍການເຄື່ອນໄຫວສິນຄ້າລະຫວ່າງປະຊາຊົນຢູ່ເຂດຊາຍແດນ; "ພີ່ນ້ອງປະຊາຊົນເຂດພູ ດອຍໄດ້ລຸກຮື້ຂຶ້ນ, ບໍ່ຮ່ວມມືກັບສັດຕູອີກ, ຕັດເສັ້ນທາງການຕິດຕໍ່ສື່ສານເຮັດໃຫ້ສັດຕູຢ້ານກົວ. ພວກເຂົາມີຄວາມກະຕືລືລົ້ນ ໃນການເຂົ້າຮ່ວມບັນດາການທັບມ້າງຢູ່ເສັ້ນທາງເລກ 9"[1].

ປະຕິບັດໜ້າທີ່ "ພັດທະນາການປະຕິວັດລາວ"[2], ຄະນະພັກເມືອງເຮືອງຮວາໄດ້ຈັດກອງປະຊຸມເປີດກວ້າງໃນເດືອນທັນວາ ປີ 1949 ຕັດສິນໃຈຕ້ອງຕີແຕກຄວາມຕັ້ງໃຈຂອງສັດຕູທີ່ຢາກປັບປຸງແນວລາວສ້າງຊາດ, ເອົາເມືອງເຊໂປນເປັນທີ່ບັງໜ້າ, ເພີ່ມທະວີການກວດກາເພື່ອຫວັງຈະທຳລາຍພວກເຮົາ. ຕັດສິນໃຈທຳລາຍແຜນກົນອຸບາຍຂອງສັດຕູ, ຄະນະພັກເມືອງເຮືອງຮວາ ໄດ້ດຳເນີນ "ການເຄື່ອນໄຫວລະດົມ". ໃນເວລາພຽງໜຶ່ງອາທິດ, ສອງຝ່າຍສາມາດລະດົມໄດ້ຄວາຍ, ຊ້າງ ເພື່ອໄປຮັບໃຊ້ກອງທັບທະຫານຫວຽດນາມ ທີ່ຕັ້ງຢູ່ຕ່າຮວາກ, ກ່ອນຈະຍ້າຍໄປເຖິງຢູ່ພູພຽງບໍລິເວນ, ບຸກໂຈມຕີສັດຕູຢູ່ເຂດ ໃຕ້ລາວ ແລະ ພາກເໜືອຂອງກຳປູເຈຍ; ສະສົມສະບຽງອາຫານໄດ້ສ່ວນໜຶ່ງເພື່ອແບ່ງປັນໃຫ້ບັນດາຫົວໜ່ວຍ ຕໍ່ສູ້ຢູ່ພາກໃຕ້ຂອງລາວ. ໃນຂອບເຂດບັນດາບ້ານເມືອງເຊໂປນ, ໂຊງມ່ວຍ, ເມືອງນອງແຂວງສະຫວັນນະເຂດ ແມ່ນຖານທັບຂອງສອງ ແຂວງ.

---

[1] ປະຫວັດສາດພັກເມືອງເຮືອງຮວ່າ 1930-1975, ໜ້າ 74.

[2] ປະຫວັດສາດພັກເມືອງເຮືອງຮວ່າ 1930-1975, ໜ້າ 73.

ທັງຊ່ວຍແຂວງສະຫວັນນະເຂດສ້າງແນວຫຼັງ, ສືບຕໍ່ຕໍ່ສູ້ຕ້ານຜູ້ຮຸກຮານ, ກວາງຈິຍັງສືບຕໍ່ແບ່ງກຳລັງການສູ້ຮົບກັບສະໜາມຮົບຢູ່ລາວ. ເມື່ອເປີດບັ້ນຮົບພາກກາງລາວ, ກອງທັບ ແລະປະຊາຊົນແຂວງກວາງຈິ ໄດ້ສົມທົບກັນສູ້ຮົບຢູ່ເສັ້ນທາງເລກ 9, ຢູ່ເຂດດົງຮ່າ, ແຂນຮ້າ, ຕະຫຼາດຍໍ, ຮ່າໄຕ, ດັ່ງດັ່ງ ແລະໂຢກໜຽວ ... ເຮັດໃຫ້ສັດຕູບໍ່ສາມາດສະໜອງເຄື່ອງຊ່ວຍເຫຼືອໃຫ້ສະໜາມຮົບພາກກາງລາວ, ສ້າງເງື່ອນໄຂໃຫ້ພັນທະມິດກອງທັບຫວຽດນາມ - ລາວ ຍາດໄດ້ໄຊຊະນະຢູ່ເມືອງທ່າແຂກ, ຄຳແຮ, ຄຳມາ ຕີສັດຕູຢູ່ເມືອງເຊໂປນ ແລະ ເມືອງພີນ.

ຍ້ອນການປະສານສົມທົບຢ່າງຄ່ອງແຄ້ວ, ຄວາມຄິດສະຫຼາດສ່ອງໃສ ແລະທັນເວລາຂອງກອງທັບ ແລະ ປະຊາຊົນ ກວາງຈິ ກັບແນວໂຮມສ້າງຊາດພາກກາງລາວ ໄດ້ທຳລາຍແຜນກົນອຸບາຍຂອງສັດຕູ, ສາມາດເຊື່ອມການຄົມມະນາຄົມຕາມເສັ້ນທາງເລກ 9 ກັບສະໜາມຮົບເພື່ອນລາວ, ແຍກກອງທັບສັດຕູຢູ່ແນວໂຮມສ້າງຊາດພາກກາງລາວ, ສ້າງເງື່ອນໄຂໃຫ້ແກ່ພັນທະມິດກອງທັບຫວຽດນາມ - ລາວ ໄດ້ຮັບໄຊຊະນະອັນຍິ່ງໃຫຍ່ໃນໄລຍະຕົ້ນຂອງການຕໍ່ສູ້ສັດຕູ.

ຍ້ອນການຊ່ວຍເຫຼືອເພື່ອນບຸກໂຈມຕີຢ່າງທັນການ, ປິດລ້ອມຂັບໄລ່ສັດຕູເຊິ່ງມີໄວໜຸ່ມຍິງຊາຍເວີນກຽວ, ປາໂກຫຼາຍຄົນໄດ້ອາສາສະໝັກເພື່ອຮັບໃຊ້ທະຫານອາສາສະໝັກຫວຽດນາມ - ລາວ ຕໍ່ສູ້ຕ້ານສັດຕູຢູ່ພາກກາງລາວ.

ທ້າຍເດືອນ ມີນາ ປີ 1954 ບົນເສັ້ນທາງການດຳເນີນບຸກໂຈມຕີຂຶ້ນສູ່ແນວໜ້າພາກກາງລາວ, ກອງພົນໃຫຍ່ທີ 18 ໄດ້ມອບໜ້າທີ່ຊ່ວຍກຳລັງທະຫານທ້ອງຖິ່ນ ແລະ ກອງຫຼອນເຮືອງຮວາ ເພື່ອກວາດລ້າງສັດຕູຢູ່ຕາມເສັ້ນທາງເລກ 9. ສັດຕູຖືກປິດລ້ອມ ແລະບຸກໂຈມຕີຢ່າງໜັກຈົນເຮັດໃຫ້ພວກມັນຕ້ອງໜີຈາກຢູ່ແຄແຊນ, ລາວບາວ ໄປຫຼົບລີ້ຢູ່ໂກເປີຈາຕາງງາງ.

ດ້ວຍຄວາມຊ່ວຍເຫຼືອ, ການແບ່ງປັນກຳລັງໃນສະໜາມຮົບຂອງພາກກາງລາວ, ສ້າງເງື່ອນໄຂໃຫ້ແກ່ກຳລັງປະກອບ ອາວຸດລາວຕີກັບສັດຕູ, ສາມາດສ້າງຖານ

ທັບ, ປົດປ່ອຍເມືອງທ່າແຂກ (25/12/1953) ແລະ ບັ້ນຮົບໃຫຍ່ຍຸດທະສາດບຸກໂຈມຕີໃນລະດູໜາວປີ 1953 – 1954 ແມ່ນສຸດນ້ຳໃຈພັນທະມິດການຕໍ່ສູ້ຂອງສອງປະເທດອ້າຍນ້ອງ, ຮ່ວມກັນຕໍ່ສູ້ຕ້ານສັດຕູ.

### *3. ກອງທັບ ແລະ ປະຊາຊົນກວາງຈິ ພ້ອມກັບກອງທັບ ແລະ ປະຊາຊົນສະຫວັນນະເຂດພັນທະມິດຕໍ່ ສູ້ຕ້ານການຮຸກຮານພວກຈັກກະພັດອາເມລິກາ (1954 - 1975)*

ສົນທິສັນຍາເຊີແນວໄດ້ລົງນາມ, ທີ່ແມ່ນ້ຳ ເບັນຫາຍ (ເສັ້ນຂະໜານທີ 17) ຢູ່ແຂວງກວາງຈິ ໄດ້ກາຍເປັນເຂດຊາຍແດນແຍກພາກເໜືອ ແລະພາກໃຕ້. ກວາງຈິທັງຢູ່ຕິດກັບພາກເໜືອສັງຄົມນິຍົມ, ທັງແມ່ນແຂວງຫົວຂົວຂອງພາກໃຕ້. ຍ້ອນເປັນທີ່ຕັ້ງຍຸດທະສາດສຳຄັນຂອງກວາງຈິ ຍິ່ງຕ້ອງໄດ້ຍົກສູງສາຍພົວພັນສາມັກຄີຫວຽດນາມ - ລາວ ຫຼາຍກວ່າເກົ່າ ເພື່ອຮັບປະກັນການຊ່ວຍເຫຼືອຂອງພາກເໜືອລົງສູ່ພາກໃຕ້, ເພື່ອຕີເອົາໄຊຊະນະອາເມລິກາຜູ້ຮຸກຮານ ແລະຄວາມເປັນເອກະພາບທົ່ວປະເທດ.

ຕໍ່ກັບພາລະໜ້າທີ່ ແລະສະພາບການໃໝ່, ພາຍຫຼັງຍ້າຍທະຫານໄປທີ່ເຕົ້າໂຮມ, ສຳນັກງານຄະນະພັກເມືອງເຮືອງຮວາໄດ້ຖອນໄປເຄື່ອນໄຫວໜ້າທີ່ລັບ. ພື້ນທີ່ຕາແສງເຂດໃຕ້ເສັ້ນທາງເລກ 9 ລວມມີຕາແສງຕາລອງ, ບານາງ ຊ່ວຍເພື່ອນລາວ ເປັນບ່ອນພັກຂອງສຳນັກງານຄະນະພັກເມືອງ. ແຕ່ລະມື້ບັນດາສະຫາຍພະນັກງານ, ສະມາຊິກພັກຈັດແບ່ງກັນໄປຕິດຕາມພື້ນທີ່ ຮ່ວມກັບປະຊາຊົນສອງຝັ່ງຊາຍແດນ ເພື່ອຊຸກຍູ້ການຜະລິດ, ການຕໍ່ສູ້ສັດຕູຮຽກຮ້ອງສັດຕູຕ້ອງໃຫ້ພີ່ນ້ອງປະຊາຊົນໄດ້ຮັບຄວາມເສລີພາບໃນການທຳມາຫາກິນ, ຊື້ຂາຍ ແລະແລກປ່ຽນສິນຄ້າ.

ເພື່ອສືບຕໍ່ນຳພາປະຊາຊົນພາກໃຕ້ຕໍ່ສູ້ຕ້ານຜູ້ຮຸກຮານ ຈາກຈັກກະພັດ ອາເມລິກາ, ອີງຕາມຄຳແນະນຳຂອງຂັ້ນເທິງ, ຕ້ອງໄດ້ເຊື່ອມສາຍສື່ສານຈາກເມືອງຫວິງ

ລິງກັບເສັ້ນທາງເລກ 9. ສະຖານີສື່ສານແຫ່ງທຳອິດຢູ່ສາຍທາງລັບເໜືອ - ໃຕ້, ຈຸດເລີ່ມຕົ້ນແຫ່ງທຳອິດຈາກ ບ້ານຮ່າ, ຫວິງລິງ ໄດ້ເປີດນຳໃຊ້. ແຕ່ບ້ານຮ່າຂະຫຍາຍໄປຍັງເສັ້ນທາງເລກ 9 ຕ້ອງໄປຜ່າເກີນຕໍ່າ, ກາມເຊີນ, ຊ້ຳຣ້ອງ, ເກ, ລາໂຕງ, ແຈງ ແລະ ເຂົ້າສະຖານີເອກະພາບເອີ້ນວ່າເສັ້ນທາງເອກະພາບ. ເສັ້ນທາງລັບ, ສ່ວນຫຼາຍແມ່ນໄປໃນຍາມກາງຄືນ. ທ້າຍປີ 1955, ຫວິງລິງປ່ຽນສະຖານີສື່ສານຈາກບ້ານຮ່າໄປຢູ່ເກີນຕໍ່າ - ແຈງ ເອີ້ນວ່າສາຍສື່ສານລາມເຊີນ. ຮອດທ້າຍປີ 1956, ຕົ້ນປີ 1957, ສອງເສັ້ນທາງເອກະພາບ ແລະ ລາມເຊີນ - ກາຍເປັນເສັ້ນທາງລຳລຽງສິນຄ້າກອງທັບລິງໄປສູ່ພາກໃຕ້ໄດ້ຈັດຕັ້ງຕ້ອນຮັບທະຫານ, ພະນັກງານ; ສິ່ງເອກະສານທາງການ, ເອກະສານຈາກ ພາກເໜືອລົງໄປພາກໃຕ້ ແລະຈາກພາກໃຕ້ຂຶ້ນໄປພາກເໜືອໄດ້ເປີດເປັນທາງການ ແລະ ນັບມື້ໄດ້ຮັບການປັບປຸງ.

ບັນດາຂະບວນການເຄື່ອນໄຫວຂອງກອງທັບ ແລະ ປະຊາຊົນແຂວງກວາງຈິ ແລະ ສະຫວັນນະເຂດໃນເສັ້ນທາງຖືກສັດ ຕູຄົ້ນພົບ. ພວກເຂົາໄດ້ເພີ່ມທະວີລະບົບປ້ອມທັບ, ເພີ່ມກຳລັງກວດກາຕາມເສັ້ນທາງເລກ 9, ກວດກຸ່ມເຄັ່ງຄັດຈັບກຸ່ມປະຊາຊົນທີ່ເຂົ້າເຂດພື້ນທີ່ເຂົາເຈົ້າແລ້ວຂັງຄຸກເພື່ອຖາມຂໍ້ມູນ, ໄດ້ສົ່ງທະຫານພິເສດລາດຕະເວນຄົ້ນຫາທັງເວັນທັງຄືນ. ການບຸກໂຈມຕີຢ່າງດຸເດືອດຂອງສັດຕູໄດ້ເກີດຂຶ້ນ, ພ້ອມກັບສະພາບອາກາດອັນໂຫດຮ້າຍຂອງເຂດປ່າຕຶບສາຍພູຫຼວງ, ເຮັດໃຫ້ການເຄື່ອນໄຫວຂອງເພື່ອນລາວ ແລະ ພວກເຮົາເສັ້ນທາງເອກະພາບ ແລະເສັ້ນທາງລາມເຊີນພົບກັບຄວາມຫຍຸ້ງຍາກຫຼາຍ. ເພື່ອຮັບປະກັນ ເສັ້ນທາງມີຄວາມປອດໄພ, ອ້າຍນ້ອງປະຊາຊົນສອງຊາດທິດຕາເວັນອອກ - ຕາເວັນຕົກສາຍພູຫຼວງພາຍໃຕ້ ການນຳພາຂອງສະຫາຍ ເລແຮ່ນ ຊອກທຸກວິທີທາງເພື່ອເປີດເສັ້ນທາງໃຫ້ໄດ້ໃນທາມກາງປ່າໄມ້ອັນຕຶບໜາ ທີ່ເຕັມໄປດ້ວຍ ໂຕທາກ, ໂງ່ນຫີນໜາມໜໍ່, ມີບາງໄລຍະທາງບັງຄັບທຸກຄົນຕ້ອງ "ໄປບໍ່ໃຫ້ມີເຄື່ອງໝາຍ, ແຕ່ງກິນບໍ່ໃຫ້ມີຄວັນ, ເວົ້າບໍ່ໃຫ້ມີສຽງ". ໃນໄລຍະທາງຫາກໍ່ເປີດໃໝ່, ສອງຝ່າຍໄດ້ກໍ່ສ້າງບາງພື້ນຖານຢູ່

ຜືນແຜ່ນດິນລາວ ແລະ ໂດຍອາໄສພື້ນຖານ ດັ່ງກ່າວນີ້ຊ່ວຍຄະນະ ກອງທັບ 559 ໃນເບື້ອງຕົ້ນ ແລະ ຍັງຈະໄດ້ພົບກັບຄວາມຫຍຸ້ງຍາກ ສິ່ງແປກປະຫຼາດຫຼາຍຢ່າງ.

ໃນຕົ້ນປີ 1959, ກອງປະຊຸມຄະນະບໍລິຫານງານສູນກາງພັກຄັ້ງທີ 15 ໄດ້ຊີ້ແຈ້ງ ເສັ້ນທາງພັດທະນາພື້ນຖານຂອງການປະຕິວັດພາກໃຕ້ແມ່ນຕ້ອງໄດ້ໃຊ້ກຳລັງແຮງປະຕິວັດເພື່ອຄວາມເປັນເອກະພາບປະເທດຊາດ. ສຳເລັດການປະຕິວັດຊາດປະຊາທິປະໄຕ ປະຊາຊາຊົນ. ປະຕິບັດມະຕິຂອງກົມການເມືອງ, ຄະນະກຳມະການທະຫານສູນກາງຂະຫຍາຍເສັ້ນທາງຄົມມະນາຄົມຂົນສົ່ງສາຍພູຫຼວງຕາມຄຳຂວັນ: ອົດທົນຮັກສາແລວທາງທິດຕາເວັນອອກ, ໃນສະຖານະການເຄັ່ງຄັດເປີດເສັ້ນທາງຄົມມະນາຄົມຕາເວັນຕົກສາຍພູຫຼວງ.

ຕົ້ນເດືອນມິຖຸນາ ປີ 1959, ຫົວໜ້າຄະນະ, ກອງທັບ 559 ທ່ານ ຫວໍເບິ໊ມ ເຂົ້າໄປທີ່ເມືອງຫວິງລິງ ເພື່ອເປັນປະທານກອງປະຊຸມປຶກສາຫາລືກ່ຽວກັບການເປີດເສັ້ນທາງລົງພາກໃຕ້. ເຂົ້າຮ່ວມກອງປະຊຸມມີບັນດາສະຫາຍ ເຈືອງຈີ໋ກົງ, ເລຂາຄະນະພັກແຂວງ ກວາງຈິ, ສະຫາຍ ເລແຮ່ນ ຄະນະພັກແຂວງກວາງຈິ, ສະຫາຍໂຮ່ສີທ່ານ ແລຂາຄະນະພັກເຂດຫວິງລິງ, ສະຫາຍ ປະເກືອງ ຄະນະປະຈຳພັກເມືອງເຮືອງຮ່ວາ ແລະ ພະນັກງານຊ່ຽວຊານພື້ນທີ່ພູມສັນຖານຈຳນວນໜຶ່ງເຊັ່ນ: ໂຮ່ໂອຍ ຢູ່ຣາກ່ຳ, ໂຮ່ນວນ ຢູ່ຈັງຫິນ - ແມ່ນ້ຳໄຫຼ, ໂຮ່ແຕ່ວ ເຂດເສັ້ນທາງເລກ 9.

ນ້ຳທຳ - ຫວິງລິງ ຖືກເລືອກເປັນຈຸດເລີ່ມຕົ້ນຂອງເສັ້ນທາງປະຫວັດສາດ. ກອງທັບ 301, ລຳລຽງໄປຕາມເສັ້ນທາງເອກະ ພາບ ເພື່ອເຮັດວຽກຂົນສົ່ງ. ພາຍໃຕ້ເງື່ອນໄຂສະຖານະການທີ່ອາເມລິກາບຸກໂຈມຕີຢ່າງຮຸນແຮງ, ສິ່ງສິນຄ້າຜ່ານເສັ້ນທາງເລກ 9 ແມ່ນວຽກງານທີ່ຫຍຸ້ງຍາກ ແລະ ອັນຕະລາຍທີ່ສຸດ. ຜ່ານການຄົ້ນຄ້ວາພູມສັນຖານ, ໂດຍໄດ້ຮັບການອະນຸຍາດຈາກລັດຖະ ບານ ສອງປະເທດຫວຽດນາມ - ລາວ, ເສັ້ນທາງການຂົນສົ່ງດ້ວຍລົດຕາມເສັ້ນທາງ 12A ຈາກແຄແວ ຜ່ານມູດາ

ໄປສູ່ດົນລາວ, ເຖິງສາມແຍກລັງຄັງ (ບານາຜ່າວ) ແລ້ວເປີດເສັ້ນທາງ 129, 128 ລົງໄປພາກໃຕ້ພົບເສັ້ນທາງເລກ 9 - ພາກໃຕ້ລາວ; ສືບຕໍ່ລົງໄປ ແລະ ຫັນທິດທາງ ໄປຍັງເຂດທີ່ໝັ້ນຖານທັບຕໍ່ຕ້ານຂອງແຂວງ ກວາງຈີ, ເທື່ອທຽນ ແລະ ເຂດພາກ ພື້ນ V ໄດ້ເປີດນຳໃຊ້.

ເພື່ອປະຕິບັດພາລະໜ້າທີ່, ຄະນະປະຈຳພັກແຂວງກວາງຈີ, ໂດຍແມ່ນ ສະຫາຍ ເລແຮ່ນ ໄດ້ຈັດຕັ້ງສິ່ງກຳລັງຂ້າມໄປເຂດຊາຍແດນໄປຮອດຕາແສງ ຮາ ອານ, ຮາໂກ່, ປາເຮຍ ແລະ ເຊໂປນ (ສະຫວັນນະເຂດ) ເພື່ອບຸກເບີກທາງ.

ເພື່ອຮັບປະກັນຄວາມປອດໄພໃນໄລຍະເລີ່ມຕົ້ນການເປີດເສັ້ນທາງ, ພວກ ເຮົາບໍ່ພຽງແຕ່ເປັນການຫຼີກລ້ຽງສັດຕູເທົ່ານັ້ນ ແຕ່ຍັງຫຼີກລ້ຽງປະຊາຊົນຊົ່ວຄາວ, ຮັກສາຄວາມລັບແມ່ນແຕ່ກັບຄອບຄົວ ແລະ ຍາດພີ່ນ້ອງ. ໃນເບື້ອງຕົ້ນ, ປະຊາຊົນ ລາວທີ່ຢູ່ລຽບຕາມຝັ່ງຕາເວັນຕົກສາຍພູຫຼວງ ໄດ້ພາກັນແລ່ນໜີຍ້ອນເຂົ້າໃຈຜິດ ວ່າແມ່ນທະຫານພູມີ (ທະຫານຫຸ່ນລາວ). ໂດຍອາໄສການໂຄສະນາຊວນເຊື່ອ ຂອງພະນັກງານ-ນັກຮົບ, ປະຊາຊົນບັນດາບ້ານຂອງລາວໄດ້ກັບຄືນມາ ແລະ ຮ່ວມ ກັນປະກອບສ່ວນເປີດເສັ້ນທາງ,

ບໍ່ພຽງແຕ່ສູ້ຮົບກັບສັດຕູເທົ່ານັ້ນແຕ່ຍັງຕ້ອງຮັບມືກັບສະພາບອາກາດອັນໂຫດຮ້າຍ ແລະ ສັດຮ້າຍ ບາງຊະນິດ... ອາໄສການຊ່ວຍເຫຼືອດ້ານເຫື່ອແຮງ, ການປະສານ ງານເຮັດໃຫ້ບັນດາສາຂາເສັ້ນທາງຢູ່ເຂດຕາເວັນຕົກສາຍພູຫຼວງໄດ້ຮັບການເປີດຢ່າງ ວ່ອງໄວ, ຫຼີກລ້ຽງພູສູງ, ເຫວເລິກ ແຕ່ເດັດຂາດຍັງຮັກສາຄວາມລັບ ແລະ ຄວາມປອດໄພ.

ໃນຊຸມຕົ້ນປີຂອງສົງຄາມຕໍ່ຕ້ານອາເມລິກາເພື່ອກອບກູ້ປະເທດ, ພິເສດແມ່ນ ນັບແຕ່ກົດໝາຍ 10-59 ໄດ້ອອກມາ, ອາເມລິກາ - ພວກກະບົດໄດ້ສັງປະຫານ

ຊີວິດຜູ້ຮັກຊາດ, ປະຊາຊົນຜູ້ບໍລິສຸດ. ຂະບວນການເຄື່ອນໄຫວການປະຕິວັດລາວປະສົບກັບຄວາມຫຍຸ້ງຍາກຫຼາຍຢ່າງ. ຄະນະປະຈຳພັກແຂວງສະຫວັນນະເຂດຕ້ອງໄດ້ຍ້າຍໄປຢູ່ເຂດອາວາວ (ເຮືອງຮວາ). ຢູ່ທີ່ນີ້ ຄະນະພັກແຂວງກວາງຈິ, ປະຊາຊົນບັນດາເຜົ່າເຮືອງຮວາໄດ້ປົກປ້ອງ ແລະ ສະໜອງອາຫານການກິນໃນໄລຍະທີ່ປະເທດຊາດລາວຖືກພວກນິຂວາພູມີ ແລະ ກ່າໄຕ (ລູກແຫຼ້ງອາເມລິກາ) ໄດ້ທຳລາຍສິນທິສັນຍາເຊີແນວ, ໄລ່ລ່າ, ກໍ່ການຮ້າຍ. ກວາງຈິໄດ້ກາຍເປັນຖານທີ່ໝັ້ນ, ດ້ານຫຼັງທີ່ແຂງແຮງຂອງແຂວງສະຫວັນນະເຂດ.

ດ້ວຍການຕັດສິນໃຈຢ່າງເດັດດ່ຽວມະຕິເລກທີ 15 ຂອງຄະນະບໍລິຫານງານສູນກາງພັກ, ຄະນະປະຈຳພັກແຂວງ ກວາງຈິໄດ້ສົ່ງເສີມໃຫ້ທາງດ້ານການເມືອງ ແລະ ການປະກອບອາວຸດຕ້ອງກຳແໜ້ນໂອກາດລົງມື "ເຄື່ອນໄຫວ" ໃນເຂດພູດອຍເຮືອງຮວາປີ 1960. ຂະບວນການການເຄື່ອນໄຫວຕໍ່ສູ້ຂອງພັກ ແລະ ປະຊາຊົນບັນດາເຜົ່າພາກເໜືອເຮືອງຮວາສະແດງອອກຢ່າງແຂງແຮງ, ຈາກຮູບການຕໍ່ສູ້ແບບຖືກກົດໝາຍກ້າວສູ່ການຕໍ່ສູ້ແບບຜິດກົດໝາຍ ກັບສັດຕູດ້ວຍຮູບການ "ກອງຫຼອນ", ໜີອອກຈາກສະຖານທີ່ໃກ້ກັບຖານທັບສັດຕູ. ຂະບວນການເຄື່ອນໄຫວເພື່ອຕັ້ງກັບດັກ, ກັບດັກໄດ້ຂະຫຍາຍກວ້າງຢູ່ຕາມສາຍຫ້ວຍ, ໄຮ່ສວນ, ເນີນພູ, ໄດ້ຈຳກັດພວກກຸ່ມສັດຕູທີ່ໄປລາດຕະເວນຢ່າງບໍ່ໜ້ອຍ.

ເພື່ອຮັບມືກັບຂະບວນການເຄື່ອນໄຫວ ການປະຕິວັດຢູ່ພາກເໜືອເສັ້ນທາງເລກ 9, ວັນທີ 5/2/1961, ໂງດິ່ງຢຽມ ແລະ ພູມີ ສົມທົບກັນເປີດບັ້ນຮົບໃຫຍ່ຢູ່ພາກເໜືອເຮືອງຮວາ, ເພື່ອຫວັງທຳລາຍສຳນັກງານໃຫຍ່ຂອງແຂວງ, ເມືອງ, ສະກັດກັ້ນ ແລວທາງເໜືອ - ໃຕ້, ເກນປະຊາຊົນຢູ່ບັນດາໝູ່ບ້ານຍຸດທະສາດ, ຈັບກຸ່ມທະຫານ, ທຳລາຍເສດຖະກິດ ແລະ ທຳລາຍຊັບສົມບັດຂອງພວກເຮົາ.

ພາຍໃຕ້ການຊີ້ນຳນຳພາຂອງແຂວງ ແລະ ເມືອງເຮືອງຮວາ, ປະຊາຊົນບັນດາເຜົ່າຢູ່ເຂດຖານທີ່ໝັ້ນ, ສອງຝັ່ງຕາເວັນອອກ ແລະຕາເວັນຕົກສາຍພູຫຼວງໄດ້

ປະຕິບັດທີ່ວ່າ "ສວນເປົ່າເຮືອນຮ້າງ", ນໍາເອົາຜູ້ເຖົ້າ, ແມ່ຍິງ ແລະ ເດັກນ້ອຍມາຢູ່ລາວຊົ່ວຄາວ. ສ່ວນໄວໜຸ່ມຈໍານວນໜຶ່ງທີ່ຢູ່ແມ່ນເຂົ້າຮ່ວມກໍາລັງປະກອບອາວຸດຢ່າງຫ້າວຫັນ, ເປັນຜູ້ວາງກັບດັກ, ໃຊ້ທະນູ ແລະ ອາວຸດທີ່ ທັນສະໄໝເພື່ອໂຈມຕີສັດຕູ, ສຸມໃສ່ຕໍາແໜ່ງກອງທະຫານຂອງພວກມັນ. ສັດຕູຖືກຕີແບບບໍ່ທັນຕັ້ງຕົວເຮັດໃຫ້ພວກສັດຕູຕ້ອງຖອນທັບ. ເພື່ອຜັນຂະຫຍາຍໄຊຊະນະ, ພວກເຮົາສືບຕໍ່ສິ່ງເສີມບຸກໂຈມຕີສັດຕູ. ຫົກຕາແສງພາກເໜືອຂອງເສັ້ນທາງເລກ 9 ໄດ້ຮັບການປົດປ່ອຍ. ເໜືອ - ໃຕ້ຂອງເມືອງເຊືອງຮວາໄດ້ປົດປ່ອຍ, ເຂດຖານທີ່ໝັ້ນການປະຕິວັດ ໄດ້ຂະຫຍາຍກວ້າງ, ເຊື່ອມຕໍ່ເຂດປົດປ່ອຍເທື່ອທຽນ, ເຂດ 5, ຫວິງລິງ ແລະ ເຂດປົດປ່ອຍຕອນໃຕ້ລາວ. ເສັ້ນທາງເລກ 559 ຈາກແຄຫໍ່ (ຫວິງລິງ) ແລ່ນຕາມສາຍພູຫຼວງຜ່ານເຮືອງຮວາ ຈາກບ່ອນເປັນພຽງແຕ່ເສັ້ນທາງນ້ອຍ, ແຄບໃຊ້ເພື່ອຄົນຍ່າງໄປມາ, ຮອດປີ 1957 – 1958 ນັບແຕ່ນັ້ນມາໄດ້ຮັບການປົກປັກຮັກສາ ແລະ ກໍ່ສ້າງຈົນກາຍເປັນເສັ້ນທາງຄົມມະນາຄົມ ຍຸດທະສາດໂດຍໃສ່ຊື່ເສັ້ນທາງໂຮ່ຈີມິນ, ເຊິ່ງມີຫຼາຍເສັ້ນທາງຕັດຜ່ານ ສ້າງເປັນລະບົບກາຍເຊື່ອມໂຍ່ງທີ່ສໍາຄັນ ໃນທັງໝົດລະບົບເຄື່ອນໄຫວຍຸດທະສາດຂອງແນວໂຮມຕ້ານຈັກກະພັດອາເມລິກາຂອງປະຊາຊົນສາມປະເທດອິນດູຈີນ.

ມາຮອດເດືອນເມສາ ປີ 1961, ໂດຍໄດ້ຮັບການຊ່ວຍເຫຼືອຈາກບັນດາຫົວໜ່ວຍທະຫານອາສາສະໝັກຫວຽດນາມ, ກໍາລັງການປະຕິວັດລາວໄດ້ເປີດຂະບວນການເຄື່ອນໄຫວທາງທະຫານຫຼາຍແຫ່ງຢູ່ພາກກາງ ແລະຕອນລຸ່ມຂອງປະເທດລາວ, ປົດປ່ອຍພື້ນທີ່ກ້ວາງອອກຈາກເມືອງຄໍາເກີດ, ຫຼັກຊາວຜ່ານທິດຕາເວັນອອກຂອງເມືອງບົວລະພາ, ແຂວງຄໍາມ່ວນຈົນເຖິງແຂວງສະຫວັນນະເຂດ, ເຊື່ອມຕໍ່ທາງເລກ 12 ກັບທາງເລກ 9 ໃຫ້ກາຍເປັນແລວທາງຍາວ ແລະ ຂະຫຍາຍໄປທາງທິດຕາເວັນອອກ-ຕາເວັນຕົກ. ທັງໝົດ 6 ຕົວເມືອງຢູ່ພາກໃຕ້ເສັ້ນທາງເລກ 9 ໄດ້ປົດປ່ອຍ. ເຂດປົດປ່ອຍພາກກາງ ແລະ ຕອນລຸ່ມຂອງລາວໄດ້ຮັບການ

ຂະຫຍາຍ, ສ້າງທ່າແຮງຢ່າງບໍ່ຢຸດຢັ້ງ, ສ້າງເງື່ອນໄຂເພື່ອໃຫ້ສອງພັກ, ສອງລັດ ຫວຽດນາມ - ລາວ ເຫັນດີເປັນເອກະສັນ "ຫັນທິດ" ໄປທິດຕາເວັນຕົກສາຍພູຫຼວງ, ຢຸດຕິສະຖານະການທີ່ນຳໃຊ້ເສັ້ນທາງດຽວ, ຕອບສະໜອງຄວາມຮຽກຮ້ອງຕ້ອງການນັບມື້ໃຫຍ່ຂຶ້ນໃນສະໜາມຮົບ.

ເດືອນ ພຶດສະພາ ປີ 1961, ພາຍຫຼັງກອງທັບຫວຽດນາມ ໄດ້ສົມທົບກັບລາວເພື່ອປົດປ່ອຍເຊໂປນ, ດ້ວຍຂໍ້ຕົກລົງຂອງລາວ, ຄະນະກຸ່ມໄດ້ເປີດທາງສູ່ທິດຕາເວັນຕົກສາຍພູຫຼວງ (ລາວ). ຄະນະກຳມະການສູນກາງ ແລະ ກະຊວງປ້ອງກັນປະເທດຫວຽດນາມ ໄດ້ຕົກລົງສົມທົບກັນ ສອງສາຍເປັນໜຶ່ງ. ຮູບແບບການເຄື່ອນໄຫວແຕ່ພາກເໜືອເສັ້ນທາງເລກ 9 ແມ່ນຂົນສົ່ງສິນຄ້າ, ໄປແບບປົດລັບ, ຫຼີກລ້ຽງສັດຕູເພື່ອລົງໄປພາກໃຕ້. ໃນໄລຍະນີ້, ບາງເທື່ອພວກເຮົາໄດ້ຊຸກຍູ້ການຂົນສົ່ງທາງທິດຕາເວັນຕົກຂອງສາຍພູຫຼວງດ້ວຍພາຫະນະ, ລວມທັງຍົນຂົນສົ່ງສິນຄ້າຢູ່ຕາໂຂງ ແລະ ເສັ້ນທາງນີ້ຍັງຄົງຮັກສາມາຮອດປີ 1964. ກ່ອນໜ້າປີໃໝ່ ປີ 1968, ການເຄື່ອນໄຫວຂົນສົ່ງສິນຄ້າຂອງຈີຫຽນເຫ້ວ ຕາມເສັ້ນທາງລຽບຊາຍແດນຈາກລາວດ້ວຍ ສອງ ເສັ້ນທາງຄື: ຕາໂຂງ-ເຣີລຸງ ມອບໃຫ້ພາກເໜືອຂອງຈີຫຽນ; ສາລີ - ເມືອງນອງ - ລາຮາບ - ອາຕຸກ ມອບໃຫ້ພາກໃຕ້ຂອງ ຈີຫຽນເຫວ້.

ຈັກກະພັດອາເມລິກາໄດ້ຄົ້ນພົບຂະບວນເຄື່ອນໄຫວຂອງເສັ້ນທາງ, ພວກມັນໄດ້ເພີ່ມທະວີການບຸກໂຈມຕີທຳລາຍມ້າງ ຢ່າງໜັກໜ່ວງ, ຖິ້ມລະເບີດມີນຄືບທຸກຊະນິດລວມທັງສິດພົນປະເພດສານທາດເຄມີ ທີ່ເປັນພິດລົງໃສ່ຕາແສງບາຣີ, ຕະຣຽບ, ອາຊ້ອກຖືກທຳລາຍທຸກສິ່ງທີ່ມີຊີວິດ. ໃນເວລາດຽວກັນນັ້ນ, ພວກເຂົາໄດ້ປ່ອຍໜ່ວຍລົບພິເສດຈຳນວນຫຼາຍເຂົ້າໄປໃນປ່າ ເລີກເອີ້ນວ່າການນຳໃຊ້ຍຸດທະວິທີ "ກະໂດດ" ປ່ອຍທະຫານໂດຍເຮລີຄອບເຕີຂຶ້ນໃສ່; ຈັດຕັ້ງເປີດບັ້ນຮົບ "ເລເລີຍ", "ເຟື່ອງ ຮວ່າງ" ບຸກໂຈມຕີຂະໜາດໃຫຍ່ຢູ່ເຂດຊາຍແດນຫວຽດນາມ - ລາວ. ພວກເຮົາຕ້ອງຍົກຍ້າຍຜູ້ເຖົ້າ, ແມ່ຍິງ ແລະ ເດັກນ້ອຍອອກຈາກເຂດທີ່

ສັດຕູບຸກໂຈມຕີ; ຜູ້ທີ່ມີກຳລັງທີ່ແຂງແຮງແມ່ນໃຫ້ຢູ່ກັບກອງທັບເພື່ອປະຕິບັດ 3 ຍຶດຕິດຄື: ພະນັກງານ ຍຶດຕິດປະຊາຊົນ, ປະຊາຊົນຍຶດຕິດແຜ່ນດິນ, ທະຫານຍຶດຕິດສັດຕູ; ພົ້ນເດັ່ນກວ່າແມ່ນກອງທະຫານຕາແສງອາງໍໄດ້ຍິງຍົນອາເມລິກາຕົກຫຼາຍລຳ. ຍ້ອນແນວນັ້ນ, ກອງທັບ ແລະປະຊາຊົນຢູ່ຊາຍແດນເຂດໃຕ້ເຮືອງຮວາໄດ້ສ້າງຄວາມເສຍຫາຍເປັນຈຳນວນຫຼວງຫຼາຍໃຫ້ແກ່ສັດຕູ, ສັດຕູບໍ່ສາມາດບັນລຸເປົ້າໝາຍໃນການເຕົ້າໂຮມປະຊາຊົນ ແລະ ສ້າງຕັ້ງບັນດາໝູ່ບ້ານ ຍຸດທະສາດໄດ້. ເຂດພູດອຍຂອງເມືອງເຮືອງຮວາ ແລະ ທິດຕາເວັນອອກ - ຕາເວັນຕົກ ສາຍພູຫຼວງບໍ່ພຽງແຕ່ເປັນກຳລັງໜູນອັນໜັກແໜ້ນ ໃຫ້ແກ່ບັນດາຂະບວນການເຄື່ອນໄຫວປະຕິວັດຂອງສອງແຂວງເທົ່ານັ້ນ, ແຕ່ຍັງສ້າງເງື່ອນໄຂອັນສະດວກ ໃຫ້ແກ່ການເປີດ ແລະ ຂະຫຍາຍບັນດາແລວທາງຍຸດທະສາດຕາເວັນອອກ - ຕາເວັນຕົກສາຍພູຫຼວງຂອງສອງປະເທດອີກດ້ວຍ.

ໃນເວລາປະສົບໄພ, ເພື່ອຫຼີກລ້ຽງການສູນເສຍກ່ຽວກັບຄົນ ແລະ ແບ່ງພື້ນທີ່ໃຫ້ແກ່ກອງທັບໃນການຜັນຂະຫຍາຍແນວການຊ້ອມຮົບ, ປະຊາຊົນບັນດາເຜົ່າເຮືອງຮວາ ຕ້ອງອົບພະຍົບໄປຍັງລາວ. ຊາຍແດນລາວ ຢູ່ທິດຕາເວັນຕົກຂອງສາຍພູຫຼວງ - ໄດ້ກາຍເປັນຖານທີ່ໝັ້ນໃຫ້ແກ່ກອງທັບ, ພະນັກງານ ແລະ ປະຊາຊົນເຮືອງຮວາ (ກວາງຈິ) ປົກປັກຮັກສາ ແລະ ຂະຫຍາຍກຳລັງ. ປະຊາຊົນອົບພະຍົບຍ້າຍເຂົ້າມາລາວ ສ່ວນໃຫຍ່ ແມ່ນຊົນເຜົ່າ ປາໂກ ແລະ ເວີນກຽວ. ຢູ່ທີ່ນີ້, ສອງຝ່າຍສົມທົບກັນ ອອກ ແຮງງານຜະລິດ, ເຂົ້າຮ່ວມການຂົນສົ່ງສິນຄ້າ, ຕໍ່ສູ້ ແລະ ຮັບໃຊ້ການຕໍ່ສູ້.

ເມື່ອຂະບວນການເຄື່ອນໄຫວການປະຕິວັດ ແລະ ການຕໍ່ຕ້ານຢູ່ແຂວງສະຫວັນນະເຂດປະສົບກັບຄວາມຫຍຸ້ງຍາກ, ຄະນະພັກ ແລະ ປະຊາຊົນແຂວງກວາງຈິ ແລະ ຄະນະພັກເຂດຈິທຽນໄດ້ແບ່ງປັນ ແລະ ຊ່ວຍຢ່າງທັນເວລາ. ບໍ່ພຽງແຕ່ຢູ່ຂັ້ນພາກພື້ນ ແລະ ແຂວງເທົ່ານັ້ນ, ພະນັກງານ ແລະ ປະຊາຊົນຢູ່ລຽບຕາມຊາຍແດນຍັງ

ຕັ້ງໜ້າຊ່ວຍເຫຼືອຢ່າງທັນເວລາ, ຈູດໄຟ, ແບ່ງປັນເກືອ, ຜັກທຸກຊະນິດ, ແບ່ງປັນຄວາມມ່ວນຊື່ນປິຕິຊົມຊື່ນໃນການຍາດແຍ່ງເອົາໄຊຊະນະ. ນີ້ແມ່ນຈຸດພົ້ນເດັ່ນໃນນ້ຳໃຈອ້າຍນ້ອງ, ນ້ຳໃຈສາມັກຄີອັນບໍລິສຸດຜຸດຜ່ອງ, ຍືນຍົງ ແລະ ສູງສົ່ງໃນຊຸມເດືອນປີແຫ່ງສົງຄາມຕໍ່ຕ້ານທີ່ເຕັມໄປດ້ວຍຄວາມຫຍຸ້ງຍາກ, ຄວາມລຳບາກ ແລະ ການເສຍສະຫຼະຊີວິດເພື່ອຊາດລະຫວ່າງຄະນະພັກກັບປະຊາຊົນແຂວງ ກວາງຈິ ແລະ ສະຫວັນນະເຂດ. ພະນັກງານ, ນັກຮົບຫຼາຍຄົນຢູ່ແຂວງກວາງຈິເຄີຍໄດ້ເຂົ້າຮ່ວມການຕໍ່ສູ້ຢູ່ລາວຄື: ສະຫາຍເລແຮ່ນ, ປະເກືອງ, ໂຮ່ເຊີມ, ໂຮ່ໂລຍ, ເລວັນຕາມ ... ຍາມໃດກໍ່ພາກພູມໃຈໃນຊຸມເດືອນປີແຫ່ງການຕໍ່ສູ້, ແບ່ງປັນຄວາມເສຍສະຫຼະ, ຄວາມລຳ ບາກກັບພະນັກງານ, ນັກຮົບ ແລະ ປະຊາຊົນລາວ. ຖືວ່າແມ່ນການປະກອບສ່ວນເພື່ອປະເທດຊາດ ແລະ ຜືນແຜ່ນດິນຂອງຕົນ, ເພື່ອສາຍພົວພັນມິດຕະມິດລະຫວ່າງສອງຊາດ, ສອງປະເທດມີຄວາມຂຽວສົດງົດງາມ ແລະ ຍືນຍົງຕະຫຼອດໄປ. ນັ້ນແມ່ນການສືບທອດ ແລະ ເສີມຂະຫຍາຍມູນເຊື້ອຮີດຄອງປະເພນີອັນດີງາມຂອງຊາດຫວຽດນາມ, ປະຕິບັດແນວຄິດຂອງປະທານໂຮ່ຈິມິນ ກ່ຽວກັບຄວາມສັດຊື່ ແລະ ບໍລິສຸດຜຸດຜ່ອງ, ດ້ານນ້ຳໃຈສາກົນທີ່ສູງສົ່ງ ແລະ ຍືນຍົງ.

ຄວາມສາມັກຄີ, ພັນທະມິດສູ້ຮົບລະຫວ່າງແຂວງກວາງຈິ ແລະ ສະຫວັນນະເຂດ ກໍຍັງມີການຝຶກຝົນ, ທົດສອບຜ່ານ ຄວາມເປັນຈິງຂອງສົງຄາມ ຕ້ານຈັກກະພັດອາເມລິກາເພື່ອກູ້ຊາດ, ໃນນັ້ນ ເຫັນໄດ້ຊັດເຈນທີ່ສຸດແມ່ນພັນທະມິດ, ສົມທົບກັນຕໍ່ສູ້, ປະກອບສ່ວນເພື່ອໃຫ້ໄດ້ຮັບໄຊຊະນະອັນເປັນ ຄວາມໝາຍຢ່າງເດັດດ່ຽວໃນດ້ານການທະຫານ.

ໃນລະດູໃບໄມ້ປົ່ງ ແລະ ລະດູຮ້ອນປີ 1968, ກົມການເມືອງ, ຄະນະພັກການທະຫານສູນກາງຫວຽດນາມ ໄດ້ຕັດສິນໃຈເປີດບັ້ນຮົບເສັ້ນທາງເລກ 9 - ເຄແຊງດ້ວຍຈຸດປະສົງ “ການປະສານສົມທົບທັນເປັນການບຸກໂຈມຕີພ້ອມກັນ ຂອງກອງທັບ ແລະ ປະຊາຊົນຫວຽດນາມໃຕ້”. ພາຍຫຼັງກອງທັບໃຫຍ່ຂອງຫວຽດນາມ

ໄດ້ເປີດບັ້ນຮົບບຸກໂຈມຕີສັດຕູ, ເພື່ອຈຸດປະສົງທຳ ລາຍຖານທີ່ໝັ້ນຂອງສັດຕູດ້ານຕາເວັນຕົກ, ໄດ້ເປີດເສັ້ນທາງເລກ 9 ແລະ ຈັດສົ່ງກຳລັງໄປປິດລ້ອມສັດຕູຢູ່ຕາເກີນໂດຍສົມ ທົບກັບສະໜາມຮົບກວາງຈີ, ປະຈຳຢູ່ແຂວງສະຫວັນນະເຂດ. ກອງພົນທີ 14, ກຳລັງຫຼັກແຫຼ່ງຂອງທະຫານເຂດພາກໃຕ້ຂອງລາວ[6] ພ້ອມກັບກຳລັງປະກອບອາວຸດທ້ອງຖິ່ນ ແລະ ປະຊາຊົນໄດ້ສືບຕໍ່ບຸກໂຈມຕີສັດຕູຢ່າງບໍ່ຢຸດຢັ້ງຫຼາຍບ່ອນຢູ່ເມືອງສອງຄອນ, ລະຫານ້ຳ. ຜັນຂະຫຍາຍທ່າບຸກໂຈມຕີ, ກອງທັບ ແລະ ປະຊາຊົນລາວໄດ້ບຸກໂຈມຕີຫົວໜ່ວຍຄ້າຍທະຫານຝ່າຍຂວາ ຂອງລາວຢູ່ບ້ານໜອງລົມ, ນ້ຳຕັ້ງຫວາຍ, ບ້ານດົງບູນ, ໄດ້ກຳຈັດສັດຕູຈາກສະໜາມຮົບໄດ້ຫຼາຍນາຍ, ຍຶດປືນໄດ້ຫຼາຍກວ່າ 10 ກະບອກ. ຈາກນັ້ນ, ທ້າຍເດືອນມັງກອນ ປີ 1968, ກອງພົນ 14 ໄດ້ຈັດຕັ້ງບຸກໂຈມຕີກອງພົນ BV33 ຂອງກອງທັບຝ່າຍຂວາລາວ ເມື່ອພວກມັນໜີອອກຈາກເຂດທີ່ໝັ້ນຫ້ວຍສານ, ສາມາດດັບສັດຕູໄດ້ 116 ຄົນ, ຍຶດປືນ 27 ກະບອກ ແລະ ລົດຕັງ 2 ຄັນ.

ນັບແຕ່ເດືອນ ເມສາ 1968, ອາເມລິກາເພີ່ມທະວີການຖິ້ມລະເບີດ, ບຸກໂຈມຕີໜັກໜ່ວງເສັ້ນທາງຂົນສົ່ງທາງທະຫານ ຍຸດທະສາດດ້ານຕາເວັນຕົກຂອງສາຍພູຫຼວງ, ເພື່ອສະກັດກັ້ນສາຍລຳລ່ຽງ “ເສັ້ນຊີວິດ” ໃຫ້ແກ່ການປະຕິວັດພາກໃຕ້ຂອງລາວ, ຊ່ວຍກອງທັບຝ່າຍຂວາບຸກໂຈມຕີເຂດປົດປ່ອຍຂອງລາວ. ເພື່ອປະຕິບັດ

---

[6] ວັນທີ 15-9-1965, ກອງບັນຊາການທະຫານສູງສຸດ ກອງທັບປົດປ່ອຍປະຊາຊົນລາວຕົກລົງສ້າງຕັ້ງເຂດທະຫານພາກໃຕ້ ຂອງລາວ ບົນພື້ນຖານການລວມເຂດທະຫານຕອນລຸ່ມລາວກັບສອງແຂວງຄຳມ່ວນ ແລະ ສະຫວັນນະເຂດ ໃນພາກກາງ ຂອງລາວ.

ແນວທາງນະໂຍບາຍຂອງຄະນະບໍລິຫານງານສູນກາງພັກສອງປະເທດ, ກອງທັບ ແລະ ປະຊາຊົນບັນດາຫົວໜ້າບັນຊາການແຂວງເຂດພາກໃຕ້ລາວ, ໃນນັ້ນມີແຂວງສະຫວັນນະເຂດ ສົມທົບກັບທະຫານອາສາສະໝັກ ແລະ ນັກຊ່ຽວຊານການທະຫານຫວຽດນາມ ຊຸກຍູ້ເລັ່ງບຸກໂຈມຕີສັດຕູ, ປົກປັກຮັກສາເຂດປົດປ່ອຍ ແລະ ຮັກສາເສັ້ນທາງຄົມມະນາຄົມຍຸດທະສາດສາຍພູຫຼວງ.

ບັ້ນຮົບເສັ້ນທາງເລກ 9 - ແຄແຊນ ກ້າວເຂົ້າສູ່ໄລຍະຕັດສິນ, ປະຊາຊົນບັນດາເຜົ່າກວາງຈິ ແລະປະຊາຊົນບັນດາເຜົ່າລາວ ແຂວງສະຫວັນນະເຂດບໍ່ຢ້ານກົວຕໍ່ຄວາມເສຍສະຫຼະ, ຄວາມລຳບາກ, ອາສາສະໝັກໄປສູ້ຮົບດ້ວຍຄວາມເຊື່ອໝັ້ນໃນໄຊຊະນະ. ທັງປະຕິບັດໜ້າທີ່ຂຸດຂຸມລະເບີດ, ເຊື່ອມຕໍ່ເສັ້ນທາງຄົມມະນາຄົມຍຸດທະສາດສາຍພູຫຼວງຄືນໃໝ່, ທັງເຂົ້າຮ່ວມການສົ່ງສິນຄ້າ, ຮັບເງິນເດືອນ, ຈ່າຍລູກປືນ, ເບິ່ງແຍງທະຫານທີ່ໄດ້ຮັບບາດເຈັບ... ບຸກຄົນນີ້ລົ້ມລົງ, ອີກຄົນໜຶ່ງຢືນຂຶ້ນ, ທັງໝົດເພື່ອໄຊຊະນະຂອງບັ້ນຮົບ.

ວັນທີ 15 ກໍລະກົດ 1968, ບັ້ນຮົບເສັ້ນທາງເລກ 9 - ແຄແຊນໄດ້ສິ້ນສຸດລົງດ້ວຍໄຊຊະນະ. ກອງທັບຂອງພວກເຮົາໄດ້ບຸກໂຈມຕີທຳລາຍເຂດປ້ອງກັນທີ່ເຂັ້ມແຂງຂອງສັດຕູ, ປົດປ່ອຍເມືອງເຮືອງຮວາ ພ້ອມດ້ວຍຈຳນວນພົນລະເມືອງ 10 ພັນກວ່າຄົນ. ເຂດປົດປ່ອຍກວາງຈິໄດ້ເຊື່ອມຕໍ່ກັບສະຫວັນນະເຂດ. ຄະນະພັກ, ກອງທັບ ແລະປະຊາຊົນ 2 ແຂວງກວາງຈິ ແລະສະຫວັນນະເຂດ ຍິ່ງມີເງື່ອນໄຂເພື່ອຊ່ວຍເຫຼືອເຊິ່ງກັນ ແລະກັນກໍ່ສ້າງເຂດປົດປ່ອຍໃຫ້ເຂັ້ມແຂງ, ປົກປັກຮັກສາເສັ້ນທາງຍຸດທະສາດ ສາຍພູຫຼວງ - ເສັ້ນທາງໂຮ່ຈິມິນ ແລະພ້ອມແລ້ວທີ່ຈະຕໍ່ສູ້ກັບບັນດາຍຸດທະວິທີສົງຄາມໃໝ່ຂອງຈັກກະພັດ ອາເມລິກາ.

ຮອດປີ 1971, ຫຼັງຈາກການພາຍແພ້ຢ່າງຕໍ່ເນື່ອງໃນສະໜາມຮົບອິນດູຈີນ, ຈັກກະພັດອາເມລິກາ ແລະ ລັດຖະບານໄຊງ່ອນ ໄດ້ປະຕິບັດການບຸກໂຈມຕີທີ່ມີ

ຊື່ວ່າ "ປະຕິບັດການລຳເຊີນ 719" ບຸກໂຈມຕີເຂົ້າເຂດເສັ້ນທາງເລກ 9 – ພາກໃຕ້ຂອງລາວ, ໂດຍວາງກົນອຸບາຍຕັດເສັ້ນທາງຍຸດທະສາດສາຍພູຫຼວງ ແລະ ເສັ້ນທາງໂຮ່ຈິມິນ, ເຮັດໃຫ້ສົງຄາມການຕໍ່ຕ້ານຢູ່ພາກໃຕ້ ກໍ່ຄືຢູ່ພາກກາງ, ຕອນລຸ່ມລາວ ແລະ ກຳປູເຈຍຖືກຕັດຂາດກັນ.

ຕໍ່ກັບກົນອຸບາຍຂອງອາເມລິກາ ແລະ ລັດຖະບານໄຊງ່ອນ, ກົມການເມືອງ, ຄະນະກຳມະການການທະຫານສູນກາງ, ກົມໃຫຍ່ເສນາທິການກອງທັບປະຊາຊົນຫວຽດນາມໄດ້ຕັດສິນໃຈເປີດບັ້ນຮົບບຸກໂຈມຕີຄືນເສັ້ນທາງເລກ 9 - ພາກໃຕ້ຂອງລາວ ປີ 1971, ຕັດສິນໃຈຢ່າງເດັດດ່ຽວບຸກໂຈມຕີກອງທັບຂະໜາດໃຫຍ່, ເຕັມໄປດ້ວຍຄວາມທະເຍີທະຍານຂອງສັດຕູ. ບັ້ນຮົບໄດ້ເກີດຂຶ້ນໃນພື້ນທີ່ເຂດພູດອຍ ແລະ ປ່າໄມ້ຂອງ 2 ແຂວງຄື: ກວາງຈີ (ຫວຽດນາມ) ແລະ ສະຫວັນນະເຂດ (ລາວ). ພູມສັນຖານຂອງດິນແດນແຫ່ງນີ້ມີຄວາມຫຼາກຫຼາຍຄື: ມີທົ່ງພຽງ, ເນີນພູຂະໜາດກາງສັບປົນກັບໝູ່ບ້ານ, ພູສູງປ່າດົງຕຶບໜາ, ມີຫຼາຍຈຸດສູງ ແລະ ເປັນຈຸດສຳຄັນເຊັ່ນ: 38 (ອິນທິ), 165 (ນ້ຳຕຸ່ງ), 22 (ນ້ຳລຶກ), 241, 513, 300; ມີເສັ້ນທາງ 12, 22, 18 ລົງໄປບ້ານດົງ, ເມືອງນອງ ແລະ ທ່າໂຂງ. ກົມການເມືອງ, ຄະນະກຳມະການການທະຫານສູນກາງຫວຽດນາມໄດ້ຕັດສິນໃຈວ່າ: ໃນທຸກສະຖານະການໃດກໍ່ຕາມຕ້ອງຕີເອົາຊະນະກອງທະຫານຂອງສັດຕູ, ປົກປັກຮັກສາສາງເກັບ ແລະ ຮັບປະ ກັນໃນວຽກງານສະໜັບສະໜູນໃຫ້ແກ່ສະໜາມຮົບ.

ເຂດພື້ນທີ່ບັ້ນຮົບບຸກໂຈມຕີຄືນເສັ້ນທາງເລກ 9 - ພາກໃຕ້ຂອງລາວ ມີຄວາມຍາວປະມານ 90 ກິໂລແມັດ (ແຕ່ດົງຮ່າ, ກວາງຈີ ຫາ ເຊໂປນ, ແຂວງສະຫວັນນະເຂດ). ພື້ນທີ່ສ່ວນຫຼາຍແມ່ນປ່າໄມ້, ເນີນພູເປົ່າຫວ່າງ. ປະຊາກອນຢູ່ທີ່ນີ້ມີຈຳນວນ ບໍ່ໜ້ອຍ, ສ່ວນຫຼາຍແມ່ນປະຊາຊົນບັນດາເຜົ່າເວີນກຽວ ແລະ ປາໂກ

ຢູ່ແຂວງກວາງຈີ ແລະ ປະຊາຊົນລາວບັນດາເຜົ່າ ທາງທິດຕາເວັນຕົກ ເສັ້ນທາງເລກ 9. ປະຊາຊົນບັນດາເຜົ່າກວາງຈີ ແລະ ປະຊາຊົນລາວບັນດາເຜົ່າດໍາລົງຊີວິດຢູ່ທີ່ນີ້ເຊິ່ງມີມູນເຊື້ອຮັກຊາດ, ຕິດພັນກັບພື້ນແຜ່ນດິນ, ຍຶດໝັ້ນໝູ່ບ້ານ, ສາມັກຄີໃນການຕໍ່ສູ້ຕ້ານການຮຸກຮານຂອງອາເມລິກາ, ດ້ວຍຫົວໃຈຢຶດໜ້ຽວຕໍ່ການປະຕິວັດ, ຕາມຄໍາຮຽກຮ້ອງອັນສັກສິດຂອງສົງຄາມຕໍ່ຕ້ານ.

ເພື່ອປະຕິບັດຕາມການຊີ້ນໍາຂອງສູນກາງພັກ ປະຊາຊົນລາວ ແລະ ແນວລາວຮັກຊາດ, ກ່ອນ ແລະ ໃນບັ້ນຮົບ ເສັ້ນທາງ ເລກ 9 - ພາກໃຕ້ລາວ ປີ 1971, ກໍາລັງຫຼັກແຫຼ່ງ, ກໍາລັງທ້ອງຖິ່ນ, ອໍານາດການປົກຄອງແຂວງສະຫວັນນະເຂດ ພ້ອມດ້ວຍປະຊາຊົນທົ່ວປວງຊົນໄດ້ຕັ້ງໜ້າລຸກຮື້ຂຶ້ນຈັບອາວຸດຕໍ່ສູ້ ດ້ວຍຫຼາຍຮູບຫຼາຍແບບ, ໄດ້ສົມທົບພັນທະພາບບຸກໂຈມຕີ ຢ່າງແໜ້ນແຟ້ນກັບທະຫານອາສາສະໝັກຫວຽດນາມ ແລະ ປະຊາຊົນບັນດາເມືອງຢູ່ພາກຕາເວັນອອກຂອງເສັ້ນທາງເລກ 9. ແນວໂຮມແຂວງ, ກອງບັນຊາການທະຫານແຂວງກໍ່ໄດ້ອອກຄໍາແນະນໍາກ່ຽວກັບວິທີການຕໍ່ສູ້, ຮູບແບບການສູ້ຮົບ, ຊຸກຍູ້ສະໜັບສະໜູນແຂ່ງຂັນສ້າງຜົນງານທໍາລາຍສັດຕູ, ຍິງເຮືອບິນສັດຕູ, ເພີ່ມທະວີການຜະລິດ, ເຂົ້າຮ່ວມການຂົນສົ່ງ, ສະໜອງສະບຽງອາຫານ, ແນະນໍາທາງໃຫ້ແກ່ທະຫານ. ກອງບັນຊາການທະຫານແຂວງສະຫວັນນະເຂດ ໄດ້ນໍາໃຊ້ 2 ກອງພັນ (14 ແລະ 18) ເປັນກໍາ ລັງຕົ້ນຕໍເຂົ້າຮ່ວມຂະບວນການຕໍ່ສູ້ ແລະ ຈັດຕັ້ງກອງທະຫານລາດ ຈາກບັນດາເມືອງພາກຕາເວັນອອກ ແລະ ຕາເວັນຕົກເປັນກໍາລັງສໍາຄັນ, ເຄື່ອນໄຫວຕໍ່ສູ້ຢ່າງກະແຈກກະຈາຍເປັນກໍາລັງໜ້ອຍ, ບຸກໂຈມຕີຕັດຂາດການສັນຈອນ, ສະກັດກັ້ນຕີສັດຕູຫຼົບໜີ. ກອງທະຫານລາດ ແລະ ປະຊາຊົນເປັນເອກະພາບກັນໃນການເຄື່ອນໄຫວ, ນໍາໃຊ້ອາວຸດຍຸດໂທປະກອນ, ສົມທົບກັບກໍາລັງຫຼັກແຫຼ່ງເພື່ອທໍາລາຍ

ສັດຕູ, ປຸກລະດົມຂົນຂວາຍທົ່ວປວງຊົນ ຕໍ່ສູ້ຕ້ານສັດຕູຢ່າງທົ່ວເຖິງໃນທຸກທິດຂອງສະໜາມຮົບ.

ເພື່ອປະຕິບັດພາລະໜ້າທີ່ຂອງຕົນ, ກຳລັງປະກອບອາວຸດ ແລະປະຊາຊົນແຂວງສະຫວັນນະເຂດໄດ້ຕັ້ງໜ້າແຂ່ງຂັນຕໍ່ສູ້ຕ້ານສັດຕູ, ເຂົ້າຮ່ວມຍິງຍົນ, ປົກປັກຮັກສາເຂດຖານທີ່ໝັ້ນ, ແຂ່ງຂັນເພີ່ມທະວີການຜະລິດ. ມີຊາວໜຸ່ມຊາຍ, ຍິງ ແລະປະຊາຊົນນັບໝື່ນໆຄົນ ອາສາສະໝັກອອກແນວໜ້າເພື່ອຮັບໃຊ້ການຕໍ່ສູ້, ຂົນເຄື່ອງ, ຂົນອາວຸດ, ປະຖົມພະຍາບານເບື້ອງຕົ້ນແກ່ບັນດານັກຮົບທີ່ໄດ້ຮັບບາດເຈັບ ແລະ ເຈັບປ່ວຍ, ຝັງສົບຜູ້ເສຍຊີວິດ, ນຳທາງໃຫ້ທະຫານ... ອຳນາດການປົກຄອງແຂວງສະຫວັນນະເຂດ ໄດ້ສົ່ງສະຫາຍ ຄຳພັນ ໄປຮັບຜິດຊອບວຽກງານໂຄສະນາເຜີຍແຜ່ ແລະ ສະໜັບສະໜູນຊ່ວຍເຄື່ອນຍ້າຍປະຊາຊົນອອກຈາກເຂດສູ້ຮົບໄປຍັງເຂດປອດໄພ. ຢູ່ບັນດາເມືອງ, ກອງທັບ ແລະ ປະຊາຊົນແຂວງສະຫວັນນະເຂດໄດ້ສົ່ງເສີມສູ້ຮົບປະຊາຊົນ. ພິເສດແມ່ນຢູ່ຈຸດສູງ 450 ໃນທິດເໜືອບ້ານດົງ – ເຊໂປນ, ບັນດາທະຫານກອງທັບປະຊາຊົນຫວຽດນາມ ໄດ້ສົມທົບກັບບັນດາກົມກອງຂອງກອງທັບປະຊາຊົນລາວເປັນໄລຍະໄລຍະ. ກອງທະຫານລາດເມືອງເຊໂປນຕັ້ງໜ້າເຂົ້າຮ່ວມ ກັບບັນດາກອງບັນຊາການໃຫຍ່ຂອງຫວຽດນາມ ບຸກໂຈມຕີຢ່າງໜັກໜ່ວງ, ແຕກປົກກອງທັບສັດຕູຢູ່ທາງທິດເໜືອເສັ້ນທາງເລກ 9, ທຳລາຍບັນດາກຸ່ມຫຼັກຢູ່ຫຼັກ 500, 543, ບຸກໂຈມຕີຕອບໂຕ້ຂອງກອງພົນໃຫຍ່ກອງທັບອາກາດທີ 3 ແລະ ກອງທັບບົກທີ 17 ຂອງກອງທັບໄຊງ່ອນ, ຈັບເປັນພົນເອກ ຫງວ໋ຽນວັນເຖາະ, ຜູ້ບັນຊາການກອງທະຫານອາກາດ ແລະ ຫົວໜ້າບັນຊາການຂອງພວກມັນ.

ເພື່ອກະກຽມໃຫ້ແກ່ບັ້ນຮົບແຕ່ເດືອນ ກັນຍາ 1970 ຫາເດືອນມັງກອນ 1971, ໃນທຸກໆເສັ້ນທາງເດີນຂອງທະຫານ, ພີ່ນ້ອງປະຊາຊົນເຂດຕາເວັນຕົກ

ກວາງຈີ ພ້ອມກັບປະຊາຊົນບັນດາເຜົ່າລາວອ້າຍນ້ອງບໍ່ສົນໃຈແດດຝົນ, ທັງກາງເວັນກາງຄືນຢືນ ຄຽງຂ້າງກັບໜ່ວຍງານທະຫານຫຼັກແຫ່ງ, ຊາວໜຸ່ມອາສາສະໝັກທີ່ຈະບີນພູ, ເປີດທາງ, ຂຸດດິນ, ຂົນສົ່ງດິນ, ຫີນ, ກໍ່ສ້າງຂົວ, ລະບາຍ; ຕິດຕາມກຳລັງການສອດແນມຂອງສັດຕູເພື່ອປົກປ້ອງຄວາມປອດໄພ ແລະ ຄວາມລັບຍຸດທະສາດຂອງພວກເຮົາ; ຕັ້ງໜ້າເຂົ້າຮ່ວມກໍ່ສ້າງບັນດາບັ້ນຮົບຍິງຍິນ ແລະ ຂົນສົ່ງອາວຸດຍຸດໂທປະກອນ, ລູກປືນ ແລະ ສິນຄ້າອື່ນໆໄປຍັງສະຖານທີ່ເຕົ້າໂຮມກອງບັ້ນຮົບເພື່ອປະຕິບັດຕົງກັບແຜນການ. ບັນດາລໍ້ຄວາຍ, ງົວ, ລົດຖີບ... ແມ່ນມໍລະດົກທັງໝົດຂອງປະຊາຊົນທີ່ນີ້, ແຕ່ເມື່ອການປະຕິວັດຕ້ອງການພວກເຂົາກຽມພ້ອມທີ່ຈະປະກອບສ່ວນເຂົ້າໃນການຮັບໃຊ້ຄວາມຕ້ອງການຂົນສົ່ງລູກປືນ, ເຄື່ອງອຸປະກອນການທະຫານ. ບັນດາໄວໜຸ່ມຊາຍ, ຍິງເວີນກຽວ, ປາໂກ ແລະ ປະຊາຊົນເຜົ່າລາວໃນອາຍຸຣຸ່ນດຽວກັນ, ດ້ວຍນໍ້າໃຈການປະຕິວັດຂອງເຂົາເຈົ້າໄດ້ນຳເອົາສະມັດຕະພາບແບກຫາມໄດ້ເຖິງ 90-100 ກິໂລກຣາມແຕ່ລະຖ້ຽວ. ມີຫຼາຍຄົນເຖິງແມ່ນວ່າຈະມີສຸຂະພາບບໍ່ແຂງແຮງ ຫຼື ຫາກໍ່ຟື້ນຕົວຈາກບາດການເຈັບຍັງຄົງອາສາສະໝັກຮັບໃຊ້ຂະບວນການ. ມີເດັກນ້ອຍອາຍຸພຽງແຕ່ 13-14 ປີ, ກໍ່ໄດ້ອາສາສະໝັກປະກອບສ່ວນເຫື່ອແຮງຂອງຕົນເຂົ້າໃນການແບກຫາມ, ຕັດຕົ້ນໄມ້ເພື່ອປົກປິດເສັ້ນທາງ, ເປັນຜູ້ຕິດຕໍ່ພົວພັນ... ມີພີ່ນ້ອງຈຳນວນໜຶ່ງເມື່ອຖືກສັດຕູຈັບ, ໃຫ້ສິນບົນ ຫຼືທໍລະມານແຕ່ຍັງຄົງອົດທົນ, ເດັດດ່ຽວບໍ່ຂາຍຄວາມລັບ, ເດັດດ່ຽວຈົ່ງຮັກພັກດີຕໍ່ການປະຕິວັດ. ອາໄສຄວາມມານະພະຍາຍາມ, ບຸກບືນອັນໃຫຍ່ຫຼວງຂອງກອງທັບ ແລະປະຊາຊົນສອງປະເທດ, ພິເສດແມ່ນການປະກອບສ່ວນຢ່າງຕັ້ງໜ້າຂອງປະຊາຊົນກວາງຈີ ແລະ ສະຫວັນນະເຂດໃນຂອບເຂດພື້ນທີ່ບັ້ນຮົບຕໍ່ຕ້ານບຸກໂຈມຕີຕາມເສັ້ນທາງເລກ 9 - ພາກໃຕ້ຂອງລາວ, ຮອດທ້າຍເດືອນມັງກອນ ປີ 1971, ພວກເຮົາໄດ້ເປີດເສັ້ນທາງເຄື່ອນທີ່ ຫຼາຍຮ້ອຍ

ກິໂລແມັດ; ກໍ່ສ້າງຂົວຫຼາຍຮ້ອຍແຫ່ງ; ຂົນສົ່ງວັດສະດຸທຸກປະເພດນັບໝື່ນໂຕນ, ພຽງພໍເພື່ອໃຫ້ກຳລັງທະຫານປະມານ 5 ພັນຄົນໃນການຕໍ່ສູ້ພາຍໃນ 4 ຫາ 5 ເດືອນ.

ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງບັ້ນຮົບ, ກຳລັງວັດຖຸເພື່ອຮັບປະກັນໃຫ້ແກ່ກຳລັງທະຫານສູ້ຮົບນັບມື້ນັບຍິ່ງໃຫຍ່, ຮຽກຮ້ອງຕ້ອງເພີ່ມການຊ່ວຍເຫຼືອຕື່ມທາງດ້ານສະບຽງອາຫານ. ພາຍໃຕ້ການຊີ້ນຳ, ຊຸກຍູ້ຂອງຜູ້ເຖົ້າຜູ້ແກ່ບ້ານ, ນາຍບ້ານ, ພີ່ນ້ອງປະຊາຊົນຫວຽດນາມ ແລະ ລາວຢູ່ທີ່ນີ້ ໄດ້ສືບຕໍ່ສະໝັກໃຈຮ່ວມມືກັບກຳລັງຂົນສົ່ງປະກອບສ່ວນ ເຂົ້າຮ່ວມຂົນສົ່ງອາວຸດຍຸດໂທປະກອນ, ລູກປືນ, ອາຫານ, ຢາ..., ຮັບໃຊ້ທະຫານໃນການຕໍ່ສູ້. ມີເສັ້ນທາງຄົມມະນາຄົມຂົນສົ່ງ ຖືກທະຫານສັດຕູບຸກໂຈມຕີທຳລ້າຍ ຢ່າງໜັກໜ່ວງທັງກາງເວັນກາງຄືນ, ແຕ່ບັນດາກຸ່ມທີ່ຂົນສະບຽງອາຫານ ແລະ ບັນທຸກລູກປືນຍັງຄົງສືບຕໍ່ມຸ້ງໜ້າໄປສູ່ການຮັບໃຊ້ກອງທັບ. ຢູ່ຫຼາຍບ່ອນ, ພີ່ນ້ອງປະຊາຊົນສະໝັກໃຈກິນແຕ່ຫົວມັນເຫຼືອງ, ຜັກໃນປ່າ, ສຳລັບອ້າຍນ້ອງທະຫານໃຫ້ກິນເຂົ້າ, ມັນຕົ້ນ, ມັນດ້າງສຸດທ້າຍ. ເກືອເປັນຂອງທີ່ລ້ຳຄ່າຫຼາຍສຳລັບອ້າຍນ້ອງປະຊາຊົນບັນດາເຜົ່າ ແຕ່ເມື່ອທະຫານຕ້ອງການເຂົາເຈົ້າບໍ່ລັງເລທີ່ຈະໃຫ້, ສ່ວນຕົນເອງເມື່ອຂາດເກືອກໍ່ເອົາເຜົາຮາກໄມ້ກິນ. ມີຫຼາຍຄອບຄົວຍັງນຳເອົາສິ່ງມີຄ່າໃນຄອບຄົວໄປແລກປ່ຽນກັບສະບຽງອາຫານເພື່ອສະໜອງໃຫ້ທະຫານໃນສະໜາມຮົບ. ແຕ່ລະກຸ່ມລ້ວນແຕ່ແມ່ນລູກຫຼານຂອງຊາວເຜົ່າກວາງຈິ ແລະ ສະຫວັນນະເຂດທັງກາງເວັນກາງຄືນເພື່ອແບກເຄື່ອງ, ຂົນສົ່ງລູກປືນໄປສະໜາມຮົບ, ແລ້ວເຂົ້າຮ່ວມການຂົນສົ່ງທະຫານບາດເຈັບລົງສູ່ດ້ານຫຼັງ. ບາງເທື່ອໃນເສັ້ນທາງຂົນສົ່ງຜູ້ບາດເຈັບໄດ້ຖືກສັດຕູຫຼອນໂຈມຕີ, ມີພີ່ນ້ອງ ຫຼາຍຄົນໄດ້ໃຊ້ຮ່າງກາຍຕົນເອງເພື່ອປົກປ້ອງພະນັກງານ, ນັກຮົບ. ລະເບີດ ແລະ ລູກປືນຂອງສັດຕູສາມາດທຳລາຍບ້ານເຮືອນ, ທົ່ງນາ, ໄຮ່ສວນແຕ່ບໍ່

ສາມາດທຳລາຍຄວາມຮັກອັນແໜ້ນແຟ້ນຂອງກອງທັບ ແລະປະຊາຊົນ. ມີອ້າຍນ້ອງກວາງຈິ ແລະ ສະຫວັນນະເຂດຫຼາຍຄົນໄດ້ລົ້ມລຸກຄຸກຄານເພື່ອບັ້ນຮົບກ້າວໄປເຖິງວັນແຫ່ງໄຊຊະນະ. ມີພໍ່ແມ່ຊາວລາວຫຼາຍຄົນ ເຖິງວ່າຊີວິດ ການເປັນຢູ່ຂອງພວກເຂົາຍັງປະສົບກັບຄວາມຫຍຸ້ງຍາກ, ອາຫານການກິນບໍ່ພຽງພໍ, ເຄື່ອງນຸ່ງຫົ່ມບໍ່ມີໃສ່ແຕ່ກໍຍັງເກັບເຂົ້າສານເພື່ອລ້ຽງດູບັນດາທະຫານທີ່ໄດ້ຮັບບາດເຈັບ ແລະເຈັບປ່ວຍ, ເບິ່ງແຍງປິ່ນປົວຄືກັບລູກຫຼານໃນທ້ອງຂອງຕົນເອງ.

ວັນທີ 23 ມີນາ 1971, ບັ້ນຮົບຕໍ່ຕ້ານເສັ້ນທາງເລກ 9 -ພາກໃຕ້ລາວ ໄດ້ຮັບໄຊຊະນະສິ້ນສຸດລົງຢ່າງຈົບງາມ. "ນີ້ແມ່ນໄຊຊະນະອັນຍິ່ງໃຫຍ່ຂອງກອງທັບ ແລະ ປະຊາຊົນຂອງພວກເຮົາ, ຄວາມພາຍແພ້ທີ່ເຈັບປວດ, ອັບອາຍຂອງພວກອາເມລິກາ - ພວກກະບົດ ນັບແຕ່ບຸນປີໃໝ່ ປີ 1968 - ຄວາມລົ້ມເຫຼວມີລັກສະນະຮອບດ້ານລວມທັງກົນອຸບາຍ, ຈຳນວນຜູ້ຍັງມີຊີວິດ, ພາຫະນະສົງຄາມ ແລະ ລວມທັງຄວາມເຂັ້ມແຂງດ້ານຍຸດທະວິທີ"[1]; ເຮັດໃຫ້ໃນສະໜາມຮົບຂອງ 3 ປະເທດອິນດູຈີນໄດ້ຫັນທິດ, ເປີດໃບໜ້າໃໝ່ໃນຄວາມສາມາດທີ່ບົ່ມຊ້ອນໃນນະໂຍບາຍ "ຫວຽດນາມຫັນສົງຄາມ" ຂອງ ອາເມລິກາ". ການໄຊຊະນະຄັ້ງນີ້ເປັນການພິສູດໃຫ້ເຫັນຄວາມສາມັກຄີ, ພັນທະພາບຕໍ່ສູ້ແບບພິເສດລະຫວ່າງຫວຽດນາມ ແລະ ລາວ, ລະຫວ່າງສອງແຂວງກວາງຈິ ແລະ ສະຫວັນນະເຂດ. ຄືກັນກັບ ທ່ານພົນໂທ ດົ່ງສີ, ອະດີດຜູ້ບັນຊາການກອງພົນ 559 ໄດ້ໃຫ້ຄວາມສຳຄັນວ່າ: "... ຍ້ອນຍັງມີຊີວິດຢູ່ລອດຂອງເສັ້ນທາງ, ຍ້ອນຄວາມໄຊຊະນະຂອງບັ້ນຮົບ, ຖ້າຫາກຜູ້ໃດຜູ້ໜຶ່ງ ແຕ່ງ

---

1 ກົມປະຕິບັດງານຂອງກະຊວງປ້ອງກັນປະເທດ: ບົດລາຍງານເບື້ອງຕົ້ນກ່ຽວກັບຄຳເຫັນຂອງ F308 ກ່ຽວກັບການປະເມີນຜົນໄດ້ຮັບ ແລະ ຈຸດອ່ອນ ຂອງພວກເຮົາໃນບັ້ນຮົບເສັ້ນທາງເລກ 9 - ພາກໃຕ້ຂອງລາວໃນປີ 1971. ເອກະສານເກັບຮັກສາໄວ້ ທີ່ສູນເກັບເອກະສານຂອງກະຊວງປ້ອງກັນປະເທດ / ຫ້ອງວ່າການກະຊວງປ້ອງກັນປະເທດ.

ບົດກະວີ ທຸກສິ່ງນັ້ນກໍ່ເປັນບາບ. ແຕ່ຖ້າບໍ່ສາມາດຊອກຫາທີ່ມາແຫ່ງໄຊຊະນະຈາກ ບາດກ້າວຍ່າງຂອງບັນດາໄວໜຸ່ມຊາຍ, ຍິງປາໂກ ບົນເສັ້ນທາງລຳລຽງລູກປືນ, ໃນ ສຽງທີ່ດັງກ້ອງກັງວານສຽງກີຕາຂອງຕາລີ ຫຼືຈັງຫວະການຟ້ອນລຳວົງຂອງອ້າຍນ້ອງ ຊາຍຍິງທະຫານປົດປ່ອຍລາວຫຼັງຈາກການສູ້ຣົບແຕ່ລະຄັ້ງ..., ມັນເປັນການຍາກທີ່ ຈະອະທິບາຍຢ່າງເຕັມສ່ວນຂອງການສູ້ຣົບຄັ້ງນີ້..., ແລະເປັນຫຍັງພວກເຮົາ ຈຶ່ງໄດ້ ຮັບໄຊຊະນະ"[1].

ໄຊຊະນະເສັ້ນທາງເລກ 9 - ພາກໃຕ້ຂອງລາວ ແມ່ນຮັກສາໄດ້ "ເສັ້ນຊີວິດ" ເສັ້ນທາງຂົນສົ່ງຍຸດທະສາດສາຍພູຫຼວງ-ເສັ້ນທາງໂຮ່ຈິມິນ, ຂະຫຍາຍກວ້າງເຂດ ປົດປ່ອຍ, ສ້າງເງື່ອນໄຂເພື່ອໃຫ້ພວກເຮົາວາງກຳລັງ, ອາວຸດຍຸດໂທປະກອນເຂົ້າ ສູ່ສະໜາມຣົບ, ກະກຽມພ້ອມສູ້ຣົບບັ້ນໃຫຍ່ຍຸດທະສາດ ປີ 1972, ປົດປ່ອຍທົ່ວ ແຂວງກວາງຈິ.

ປີ 1974, ສະຖານະການການປະຕິວັດຂອງຫວຽດນາມ ແລະ ລາວ ໄດ້ປ່ຽນ ແປງຢ່າງວ່ອງໄວ. ຢູ່ໃນທ່າໄຊຊະນະ, ໃນທ່າທີ່ກ້າວຂຶ້ນ. ເພື່ອຮັບໃຊ້ສຳລັບ ແຜນການເປີດບັ້ນຣົບໃຫຍ່ ແລະລຸກຮື້ຂຶ້ນເພື່ອປົດປ່ອຍ ພາກໃຕ້ທັງໝົດ, ເອກະພາບທົ່ວປະເທດ, ການສະໜອງອຸປະກອນທີ່ຈຳເປັນ - ເຕັກນິກ, ໂດຍສະເພາະ ແມ່ນອາວຸດ, ລູກປືນ ແລະ ນ້ຳມັນເຊື້ອໄຟ ເພື່ອຮັບປະກັນໃຫ້ແກ່ກອງທັບຕໍ່ສູ້ຢູ່ ສະໜາມຣົບໃຫ້ເປັນອັນຮີບດ່ວນ; ໃນນັ້ນ, ການກໍ່ສ້າງເສັ້ນທາງທໍ່ສົ່ງນ້ຳມັນເຊື້ອໄຟ ຈາກພາກເໜືອໄປຍັງສະໜາມຣົບພາກໃຕ້ມີຄວາມໝາຍສຳຄັນຫຼາຍ. ກອງທັບ ແລະ ປະຊາຊົນແຂວງກວາງຈິ ແລະ ສະຫວັນນະເຂດມີຄວາມກະຕືລືລົ້ນໃນ ການເຂົ້າຮ່ວມຂະບວນການຕໍ່ສູ້ໃໝ່ອີກຄັ້ງ, ທັງເຮັດໜ້າທີ່ປົກປັກຮັກສາ ຄວາມ

[1] ສະຖາບັນປະຫວັດສາດກອງທັບ: ໄຊຊະນະເສັ້ນທາງເລກ 9 - ພາກໃຕ້ຂອງລາວ, ຄວາມໝາຍ ແລະ ບົດຮຽນປະຫວັດສາດ, ໂຮງພິມກອງທັບ ປະຊາຊົນ, ໜ້າ.653.

ປອດໄພເສັ້ນທາງສາຍພູຫຼວງ ແລະ ເສັ້ນທາງທໍ່ສົ່ງນໍ້າມັນ, ທັງກະຕືລືລົ້ນເຂົ້າຮ່ວມການຂົນສົ່ງສິນຄ້າ, ອາວຸດ, ລູກປືນໃຫ້ແກ່ ສະໜາມຮົບພາກໃຕ້, ລາວ ແລະ ກໍາປູເຈຍ. ເພື່ອປົກປັກຮັກສາຄວາມປອດໄພຂອງເສັ້ນທາງ ຄົມມະນາຄົມສາຍພູຫຼວງ, ກອງທັບ ແລະປະຊາຊົນແຂວງກວາງຈິ, ແຂວງສະຫວັນນະເຂດ, ບໍ່ຢ້ານກົວຕໍ່ຄວາມລໍາບາກ, ສິ່ງທ້າທາຍ, ດ້ວຍຈິດໃຈ “ດໍາລົງຊີວິດບົນຂົວ, ຍຶດໝັ້ນເສັ້ນທາງ, ຕາຍຢ່າງກ້າຫານ”, “ທັງໝົດເພື່ອ ປົດປ່ອຍບ້ານເກີດເມືອງນອນ ຫວຽດນາມ - ລາວ”, ຢືນຄຽງບ່າຄຽງໄລ່, ຄຽງຂ້າງກັນ, ເຕັມໄປດ້ວຍຄວາມຮັກແພງອ້າຍນ້ອງ, ສູ້ຊົນ ແລະ ຍາດໄດ້ໄຊຊະນະ. ໃນບັ້ນຮົບຄັ້ງນີ້ມີພະນັກງານ, ນັກຮົບ, ໄວໜຸ່ມອາສາສະໝັກ, ປະຊາຊົນຊາວແຂວງກວາງຈິ ແລະ ຊາວ ສະຫວັນນະເຂດ ວິລະຊົນຫຼາຍພັນຄົນໄດ້ເສຍສະຫຼະຊີວິດໃນເສັ້ນທາງສາຍພູຫຼວງຕະຫຼອດໄລຍະຜ່ານມາ, ເພື່ອເອກະລາດແຫ່ງຊາດຂອງ 2 ປະເທດຫວຽດນາມ - ລາວ.

ສາມາດຢັ້ງຢືນໄດ້ວ່າ, ໃນສົງຄາມຕ້ານອາເມລິກາ, ກອບກູ້ປະເທດຊາດ, ນໍ້າໃຈສາມັກຄີ, ແໜ້ນແຟ້ນ, ການສົມທົບຕໍ່ສູ້ຢ່າງຄ່ອງແຄ້ວ, ມີປະສິດທິຜົນລະຫວ່າງກວາງຈິ ແລະສະຫວັນນະເຂດໄດ້ສະແດງອອກໃນຫຼາຍດ້ານ, ຫຼາຍຂົງເຂດຄື: ການອຸປະຖໍາຄໍ້າຊູ, ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເພື່ອໃຫ້ມີທີ່ພັກອາໄສ, ກໍ່ສ້າງພື້ນຖານແນວຫຼັງເພື່ອຕ້ານການບຸກໂຈມຕີຂອງສັດຕູ; ແມ່ນການຮ່ວມກັນເປີດພູ, ເປີດທາງ, ຮັບປະກັນໃຫ້ເສັ້ນທາງ 559 ກາຍເປັນເສັ້ນທາງຄົມມະນາຄົມຍຸດທະສາດເໜືອ-ໃຕ້. ແມ່ນການຢືນຄຽງບ່າຄຽງໄຫຼ່, ຂ້າງຄຽງໃນການຕໍ່ສູ້ ແລະ ຮັບໃຊ້ບັນດາບັ້ນຮົບໃນເສັ້ນທາງເລກ 9 - ແຄແຊງ, ເສັ້ນທາງ ເລກ 9 - ພາກໃຕ້ຂອງລາວ ຈົນໄດ້ຮັບໄຊຊະນະ ... ນໍ້າໃຈສາມັກຄີ, ການຕໍ່ສູ້ກວາງຈິ - ສະຫວັນນະເຂດແມ່ນໜຶ່ງໃນບັນດາປັດໄຈສໍາຄັນ, ປະກອບສ່ວນເຂົ້າໃນການໄດ້ຮັບໄຊຊະນະ

ຂອງການປະຕິວັດຂອງສອງປະເທດຫວຽດນາມ - ລາວ, ສອງແຂວງກວາງຈິ - ສະຫວັນນະເຂດ; ແມ່ນຄວາມພາກພູມໃຈຂອງຄະນະພັກ, ອຳນາດການປົກຄອງ, ກອງທັບ ແລະປະຊາຊົນສອງແຂວງບໍ່ພຽງແຕ່ໃນອະດີດ, ໃນປັດຈຸບັນແຕ່ຍັງຕະຫຼອດໄປ.

ບັນດາໄຊຊະນະໃນສະໜາມຮົບຂອງ ສອງປະເທດ ແລະ ທິດຕາເວັນອອກ - ຕາເວັນຕົກສາຍພູຫຼວງບໍ່ພຽງແຕ່ມີ ຄວາມໝາຍປົກປັກຮັກສາຊາຍແດນທາງທິດຕາເວັນຕົກ ແຂວງກວາງຈິ - ສະຫວັນນະເຂດເທົ່ານັ້ນ ແຕ່ຍັງເປັນການປະກອບສ່ວນເຂົ້າໃນໄຊຊະນະອັນໃຫຍ່ຫຼວງໃຫ້ແກ່ສົງຄາມຕໍ່ສູ້ຕ້ານອາເມລິກາ, ກອບກູ້ປະເທດຊາດຢູ່ຫວຽດນາມກໍຄືສາຍພົວພັນສາມັກຄີ, ແໜ້ນແຟ້ນ ລະຫວ່າງສອງແຂວງມີມາແຕ່ສະໄໝບູຮານ. ດ້ວຍການຊ່ວຍເຫຼືອຂອງຫວຽດນາມ, ກຳລັງການປະຕິວັດຂອງລາວນັບມື້ນັບຂະຫຍາຍ, ແຂງແຮງເພື່ອບຸກໂຈມຕີ ແລະລຸກຮື້ຂຶ້ນ, ຍາດໄດ້ໄຊຊະນະໃນຂອບເຂດທົ່ວປະເທດ. ວັນທີ 1 ທັນວາ 1975, ປະເທດສາທາລະນະລັດປະຊາທິປະໄຕປະຊາຊົນລາວໄດ້ຮັບການສ້າງຕັ້ງຂຶ້ນ, ເປີດຍຸກສະໄໝໃໝ່ໃຫ້ແກ່ປະຊາຊົນລາວບັນດາເຜົ່າ.

## **ພາກທີ II.**

## **ຜົນງານການພົວພັນຮ່ວມມືບັນດາຂົງເຂດຕ່າງໆ ລະຫວ່າງແຂວງກວາງຈິ ແລະ ສະຫວັນນະເຂດ ແຕ່ປີ 1975 ຫາ 1989**

### **I.ກວາງຈິ ແລະ ສະຫວັນນະເຂດໄດ້ສ້າງ ແລະ ພັດທະນາການພົວພັນມິດຕະພາບ ໄລຍະ 1975-1989.**

ພາຍຫຼັງການໂຮມປະເທດເປັນເອກະພາບ, ວັນທີ 20/9/1975, ກົມການເມືອງສູນກາງພັກກອມມູນິດຫວຽດນາມ ໄດ້ອອກມະຕິເລກທີ 245-NQ/TW ໃຫ້ 3 ແຂວງກວາງບິ່ງ, ກວາງຈິ, ເທື່ອທຽນ ແລະ ເຂດວິງລິງເປັນແຂວງບິ່ງຈິທຽນ (ຫວຽດນາມ) ແລະສະຫວັນນະເຂດ (ລາວ) ໄດ້ດຳເນີນການຮ່ວມມືຮອບດ້ານໃນທຸກຂົງເຂດ, ປະກອບສ່ວນກໍ່ສ້າງ ແລະ ພັດທະນາບ້ານເກີດເມືອງນອນ.

***1. ການຮ່ວມມືດ້ານການເມືອງ, ປ້ອງກັນຄວາມສະຫງົບ-ປ້ອງກັນປະເທດ, ສ້າງເສັ້ນຊາຍແດນສັນຕິພາບ, ມິດຕະພາບ***

***- ເພີ່ມທະວີການຮ່ວມມືດ້ານການເມືອງ:***

ເພື່ອເພີ່ມທະວີການພົວພັນຮ່ວມມືດ້ານການເມືອງ, ສອງແຂວງບິ່ງຈິທຽນ ແລະສະຫວັນນະເຂດໄດ້ປະກາດໃຊ້ເອກະສານແນະນຳຫຼາຍສະບັບແລະໄດ້ສົ່ງບັນດາ

ຄະນະຜູ້ແທນຂັ້ນສູງໄປຢ້ຽມຢາມ ແລະ ເຮັດວຽກນຳກັນຢ່າງເປັນປະຈຳ. ໃນຕົ້ນປີ 1983, ຄະນະຜູ້ແທນອົງຄະນະພັກແຂວງສະຫວັນນະເຂດໄດ້ມາຊົມເຊີຍ ແລະເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ 2 ຂອງອົງຄະນະພັກແຂວງບິ່ງຈິທຽວ. ວັນທີ 21 ມີນາ 1983, ຄະນະຜູ້ແທນອົງຄະນະພັກແຂວງບິ່ງຈິທຽນ ນຳໂດຍສະຫາຍ ຫວູຖັ່ງ, ເລຂາຄະນະພັກແຂວງບິ່ງຈິທຽນ ເປັນຫົວໜ້າຄະນະໄດ້ເດີນທາງໄປຢ້ຽມຢາມແຂວງສະຫວັນນະເຂດ ແລະເຂົ້າຮ່ວມງານສະເຫຼີມສະຫຼອງ ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 28 ປີ ຈັດຕັ້ງໂດຍແຂວງສະຫວັນນະເຂດ. ກໍໃນປີ 1983, ແຂວງສະຫວັນນະເຂດ ແລະ ແຂວງບິ່ງຈິທຽນໄດ້ລົງນາມໃນສັນຍາຮ່ວມມື ໄລຍະ 1983 - 1985. ຕາມສັນຍາສະບັບນີ້, ສອງຝ່າຍເຫັນດີເປັນເອກະພາບຈະປັບປຸງແບບວິທີການຮ່ວມມື: ຄ່ອຍໆຫັນຈາກການຮ່ວມມືຊ່ວຍເຫຼືອຕາມລະດູການ, ກ້າວໄປສູ່ການຮ່ວມມືຍຸດທະສາດໄລຍະຍາວ; ປັບປຸງລາຄາສິນຄ້ານຳເຂົ້າ ແລະສິ່ງອອກຈຳນວນໜຶ່ງ; ເພີ່ມທະວີວຽກງານຊ່ຽວຊານ ແລະບຳລຸງສ້າງປະຈຳທີ່ໃຫ້ແຂວງ ສະຫວັນນະເຂດ.

ປີ 1984, ແຂວງບິ່ງຈິທຽນໄດ້ສົ່ງຄະນະຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ II ຂອງອົງຄະນະພັກແຂວງສະຫວັນນະເຂດ. ພ້ອມກັນນັ້ນ, ຄະນະປະຈຳພັກແຂວງບິ່ງຈິທຽນ ແລະຄະນະປະຈຳພັກແຂວງສະຫວັນນະເຂດໄດ້ມີການພົບປະກັນ 2 ຄັ້ງ, ໃນກອງປະຊຸມປະຈຳວັນຢູ່ແຂວງສະຫວັນນະເຂດ ( ເດືອນ02/ 1984) ແລະ ແຂວງບິ່ງຈິທຽນ (ໃນເດືອນ 10/1984) ເພື່ອຍາດແຍ່ງຕື່ມການຊີ້ນຳຂອງສະຫາຍ ໜູຮັກ, ກຳມະການກົມການເມືອງ ພັກປະຊາຊົນປະຕິວັດລາວ, ຮອງປະທານສະພາ ລັດຖະມົນຕີລາວຜູ້ທີ 1 ; ເພື່ອກຳແໜ້ນຕື່ມກ່ຽວກັບສະພາບລວມ

ຂອງກັນ ແລະປຶກສາຫາລື, ເຫັນດີເປັນເອກະພາບບັນດາບັນຫາທີ່ກ່ຽວຂ້ອງການປະສານງານ, ຊີ້ນຳລວມຂອງສອງຝ່າຍ, ເພື່ອເພີ່ມທະວີການພົວພັນແຮກສ່ຽວ ແລະ ຮ່ວມມືຊ່ວຍເຫຼືອເຊິ່ງກັນ ແລະກັນລະຫວ່າງສອງແຂວງຢ່າງບໍ່ຢຸດຢັ້ງ. ປີ 1985, ຄະນະຜູ້ແທນຂັ້ນສູງແຂວງບິ່ງຈິທຽນໄດ້ມາຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງສະຫວັນນະເຂດ, ສອງຝ່າຍໄດ້ເຊັນສັນຍາຮ່ວມມືໃນປີ 1986 ແລະ ໄລຍະ 1986-1990.

ນອກຈາກບັນດາຄະນະຜູ້ແທນຂັ້ນສູງ, ເຊິ່ງຕຳຫຼວດ ແລະທະຫານສອງແຂວງບິ່ງຈິທຽນ (ໃນນັ້ນມີຜູ້ຕາງໜ້າຂອງ ຕຳຫຼວດເມືອງເຮືອງຮວາ) ແລະສະຫວັນນະເຂດໄດ້ພົບປະ ແລະແລກປ່ຽນບົດຮຽນກ່ຽວກັບດ້ານວິຊາສະເພາະໃຫ້ກັນເປັນຫຼາຍຄັ້ງ ພ້ອມກັນປະສານສົມທົບ, ແກ້ໄຂບັນຫາທີ່ກ່ຽວຂ້ອງ ໃນວຽກງານຄວາມປອດໄພດ້ານການເມືອງຂອງສອງແຂວງເປັນຢ່າງດີ. ສອງແຂວງໄດ້ເປີດກວ້າງ ການພົວພັນລະຫວ່າງບັນດາອົງການຈັດຕັ້ງມະຫາຊົນຄື: ແມ່ຍິງ, ຊາວໜຸ່ມ... ຄະນະຜູ້ແທນຄະນະຊາວໜຸ່ມກອມມູນິດໂຮ່ຈີມິນແຂວງບິ່ງຈິທຽນ ໄດ້ໄປເຂົ້າຮ່ວມກອງປະຊຸມສະຫຼຸບຂະບວນການ “3 ສາມັກຄີ, 4 ວິລະກຳ” ຂອງລາວ ໂດຍແຂວງສະຫວັນນະເຂດເປັນເຈົ້າພາບ.

ການຮ່ວມມືດ້ານການເມືອງໃນຊຸມປີຕົ້ນພາຍຫຼັງການປົດປ່ອຍແມ່ນເນື້ອໃນໜຶ່ງທີ່ໃໝ່, ແຕ່ວ່າແຂວງ ບິ່ງຈິທຽນ ແລະ ສະຫວັນນະເຂດ ໄດ້ສົມທົບກັນເປັນຢ່າງດີ, ພາໃຫ້ມີຫຼາຍໝາກຜົນທີ່ດີງາມ, ປະສົບຜົນສຳເລັດໃນການຮ່ວມມືດ້ານການເມືອງ ສ້າງເງື່ອນໄຂຊຸກຍູ້ການຮ່ວມມືໃນຂົງເຂດອື່ນໆ.

- ເພີ່ມທະວີການຮ່ວມມືດ້ານປ້ອງກັນຄວາມສະຫງົບ-ປ້ອງກັນຊາດ:

ພາຍຫຼັງປີ 1975 ແຂວງສະຫວັນນະເຂດ ຍັງເປັນຈຸດຮ້ອນຈຸດໜຶ່ງກ່ຽວກັບສະພາບການເມືອງ ແລະ ການປ້ອງກັນຄວາມສະຫງົບຂອງປະເທດລາວ. ບັນດາພາກສ່ວນປະຕິການທີ່ໄປຕາມວັງປ່າວໃນເມື່ອກ່ອນ ໄດ້ກັບຄືນເພື່ອດຳເນີນການມ້າງເພລັດຖະບານແບບລັກລອບ. ປີ 1981, ກອງບັນຊາການທະຫານເຂດ IV ຂອງຫວຽດນາມ ໄດ້ຈັດສົ່ງກຳລັງນັກສືບສອດແນມເພີ່ມເຕີມ ໃຫ້ກອງບັນຊາການ 968 ສົມທົບກັບກຳລັງປະກອບອາວຸດແຂວງສະຫວັນນະເຂດ ສືບຕໍ່ເປີດບັ້ນຂັບໄລ່ບັນດາພວກໂຈນທີ່ກຳລັງເຄື່ອນໄຫວບົນບໍລິເວນ ແຂວງສະຫວັນນະເຂດ, “ບັ້ນຂັບໄລ່ໄດ້ດັບສູນ ທ້າວຕ້າ ເປັນລູກເຂີຍຂອງຄຳສິງ ເຊິ່ງເປັນ ສາຍລັບຜູ້ທີ່ສຳຄັນ - ພັນຕີ ກຳລັງຜັດຖິ່ນລາວຢູ່ໄທ ພ້ອມດ້ວຍກຳລັງສັດຕູທັງໝົດຢູ່ທີ່ນີ້”[7].

ແຕ່ປີ 1986 ຫາ 1989, ພວກໂຈນສືບຕໍ່ເຄື່ອນໄຫວລຽບຕາມຊາຍແດນບັນດາ ແຂວງສະຫວັນນະເຂດ ແລະ ແຂວງບິ່ງຈິທຽນ, ໃນນັ້ນມີພວກປະຕິການຜັດຖິ່ນຄົນຫວຽດນາມ ນຳໜ້າໂດຍ ທ.ຮວ່າງເກີມິນ. ພວກມັນໄດ້ຈັດຕັ້ງ 3 ໝູ່ຊີ່ງ ນັບຮ້ອຍຄົນໄດ້ໄປຈາກປະເທດໄທໄປຫາລາວ ເພື່ອແຊກຊຶມເຂົ້າຫວຽດນາມເຄື່ອນໄຫວ. ພາຍຫຼັງການສືບສວນ-ສອບສວນເປັນເວລາໜຶ່ງ, ຕິດຕາມກຳລັງປະກອບອາວຸດບິ່ງຈິທຽນ ປະສານສົມທົບກັບກຳລັງປະກອບອາວຸດເມືອງເຊໂປນ (ສະຫວັນນະເຂດ) ແລະຕະໂອ້ຍ (ສາລະວັນ) ເພື່ອປິດລ້ອມ ແລະທຳລາຍພວກປະຕິການນີ້.

ຄຽງຄູ່ກັບການດັບສູນບັນດາກຳລັງປະຕິການ, ແຂວງສະຫວັນນະເຂດໄດ້ຊ່ວຍເຫຼືອ, ແລກປ່ຽນ ແລະສ້າງເງື່ອນໄຂສະດວກໃຫ້ແຂວງບິ່ງຈິທຽນໃນການຊອກ

---

[7] ກອງບັນຊາການທະຫານຊາຍແດນແຂວງກວາງຈິ (1999), ປະຫວັດຂອງກອງບັນຊາການທະຫານຊາຍແດນແຂວງ (1959-1999), ໜັງສືພິມ ກອງທັບປະຊາຊົນ, ໜ້າ 304.

ຄົ້ນ ແລະເຕົ້າໂຮມອັດຖິກະດູກຂອງທະຫານອາສາສະໝັກຫວຽດນາມທີ່ເສຍສະຫຼະຊີວິດຢູ່ລາວ. ກອງບັນຊາການທະຫານແຂວງບິ່ງຈິທຽນໄດ້ສົມທົບກັບກອງບັນຊາການທະຫານເຂດ IV ເປີດບັນດາຊຸດອົບຮົມ, ບຳລຸງສ້າງພະນັກງານ ແລະແລກປ່ຽນປະສົບການໃຫ້ກຳລັງປະກອບອາວຸດແຂວງສະຫວັນນະເຂດ. ສອງແຂວງໄດ້ສົມທົບກັນຢ່າງແໜ້ນແຟ້ນໃນການປ້ອງກັນການຄ້າເຖື່ອນ, ສິນຄ້າຕ້ອງຫ້າມ, ສະກັດກັ້ນການຂ້າມຊາຍແດນທີ່ຜິດກົດໝາຍ ແລະ ການອົບພະຍົບແບບເສລີ.

- *ການຮ່ວມມືສ້າງເສັ້ນຊາຍແດນສັນຕິພາບ, ມິດຕະພາບ:*

ວັນທີ 18 ກໍລະກົດ 1977, ໄດ້ລົງນາມສົນທິສັນຍາ ວາງກຳນົດຊາຍແດນລະຫວ່າງສອງປະເທດຫວຽດນາມ - ລາວ. ຜັນຂະຫຍາຍປະຕິບັດບັນດາຂໍ້ກຳນົດຂອງສົນທິສັນຍາ, ສອງແຂວງບິ່ງຈິທຽນ ແລະສະຫວັນນະເຂດ ໄດ້ເລັ່ງລັດການປັກຫຼັກໝາຍ. ເສັ້ນຊາຍແດນແຂວງບິ່ງຈິທຽນ ແລະ ແຂວງສະຫວັນນະເຂດ ໄດ້ສູນກາງເລືອກເປັນບ່ອນທົດລອງການແບ່ງເຂດປັກຫຼັກໝາຍ ເພື່ອຖອດຖອນບົດຮຽນໃຫ້ແກ່ເສັ້ນທາງທັງໝົດ. ວັນທີ 27 ກໍລະກົດ 1978, ຄະນະກຳມະການຊາຍແດນຂອງສອງປະເທດໄດ້ຕົກລົງເລືອກເອົາຕອນ 24 ກິໂລແມັດຊາຍແດນທິດໃຕ້ ແລະທິດເໜືອຂົວສະເອີດຕາມເສັ້ນທາງ ເລກ 9 (ລາວບາວ) ເພື່ອເລີ່ມດຳເນີນປັກຫຼັກໝາຍ. ພາຍຫຼັງເກືອບ 1 ປີ ທີ່ໄດ້ຜັນຂະຫຍາຍ, ຮອດເດືອນ 4/1979, ການແບ່ງເຂດປັກຫຼັກໝາຍຊາຍແດນຢູ່ແຂວງສະຫວັນນະເຂດ ແລະບິ່ງຈິທຽນ ໄດ້ສຳເລັດດ້ວຍຈຳນວນ 33 ຫຼັກໝາຍຊາຍແດນໄດ້ສ້າງຕັ້ງຂຶ້ນ. ໃນນັ້ນ, ພຽງແຕ່ເຂດຊາຍແດນຕິດກັບແຂວງກວາງຈິໄດ້ປັກ 26 ຫຼັກໝາຍ. ພາຍຫຼັງການແບ່ງເຂດປັກຫຼັກໝາຍແຂວງບິ່ງຈິທຽນ ແລະ ແຂວງສະຫວັນນະເຂດໄດ້ສົມທົບກັນປະຕິບັດການ

ມອບຮັບພື້ນທີ່ເປັນຢ່າງດີ, ມອບຮັບເນື້ອທີ່ 2.853 ກມ2 ແລະ2.131 ຄອບຄົວ, ມີ 10.374 ຄົນ ຂຶ້ນກັບ 20 ຕາແສງ ຂອງເມືອງເຮືອງຮວາແຕ່ກ່ອນໃຫ້ແຂວງສະຫວັນນະເຂດ. ສໍາເລັດການແບ່ງເຂດປັກຫຼັກໝາຍ, ມອບຮັບທີ່ດິນ ແລະພົນລະເມືອງຂອງສອງແຂວງ ໄດ້ປະກອບສ່ວນກໍ່ສ້າງເສັ້ນຊາຍແດນມິດຕະພາບອັນຍາວນານ, ຮັບປະກັນຄວາມສາມັກຄີ, ມິດຕະພາບລະຫວ່າງສອງປະເທດ.

***2. ການຮ່ວມມືທາງດ້ານເສດຖະກິດ***

*- ການຮ່ວມມືໃທາງດ້ານກະສິກໍາ ແລະ ປ່າໄມ້:*

ໃນຊຸມປີ 1976 – 1989, ແຂວງບິ່ງຈິທຽນ ໄດ້ສົ່ງນັກຊ່ຽວຊານຈໍານວນໜຶ່ງໄປຊ່ວຍເຫຼືອຂະແໜງກະສິກໍາຂອງແຂວງສະຫວັນນະເຂດ. ບັນດາຜູ້ຊ່ຽວຊານໄດ້ດໍາເນີນການວາງຜັງດິນນາຄືນໃໝ່, ບຸກເບີກດິນຮ້າງ ຊ່າວນາເຮື້ອ ແລະຟື້ນຟູບັນດາເນື້ອທີ່ຖືກປະຖິ້ມໃນໄລຍະສົງຄາມ; ຄົ້ນຄວ້າຟື້ນຟູບັນດາແນວພັນພືດທີ່ປັບຕົວເຂົ້າກັບສະພາບການເຕີບໂຕຂອງບັນດາ ທ້ອງຖິ່ນຂອງລາວ, ພ້ອມດຽວກັນນັ້ນກໍນໍາເອົາບາງ ແນວພັນທີ່ໃຫ້ສະມັດຕະພາບສູງຂອງແຂວງບິ່ງຈິທຽນໄປປູກຝັງທົດລອງ. ເພື່ອແກ້ໄຂບັນຫາພະຍາດລະບາດແລະຂາດເບ້ຍ, ປີ 1978, ແຂວງບິ່ງຈິທຽວໄດ້ຊ່ວຍເຫຼືອແກ່ຊາວສະຫວັນນະເຂດ ເຂົ້າເປືອກ 210 ໂຕນ, ມັນຕົ້ນແຫ້ງ 16 ໂຕນ, ແນວເຂົ້າ 50 ໂຕນ, ຖົ່ວດິນ 4 ໂຕນ. ແຕ່ປີ 1981 ຫາ 1985, ບັນດານັກຊ່ຽວຊານ ກະສິກໍາແຂວງບິ່ງຈິທຽວໄດ້ໄປຊີ້ນໍາ ແລະຊ່ວຍເຫຼືອການຜະລິດເຂົ້າຢູ່ສະຫະກອນນາແກ (ເມືອງຄັນທະບູລີ – ແຂວງສະຫວັນ ນະເຂດ). ພາຍຫຼັງ 2 ປີທີ່ໄດ້ທົດລອງ, ສະມັດຕະພາບເຂົ້າຂອງນາແກໄດ້ເພີ່ມຂຶ້ນເປັນ 3-4 ໂຕນ/ລະດູການ.

ນອກຈາກບັນດານັກຊ່ຽວຊານດ້ານກະສິກຳແລ້ວ, ແຂວງບິ່ງຈິທຽນຍັງໄດ້ສົ່ງພະນັກງານເຕັກນິກ 20 ຄົນໄປແນະນຳ ເຕັກນິກໃນບັນດາສະຖານີສັດຕະວະແພດ. ຊ່ວຍເຫຼືອງົບປະມານການໃຊ້ຈ່າຍ, ວັດຖຸອຸປະກອນເຕັກນິກ ແລະສົ່ງຊ່ຽວຊານໄປດັດແປງ, ຍົກລະດັບ ແລະກໍ່ສ້າງລະບົບຊົນລະປະທານຈຳນວນໜຶ່ງ, ດຳເນີນການສຳຫຼວດ, ອອກແບບອ່າງເກັບນ້ຳຫ້ວຍບັກ (ເມືອງຈຳພອນ) ແລະອ່າງເກັບນ້ຳຫ້ວຍສະຄວງ.

ແຕ່ປີ 1986 – 1989, ຫວຽດນາມ ໄດ້ດຳເນີນການປ່ຽນໃໝ່ປະເທດຊາດຢ່າງຮອບດ້ານ, ການຮ່ວມມືດ້ານກະສິກຳລະຫວ່າງ 2 ແຂວງ ສະຫວັນນະເຂດ ແລະບິ່ງຈິທຽນ ເລີ່ມມຸ່ງໄປເຖິງຈຸດໝາຍພັດທະນາກະສິກຳແບບຍືນຍົງ ສົມທົບກັບການກໍ່ສ້າງຊົນນະບົດໃໝ່. ສອງຝ່າຍໄດ້ຜັນຂະຫຍາຍບາງລາຍການ ແລະໂຄງການຈຳນວນໜຶ່ງຕາມຮູບແບບຮ່ວມທຸລະກິດແລະ ຮ່ວມກຸ່ມບົນພື້ນຖານຄວາມສະເໝີພາບ ແລະມີຜົນປະໂຫຍດຮ່ວມກັນ. ບັນດາໂຄງການທົດລອງການພັດທະນາກະສິກຳແບບຍືນຍົງຢູ່ເມືອງພີນ (ສະຫວັນນະເຂດ) ໄດ້ຮັບຜົນສຳເລັດໃນເບື້ອງຕົ້ນ. ພາຍໃຕ້ການແນະນຳຂອງນັກຊ່ຽວຊານກະສິກຳແຂວງບິ່ງຈິທຽນ, ຊາວກະສິກອນເມືອງພີນ - ແຂວງສະຫວັນນະເຂດ ໄດ້ກໍ່ສ້າງຊົນນະບົດໃໝ່ຕາມຮູບແບບໄຟຟ້າ - ເສັ້ນທາງ - ໂຮງຮຽນ - ສຸກສາລາ.

ພ້ອມກັບກະສິກຳ, ປ່າໄມ້ກໍ່ແມ່ນທ່າແຮງໃນການຮ່ວມມືລະຫວ່າງສອງແຂວງ. ສະຫວັນນະເຂດເປັນແຂວງໜຶ່ງທີ່ ອຸດົມໄປດ້ວຍຊັບພະຍາກອນປ່າໄມ້. ແຂວງບິ່ງຈິທຽນອຸດົມໄປດ້ວຍມີແຫຼ່ງຊັບພະຍາກອນມະນຸດ, ມີປະສົບການໃນການຂຸດຄົ້ນ ແລະປຸງແຕ່ງເຄື່ອງປ່າຂອງດົງ, ໂຄງລ່າງຄົມມະນາຄົມພັດທະນາຢ່າງພໍສົມ

ຄວນ. ສະນັ້ນ, ສອງຝ່າຍໄດ້ຊຸກຍູ້ການຮ່ວມມືດ້ານການຂຸດຄົ້ນ ແລະປຸງແຕ່ງເຄື່ອງປ່າຂອງດົງ ແລະການຂົນສົ່ງໄມ້ເພື່ອສົ່ງອອກ. ແຂວງບິ່ງຈິທຽນໄດ້ສະເໜີລົງທຶນຍົກລະດັບທາງຫຼວງແຫ່ງຊາດ ເລກ 9, ເສັ້ນທາງເລກ 23 ເພື່ອຮັບໃຊ້ໂຄງການຂຸດຄົ້ນ ແລະຂົນສົ່ງໄມ້ເພື່ອສົ່ງອອກ. ປີ 1985, ແຂວງບິ່ງຈິທຽນໄດ້ຂົນສົ່ງ 1.603 ຕາແມັດ ໄມ້ໄປຍີ່ປຸ່ນ. ແຕ່ປີ 1986 – 1989, ແຂວງບິ່ງຈິທຽນໄດ້ສົ່ງນັກຊ່ຽວຊານເຕັກນິກຫຼາຍຄົນໄປສຳຫຼວດການວາງແຜນປ່າໄມ້ໃຫ້ແຂວງສະຫວັນນະເຂດ. ໃນຂະນະດຽວກັນນີ້, ຮູບແບບຮ່ວມກຸ່ມປູກປ່າໄດ້ ສອງແຂວງຈັດຕັ້ງປະຕິບັດ.

*- ການຮ່ວມມືໃນທາງດ້ານອຸດສາຫະກຳ, ການກໍ່ສ້າງ, ຄົມມະນາຄົມ-ຂົນສົ່ງ*

ແຂວງບິ່ງຈິທຽນໄດ້ສຸມໃສ່ຊ່ວຍເຫຼືອ ແຂວງສະຫວັນນະເຂດແບບຮີບດ່ວນໃນການຟື້ນຟູບັນດາໂຮງງານຫັດຖະກຳທີ່ຖືກທຳລາຍຍ້ອນສົງຄາມ; ກໍ່ສ້າງໂຮງຈັກໂຮງງານຈຳນວນໜຶ່ງ, ໂດຍສະເພາະແມ່ນບັນດາໂຮງຈັກໂຮງງານທີ່ຜະລິດວັດສະດຸກໍ່ສ້າງ ແລະ ສ້ອມແປງກົນຈັກ; ອົບຮົມ ແລະບຳລຸງວິຊາຊີບ ແລະວິຊາສະເພາະ ໃຫ້ພະນັກງານ ແລະກຳມະກອນເຕັກນິກ. ແຂວງບິ່ງຈິທຽນ ໄດ້ສົມທົບການລົງທຶນກໍ່ສ້າງບາງໜ້າວຽກກິດຈະການ ດ້ວຍຍອດຈຳນວນການລົງທຶນທີ່ຫຼາຍພໍສົມຄວນຄື: ໂຮງໝໍເຊໂປນ, ສຸກສາລາເມືອງນອງ, ໂຮງຮຽນມັດທະຍົມຕອນຕົ້ນເຊໂປນ, ເຮືອນພັກເມືອງພີນ....ໃນນັ້ນ, ໂຮງໝໍເມືອງເຊໂປນ ມີຂະໜາດ 100 ຕຽງ, ເລີ່ມກໍ່ສ້າງແຕ່ປີ 1979 ແລະສຳເລັດໃນປີ 1980 ງົບປະມານການກໍ່ສ້າງແມ່ນແຂວງບິ່ງຈິທຽນ ໄດ້ສະໜັບສະໜູນໃຫ້.

ໃນຂົງເຂດການກໍ່ສ້າງພື້ນຖານ, ຂະແໜງຄົມມະນາຄົມແຂວງບິ່ງຈີທຽນ ໄດ້ລົງທຶນເຂົ້າເພື່ອສ້ອມແປງ ແລະຍົກລະດັບທາງຫຼວງແຫ່ງຊາດເລກ 9 ແລະ ເສັ້ນທາງເລກ 23 ທັງເບື້ອງລາວ ແລະຫວຽດນາມ. ນີ້ແມ່ນເສັ້ນທາງສັນຈອນທີ່ສຳຄັນທີ່ເຊື່ອມຕໍ່ແຂວງສະຫວັນນະເຂດ ກັບແຂວງບິ່ງຈີທຽນ. ລະບົບຂົວ ແລະຮ່ອງລະບາຍນໍ້າບົນທາງຫຼວງເລກ 9 ໄດ້ຮັບການຍົກລະດັບ ແລະສ້ອມແປງເພື່ອຮັບປະກັນການສັນຈອນໃຫ້ພາຫະນະຂະໜາດໃຫຍ່. ດ້ວຍການໜູນຊ່ວຍທາງດ້ານອຸປະກອນ, ເຕັກນິກ ແລະນັກຊ່ຽວຊານມາຈາກແຂວງບິ່ງຈີທຽນ, ແຂວງສະຫວັນນະເຂດ ໄດ້ຍົກລະດັບເສັ້ນທາງຈາກເຊທ່າມອກຫານາເຕົ້ ດ້ວຍລວງຍາວ 80 ກິໂລແມັດ.

*- ການຮ່ວມມືດ້ານການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ:*

ພາຍຫຼັງປີ 1975, ເພື່ອຕອບສະໜອງຄວາມຕ້ອງການການຜະລິດ ແລະຊີວິດການເປັນຢູ່ຂອງປະຊາຊົນແຂວງສະຫວັນນະເຂດ, ແຂວງບິ່ງຈີທຽນ ໄດ້ຊຸກຍູ້ການສົ່ງອອກສິນຄ້າທີ່ຈຳເປັນຄື: ຜ້າແພ, ເສັ້ນ, ເຄື່ອງໃຊ້ໃນຄອບຄົວ, ເຈ້ຍ ແລະປາກກາໃຫ້ນັກຮຽນ, ຢາງລົດຖີບ, ຕະປູທຸກຊະນິດ, ຜ້າຫົ່ມ, ເຫຼົ້າເຂົ້າໃຫມ່. ແຂວງສະຫວັນນະເຂດ ເພີ່ມທະວີການສົ່ງອອກໄປແຂວງບິ່ງຈີທຽນ ບັນດາສິນຄ້າກະສິກຳ ແລະປ່າໄມ້ ທີ່ປະຊາຊົນໄດ້ຂຸດຄົ້ນ ແລະບາງວັດຖຸດິບ ແລະວັດຖຸເສດເຫຼືອຂອງສົງຄາມຈຳນວນໜຶ່ງເຊັ່ນ: ທອງແດງ ແລະອາລູມີນຽມ.

ແຕ່ປີ 1985, ຂະແໜງການຄ້າຕ່າງປະເທດຂອງແຂວງບິ່ງຈີທຽນ ໄດ້ເລີ່ມປະຕິບັດການຊື້-ຂາຍ, ຂາຍຊ່ວຍບັນດາສິນຄ້າຈາກແຂວງສະຫວັນນະເຂດໃຫ້ຄູ່ຮ່ວມມືທີ 3. ດ້ວຍວິທີນີ້, ແຂວງບິ່ງຈີທຽນໄດ້ສ້າງເງື່ອນໄຂສະດວກໃຫ້ແຂວງ

ສະຫວັນນະເຂດເປີດກວ້າງການພົວພັນດ້ານການຄ້າກັບຫຼາຍແຂວງ, ນະຄອນຂອງຫວຽດນາມ ແລະບັນດາປະເທດໃນໂລກ. ໃນການຮ່ວມມືດ້ານການຄ້າ, ຄຽງຄ້າງກັບການເຄື່ອນໄຫວຂອງລັດວິສາຫະກິດ, ໄດ້ເລີ່ມມີການເຂົ້າຮ່ວມຂອງວິສາຫະກິດພາກເອກະຊົນ. ວົງເງິນການນຳເຂົ້າ-ສົ່ງອອກຂອງສອງແຂວງສະຫວັນນະເຂດ ແລະບິ່ງຈິທຽນແຕ່ປີ 1986 ຫາ 1989 ບັນລຸສະເລ່ຍ 100 ລ້ານດົ່ງ/ປີ.

***3. ການຮ່ວມມືດ້ານວັດທະນະທຳ, ການສຶກສາ-ບຳລຸງສ້າງ, ສາທາລະນະສຸກ***

*- ດ້ານວັດທະນະທຳ:*

ຂະແໜງວັດທະນະທຳບິ່ງຈິທຽນໄດ້ຊ່ວຍເຫຼືອແຂວງສະຫວັນນະເຂດຟື້ນຟູ ແລະພັດທະນາລະບົບວິທະຍຸ. ປີ 1983, ບິ່ງຈິທຽນໄດ້ສົ່ງພະນັກງານເຕັກນິກໄປຊ່ວຍສ້ອມແປງ ແລະຍົກລະດັບສະຖານີວິທະຍຸເມືອງພີນ, ກໍ່ສ້າງເຮືອນຕັ້ງຈັກສະຖານີວິທະຍຸເມືອງພີນ. ນອກຈາກນັ້ນ, ຂະແໜງວັດທະນະທຳ-ຂໍ້ມູນ ຂ່າວສານບິ່ງຈິທຽນໄດ້ເອົາໃຈໃສ່ ແລະຊ່ວຍເຫຼືອແຂວງ ສະຫວັນນະເຂດກໍ່ສ້າງ ແລະພັດທະນາຂະແໜງຮູບເງົາ. ໃນບັນດາງານບຸນໃຫຍ່ຂອງສອງຊົນຊາດ, ຂະແໜງວັດທະນະທຳ ແລະກິລາແຂວງບິ່ງຈິທຽນໄດ້ສົ່ງຄະນະສະແດງສິລະປະ, ທີມບານເຕະ ແລະບານສົ່ງໄປສະແດງ ແລະແຂ່ງຂັນຢູ່ແຂວງສະຫວັນນະເຂດ. ໃນປີ 1986, ຄະນະສະແດງສິລະປະລະດູບານໃໝ່ໄດ້ໄປຢ້ຽມຢາມ ແລະສະແດງສິລະປະຢູ່ສະຫວັນນະເຂດ, ບັນດາເມືອງຈຳພອນ, ອຸທຸມພອນ, ອາດສະພັງທອງ, ເຊທ່າມວກ, ເມືອງພີນ, ແລະເມືອງເຊໂປນ ຂອງແຂວງສະຫວັນນະເຂດ. ແຂວງບິ່ງຈິທຽນກໍໄດ້ສ້າງເງື່ອນໄຂໃຫ້

ບັນດາຄະນະສະແດງສິລະປະ, ທີມບານເຕະ, ບານສົ່ງ ແລະຕີປີ່ງປ່ອງຂອງແຂວງສະຫວັນນະເຂດ ໄດ້ມາພົບປະແລກປ່ຽນ, ສະແດງ ແລະຝຶກອົບຮົມຢູ່ບີ່ງຈິທຽນ.

*- ດ້ານການສຶກສາ - ບໍາລຸງສ້າງ:*

ແຕ່ປີ 1977-1985, ບີ່ງຈິທຽນໄດ້ໃຊ້ສ່ວນໜຶ່ງຂອງງົບປະມານຊ່ວຍເຫຼືອເພື່ອກໍ່ສ້າງໂຮງຮຽນຈໍານວນໜຶ່ງໃຫ້ແຂວງສະຫວັນນະເຂດ. ດ້ວຍງົບປະມານການຊ່ວຍເຫຼືອຂອງແຂວງບີ່ງຈິທຽນ, ແຂວງສະຫວັນນະເຂດໄດ້ສ້າງໂຮງຮຽນມັດທະຍົມຕອນຕົ້ນເຊໂປນ (ເມືອງເຊໂປນ) ແລະໂຮງຮຽນອະນຸບານຈໍານວນໜຶ່ງ. ຂະແໜງການສຶກສາແຂວງບີ່ງຈິທຽນໄດ້ມອບອຸປະກອນການສອນ ແລະເຄື່ອງຫຼິ້ນໃຫ້ໂຮງຮຽນອະນຸບານຈໍານວນໜຶ່ງໃຫ້ແຂວງສະຫວັນນະເຂດ. ຂະແໜງການສຶກສາແຂວງບີ່ງຈິທຽນ ຍັງໄດ້ສົ່ງນັກຊ່ຽວຊານໄປຊ່ວຍແຂວງສະຫວັນນະເຂດສ້າງລາຍການວິຊາການຮຽນ, ຊັ້ນຮຽນ ແລະບໍາລຸງປະຈໍາທີ່ໃຫ້ຄູອາຈານທຸກຊັ້ນຮຽນ. ເພື່ອແກ້ໄຂສະພາບຂາດເຂີນຄູສອນ, ໃນປີ 1980 ບັນດາພື້ນຖານການສຶກສາບີ່ງຈິທຽນໄດ້ຝຶກອົບຮົມໃຫ້ແຂວງສະຫວັນນະເຂດຄູສອນຊັ້ນມັດທະຍົມຕອນປາຍ 11 ຄົນ, ອາຈານສອນຊັ້ນກາງການຄ້າ 5 ຄົນ, ພະຍາບານຂັ້ນກາງ 10 ຄົນ ແລະນັກຮຽນມັດທະຍົມຕອນປາຍໄດ້ເຂົ້າຮຽນມະຫາວິທະຍາໄລ 10 ຄົນ. ແຂວງບີ່ງຈິທຽນ ກໍສຸມໃສ່ຝຶກອົບຮົມວິຊາຊີບໃຫ້ພະນັກງານ, ກໍາມະກອນຂອງແຂວງສະຫວັນນະເຂດ. ແຕ່ປີ 1977 ຫາ 1989 ມີພະນັກງານ-ກໍາມະກອນ ຈໍານວນ 309 ຄົນ ໃນທຸກຂະແໜງຂອງແຂວງສະຫວັນນະເຂດ ທີ່ໄດ້ຮຽນຈົບວິຊາຊີບ, ວິຊາສະເພາະ ແລະກັບເມືອເຮັດວຽກ ຢູ່ທ້ອງຖິ່ນ.

*- ດ້ານສາທາລະນະສຸກ*

ແຂວງບິ່ງຈີທຽງນໄດ້ນໍາໃຊ້ງົບປະມານທ້ອງຖິ່ນເພື່ອຊ່ວຍເຫຼືອແຂວງສະຫວັນນະເຂດສ້າງໂຮງໝໍ ເຊໂປນ ແລະສຸກສາລາເມືອງນອງ. ຂະແໜງສາທາລະນະສຸກບິ່ງຈີທຽນກໍໄດ້ຊ່ວຍບັນດາໂຮງໝໍຂອງແຂວງສະຫວັນນະເຂດຈັດຊື້ອຸປະກອນການແພດ, ຢາປິ່ນປົວ ແລະປ້ອງກັນພະຍາດໄຂ້ຍຸງ. ສົ່ງນັກຊ່ຽວຊານໄປບໍາລຸງວິຊາສະເພາະໃຫ້ຖັນແຖວແພດໝໍແຂວງສະຫວັນນະເຂດ; ຜັນຂະຫຍາຍ ບັນດາລາຍການປ້ອງກັນ ແລະສະກັດກັ້ນການລະບາດ; ສໍາຫຼວດ ແລະແນະນໍາວິທີການຂຸດຄົ້ນຢາສະໝຸນໄພຢູ່ບາງທ້ອງຖິ່ນ. ແຕ່ປີ 1983 ຫາ 1985, ແຂວງບິ່ງຈີທຽນໄດ້ສົ່ງແພດໝໍທີ່ມີປະສົບການໄປເຮັດວຽກຢູ່ ໂຮງໝໍມິດຕະພາບ ສະຫວັນນະເຂດ - ບິ່ງຈີທຽນເປັນປະຈໍາ. ເດືອນ 6 ປີ 1987, ບັນດາຊ່ຽວຊານການແພດ ແຂວງບິ່ງຈີທຽນໄດ້ສົມທົບຊ່ວຍພະນັກງານວິຊາສະເພາະແຂວງສະຫວັນນະເຂດ ເພື່ອສະກັດກັ້ນການລະບາດຂອງພະຍາດໄຂ້ເລືອດອອກຢູ່ ເມືອງຄັນທະບູລີຢ່າງທັນການ. ແຕ່ປີ 1988 ຫາ 1989, ຂະແໜງສາທາລະນະສຸກແຂວງບິ່ງຈີທຽນ ໄດ້ສົມທົບກັບແຂວງສະຫວັນນະເຂດຜັນຂະຫຍາຍບັນດາລາຍການປ້ອງກັນ ແລະຄວບຄຸມພະຍາດໄຂ້ຍຸງ. ພາຍຫຼັງ 2 ປີປະຕິບັດ, ບັນດາໂຄງການຮ່ວມມືບັນລຸໄດ້ໝາກຜົນດີ, ຈໍາກັດຄວາມເປັນໄປໄດ້ຂອງການແຜ່ລະບາດຂອງບັນດາພະຍາດຢູ່ແຂວງສະຫວັນນະເຂດ.

*- ສົມທົບໃນວຽກງານຊອກຫາ ແລະທ້ອນໂຮມອັດຖິຂອງທະຫານອາສາສະໝັກ ແລະຊ່ຽວຊານຫວຽດນາມ ທີ່ເສຍສະຫຼະຊີວິດຢູ່ລາວ:*

ໂຮມປະເທດເປັນເອກະພາບ, ພັກ ແລະລັດຖະບານຫວຽດນາມມີນະໂຍບາຍຊອກຫາ ແລະທ້ອນໂຮມອັດຖິຂອງທະຫານອາສາສະໝັກຫວຽດນາມ ທີ່ເສຍສະຫຼະຊີວິດຢູ່ລາວໃນສົງຄາມຕໍ່ຕ້ານຝຣັ່ງ ແລະອາເມລິກາ. ວັນທີ 2 ສິງຫາ

1984, ຄະນະກຳມະການປະຊາຊົນແຂວງບິ່ງຈິທຽນໄດ້ອອກຂໍ້ຕົກລົງເລກທີ 397 - UB/VX ວ່າດ້ວຍການຈັດຕັ້ງກອງທ້ອນໂຮມອັດຖິນັກຮົບຜູ້ອາສາສະໝັກຫວຽດນາມທີ່ເສຍສະຫຼະຊີວິດ ຢູ່ແຂວງສະຫວັນນະເຂດ. ເມື່ອກອງທ້ອນໂຮມເລີ່ມຜັນຂະຫຍາຍລົງຊອກຫາຢູ່ລາວ, ບັນດາເຈົ້າໜ້າທີ່ ແລະປະຊາຊົນແຂວງສະຫວັນນະເຂດ ໄດ້ສົມທົບກັນຢ່າງຕັ້ງໜ້າ, ຊ່ວຍເຫຼືອ, ພາທາງ ແລະສະໜອງສະບຽງອາຫານ, ກໍຄືທີ່ພັກໃຫ້ກອງທ້ອນໂຮມປະຕິບັດໜ້າທີ່. ດ້ວຍເຫດນັ້ນ, ແຕ່ປີ 1984 ຫາ 1989, ດ້ວຍການສົມທົບ ແລະຊ່ວຍເຫຼືອຂອງເພື່ອນບ້ານລາວ ກອງທ້ອນໂຮມບິ່ງຈິທຽນ ຈຶ່ງໄດ້ຄົ້ນພົບ ແລະທ້ອນໂຮມໄດ້2.366 ອັດຖິຂອງທະຫານອາສາສະໝັກຫວຽດນາມ ທີ່ເສຍສະຫຼະຊີວິດຢູ່ລາວ

### *4. ສະໜັບສະໜູນຟື້ນຟູຜົນເສຍຫາຍຈາກໄພທຳມະຊາດ*

ດ້ວຍຄວາມຮັກແພງອັນເລິກເຊິ່ງ, ໃນທຸກໆຄັ້ງທີ່ແຂວງສະຫວັນນະເຂດປະສົບກັບຄວາມຫຍຸ້ງຍາກ ຫຼືໄພທຳມະຊາດ, ພະຍຸນ້ຳຖ້ວມ, ພ້ອມກັບສົ່ງຄະນະຜູ້ແທນໄປຢ້ຽມຢາມ ແລະລະດົມ, ແຂວງບິ່ງຈິທຽນ ກໍຍັງໄດ້ຊ່ວຍເຫຼືອກ່ຽວກັບບັນດາອຸປະກອນ, ສິນຄ້າ, ຢາປົວພະຍາດ, ແນວພັນພືດຢ່າງທັນການ ປະກອບສ່ວນເພື່ອຫຼຸດຜ່ອນຜົນເສຍຫາຍ. ຜົນສະທ້ອນ. ໃນຊຸມປີ 1978 – 1984, ເມື່ອແຂວງສະຫວັນນະເຂດປະສົບໄພນ້ຳຖ້ວມຄັ້ງໃຫຍ່ ຢູ່ເມືອງເຊໂປນ, ສອນຄອນ, ຈຳພອນ, ແຂວງບິ່ງຈິທຽນ ໄດ້ສົ່ງຄະນະຜູ້ແທນໄປຢ້ຽມຢາມ ແລະສະໜອງແນວພັນເຂົ້າຈຳນວນ 200 ໂຕນ ແລະແນວພັນຖົ່ວດິນຫຼາຍສິບໂຕນ. ຢາບາງຊະນິດເພື່ອປ້ອງກັນພະຍາດໃຫ້ແກ່ຄົນ ແລະສັດລ້ຽງ. ກົງກັນຂ້າມ, ເພື່ອຊ່ວຍໃຫ້ແຂວງບິ່ງຈິທຽນ ຫຼຸດຜ່ອນຜົນເສຍຫາຍຈາກພາຍຸໃນທ້າຍເດືອນຕຸລາ 1983, ປະຊາຊົນ

ແຂວງສະຫວັນນະເຂດ ໄດ້ໜູນຊ່ວຍຕົ້ນໄຜ່ແລະເຮ້ຍ 5000 ກວ່າຕົ້ນ; ຜ້າແພ 2000 ແມັດ; ເຂົ້າສານ 20 ໂຕນ, ໄມ້ຈຳນວນໜຶ່ງ ແລະ ປຶ້ມຫຼາຍຫົວ, ເຈ້ຍ, ປາກກາ, ໝຶກ... ແລະມອບເຂົ້າໜຽວນັບຮ້ອຍໂຕນໃນໂອກາດງານບຸນປີໃໝ່ປະເພນີຂອງຊາວຫວຽດນາມ.

ບັນດາໝາກຜົນແຫ່ງການເພີ່ມພູນຄູນສ້າງຄວາມມິດຕະພາບ ລະຫວ່າງແຂວງບິ່ງຈິທຽນ ແລະ ແຂວງສະຫວັນນະເຂດ ໄລຍະ 1975-1989 ແມ່ນມີຄວາມໝາຍອັນໃຫຍ່ຫຼວງ ແລະສຳຄັນ, ປະກອບສ່ວນຊຸກຍູ້ສາຍພົວພັນມິດຕະພາບ ລະຫວ່າງສອງປະເທດຫວຽດນາມ ແລະລາວ. ໂດຍຮັບຮອງໝາກຜົນດັ່ງກ່າວ, ລັດຖະບານແຫ່ງ ສປປ ລາວ ໄດ້ມອບຫຼຽນໄຊ ອິດສະຫຼະ ຊັ້ນ 1 ໃຫ້ຄະນະຮ່ວມມືເສດຖະກິດ ແລະວັດທະນະທຳລາວ ແລະກຳປູເຈຍ ຂອງແຂວງບິ່ງຈິທຽນ, ມອບຫຼຽນໄຊມິດຕະພາບໃຫ້ບັນດາກົມກອງໃນແຂວງ 21 ຫຼຽນ ແລະມອບຫຼຽນໄຊ, ຫຼຽນກາ ເກືອບ 1.000 ຫຼຽນໃຫ້ແກ່ພະນັກງານ, ກຳມະກອນ ແຂວງບິ່ງຈິທຽນທີ່ໄດ້ໄປຊ່ວຍເຫຼືອແຂວງສະຫວັນນະເຂດ ໃນໄລຍະ 1976-1989.

## II. ກວາງຈິ ແລະ ສະຫວັນນະເຂດ ໄດ້ກໍ່ສ້າງ ແລະພັດທະນາການພົວພັນມິດຕະພາບໄລຍະປີ 1989 ເຖິງປະຈຸບັນ.

ວັນທີ 30 ມິຖຸນາ ປີ 1989, ສະພາແຫ່ງຊາດຊຸດທີ VIII ແຫ່ງສາທາລະນະລັດສັງຄົມນິຍົມ ຫວຽດນາມ ໄດ້ຕັດສິນແບ່ງແຂວງບິ່ງຈິທຽນຄືນເປັນ 3 ແຂວງຄື: ກວາງບິ່ງ, ກວາງຈິ, ເທື່ອທຽນ - ເຫ້ວ. ພາຍຫຼັງການແບ່ງແຍກ, ແຂວງກວາງຈິ ສືບຕໍ່ຍູ້ແຮງການພົວພັນຮ່ວມມືກັບແຂວງສະຫວັນນະເຂດໃຫ້ຂຶ້ນສູ່ບາດກ້າວໜຶ່ງ. ເຖິງວ່າຈະຜ່ານຜ່າຄວາມຫຍຸ້ງຍາກ ແລະສິ່ງທ້າທາຍຫຼາຍຢ່າງ, ສະພາບການໂລກ, ພາກ

ພື້ນອາຊີຕາເວັນອອກສ່ຽງໃຕ້ ແລະສອງປະເທດໄດ້ມີການປ່ຽນແປງຫຼາຍ, ແຕ່ການພົວພັນຮ່ວມມືລະຫວ່າງ ກວາງຈີ ແລະສະຫວັນນະເຂດນັບມື້ນັບໄດ້ຮັດແໜ້ນ, ເພີ່ມທະວີ ແລະບັນລຸໄດ້ບັນດາຜົນງານທີ່ສໍາຄັນໃນທຸກຂົງເຂດ.

ຈຸດພົ້ນເດັ່ນໃນການພົວພັນດ້ານການເມືອງລະຫວ່າງແຂວງສະຫວັນນະເຂດ ແລະກວາງຈີແຕ່ປີ 1989 ມາຮອດປັດຈຸບັນ ແມ່ນສອງຝ່າຍສືບຕໍ່ເພີ່ມທະວີພົບປະ, ແລກປ່ຽນ ແລະເຊັນບັນດາສັນຍາຮ່ວມມື ໂດຍຜ່ານບັນດາການຢ້ຽມຢາມ ແລະເຮັດວຽກຂອງການນໍາຂັ້ນສູງ. ພາຍຫຼັງການຢ້ຽມຢາມ, ເຮັດວຽກຢູ່ແຂວງສະຫວັນນະເຂດຂອງ ທ່ານ ຫງວຽນດຶກຮວານ ເລຂາຄະນະພັກແຂວງ (ວັນທີ 21/8/1989 – 23/04/1999), ທ່ານ ຫງວຽນເບື່ອງ ປະທານຄະນະກໍາມະການປະຊາຊົນແຂວງ, ທ່ານ ເລຮືວຟຸກ ເລຂາຄະນະພັກແຂວງ (ວັນທີ 7/8/2012), ທ່ານ ຫງວຽນວັນຮຸ່ງ ເລຂາຄະນະພັກແຂວງ (8/22016), ທ່ານ ເລກວາງຕຸ່ງ ເລຂາຄະນະພັກແຂວງ (2/2022)... ແລະບັນດາການຢ້ຽມຢາມແລະເຮັດວຽກຢູ່ກວາງຈີ ໂດຍທ່ານ ບຸນຍັງ ວໍລະຈິດ ເລຂາຄະນະພັກແຂວງ, ເຈົ້າແຂວງໆສະຫວັນນະເຂດ (18/2/1990), ສີເຫຼືອ ບຸນຄໍາ (5/10/2001), ເລຂາຄະນະພັກແຂວງ, ເຈົ້າແຂວງໆ ສະຫວັນນະເຂດ ສັນຕິພາບ ພົມວິຫານ (8/ 2019)..., ການພົວພັນດ້ານການເມືອງລະຫວ່າງແຂວງ ສະຫວັນນະເຂດ ແລະແຂວງກວາງຈີ ນັບມື້ນັບແໜ້ນແຟ້ນກວ່າ. ຄຽງຄູ່ກັບບັນດາການຢ້ຽມຢາມ ແລະເຮັດວຽກຂອງການນໍາຂັ້ນສູງຂອງສອງແຂວງ, ສອງຝ່າຍໄດ້ເຂົ້າຮ່ວມຫຼາຍກິດຈະກໍາເພື່ອຊຸກຍູ້ການພົວພັນ

ມິດຕະພາບ ແລະການຮ່ວມມື[8]. ບັນດາອົງການ, ຄະນະ, ຂະແໜງ ແລະອົງການຈັດຕັ້ງທ້ອງຖິ່ນຂອງສອງ ແຂວງໄດ້ຜັນຂະຫຍາຍບັນດາໂຄງການຮ່ວມມືລະຫວ່າງບັນດາຂະແໜງການ ແລະລະຫວ່າງບັນດາທ້ອງຖິ່ນໃນແຂວງຂອງກັນ. ຄະນະຜູ້ແທນຄະນະກໍາມະການຊາຍແດນແຂວງກວາງຈິໄດ້ຮັກສາຈັດກອງປະຊຸມປະຈໍາປີ ກັບຄະນະຜູ້ແທນຄະນະກໍາມະການຊາຍແດນແຂວງສະຫວັນນະເຂດ ກ່ຽວກັບບັນຫາຊາຍແດນ. ສະມາຄົມມິດຕະພາບຫວຽດນາມ - ລາວ ສອງແຂວງໄດ້ຈັດຕັ້ງບັນດາການຢ້ຽມຢາມ, ພົບປະແລກປ່ຽນມິດຕະພາບ, ແລກປ່ຽນສະພາບການກ່ຽວກັບວຽກງານຂອງສະມາຄົມ, ເສີມຂະຫຍາຍມູນເຊື້ອຕິດພັນສະໜິດແໜ້ນ ລະຫວ່າງປະຊາຊົນສອງແຂວງ, ພິເສດແມ່ນບັນດາທ້ອງຖິ່ນສອງເບື້ອງເຂດຊາຍແດນ. ບັນດາການເຄື່ອນໄຫວແຮກສ່ຽວລະຫວ່າງບັນດາຂະແໜງ, ບັນດາທ້ອງຖິ່ນ, ຄ້າຍທະຫານ, ອົງການ, ຫົວໜ່ວຍ, ບ້ານ ແລະໝູ່ບ້ານຂອງບັນດາເມືອງເຂດຊາຍແດນໄດ້

---

[8] ໃນໄລຍະນີ້, ການນໍາຂອງແຂວງສະຫວັນນະເຂດ ແລະ ກວາງຈິ ໄດ້ເຂົ້າຮ່ວມກອງປະຊຸມຮ່ວມມືດ້ານການທ່ອງທ່ຽວຂອງ 3 ແຂວງ ແລະ 3 ປະເທດ (ມຸກດາຫານ, ສະຫວັນນະເຂດ, ກວາງຈິ) ທີ່ກວາງຈິ ໃນປີ 2007; ເວທີປາໄສການຮ່ວມມືແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ (EWEC) (ຈັດຂຶ້ນຢູ່ກວາງຈິ, ເດືອນ 6/2010); ຈັດຕັ້ງບັນດາການເຄື່ອນໄຫວສະເຫຼີມສະຫຼອງ "ປີແຫ່ງຄວາມສາມັກຄີມິດຕະພາບຫວຽດນາມ - ລາວ" 2017. ແຂວງກວາງຈິ ສົມທົບກັບແຂວງສະຫວັນນະເຂດ ແລະ ສາລະວັນ ຈັດຕັ້ງກອງປະຊຸມພົບປະຂັ້ນສູງ ເພື່ອຕີລາຄາໝາກຜົນການປະຕິບັດສັນຍາຮ່ວມມືໄລຍະ 2014 – 2016. , 2017 - 2019; ໄດ້ປຶກສາຫາລື ແລະ ຕົກລົງລົງນາມໃນສັນຍາຮ່ວມມືໄລຍະ 2020 - 2022

ດຳເນີນ, ປະກອບສ່ວນປົກປັກ ແລະຮັກສາເສັ້ນຊາຍແດນສັນຕິພາບ, ມິດຕະພາບ. ພິເສດ, ບັນດາອົງການ ສະຖານກົງສຸນໃຫຍ່ຂອງຫວຽດນາມປະຈຳ ສະຫວັນນະເຂດ ແລະປາກເຊ ແລະສະຖານກົງສຸນໃຫຍ່ລາວປະຈຳທີ່ດ່ານັງ ໄດ້ເຄື່ອນໄຫວແລກປ່ຽນຂໍ້ມູນຂ່າວສານ ແລະແນະນຳບັນດາເນື້ອໃນ, ລາຍການຮ່ວມມືລະຫວ່າງແຂວງກວາງຈິ ແລະແຂວງສະຫວັນນະເຂດ ໂດຍສະເພາະ ແລະບັນດາແຂວງຂອງລາວ.

ໃນຂົງເຂດປ້ອງກັນຄວາມສະຫງົບ-ປ້ອງກັນປະເທດ, ສອງຝ່າຍໄດ້ສຸມໃສ່ກໍ່ສ້າງກຳລັງ ທັງຕິດກັບໜ້າທີ່ປ້ອງກັນປະເທດກັບເສດຖະກິດ, ເສດຖະກິດ ແລະປ້ອງກັນປະເທດ. ວຽກງານປ້ອງກັນຄວາມສະຫງົບຊາຍແດນໄດ້ສອງຝ່າຍປະຕິບັດເປັນຢ່າງດີ, ປະກອບສ່ວນອັນສຳຄັນເຂົ້າໃນການຕໍ່ສູ້ຕ້ານການຄ້າເຖື່ອນ, ສິນຄ້າຕ້ອງຫ້າມ, ສະກັດກັ້ນສະພາບຂ້າມຊາຍແດນຢ່າງຜິດກົດໝາຍ. ໃນໄລຍະນີ້, ຫຼາຍສາຍການຄ້າຢາເສບຕິດເປັນລາຍໃຫຍ່ ຖືກບັນດາກຳລັງເຈົ້າໜ້າທີ່ຂອງສອງແຂວງສົມທົບເພື່ອທຳລາຍມ້າງ, ສະພາບຂ້າມດ່ານຜິດກົດໝາຍໄດ້ຫຼຸດລົງ, ບັນດາ ປະກົດການແຊກຊຶມເຮັດນາຢູ່ບ້ານອື່ນ ຫຼືຍ້າຍໄປຢູ່ບ້ານອື່ນກໍຫຼຸດລົງຢ່າງຫຼວງຫຼາຍ.

ການຮ່ວມມືດ້ານເສດຖະກິດລະຫວ່າງສອງແຂວງໃນໄລຍະແຕ່ ປີ 1989 ຮອດປະຈຸບັນໄດ້ມີບັນດາບາດກ້າວກະໂດດຂັ້ນທີ່ສຳຄັນ. ຄຽງຂ້າງການສືບຕໍ່ປັບປຸງ ແລະພັດທະນາການພົວພັນໃນບັນດາຂົງເຂດເປັນມູນເຊື້ອ, ບາງຂົງເຂດຮ່ວມມືໃໝ່ໄດ້ຮັບການຜັນຂະຫຍາຍຈາກສອງຝ່າຍ ແລະໃນເບື້ອງຕົ້ນໄດ້ຮັບໝາກຜົນທີ່ມີຄວາມໝາຍຫຼາຍຢ່າງ. ໃນໄລຍະນີ້, ແຂວງກວາງຈິໄດ້ຊ່ວຍເຫຼືອ ແລະສົມທົບກັນຢ່າງແໜ້ນແຟ້ນກັບແຂວງສະຫວັນນະເຂດ ເພື່ອພັດທະນາກະສິກຳແບບຍືນຍົງຕິດພັນກັບການກໍ່ສ້າງຊົນນະບົດໃໝ່. ໃບໜ້າຊົນນະບົດ ຂອງແຂວງສະຫວັນນະເຂດ

ໄດ້ມີການປ່ຽນແປງຢ່າງໃຫຍ່ຫຼວງ. ຄຽງຄູ່ກັບການຊຸກຍູ້ບັນດາການເຄື່ອນໄຫວ ຂຸດຄົ້ນ ແລະປຸງແຕ່ງເຄື່ອງປ່າຂອງດົງເພື່ອສົ່ງອອກເພື່ອເພີ່ມລາຍຮັບງົບປະມານໃຫ້ ບັນດາທ້ອງຖິ່ນ, ສອງຝ່າຍໄດ້ຫັນການຮ່ວມມືດ້ານປ່າໄມ້ເຂົ້າການປູກໄມ້ ແລະ ປົກປັກຮັກສາປ່າໄມ້. ການຮ່ວມມືດ້ານອຸດສາຫະກຳກໍ່ສ້າງ ແລະ ຄົມມະນາຄົມ-ຂົນ ສົ່ງໄດ້ຮັບການປະຕິບັດຢ່າງເລິກເຊິ່ງກ່ວາເມື່ອປຽບກັບໄລຍະກ່ອນ. ໂຄງລ່າງ ຄົມມະນາຄົມຢູ່ແຂວງກວາງຈິ ແລະສະຫວັນນະເຂດກໍຄືບັນດາເສັ້ນທາງສັນຈອນ ທີ່ເຊື່ອມຕໍ່ສອງແຂວງໄດ້ຮັບການລົງທຶນຍົກລະດັບ ເພື່ອຮັບປະກັນໃຫ້ການເຄື່ອນ ໄຫວດ້ານການຄ້າ ແລະການໄປມາຂອງປະຊາຊົນ[9].

ການເຄື່ອນໄຫວລົງທຶນ, ການຄ້າຂອງແຂວງກວາງຈິ ແລະສະຫວັນນະເຂດ ໄດ້ຮັບການຜັນຂະຫຍາຍຢ່າງຕັ້ງໜ້າ. ການເຄື່ອນໄຫວຂອງເຂດເສດຖະກິດ-ການຄ້າພິເສດລາວບາວ ແລະເຂດການຄ້າຊາຍແດນແດນສະຫວັນຕິດພັນກັບ ດ່ານ ຊາຍແດນ ສາກົນ ລາວບາວ-ແດນສະຫວັນ ແລະການໄປມາຄ້າຂາຍ EWEC ໄດ້ຊຸກຍູ້ການເຄື່ອນໄຫວນຳເຂົ້າ-ສົ່ງອອກ, ເຂົ້າ-ອອກເມືອງ. ໄດ້ມີບັນດາ ວິສາຫະກິດແຂວງກວາງຈິໄດ້ໄປສຶກສາ, ສຳຫຼວດ ແລະລົງທຶນ, ຜະລິດ ແລະດຳເນີນ

---

[9] ແຕ່ລະປີ, ກົມທາງບົກ ຂອງສອງປະເທດໄດ້ກະຊວງຄົມມະນາຄົມແລະຂົນສົ່ງຂອງສອງປະ ເທດມອບສິດໄດ້ປະກາດລາຍຊື່ບັນດາພາຫະນະທີ່ໄດ້ຮັບອະນຸຍາດຜ່ານຄູ່ດ່ານຊາຍແດນຕາມອະນຸ ສັນຍາປີ 2001, ໃນນັ້ນມີຄູ່ດ່ານຊາຍແດນຂອງລາວ. ບາວ-ແດນສະຫວັນ. ແຂວງກວາງຈິ ສົມທົບກັບກົມທາງບົກຫວຽດນາມ ແລະ ແຂວງສະຫວັນນະເຂດ ຈັດຕັ້ງພິທີຜ່ານລົດເຕັກນິກ ຕາມສັນຍາ GMS-CBTA ຢູ່ດ່ານຊາຍແດນສາກົນລາວບາວ-ແດນສະຫວັນ; ອອກໃບອະນຸຍາດ ຂົນສົ່ງລະຫວ່າງຫວຽດນາມ ແລະ ລາວ. ເສັ້ນທາງຂົນສົ່ງຜູ້ໂດຍສານ ດົງຮ່າ-ສະຫວັນນະເຂດໄດ້ຮັກ ສາໄດ້ດີ

ທຸລະກິດຢູ່ລາວ ຄື: ບໍລິສັດຢາງພາລາກວາງຈີ, ບໍລິສັດຫຸ້ນສ່ວນບໍລິສັດໃຫຍ່ການຄ້າກວາງຈີ... ຈຳນວນນັກການຄ້າໄດ້ຄ້າຂາຍລະຫວ່າງສອງປະເທດເພີ່ມຂຶ້ນ ຢ່າງບໍ່ຢຸດຢັ້ງ.

ນັບແຕ່ປີ 1989 ເປັນຕົ້ນມາ, ສະຫວັນນະເຂດແມ່ນແຂວງໜຶ່ງທີ່ດຶງດູດການລົງທຶນໄປຕ່າງປະເທດຂອງວິສາຫະກິດກວາງຈີ ຫຼາຍທີ່ສຸດ. ຜ່ານການຮ່ວມມືການລົງທຶນ, ຄວາມສາມາດບົ່ມຊ້ອນ ແລະ ທ່າແຮງຂອງແຕ່ລະແຂວງໄດ້ຮັບການຍູ້ແຮງຂຸດຄົ້ນ. ການພົວພັນຮ່ວມມືໃນຂົງເຂດວັດທະນະທຳ, ການສຶກສາ-ບຳລຸງສ້າງ, ສາທາລະນະສຸກ ແລະບັນດາດ້ານອື່ນໆກໍໄດ້ຮັບຄວາມສົນໃຈໃນການຮັດແໜ້ນ ແລະພັດທະນາຂອງສອງແຂວງ. ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການທີ່ເພີ່ມຂຶ້ນຂອງການດຳເນີນຊີວິດ ແລະການບັນເທີງຂອງປະຊາຊົນຢ່າງທັນທີ່, ຄຽງຄ້າງບັນດາການເຄື່ອນໄຫວຮ່ວມມືດ້ານວັດທະນະທຳທີ່ເປັນມູນເຊື້ອ, ສອງຝ່າຍໄດ້ຜັນຂະຫຍາຍ ແລະປະຕິບັດຫຼາຍຮູບການຮ່ວມມືໃໝ່ໃນດ້ານໂທລະພາບ, ພັດທະນາເຄືອຂ່າຍຂໍ້ມູນ-ສື່ມວນຊົນຢ່າງມີປະສິດທິຜົນ. ການຮ່ວມມືດ້ານການສຶກສາ ແລະບຳລຸງສ້າງບໍ່ພຽງແຕ່ເພີ່ມຂຶ້ນໃນດ້ານປະລິມານເທົ່ານັ້ນ ຫາກຍັງເພີ່ມຂຶ້ນໃນດ້ານຄຸນນະພາບ. ຄຽງຄ້າງບັນດາການເຄື່ອນໄຫວຊ່ວຍເຫຼືອເພື່ອກໍ່ສ້າງໂຮງຮຽນ, ຊື້ອຸປະກອນການສອນ ແລະກໍ່ສ້າງນັກຮຽນ ແລະພະນັກງານຕາມສັນຍາປະຈຳປີ, ສອງຝ່າຍຍັງຊຸກຍູ້ການຮ່ວມມືໃນຮູບແບບຮ່ວມກັນແລກປ່ຽນຄູສອນ ລະຫວ່າງໂຮງຮຽນໃນແຕ່ລະປີ[10]. ໃນໄລຍະນີ້, ແຂວງສະຫວັນນະເຂດຍັງໄດ້ຮັບການສອນພາສາລາວ ໃຫ້ແກ່

[10] ການນຳຂອງສອງແຂວງໄດ້ສ້າງເງື່ອນໄຂໃຫ້ວິທະຍາໄລສ້າງຄູ ກວາງຈີ ແຮກສ່ຽວກັບ ວິທະຍາໄລສ້າງຄູ ສະຫວັນນະເຂດ; ເມືອງເຮືອງຮວາ ສືບຕໍ່ແຮກສ່ຽວກັບເມືອງເຊໂປນ, ເມືອງນອງ,

ພະນັກງານ-ນັກຮຽນກວາງຈີ ຈຳນວນໜຶ່ງກ່ອນຈະເຂົ້າມະຫາວິທະຍາໄລແຫ່ງຊາດລາວ. ຂະແໜງວັດທະນະທຳຂອງສອງແຂວງໄດ້ລົງນາມໃນບັນດາເອກະສານຮ່ວມມື, ຊຸກຍູ້ໃຫ້ທຸກຂັ້ນ, ທຸກຂະແໜງການ ແລະບັນດາທ້ອງຖິ່ນ, ພິເສດແມ່ນເຂດຊາຍແດນ, ເພີ່ມທະວີບັນດາການເຄື່ອນໄຫວແລກປ່ຽນດ້ານວັດທະນະທຳ, ສິລະປະ, ກິລາ, ການກໍ່ສ້າງ ແລະພັດທະນາຊີວິດວັດທະນະທຳໃໝ່. ການຮ່ວມມືດ້ານການແພດລະຫວ່າງສອງຝ່າຍໄດ້ຮັບການປັບປຸງ ແລະເພີ່ມທະວີດ້ວຍຫຼາຍມາດຕະການທີ່ແທດຈິງເປັນປະຈຳ. ແຂວງກວາງຈີໄດ້ລົງທຶນກໍ່ສ້າງບັນດາສະຖານທີ່ກວດພະຍາດ ແລະປິ່ນປົວພະຍາດ, ສະໜອງພື້ນຖານວັດຖຸ ແລະອຸປະກອນການແພດ; ຮ່ວມມືໃນການຝຶກອົບຮົມ ແລະບຳລຸງວິຊາຊີບ, ວິຊາສະເພາະໃຫ້ຖັນແຖວການແພດຂອງແຂວງສະຫວັນນະເຂດ. ຜ່ານການເຄື່ອນໄຫວຮ່ວມມືດ້ານສາທາລະນະສຸກ, ແຂວງກວາງຈີປະກອບສ່ວນຊ່ວຍເຫຼືອລາວປ້ອງກັນ ແລະສະກັດກັ້ນພະຍາດໄຂ້ເລືອດອອກ ແລະພະຍາດໄຂ້ຍຸງລາຍ.

ພິເສດ, ໃນໄລຍະ 30 ປີຜ່ານມາ, ດ້ວຍການຊ່ວຍເຫຼືອຂອງແຂວງສະຫວັນນະເຂດ, 5498 ອັດຖິຂອງນັກຮົບ ແລະນັກຊ່ຽວຊານຜູ້ເສຍສະຫຼະຊີວິດເພື່ອຊາດ ບົນຂອບເຂດແຂວງ ສະຫວັນນະເຂດ ທີ່ໄດ້ຮັບການຊອກຫາ, ທ້ອນໂຮມ ແລະ ນຳສິ່ງເມືອສາທິດຢູ່ອະນຸສາວະລີນັກຮົບນິລະນາມ ເລກ 9 ນີ້ແມ່ນທັງເປັນນ້ຳໃຈຮັກແພງ, ຄວາມຮັບຜິດຊອບ ທັງເປັນການກະທຳ ອັນສັກສິດທີ່ສວຍງາມ, ຜ່ານນັ້ນໄດ້ເຮັດໃຫ້ເພີ່ມທະວີສາຍພົວພັນມິດຕະພາບ ແລະຄວາມສາມັກຄີ

---

ແຂວງສະຫວັນນະເຂດ.

ຕິດພັນລະຫວ່າງປະຊາຊົນສອງປະເທດນັບມື້ນັບແໜ້ນແຟ້ນ.

ເພື່ອຮັດແໜ້ນ, ເພີ່ມທະວີ ແລະພັດທະນາສາຍພົວພັນມິດຕະພາບ ແລະ ຄວາມສາມັກຄີແບບພິເສດ, ນຳການພົວພັນຮ່ວມມືໃນທຸກຂົງເຂດທີ່ເວົ້າລວມ ແລະວຽກງານຊາຍແດນທີ່ເວົ້າສະເພາະລະຫວ່າງແຂວງກວາງຈິ ແລະສອງແຂວງ ສະຫວັນນະເຂດ, ສາລະວັນ, ສປປ ລາວ ໃນວັນທີ 07/12/2018, ຄະນະ ປະຈຳພັກແຂວງກວາງຈິ ໄດ້ອອກຄຳສັ່ງເລກທີ 19-CT/TU ວ່າດ້ວຍການເພີ່ມທະວີ ສາຍພົວພັນມິດຕະພາບແບບພິເສດ ແລະການຮ່ວມມືຮອບດ້ານກັບສອງແຂວງ ສະຫວັນນະເຂດ, ສາລະວັນ, ສປປ ລາວ, ພ້ອມກັນກໍ່ສ້າງເຂດຊາຍແດນສັນຕິພາບ; ມິດຕະພາບ, ສະຖຽນລະພາບ ແລະການພັດທະນາແບບ ຍືນຍົງ.

ບັນດາໝາກຜົນທີ່ບັນລຸໄດ້ໃນການພົວພັນຮ່ວມມື ລະຫວ່າງສອງແຂວງ ກວາງຈິ ແລະສະຫວັນນະເຂດແມ່ນມີຄວາມໝາຍອັນສຳຄັນ, ປະກອບສ່ວນຮັກສາ ຄວາມໝັ້ນຄົງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ, ພັດທະນາເສດຖະກິດ, ວັດທະນະທຳຂອງສອງແຂວງ, ພ້ອມກັນນັ້ນ, ຊຸກຍູ້ການພົວພັນມິດຕະພາບແບບພິເສດ ແລະການຮ່ວມມືຮອບດ້ານລະຫວ່າງສອງປະເທດ ຫວຽດນາມ - ລາວ ໃຫ້ພັດທະນາໃນໄລຍະການປະຕິວັດໃໝ່. ເພື່ອເປັນການ ຮັບຮູ້ເຖິງນ້ຳໃຈອັນຮັກແພງ, ການສະໜັບສະໜູນ ແລະຊ່ວຍເຫຼືອອັນລ້ຳຄ່າ ຂອງແຂວງກວາງຈິ ໃນຕະຫຼອດໄລຍະທີ່ຜ່ານມາ, ໃນເດືອນ ພະຈິກ 2018, ຄະນະ ຜູ້ແທນແຂວງສະຫວັນນະເຂດ ນຳໂດຍທ່ານເລຂາ, ເຈົ້າແຂວງ ເປັນຫົວໜ້າຄະນະ ໄດ້ຮັບການມອບສິດຂອງທ່ານປະທານປະເທດ, ນາຍົກລັດຖະມົນຕີລາວໄດ້ໄປ ມອບຫຼຽນໄຊ ແລະຫຼຽນກາຂອງລັດ ແລະລັດຖະບານລາວໃຫ້ແກ່ໝູ່ຄະນະ ແລະ

ບຸກຄົນບັນດາສະຫາຍການນຳແຂວງກວາງຈີ. ນີ້ແມ່ນການເປັນກຽດໃຫ້ແກ່ຄະນະພັກ, ອຳນາດການປົກຄອງແລະ ປະຊາຊົນແຂວງກວາງຈີເປັນຢ່າງຍິ່ງ.

***1. ການຮ່ວມມືດ້ານປ້ອງກັນຄວາມສະຫງົບ - ປ້ອງກັນປະເທດ, ກໍ່ສ້າງເສັ້ນທາງຊາຍແດນສັນຕິພາບ, ມິດຕະພາບ.***

ສອງຝ່າຍສົມທົບກັນເປັນປົກກະຕິ, ແລກປ່ຽນຂໍ້ມູນຂ່າວສານ, ຕີລາຄາສະພາບການສາກົນ ແລະພາກພື້ນ, ພິເສດ ແມ່ນນະໂຍບາຍການຕ່າງປະເທດຂອງບັນດາປະເທດໃຫຍ່ທີ່ສົ່ງຜົນສະທ້ອນເຖິງ ຄວາມໝັ້ນຄົງແຫ່ງຊາດຂອງສອງປະເທດ; ເພີ່ມທະວີການຮ່ວມມື, ແລກປ່ຽນບົດຮຽນ, ສົມທົບກັນສ້າງແຜນການວິທີການຕໍ່ສູ້ກັບການເຄື່ອນໄຫວຕ້ານ ແລະທຳລາຍຂອງບັນດາກຳລັງປໍລະປັກ, ບັນດາອາດຊະຍາກຳ, ປ້ອງກັນຄວາມສະຫງົບຢູ່ເຂດຊາຍແດນ, ສະກັດກັ້ນບັນດາການເຄື່ອນໄຫວຂອງອາດຊະຍາກຳຢ່າງທັນການ, ປະກອບສ່ວນເຂົ້າໃນຜົນສຳເລັດຂອງກອງປະຊຸມໃຫຍ່ຂອງພັກ ສ.ປ.ປ ລາວ ທົ່ວປະທດ ແລະ ຫວຽດນາມ. ພ້ອມກັນຮ່ວມມືຕໍ່ສູ້ ປ້ອງກັນແລະສະກັດກັ້ນບັນດາອົງການປະຕິການເຄື່ອນໄຫວເພື່ອຕ້ານແລະທຳລາຍ, ສ້າງຄວາມແຕກແຍກສາຍພົວພັນມິດຕະພາບ ແລະການຮ່ວມມືຂອງລາວ ແລະຫວຽດນາມ.

ດ້ວຍນະໂຍບາຍ “ເປີດປະຕູ” ຂອງລາວ ແລະຫວຽດນາມ, ບັນດາກຳລັງປະຕິການຕ່າງປະເທດພາຍໃຕ້ການປ້ອມຕົວເປັນບັນດາອົງການ, ຫົວໜ່ວຍ, ບຸກຄົນ “ລຶບລ້າງຄວາມທຸກຍາກ”, “ການເຄື່ອນໄຫວກຸສົນ”, “ສຳຫຼວດເພື່ອຮ່ວມມືລົງທຶນ”, “ປົກປັກຮັກສາສິ່ງແວດລ້ອມ”... ຊອກຫາທຸກວິທີແຊກຊຶມເຂົ້າບາງທ້ອງຖິ່ນຂອງແຂວງສະຫວັນນະເຂດ ແລະພາກຕາເວັນຕົກແຂວງກວາງຈີ. ພວກມັນເພີ່ມ

ທະວິການເຄື່ອນໄຫວແຊກຊຶມຈາກໄທໄປຫາບັນດາເມືອງທີ່ມີພູມສັນຖານທີ່ຫຍຸ້ງຍາກນຄື: ເມືອງນອງ (ສະຫວັນນະເຂດ), ເຮືອງຣວາ (ກວາງຈິ) ເພື່ອດຳເນີນການຕິດຕໍ່, ສ້າງຖານທັບ, ໂຄສະນາເຜີຍແຜ່ສົງຄາມຈິດໃຈ; ຫຼືແບ່ງແຍກຄວາມສາມັກຄີພາຍໃນ, ບິດເບືອນບັນດາແຜນນະໂຍບາຍແນວທາງຂອງພັກ, ເຮັດໃຫ້ສູນເສຍຄວາມເຊື່ອໝັ້ນ ຂອງມະຫາຊົນ; ສວຍໂອກາດແກ່ດຶງມະຫາຊົນ, ໂດຍສະເພາະແມ່ນຊົນເຜົ່າສ່ວນໜ້ອຍ[11]. ສະນັ້ນ, ໜຶ່ງໃນບັນດາໜ້າທີ່ຈຸດສຸມ ໃນການຮ່ວມມືດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບລະຫວ່າງສອງແຂວງ ແລະສອງເບື້ອງຊາຍແດນແມ່ນການສົມທົບຂັບໄລ່, ດັບສູນບັນດາກຸ່ມປະຕິການທີ່ລັກລອບເຄື່ອນໄຫວລຽບຕາມຊາຍແດນ. ເພື່ອສະກັດກັ້ນການເຄື່ອນໄຫວຂອງບັນດາປະເພດອາດຊະຍາກຳທີ່ອັນຕະລາຍ, ກຳລັງປ້ອງກັນຄວາມສະຫງົບບັນດາແຂວງໄດ້ຕິດຮາກຖານເພື່ອຕິດຕາມທຸກການເຄື່ອນໄຫວຂອງພວກມັນຢ່າງເປັນປະຈຳ, ເມື່ອມີຫຼັກຖານພຽງພໍກໍຈັດຕັ້ງປິດລ້ອມຈັບຕົວຢ່າງທັນການ[12].

[11] ວັນທີ 21 ກຸມພາ 1990, ເມື່ອມີຂ່າວວ່າມີໂຈນ 4 ຄົນ ຈາກໄທໄປບ້ານແຈນ (ຕາແສງແກງກອກ, ເມືອງເຊໂປນ) ຈະຂ້າມແມ່ນ້ຳເຊໂປນເຂົ້າຫວຽດນາມເຄື່ອນໄຫວ, ທະຫານຊາຍແດນແຂວງກວາງຈິ ແລະ ຕຳຫຼວດຊາຍແດນບັນດາແຂວງສະຫວັນນະເຂດໄດ້ປະສານສົມທົບຕິດຕາມ, ປິລ້ອມຈັບຕົວທັງໝົດເມື່ອພວກມັນ ກຳລັງຊອກວິທີຂ້າມຊາຍແດນ ເພື່ອແຊກຊຶມເຂົ້າເມືອງເຮືອງຣວາ.

[12] ວັນທີ 12 ມັງກອນ 1996, ໃນນາມເຮັດວຽກງານການກຸສົນ, 2 ເປົ້າໝາຍຄື: ຫວຽດກ່ຽວແລະ ລາວກ່ຽວ ແຕ່ອາເມລິກາກັບຄືນເຄື່ອນໄຫວຢູ່ເມືອງເຊໂປນ ແລະ ເມືອງນອງ (ສະຫວັນ

ໃນໄລຍະປີ 1989 ມາຮອດປະຈຸບັນ, ສະພາບການເຄື່ອນໄຫວຂອງພວກອາດຊະຍາກໍາຢາເສບຕິດໄດ້ເກີດຂຶ້ນຢ່າງສັບສົນ, ໄດ້ມີຂອບເຂດການເຄື່ອນໄຫວກ້ວາງຂວາງ, ມີຫຼາຍສາຍເຄື່ອນໄຫວດ້ວຍຫຼາຍເປົ້າໝາຍຜູ້ຕິດຕໍ່ເພື່ອການຊື້-ຂາຍ, ຂົນສົ່ງຢາເສບຕິດທີ່ມີລັກສະນະແບບບຽນ, ເລ່ລ່ຽມ. ການເຄື່ອນໄຫວນີ້ ແມ່ນເນັ້ນໃສ່ບໍລິເວນເສັ້ນທາງເລກ 9 ເມືອງເຊໂປນ ແຂວງສະຫວັນນະເຂດ (ລາວ). ກໍາລັງທະຫານຊາຍແດນ, ຕໍາຫຼວດຂອງສອງແຂວງໄດ້ສົມທົບກັນຢ່າງຕັ້ງໜ້າກັບອໍານາດການປົກຄອງ ແລະປະຊາຊົນເຂດຊາຍແດນເພື່ອດໍາເນີນການກວດກາຄືນບັນດາຂອບເຂດ, ບັນດາດ້ານ ແລະບັນດາເປົ້າໝາຍຈຸດສຸມ;

ຈັດຕັ້ງກອງປະຊຸມແລກປ່ຽນຕາມກໍານົດເປັນປະຈໍາ, ລາຍງານສະພາບການສົມທົບປະຕິບັດບັນດາມາດຕະການປ້ອງກັນຄວາມສະຫງົບ - ປ້ອງກັນປະເທດ ແລະ

---

ນະເຂດ) ແລະ ເມືອງເຮືອງຮວາ ແລະ ດາກາຣົງ (ກວາງຈິ) ເພື່ອເຜີຍແຜ່ແນວຄິດຕໍ່ຕ້ານລັດຖະບານ. ທັງສອງເປົ້າໝາຍໄດ້ຖືກ ທະຫານຊາຍແດນແຂວງກວາງຈິ ແລະ ຕໍາຫຼວດຊາຍແດນແຂວງສະຫວັນນະເຂດ ໄດ້ຈັບຕົວແລະຍຶດເອົາປຶ້ມຫົວໜຶ່ງຂອງນັກປະພັນ ເຢືອງທູເຮືອງ ທີ່ຂຽນເປັນພາສາເຢຍລະມັນ ດ້ວຍເນື້ອໃນປະຕິການ, ຄໍາພີຄຫຼາຍຣິດສະຕຽນຫຼາຍສະບັບ ແລະເອກະສານທີ່ກ່ຽວຂ້ອງເຖິງວິທະຍຸກະຈາຍສຽງ “ແຫຼ່ງຊີວິດ” . ຈົດໝາຍ 1 ສະບັບທີ່ມີເນື້ອໃນຊີ້ນໍາການເຜີຍແຜ່ສາສະໜາໂປແຕສຕັງໄປເຂດຊາຍແດນ. ໃນປີ 2012, ຕໍາຫຼວດ ແຂວງສະຫວັນນະເຂດ ແລະ ສາລະວັນ ໄດ້ຈັບຕົວ ທ້າວ ຫງວຽນວັນດຶກ ອາຍຸ 53 ປີ, ເປັນຄົນຫວຽດເອົານາມມະຄຸນ ນັກທ່ອງທ່ຽວ ໄປ 2 ແຂວງຂອງລາວ ເພື່ອຕິດຕໍ່ກັບກຸ່ມແກ໊ງ ຢູ່ເມືອງພີນ ແລະ ເມືອງສະໜ້ອຍ ເພື່ອຊື້-ຂາຍອາວຸດ, ລະເບີດ ແລະ ຢາປົວພະຍາດ.

ຊາຍແດນແຫ່ງຊາດ. ຈາກນັ້ນ, ກຳລັງເຈົ້າໜ້າທີ່ຂອງ 2 ຝ່າຍໄດ້ກໍ່ສ້າງ ແລະຜັນຂະຫຍາຍບັນດາວິທີການ, ແຜນການ, ເປັນເຈົ້າໃນການສົມທົບກັນຢ່າງແໜ້ນແຟ້ນ ໃນການພົບເຫັນ, ປ້ອງກັນ ແລະສະກັດກັ້ນ ແລະຕໍ່ສູ້ຢ່າງທັນການ, ປາບປາມຢ່າງມີປະສິດທິຜົນບັນດາການການກະທຳແຊກຊຶມ, ທຳລາຍຂອງບັນດາກຳລັງປໍລະປັກ, ເຮັດໃຫ້ລົ້ມເຫຼວກົນອຸບາຍ ກໍ່ຄວາມວຸ້ນວາຍຂອງກຳລັງປະຕິການຜັດຖິ່ນ, ສະກັດກັ້ນບັນດາການເຄື່ອນໄຫວກໍ່ໂທດ, ຂ້າມຊາຍແດນຜິດກົດໝາຍ, ການຄ້າເຖື່ອນຂ້າມຊາຍແດນ, ພິເສດແມ່ນການລັກລອບຄ້າຂາຍຢາເສບຕິດ, ສິນຄ້າຕ້ອງຫ້າມ; ທຳລາຍລ້າງກຸ່ມໂຈນ, ກຸ່ມກໍ່ອາຊະຍາກຳທີ່ປະກອບອາວຸດ, ຮັກສາຄວາມໝັ້ນຄົງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ ແລະ ຄວາມປອດໄພ[13].

---

[13] ວັນທີ 18 ທັນວາ 2007, ຢູ່ບ້ານດົງ, ເມືອງເຊໂປນ, ກຳລັງເຈົ້າໜ້າທີ່ຕ້ານ ແລະສະກັດກັ້ນ ຢາເສບຕິດ ກອງບັນຊາການທະຫານຊາຍແດນແຂວງສະຫວັນນະເຂດ ໄດ້ສົມທົບກັບກອງບັນຊາການ ປກສ ແຂວງສະຫວັນນະເຂດ ຈັບຕົວຄົນລາວ 04 ຄົນ ພ້ອມຂອງກາງຢາບ້າ 8.100 ເມັດ, ເງິນ 1.200 ໂດລາສະຫະລັດ, ເງິນໄທ 27.950 ບາດ, ເງິນກີບ 50,3 ລ້ານກວ່າກີບ, ລົດໃຫຍ່ 04 ຄັນ, ລົດຈັກ 05 ຄັນ, ໂທລະສັບມືຖື 04 ເຄື່ອງ, ປືນ 05 ກະບອກ, ດາບ 01 ດວງ, ມີດຊຸຍ 01 ອັນ ແລະວັດຖຸຂອງກາງ ແລະ ເອກະສານທີ່ກ່ຽວຂ້ອງການເຄື່ອນໄຫວຄ້າຂາຍຢາເສບຕິດ. ວັນທີ 27 ກັນຍາ 2008, ຕຳຫຼວດດ່ານຊາຍແດນສາກົນແດນສະຫວັນ (ລາວ) ໄດ້ກວດພົບນາງ ຫວໍທິແຊນ, ເກີດປີ 1991, ຢູ່ບ້ານກາຕັງ, ເທດສະບານລາວບາວ, ອາຊີບເປັນຄົນຂັບລົດແກ່ສິນຄ້າຂ້າມຊາຍແດນ, ໄດ້ຂົນສິ່ງກັນຊາແຫ້ງ 06 ແທ່ງ (ນ້ຳໜັກ 8.5 ກິໂລ). ດ່ານຊາຍແດນສາກົນລາວບາວໄດ້ ປະສານສົມທົບກັບກອງບັນຊາການ ປກສ ທ້ອງຖິ່ນ ເພື່ອຈັບຕົວເປົ້າໝາຍເຈົ້າຂອງສິນຄ້າ ແລະມອບໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງເພື່ອແກ້ໄຂ.

ຜ່ານການສົມທົບຕໍ່ສູ້ຂອງກຳລັງຂອງສອງຝ່າຍ, ມາຮອດປະຈຸບັນ, ໄດ້ກວດພົບ, ແກ້ໄຂການກະທຳລະເມີດລະບຽບການຢູ່ເຂດຊາຍແດນໄດ້ 1.643 ກໍລະນີ, ແລະການລະເມີດລະບຽບການເຂົ້າ-ອອກເມືອງໄດ້ 4.318 ກໍລະນີ. ແຂວງກວາງຈິໄດ້ສົມທົບກັບແຂວງສະຫວັນນະເຂດໄດ້ຮັບຜິດຊອບຕໍ່ສູ້ສະເພາະຄະດີ 70 ຄະດີ ແລະຄະດີຄ້າຂາຍຂົນສົ່ງຢາເສບຕິດມີ 8 ຄະດີ/181 ເປົ້າໝາຍ, ຍຶດເຮໂຣອິນ 22 ແທ່ງ; ເຮໂຣອິນ 2,845 ຫໍ່; ຢາບ້າ 1,287,849 ເມັດ; ກັນຊາ 833,07 ກິໂລ; ຢາໄອ 76.593 ກິໂລກຣາມ; ລົດຈັກ 44 ຄັນ, ລົດໃຫຍ່ 43 ຄັນ, ໂທລະສັບມືຖື 125 ເຄື່ອງ; ປືນ 07 ກະບອກ, ລູກປືນ 38 ລູກ...; 01 ຄະດີສະເພາະ/ ເປົ້າໝາຍຄ້າມະນຸດຂ້າມຊາຍແດນ 02 ຄົນ; ຄະດີສະເພາະ 02 ຄະດີ / ເປົ້າໝາຍປຸ້ນຊັບ 5 ຄົນ ແລະຄາດຕະກຳ; ຄະດີສະເພາະ 14 ຄະດີ/ເປົ້າໝາຍທີ່ລັກລອບຂົນສົ່ງດິນລະເບີດ, ວັດຖຸລະເບີດມີ 31 ຄົນ ແລະຂອງກາງເກັບໄດ້ຈຳນວນ 1.316 ກິໂລກຼາມດິນລະເບີດ, , ໝາກກະໂພກ 133 ກິໂລກຼາມ, ແກັບລະເບີດ 4.052 ໜ່ວຍ ແລະສາຍລະເບີດ 498 ແມັດ. ບັນດາຄ້າຍທະຫານຊາຍແດນໄດ້ແນະນຳໃຫ້ທ້ອງຖິ່ນແກ້ໄຂ 2.153 ຄະດີ /3.239 ເປົ້າໝາຍ ກ່ຽວກັບການຮັກສາລະບຽບຄວາມສະຫງົບ-ສັງຄົມຖືກຕາມສິດອຳນາດ ແລະລະບຽບກົດໝາຍ. ດ່ານຊາຍແດນສາກົນລາວບາວ-ແດນສະຫວັນ ມີບົດບາດສຳຄັນໃນການໄຫຼວຽນຂອງສິນຄ້າ ແລະການເດີນທາງໄປມາລະຫວ່າງສອງປະເທດ, ແຕ່ຍັງເປັນປະຕູຂອງພວກຄ້າເຖື່ອນ, ຂາຍສິນຄ້າຕ້ອງຫ້າມເອົາສິນຄ້າແຕ່ລາວເຂົ້າຫວຽດນາມເປັນຈຳນວນຫຼວງຫຼາຍ. ສິນຄ້າເຖື່ອນ, ສິນຄ້າຕ້ອງຫ້າມໄດ້ຂົນສົ່ງຜ່ານດ່ານດ້ວຍຫຼາຍວິ

ທີ່ທີ່ນຽບນຽນ, ສ້າງຄວາມຫຍຸ້ງຍາກໃຫ້ແກ່ກຳລັງຄຸ້ມຄອງຊາຍແດນ[14]..

ການສົມທົບກັນຢ່າງແໜ້ນແຟ້ນ, ທັນການ, ຄົບຊຸດ ແລະຈັງຫວະພ້ອມພຽງ,

---

[14] ແຕ່ປີ 1995 ຫາ 1998, ຢູ່ດ່ານຊາຍແດນລາວບາວ-ແດນສະຫວັນ, ກອງຄຸ້ມຄອງການຕະຫຼາດ ແລະ ພາສີດ່ານລາວບາວ ໄດ້ກວດພົບ ແລະ ຈັບເກີນຮ້ອຍຄະດີລັກລອບຄ້າຢາສູບ, ເຫຼົ້າ, ເຄື່ອງໃຊ້ໄຟຟ້າ, ແລະ ຊິ້ນສ່ວນລົດຈັກ, ເຂົ້າໜົມທຸກຊະນິດທີ່ຜະລິດຢູ່ໄທ. ໃນໄລຍະນີ້, ຕຳຫຼວດຊາຍແດນຄ້າຍແດນສະຫວັນ (ສະຫວັນນະເຂດ) ໄດ້ສົມທົບກັບກອງບັນຊາການທະຫານຊາຍແດນແຂວງກວາງຈີ ເພື່ອກວດພົບ ແລະຈັບຕົວຄະດີຄ້າຢາເສບຕິດຂອງບໍລິສັດ ແຄ່ງງວຽນ ຈຳກັດ, ເມືອງ ດົ່ງຮ່າ (ກວາງຈີ) ຂະໜາດໃຫຍ່. ຢຶດເຮໂຣອິນ 14 ແທ່ງ ຍີ່ຫໍ້ 999, ຝິ່ນ 5 ກິໂລ ແລະ ເງິນ 34.000 ໂດລາ. ສວຍໃຊ້ພູມລຳເນົາແຂວງຕິດກັບຊາຍແດນທີ່ທຸລະກັນດານ, ຊາວຫວຽດນາມ ແລະ ລາວຈຳນວນໜຶ່ງໄດ້ສ້າງບັນດາເສັ້ນຂົນສົ່ງຢາເສບຕິດຈາກລາວໄປຫວຽດນາມ. ພາຍຫຼັງໄລຍະຕິດຕາມ, ເດືອນ 9/2005, ຕຳຫຼວດເທດສະບານລາວບາວ (ກວາງຈີ) ໄດ້ສົມທົບກັບຕຳຫຼວດແຂວງສະຫວັນນະເຂດຈັບຕົວ ທ.ຫງວຽນວັນຮຸ່ງ (ທີ່ຢູ່ 330 ຕົງບາດໂຫ-ນະຄອນເຫ້ວ), ຢຶດກັນຊາແຫ້ງ 150 ຫໍ່ ແລະ ທ້າວໂຮ່ວັນເວື່ອນ (ຢູ່ບ້ານກະຕູບ 2, ເມືອງເຊໂປນ, ແຂວງສະຫວັນນະເຂດ) ຢຶດກັນຊາແຫ້ງໄດ້ 1,1 ກິໂລກຼາມ. ໃນປີ 2013, ຍ້ອນຄວາມສະຕິລະວັງຂອງປະຊາຊົນ, ຫ້ອງຕຳຫຼວດສືບສວນ-ສອບສວນຄະດີອາຊະຍາກຳຢາເສບຕິດ ກອງບັນຊາການຕຳຫຼວດແຂວງກວາງຈີ ໄດ້ກວດພົບ ແລະ ມ້າງຄະດີຄ້າຢາເສບຕິດຂະໜາດໃຫຍ່, ຈັບຕົວຜູ້ຕ້ອງຫາ 16 ຄົນ, ໃນນັ້ນມີຊາວຫວຽດນາມ 6 ຄົນ, ລາວ 10 ຄົນ), ຢຶດເຮໂຣອິນ 10 ແທ່ງ, ຢາສັງເຄາະ 13.590 ເມັດ. (WY), ເຮໂຣອິນ 130 ຫໍ່, ກັນຊາ 29,24 ກິໂລກຣາມ, ຢາບ້າ 0,5 ກຣາມ, ລົດໃຫຍ່ 1 ຄັນ, ເງິນກີບ 60 ກວ່າລ້ານກີບ, ເງິນຫວຽດ 18.570.000 ດົ່ງ.

ມີປະສິດທິຜົນລະຫວ່າງກຳລັງປະກອບອາວຸດຂອງ 2 ແຂວງ ໄດ້ສ້າງກຳລັງແຮງເພື່ອຮັບປະກັນສະຖຽນລະພາບທາງດ້ານການເມືອງແລະ ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມບົນທົ່ວເສັ້ນທາງຊາຍແດນ, ປະກອບສ່ວນທີ່ສຳຄັນເຂົ້າໃນຂະບວນການປະຕິບັດໜ້າທີ່ປ້ອງກັນຄວາມສະຫງົບ-ປ້ອງກັນຊາດ, ກໍ່ສ້າງທ່າທີປ້ອງກັນປະເທດທົ່ວປວງຊົນແລະ ຄວາມໝັ້ນຄົງຂອງປະຊາຊົນເຂັ້ມແຂງ; ສ້າງເງື່ອນໄຂສະດວກໃຫ້ສອງແຂວງຮ່ວມມືພັດທະນາເສດຖະກິດ, ວັດທະນະທຳ ແລະສັງຄົມ, ປະກອບສ່ວນສຳຄັນເຂົ້າໃນການສະຖຽນລະພາບ ແລະການພັດທະນາຂອງສອງປະເທດລາວ ແລະຫວຽດນາມ.

ປົກປັກຮັກສາເສັ້ນຊາຍແດນແຫ່ງຊາດແມ່ນໜ້າທີ່ຂອງທຸກຂັ້ນ, ຂະແໜງການ, ທ້ອງຖິ່ນທີ່ມີລວມເສັ້ນຊາຍແດນຂອງສອງປະເທດ ລາວ-ຫວຽດນາມ. ນີ້ກໍແມ່ນໜຶ່ງໃນບັນດາໜ້າທີ່ສຳຄັນເພື່ອປະກອບສ່ວນກໍ່ສ້າງເສັ້ນທາງຊາຍແດນລາວ - ຫວຽດນາມ ໃຫ້ເປັນເສັ້ນຊາຍແດນສັນຕິພາບແລະມິດຕະພາບ. ເສັ້ນຊາຍແດນລາວ-ຫວຽດນາມ ຄຸ້ມຄອງໂດຍແຂວງສະຫວັນນະເຂດ ແລະແຂວງກວາງຈີ ມີລວງຍາວ 108.476 ກິໂລແມັດ, ຄຸ້ມຄອງແຕ່ຫຼັກໝາຍ 576+865 ແມັດ ຫາຫຼັກໝາຍ 607 (1,2) ໃນນັ້ນມີ 50 ຈຸດທີ່ຕັ້ງ/66 ຫຼັກໝາຍແຫ່ງຊາດ ເສົາໝາຍ.

ປະຕິບັດແຜນການປັກຫຼັກໝາຍຖີ່ ແລະບູລະນະລະບົບຫຼັກໝາຍແຫ່ງຊາດຫວຽດນາມ - ລາວ ໂດຍລັດຖະບານ 2 ປະເທດໄດ້ຮັບການອະນຸມັດ. ບົນຈິດໃຈມິດຕະພາບ ແລະການຮ່ວມມືແບບພິເສດຫວຽດນາມ - ລາວ, ແຕ່ປີ 2008 ຮອດທ້າຍປີ 2012, ແຂວງກວາງຈີ ສົມທົບກັບສອງແຂວງ ສະຫວັນນະເຂດ ແລະສາລະວັນ ໄດ້ສຳເລັດໃນວຽກງານປັກຫຼັກໝາຍຖີ່ ແລະບູລະນະລະບົບຫຼັກໝາຍແຫ່ງຊາດ

ດ້ວຍ 62 ຈຸດທີ່ຕັ້ງ ດ້ວຍລວມຈຳນວນ 68 ປັກຫຼັກໝາຍ, ລື່ນຄາດໝາຍທີ່ວາງໄວ້. ໃນນັ້ນ, ລະຫວ່າງແຂວງກວາງຈິ ແລະແຂວງສະຫວັນນະເຂດ ມີ 31 ຈຸດທີ່ຕັ້ງ/ 35 ປັກຫຼັກໝາຍ (ນັບແຕ່ຫຼັກໝາຍເລກທີ 577 ຫາ ຫຼັກໝາຍເລກທີ 607)[15].

ການພົວພັນສົມທົບແກ້ໄຂວຽກງານປ້ອງກັນຊາຍແດນ ລະຫວ່າງບັນດາກຳລັງຢູ່ບັນດາດ່ານຊາຍແດນຂອງສອງແຂວງນັບມື້ນັບແໜ້ນແຟ້ນ. ການເຄື່ອນໄຫວຂອງຄະນະກຳມະການຊາຍແດນແຂວງກວາງຈິ ແລະຄະນະກຳມະການຊາຍແດນແຂວງສະຫວັນນະເຂດ, ລະຫວ່າງທະຫານຊາຍແດນ, ຕຳຫຼວດ ແລະການທະຫານແຂວງກວາງຈິກັບຕຳຫຼວດ ແລະການທະຫານແຂວງສະຫວັນນະເຂດໄດ້ຮັບການຮັກສາເປັນປະຈຳ. ການນຳຂອງພັກ, ອຳນາດການປົກຄອງບັນດາເມືອງຊາຍແດນ, ບັນດາກຳລັງຕຳຫຼວດ, ການທະຫານ, ທະຫານຊາຍແດນ, ການຕ່າງປະເທດ ແລະພາສີຂອງສອງຝ່າຍໄດ້ຈັດຕັ້ງການພົບປະແລກປ່ຽນ, ແລກປ່ຽນວິຊາຊີບ,

[15] ເດືອນ ມິຖຸນາ 2016, ແຂວງກວາງຈິ ໄດ້ເປັນເຈົ້າພາບ ແລະ ສົມທົບກັບ 2 ແຂວງສະຫວັນນະເຂດ ແລະ ສາລະວັນ ຈັດຕັ້ງກອງປະຊຸມສະຫຼຸບການປັກຫຼັກໝາຍຖີ່ ແລະບູລະນະລະບົບປັດຫຼັກໝາຍແຫ່ງຊາດ ຫວຽດນາມ - ລາວ ລະຫວ່າງ 3 ແຂວງ. ບົນພື້ນຖານຜົນສຳເລັດວຽກງານບູລະນະ ແລະປັກຫຼັກໝາຍຖີ່ລະບົບປັກຫຼັກໝາຍແຫ່ງຊາດ ຫວຽດນາມ - ລາວ, ໃນເດືອນ 12/2018, ແຂວງກວາງຈິ ໄດ້ເປັນເຈົ້າພາບ ແລະ ສົມທົບກັບ 2 ແຂວງສະຫວັນນະເຂດ ແລະ ສາລະວັນ ຈັດຕັ້ງກອງປະຊຸມມອບແຜນແຕ້ມສຳເລັດການກໍ່ສ້າງປັກຫຼັກໝາຍແຫ່ງຊາດໃຫ້ສອງແຂວງສະຫວັນນະເຂດ ແລະ ສາລະວັນ; ພ້ອມກັນນັ້ນ, ເປັນເອກະພາບຈັດແບ່ງການຄຸ້ມຄອງ ແລະ ປົກປັກຮັກສາປັກຫຼັກໝາຍແຫ່ງຊາດຕາມສັນຍາວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ ຫວຽດນາມ - ລາວ.

ຖອດຖອນບົດຮຽນ ສົມທົບວຽກງານຄຸ້ມຄອງຊາຍແດນ. ບັນດາການເຄື່ອນໄຫວການທູດ, ການທູດປະຊາຊົນ ແລະການພົບປະແລກປ່ຽນຂອງປະຊາຊົນສອງເບື້ອງຊາຍແດນໄດ້ຮັບການຈັດຕັ້ງເຊັ່ນ: ບັນດາການເຄື່ອນໄຫວພົບປະແລກປ່ຽນວັດທະນະທຳ, ສິລະປະ, ແຂ່ງຂັນບານສົ່ງ, ຢ້ຽມຢາມ ແລະປຸກລະດົມກັນ ເມື່ອປະສົບກັບຄວາມຫຍຸ້ງຍາກ, ໄພທຳມະຊາດ, ພະຍາດລະບາດ, ...

ເພື່ອເພີ່ມທະວີສາຍພົວພັນມິດຕະພາບ, ຄວາມສາມັກຄີຕິດພັນກັນລະຫວ່າງປະຊາຊົນສອງປະເທດຕື່ມອີກ, ພ້ອມກັນນັ້ນໄດ້ເພີ່ມທະວີການຄຸ້ມຄອງ, ປົກປັກຮັກສາເສັ້ນຊາຍແດນ, ປັກຫຼັກໝາຍ, ແຂວງກວາງຈິ ໄດ້ນຳໃຊ້ແຜນນະໂຍບາຍ "ບ້ານແຮກສ່ຽວ-ບ້ານສອງເບື້ອງຊາຍແດນ"[16]. ມາຮອດເດືອນ 3/2011, ໄດ້ສຳເລັດການຈັດຕັ້ງຮກສ່ຽວໃຫ້ທັງໝົດ 24/24 ຄູ່ບ້ານ ຢູ່ກົງກັນຂ້າມກັບຊາຍແດນລະຫວ່າງແຂວງກວາງຈິ ກັບແຂວງສະຫວັນນະເຂດ ແລະສາລະວັນ. ໃນນັ້ນ, ມີ 17/17 ຄູ່ບ້ານແຮກສ່ຽວຂອງເມືອງເຮືອງຮວາ, ແຂວງກວາງຈິ ກັບເມືອງ

---

[16] ເດືອນເມສາ 2005, ໄດ້ຈັດຕັ້ງທົດລອງບ້ານແຮກສ່ຽວລະຫວ່າງບ້ານກາຕັງ (ເທດສະບານລາວບາວ, ເມືອງເຮືອງຮວາ, ແຂວງກວາງຈິ) ແລະ ບ້ານແດນສະຫວັນ (ເມືອງເຊໂປນ, ແຂວງສະຫວັນນະເຂດ) ດ້ວຍບັນດາການເຄື່ອນໄຫວຕົ້ນຕໍຄື: ປ້ອງກັນຊາຍແດນ, ປັກຫຼັກໝາຍ, ບໍ່ເຮັດໃຫ້ເປ່ເພ ຫຼືຍ້າຍປັກຫຼັກໝາຍຊາຍແດນ, ເຄື່ອງໝາຍເສັ້ນຊາຍແດນ, ປ້າຍເຂດຊາຍແດນ, ເຂດອ້ອມຊາຍແດນ, ເຂດຫ້າມ. ປົກປັກຮັກສາສະພາບເດີມບໍ່ດັດແປງກະແສໄຫຼຂອງແມ່ນ້ຳແລະຫ້ວຍ; ປະຕິບັດຢ່າງເຂັ້ມງວດການໄປມາຜ່ານຊາຍແດນ; ບໍ່ໃຫ້ມີການແຊກຊຶມຕັ້ງພູມລຳເນົາ, ໄປເຮັດນາຢູ່ທີ່ອື່ນ....

ເຊໂປນ, ເມືອງນອງ, ແຂວງສະຫວັນນະເຂດ.

ຜ່ານການປະຕິບັດບັນດາເນື້ອໃນການແຮກສ່ຽວ, ການປ້ອງກັນແລະສະກັດກັ້ນການເຂົ້າ-ອອກເມືອງ, ເຂົ້າ-ອອກ ຊາຍແດນ, ເຜີຍແຜ່ສາສະໜາທີ່ຜິດກົດໝາຍ; ຕ້ານການຄ້າເຖື່ອນ, ຄ້າຂາຍສິນຄ້າຕ້ອງຫ້າມຂ້າມ ຊາຍແດນ; ການຂຸດຄົ້ນໄມ້ ແລະຊັບພະຍາກອນພື້ນເມືອງຢ່າງຜິດກົດໝາຍ; ການລ່າສັດສັດປ່າຫາຍາກ; ຊຸກເຊື່ອງ, ປົກບັງ, ຂົນສົ່ງ, ຊີ້ທາງໃຫ້ແກ່ພວກຄ້າເຖື່ອນ.... ໄດ້ປະຊາຊົນບ້ານທັງສອງເບື້ອງໃຫ້ຄຳໝັ້ນສັນຍາ ແລະປະຕິບັດດ້ວຍດີ[17]. ສະພາບໄປເຮັດນາທີ່ບ້ານອື່ນ,ໄປຢູ່ທີ່ບ້ານອື່ນ, ເອົາຜົວເອົາເມຍສອງເບື້ອງຊາຍແດນຢ່າງຜິດກົດໝາຍ, ການລ້ຽງປ່ອຍສັດຂ້າມຊາຍແດນແບບເສລີໄດ້ສິ້ນສຸດລົງ.

ນອກຈາກນັ້ນ, ການເຄື່ອນໄຫວສອງຝ່າຍເພື່ອປົກປັກຮັກສາ ແລະຄຸ້ມຄອງເສັ້ນຊາຍແດນ ແມ່ນໄດ້ຕຳຫຼວດຊາຍແດນແຂວງສະຫວັນນະເຂດ ແລະກອງບັນຊາການທະຫານຊາຍແດນແຂວງກວາງຈິປະຕິບັດຢ່າງເຂັ້ມງວດ, ສອດຄ່ອງກັບສັນຍາວ່າດ້ວຍລະບຽບຂໍ້ກຳນົດຊາຍແດນລະຫວ່າງ 2 ປະເທດ, ສົມທົບລາດຕະເວນເດືອນໜຶ່ງເທື່ອໜຶ່ງ. ຜ່ານນັ້ນ, ໄດ້ເຫັນດີເປັນເອກະພາບກ່ຽວກັບວິທີ

[17] ປະຊາຊົນສອງແຂວງໄດ້ສົມທົບກັນຢ່າງຕັ້ງໜ້າກັບ ກຳລັງສະເພາະກິດເຂອງແຕ່ລະຝ່າຍຈັດຕັ້ງ 2.239 ຄັ້ງ/15.432 ເທື່ອຄົນເຂົ້າຮ່ວມການລາດຕະເວນປ້ອງກັນຊາຍແດນ, ປັກຫຼັກໝາຍ, ສະໜອງແຫຼ່ງຂ່າວ 7.519 ຂ່າວ, ໃນນັ້ນມີແຫຼ່ງຂ່າວທີ່ມີຄ່າ 3.912 ຂ່າວ ກ່ຽວຂ້ອງເຖິງພວກອາດຊະຍາກຳຄ້າຂາຍຢາເສບຕິດ, ວັດຖຸລະເບີດ, ອັກຄີໄພ, ການຄ້າແມ່ຍິງຂ້າມຊາຍແດນ, ກໍ່ຄວາມວຸ້ນວາຍຕໍ່ຄວາມເປັນລະບຽບ ຮຽບຮ້ອຍ, ລັກຊັບສິນຂອງພົນລະເມືອງ...

ການຮັກສາ ແລະສ້ອມແປງບັນດາປັກຫຼັກໝາຍທີ່ຖືກເປ່ເພ, ຖາງກ້ຽງໃຫ້ແກ່ບັນດາປັກຫຼັກໝາຍແຫ່ງຊາດ[18].

ແຕ່ລະປີ, ກອງບັນຊາການທະຫານແຂວງກວາງຈິ ໄດ້ສົ່ງນາຍທະຫານໄປຝຶກອົບຮົມກ່ຽວກັບວຽກງານການທະຫານທ້ອງຖິ່ນ ແລະເປີດຊຸດຝຶກອົບຮົມວິຊາສະເພາະໃຫ້ແກ່ພະນັກງານແຂວງສະຫວັນນະເຂດ 01 ຊຸດ. ຊ່ວຍເຫຼືອກອງບັນຊາການທະຫານ ແລະກອງບັນຊາການປ້ອງກັນຄວາມສະຫງົບແຂວງສະຫວັນນະເຂດ ເຄື່ອງມືຮັບໃຊ້ການລາດຕະເວນ, ຄຸ້ມຄອງ ປ້ອງກັນຊາຍແດນ, ປ້ອງກັນ ແລະຕ້ານບັນດາປະເພດອາດຊະຍາກຳ. ຈັດຕັ້ງການກໍ່ສ້າງ ແລະຝຶກອົບຮົມວິຊາຊີບ ກ່ຽວກັບວຽກງານປ້ອງກັນຊາຍແດນໃຫ້ແກ່ເຈົ້າໜ້າທີ່ກຳລັງປ້ອງກັນຊາຍແດນແຂວງສະຫວັນນະເຂດ 89 ສະຫາຍ. ກອງບັນຊາການທະຫານ ຊາຍແດນແຂວງກວາງຈິ ໄດ້ປະກອບຄຳຄິດເຫັນໃຫ້ກອງບັນຊາການທະຫານຊາຍແດນ, ປະກອບຄຳຄິດເຫັນໃຫ້ກະຊວງ ປ້ອງກັນປະເທດກໍ່ສ້າງສຳນັກງານກອງຮ້ອຍທະຫານຊາຍແດນ 320/ ກອງບັນຊາການທະຫານ ແຂວງສະຫວັນນະເຂດ ດ້ວຍ ມູນຄ່າ

---

[18] ປີ 1998, ກອງບັນຊາການຕຳຫຼວດຊາຍແດນແຂວງສະຫວັນນະເຂດ ແລະ ກອງບັນຊາການທະຫານຊາຍແດນແຂວງກວາງຈິ ໄດ້ສົມທົບຈັດສົ່ງກຳລັງຟື້ນຟູບັນດາປັກຫຼັກໝາຍແຫ່ງຊາດທີ່ຖືກແຕກຫັກທີ Q6, Q8 ແລະ Q15. ປີ 2005, ຕຳຫຼວດທະຫານຊາຍແດນແຂວງສະຫວັນນະເຂດ ແລະ ທະຫານຊາຍແດນແຂວງກວາງຈິ ໄດ້ສົມທົບສ້ອມແປງບັນດາຫຼັກໝາຍ(ແຕ່ຫຼັກໝາຍເລກທີ Q6 ເຖິງຫຼັກໝາຍ R2) ເພື່ອປົກປັກຮັກສາຫຼັກໝາຍ.

ປະມານ 20 ຕື້ດົ່ງ[19].

ປະຕິບັດຂໍ້ຕົກລົງລະຫວ່າງລັດຖະບານຫວຽດນາມ ແລະລັດຖະບານລາວ ກ່ຽວກັບການແກ້ໄຂບັນຫາການຍົກຍ້າຍຕັ້ງພູມລໍາເນົາຕາມລໍາພັງ ແລະການແຕ່ງດອງທີ່ບໍ່ມີການຈົດທະບຽນຢູ່ເຂດຊາຍແດນຫວຽດນາມ - ລາວ; ໃນໄລຍະຜ່ານມາ, ແຂວງກວາງຈິ ແລະແຂວງສະຫວັນນະເຂດ ໄດ້ສົມທົບກັນຢ່າງຕັ້ງໜ້າ ເພື່ອດໍາເນີນການສືບສວນ, ສໍາຫຼວດ, ສະຖິຕິ, ຈັດແບ່ງ ແລະຍື່ນສະເໜີໃຫ້ຫົວໜ້າຄະນະຜູ້ແທນເຂດຊາຍແດນສອງປະເທດ ຫວຽດນາມ - ລາວ ອະນຸມັດບັນຊີລາຍຊື່ຜູ້ຍົກຍ້າຍຕັ້ງພູມລໍາເນົາຕາມລໍາພັງ ແລະການແຕ່ງດອງທີ່ຜິດກົດໝາຍຢູ່ເຂດຊາຍແດນ ໄດ້ຮັບອະນຸຍາດໃຫ້ອາໄສຢູ່ບ່ອນຂອງເຂົາເຈົ້າ. ພາຍຫຼັງໄດ້ຮັບຄວາມເຫັນດີອະນຸມັດຈາກທ່ານຫົວໜ້າຄະນະຜູ້ແທນຊາຍແດນຫວຽດນາມ - ລາວ, ການ

[19] ແຕ່ປີ 1989 ຫາ 2021, ກອງບັນຊາການທະຫານຊາຍແດນແຂວງກວາງຈິໄດ້ເຮັດວຽກໂດຍກົງ ແລະ ປະກອບຄໍາຄິດເຫັນໃຫ້ຄະນະກໍາມະການປະຊາຊົນແຂວງກວາງຈິ ໜູນຊ່ວຍກໍາລັງປ້ອງກັນຊາຍແດນ ແລະ ປະຊາຊົນຢູ່ເຂດຊາຍແດນຂອງ 2 ແຂວງ ສະຫວັນນະເຂດ ດ້ວຍລວມຍອດມູນຄ່າ 10 ຕື້ດົ່ງ ລວມມີການຢ້ຽມຢາມ ແລະ ມອບຂອງຂວັນໃນໂອກາດງານບຸນ, ບຸນປີໃໝ່, ວັນສ້າງຕັ້ງກໍາລັງດ້ວຍມູນຄ່າ 908 ລ້ານດົ່ງ; ມອບເຄື່ອງ VTĐsn ຈໍານວນ 02 ຊຸດໃຫ້ແກ່ກອງຮ້ອຍທະຫານຊາແດນ 321 ແລະ 322; ສະໜັບສະໜູນເພື່ອນລາວໃນການປ້ອງກັນ ແລະຕ້ານໄພທໍາມະຊາດ ແລະ ອັກຄີໄພ 05 ຄັ້ງ / 172 ຄັ້ງພະນັກງານນັກຮົບເຂົ້າຮ່ວມ; ໜູນຊ່ວຍສະບຽງອາຫານ ແລະ ວັດຖຸອຸປະກອນປິ່ນປົວພະຍາດເພື່ອປ້ອງກັນ ແລະ ຄວບຄຸມໂລກລະບາດໂຄວິດ-19, ແກ້ໄຂຜົນຮ້າຍຍ້ອນຫຼັງຈາກຝົນ ແລະ ໄພນໍ້າຖ້ວມໃນປີ 2020 ດ້ວຍມູນຄ່າກວ່າ 2 ຕື້ດົ່ງ.

ນຳສາມແຂວງໄດ້ຊີ້ນຳບັນດາຂະແໜງຍຸດຕິທຳ ແລະຕຳຫຼວດປະຕິບັດບັນດາລະບຽບການທີ່ຈຳເປັນໃຫ້ປະຊາຊົນຍື່ນສະເໜີຕໍ່ປະທານປະເທດ ເພື່ອອອກຂໍ້ຕົກລົງອອກສັນຊາດໃຫ້ແກ່ຜູ້ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງ ແລະການແຕ່ງດອງທີ່ບໍ່ມີການຈົດທະບຽນ. ການເປັນພົນລະເມືອງເພື່ອປົດປ່ອຍຄົນອົບພະຍົບ ແລະຜູ້ທີ່ບໍ່ໄດ້ແຕ່ງງານ. ມາຮອດໄລຍະນີ້, ລະຫວ່າງແຂວງກວາງຈິ ແລະສະຫວັນນະເຂດ ມີ 25 ຄອບຄົວ / 98 ຄົນ ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງດຳລົງຊີວິດຢູ່ແຂວງກວາງຈິ; 183 ກໍລະນີ ແຕ່ງດອງທີ່ບໍ່ມີການຈົດທະບຽນໄດ້ອາໄສຢູ່ແຂວງກວາງຈິ; 08 ຄອບຄົວ/46 ຄົນ ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງ ແລະ112 ກໍລະນີ ແຕ່ງດອງທີ່ບໍ່ມີການຈົດທະບຽນດຳລົງຊີວິດຢູ່ບາງຕາແສງຊາຍແດນອື່ນໆ ຂອງເມືອງເຮືອງຮວາ ແຂວງກວາງຈິ. ສຳລັບຊາວ ຫວຽດນາມຂອງແຂວງກວາງຈິທີ່ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງ ໄປຢູ່ເຂດຊາຍແດນແຂວງສະຫວັນນະເຂດ ມີ 411 ຄົນ (ຊາຍ 33 ຄົນ, ຍິງ 378 ຄົນ) ການຍົກຍ້າຍຕັ້ງພູມລຳເນົາຕາມລຳພັງ ແລະການແຕ່ງດອງທີ່ບໍ່ມີການຈົດທະບຽນຢູ່ເຂດຊາຍແດນຂອງເມືອງນອງ ແລະເມືອງເຊໂປນແຂວງສະຫວັນນະເຂດ.[20].

---

[20] ມາຮອດປະຈຸບັນ, ທ່ານປະທານປະເທດ ໄດ້ລົງນາມໃນມະຕິຕົກລົງເຂົ້າສັນຊາດຫວຽດນາມ ສຳລັບ 756 ກໍລະນີຍົກຍ້າຍຕັ້ງພູມລຳເນົາຕາມລຳພັງ ແລະ ແຕ່ງດອງທີ່ບໍ່ມີການຈົດທະບຽນຢູ່ເຂດຊາຍແດນຫວຽດນາມ - ລາວ ບົນຂອບເຂດ 2 ເມືອງຊາຍແດນເຮືອງຮວາ ແລະ ດັກການຣົງ ແຂວງກວາງຈິ. ຄະນະກຳມະການປະຊາຊົນບັນດາຕາແສງ ແລະເທດສະບານ ຂອງ 2 ເມືອງໄດ້ຂຶ້ນທະບຽນສຳມະໂນຄົວໃຫ້ 752 ກໍລະນີ (ບັນດາກໍລະນີຍັງເຫຼືອໄດ້ກັບ

ເດືອນທັນວາ 2019, ແຂວງກວາງຈິ ໄດ້ເປັນເຈົ້າພາບ, ສົມທົບກັບສອງແຂວງສະຫວັນນະເຂດ ແລະສາລະວັນ ຈັດຕັ້ງກອງປະຊຸມສະຫຼຸບການປະຕິບັດຂໍ້ຕົກລົງລະຫວ່າງ ລະຫວ່າງລັດຖະບານສອງປະເທດ ຫວຽດນາມ - ລາວ ກ່ຽວກັບການແກ້ໄຂບັນຫາຍົກຍ້ອຍຕັ້ງພູມລຳເນົາຕາມລຳພັງ ແລະສ້າງຄອບຄົວບໍ່ຖືກຕ້ອງໃນເຂດຊາຍແດນສອງປະເທດເພື່ອຕີລາຄາບັນດາໝາກຜົນທີ່ໄດ້ຮັບ; ແລກປ່ຽນ ແລະເຫັນດີເປັນເອກະພາບ ຕໍ່ແຜນການສົມທົບປະຕິບັດໃນໄລຍະຈະມາເຖິງ ເພື່ອຫຼຸດຜ່ອນສະພາບການຍົກຍ້າຍຖິ່ນຖານຄືນ ແລະຍົກຍ້າຍຕັ້ງພູມລຳເນົາຕາມລຳພັງຢູ່ເຂດຊາຍແດນລະຫວ່າງ ສອງປະເທດໃນທົ່ວສາມ ແຂວງ.

ປີ 2019, ແຂວງ ກວາງຈິ ໄດ້ເປັນເຈົ້າພາບ ແລະ ສົມທົບກັບຈັດຕັ້ງລາຍການ "ພົບປະແລກປ່ຽນມິດຕະພາບຊາຍແດນຫວຽດນາມ - ລາວ 2019 ຢູ່ຂັ້ນແຂວງ" ຢ່າງສຳເລັດຜົນ. ໃນປີ 2021, ໄດ້ຈັດຕັ້ງລາຍການພົບປະແລກປ່ຽນມິດຕະພາບການປ້ອງກັນປະເທດຊາຍແດນຫວຽດນາມ - ລາວ ເປັນຄັ້ງທຳອິດຂັ້ນລັດຖະມົນຕີກະຊວງປ້ອງກັນປະເທດທີ່ແຂວງກວາງຈິ. ເນື້ອໃນຂອງລາຍການລວມມີບັນດາການແລກປ່ຽນວັດທະນະທຳ, ສິລະປະ, ກິລາ, ໜູນຊ່ວຍດ້ານວັດຖຸ... ໄດ້ຮັບການຈັດຕັ້ງຢ່າງສຳເລັດຜົນ, ມີຄວາມແຜ່ກະຈາຍທີ່ໃຫຍ່ຫຼວງ ແລະສ້າງຄວາມປະທັບໃຈຢ່າງດີງາມ ແລະເລິກເຊິ່ງໃນໃຈຂອງບັນດາຜູ້ແທນ ແລະປະຊາຊົນຂອງສອງປະເທດ, ປະກອບສ່ວນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ

---

ເມືອລາວດຳເນີນທຸລະກິດ, ສະນັ້ນ ຍັງບໍ່ທັນມອບຂໍ້ຕົກລົງເຂົ້າສັນຊາດ ແລະ ການຂຶ້ນທະບຽນສຳມະໂນຄົວ); ແກ້ໄຂການຂຶ້ນທະບຽນພັກປະຈຳໃຫ້ 649 ກໍລະນີ, ອອກບັດປະຈຳຕົວໃຫ້ 541 ກໍລະນີ.

ທີ່ເປັນມູນເຊື້ອ, ຄວາມສາມັກຄີແບບພິເສດ ແລະການຮ່ວມມືຮອບດ້ານຫວຽດນາມ-ລາວ.

### *2. ການພົວພັນຮ່ວມມືດ້ານເສດຖະກິດ*

*2.1.ການຮ່ວມມືດ້ານກະສິກຳ-ປ່າໄມ້*

ກ້າວເຂົ້າສູ່ຊຸມປີ 90 ຂອງສະຕະວັດທີ XX, ເຖິງວ່າບັນດາຂະແໜງອຸດສາຫະກຳການກໍ່ສ້າງ, ຄົມມະນາຄົມແລະຂົນສົ່ງ ແລະການຄ້າຂອງແຂວງສະຫວັນນະເຂດ ແລະກວາງຈິໄດ້ມີການພັດທະນາຢ່າງພົ້ນເດັ່ນຄວນກໍຕາມ, ແຕ່ຂະແໜງກະສິກຳ ແລະ ປ່າໄມ້ຍັງເປັນທ່າແຮງ ແລະເປັນຂະແໜງທີ່ມີບົດບາດຫຼັກຂອງສອງແຂວງ. ສະນັ້ນ, ການຮ່ວມມືໃນຂົງເຂດກະສິກຳ ແລະປ່າໄມ້ ມີບົດບາດສຳຄັນໃນການຮ່ວມມືດ້ານເສດຖະກິດ, ບໍ່ພຽງແຕ່ປະກອບສ່ວນປັບປຸງຊີວິດການເປັນຢູ່ຂອງປະຊາຊົນເທົ່ານັ້ນ ຫາກຍັງເປັນພື້ນຖານເພື່ອພັດທະນາບັນດາຂະແໜງເສດຖະກິດອື່ນໆ ອີກດ້ວຍ.

ການຮ່ວມມືດ້ານກະສິກຳລະຫວ່າງແຂວງສະຫວັນນະເຂດ ແລະແຂວງກວາງຈິແຕ່ປີ 1989 ຫາ 2014 ໄດ້ສຸມໃສ່ບັນດາເນື້ອໃນດັ່ງນີ້: ການວາງແຜນດິນປູກຝັງ; ການພັດທະນາກະສິກຳແບບຍືນຍົງ ຕິດພັນກັບການກໍ່ສ້າງຊົນນະບົດໃໝ່; ສືບຕໍ່ຍູ້ແຮງການສະໜອງແນວພັນພືດ, ສັດລ້ຽງ, ຝຸ່ນ, ຢາປາບສັດຕູພືດ, ຢາປ້ອງກັນພະຍາດໃຫ້ແກ່ສັດລ້ຽງ ແລະສັດປີກ; ລົງທຶນກໍ່ສ້າງບັນດາກິດຈະການ ຊົນລະປະທານ ແລະສືບຕໍ່ກໍ່ສ້າງ ແລະບຳລຸງພະນັກງານຄຸ້ມຄອງ ແລະວິຊາສະເພາະດ້ານກະສິກຳ.

ໄດ້ກຳນົດ, ການວາງແຜນດິນປູກຝັງແມ່ນຄວາມຮຽກຮ້ອງທີ່ຈຳເປັນເພື່ອພັດທະນາກະສິກຳແບບຍືນຍົງ, ຈາກນັ້ນແຕ່ລະກ້າວຂຶ້ນສູ່ການກຸ້ມຕົວເອງດ້ານ

ສະບຽງອາຫານ, ໃນສອງປີ 1990 ແລະ1991, ດ້ວຍການຊ່ວຍເຫຼືອຂອງຊ່ຽວຊານກະສິກຳກວາງຈີ, ແຂວງສະຫວັນນະເຂດໄດ້ດຳເນີນແຜນການທົດລອງຢູ່ເມືອງນອງ. ຈາກປະສົບການຕົວຈິງຂອງເມືອງດັ່ງກ່າວແຂວງ ສະຫວັນນະເຂດ ໄດ້ຈັດຕັ້ງປະຕິບັດວາງແຜນທີ່ດິນທົ່ວແຂວງ. ຄຽງຄູ່ກັນນີ້, ແຂວງກວາງຈີໄດ້ຜັນຂະຫຍາຍທົດລອງໂຄງການພັດທະນາກະສິກຳຕິດພັນກັບການກໍ່ສ້າງຊົນນະບົດໃໝ່ຢູ່ບາງເມືອງຂອງແຂວງສະຫວັນນະເຂດ. ໂຄງການໄດ້ສຸມໃສ່ບັນດາໂຄງການຈຸດສຸມຄື: ມອບທີ່ດິນໃຫ້ແກ່ຄອບຄົວທີ່ເຮັດການປູກຝັງ; ນຳໃຊ້ຜົນງານທາງວິທະຍາສາດ ແລະເຕັກນິກເຂົ້າໃນ ການຜະລິດ ແລະລ້ຽງສັດ; ພັດທະນາເສດຖະກິດຄອບຄົວ; ກໍ່ສ້າງ ແລະພັດທະນາຊົນນະບົດໃໝ່.

ໃນລາຍການຮ່ວມມືປະຈຳປີ, ຂະແໜງກະສິກຳແຂວງກວາງຈີ ຮັບຜິດຊອບຫຼັກໃນການສະໜອງແນວພັນພືດ, ສັດລ້ຽງ, ຝຸ່ນ, ຢາປາບສັດຕູພືດ ແລະຢາປ້ອງກັນພະຍາດໃຫ້ແກ່ສັດລ້ຽງ ແລະສັດປີກໃຫ້ແຂວງສະຫວັນນະເຂດ. ປີ 1999, ກວາງຈີໄດ້ມອບສິ່ງໃຫ້ເມືອງເຊໂປນ ແລະເມືອງນອງດ້ວຍບັນດາແນວພັນເຂົ້າທີ່ໃຫ້ສະມັດຕະພາບສູງ ແລະໝາກຖົ່ວ, ມັນຕົ້ນ, ຢາງພາລາ, ກາເຟ ແລະໝາກພິກໄທ. ເພື່ອພັດທະນາການລ້ຽງສັດ, ຂະແໜງກະສິກຳຂອງແຂວງສະຫວັນນະເຂດໄດ້ນຳເຂົ້າສັດລ້ຽງ, ສັດປີກຫຼາຍປະເພດຄື ງົວພັນ, ໝູພັນຊີ້ນ, ໄຂ່ເປັດພັນ, ໄກ່ພັນ. ປີ 2004, ແຂວງກວາງຈີ ໄດ້ລົງທຶນສ້າງສວນກ້າເບ້ຍຈຳນວນໜຶ່ງຢູ່ເມືອງເຊໂປນ. ນອກຈາກນັ້ນ, ວຽກງານປ້ອງກັນພະຍາດ ແລະສະໜອງຝຸ່ນ ແລະຢາປາບສັດຕູພືດສອງຝ່າຍກໍໄດ້ ສົມທົບກັນຢ່າງຄົບຊຸດ ແລະມີປະສິດທິຜົນສູງ. ປີ 1998, ບັນດາວິສາຫະກິດແຂວງກວາງຈີ ໄດ້ເປີດຕົວແທນຈຳໜ່າຍຝຸ່ນບົ່ມຢູ່ບາງເມືອງຂອງແຂວງ

ສະຫວັນນະເຂດ. ໃນໄລຍະນີ້, ຄະນະກຳມະການຊາຍແດນແຂວງກວາງຈິໄດ້ສະໜອງຝຸ່ນ NPK 10 ໂຕນ ໃຫ້ເຂດເສດຖະກິດພິເສດ La Co. ປີ 2001, ຂະແໜງສັດຕະວະແພດແຂວງກວາງຈິ ໄດ້ໜູນຊ່ວຍຢາບາງ ຊະນິດໃຫ້ບັນດາເມືອງນອງ ແລະເມືອງພີນ ເພື່ອປ້ອງກັນພະຍາດປາກເປື່ອຍລົງເລັບໃຫ້ງົວຄວາຍ. ບັນດານັກຊ່ຽວຊານກະສິກຳແຂວງກວາງຈິ ໄດ້ສົມທົບຊ່ວຍເຫຼືອບັນດາພະນັກງານວິຊາສະເພາະແຂວງສະຫວັນນະເຂດ ເພື່ອສະກັດກັ້ນພະຍາດໃບເຫຼືອງໃນຕົ້ນເຂົ້າຢູ່ເມືອງເຊໂປນ.

ໂດຍເຫັນໄດ້ຄວາມສຳຄັນ ແລະຄວາມຫຍຸ້ງຍາກໃນວຽກງານຊົນລະປະທານຂອງແຂວງສະຫວັນນະເຂດ, ແຂວງກວາງຈິ ໄດ້ຍູ້ແຮງການຊ່ວຍເຫຼືອ ແລະລົງທຶນການສ້ອມແປງ, ຍົກລະດັບ ແລະກໍ່ສ້າງກິດຈະການຊົນລະປະທານຈຳນວນໜຶ່ງ. ແຕ່ປີ 1989 – 1990, ບັນດານັກຊ່ຽວຊານຊົນລະປະທານກວາງຈິ ສືບຕໍ່ສຳເລັດການອອກແບບ, ມອບເອກະສານອອກແບບໂຄງການຊົນລະປະທານຫ້ວຍບັກ (ເມືອງຈຳພອນ) ໂດຍພະແໜກຊົນລະປະທານ ບິ່ງຈິທຽນ ພວມຜັນຂະຫຍາຍຍັງບໍ່ແລ້ວຢູ່ທີ່ນີ້, ເພື່ອໃຫ້ແຂວງສະຫວັນນະເຂດສາມາດລົງມືກໍ່ສ້າງໄດ້ທັນທີ. ປີ 1991, ບັນດານັກຊ່ຽວຊານຊົນລະປະທານກວາງຈິໄດ້ດຳເນີນການສຳຫຼວດ ແລະວາງແຜນວິທີການພັດທະນາລະບົບທົດນ້ຳ ແລະລະບາຍນ້ຳໃຫ້ເມືອງນອງ ແລະສ້າງອ່າງເກັບນ້ຳຂະໜາດນ້ອຍ ແລະກາງ. ແຕ່ປີ 1999 ຫາປີ 2003, ບໍລິສັດຊົນລະປະທານກວາງຈິໄດ້ດຳເນີນກໍ່ສ້າງກິດຈະການຈຳນວນໜຶ່ງຢູ່ເມືອງ ວິລະບູລີ, ເມືອງນອງ, ເຊໂປນ ແລະເມືອງພີນ. ໃນປີ 2010, ບໍລິສັດນີ້ໄດ້ສືບຕໍ່ລົງທຶນ ກໍ່ສ້າງເຂື່ອນ, ອ່າງເກັບນ້ຳ ແລະລະບົບ ຄອງເໝືອງສົ່ງນ້ຳຢູ່ເຊໂປນ ແລະອ່າງຊົນລະປະທານເມືອງ

ຝົນ. ບັນດາກິດຈະການດັ່ງກ່າວໄດ້ປະກອບສ່ວນເຂົ້າໃນການ ຂະຫຍາຍເນື້ອທີ່ດິນປູກຝັງ ແລະຍົກສູງສະມັດຕະພາບຜະລິດເຂົ້າໃຫ້ແຂວງ ສະຫວັນນະເຂດ.

ແຕ່ປີ 2015 – 2021, ການຮ່ວມມືໃນຂົງເຂດກະສິກຳລະຫວ່າງແຂວງສະຫວັນນະເຂດ ແລະແຂວງກວາງຈີ ສືບຕໍ່ສຸມໃສ່ເຂົ້າໃນບັນດາເນື້ອໃນຄື: ການພັດທະນາກະສິກຳແບບຍືນຍົງຕິດພັນກັບການກໍ່ສ້າງຊົນນະບົດໃໝ່; ຍູ້ແຮງການສະໜອງແນວພັນພືດ, ສັດລ້ຽງ, ປຸ໋ຍ, ຢາປາບສັດຕູພືດ, ຢາປ້ອງກັນພະຍາດໃຫ້ແກ່ສັດລ້ຽງ ແລະສັດປີກ; ສືບຕໍ່ຝຶກອົບຮົມ ແລະບຳລຸງສ້າງພະນັກງານຄຸ້ມຄອງ ແລະວິຊາສະເພາະກະສິກຳ... ນອກນີ້, ແຂວງກວາງຈີໄດ້ສົ່ງນັກຊ່ຽວຊານໃນບັນດາຂົງເຂດການປູກຝັງ, ລ້ຽງສັດ ແລະສັດໃນນໍ້າ ໄປຊ່ວຍແຂວງສະຫວັນນະເຂດສ້າງຮູບແບບການຜະລິດຕາມການສະເໜີ.

ການຮ່ວມມືໃນດ້ານການປ່າໄມ້ລະຫວ່າງແຂວງກວາງຈີ ແລະສະຫວັນນະເຂດ ໄລຍະ 1989-2014 ສືບຕໍ່ຍູ້ແຮງຕາມ 2 ທິດຄື: ການຂຸດຄົ້ນ, ປຸງແຕ່ງ ແລະການຂົນສົ່ງຜະລິດຕະພັນປ່າໄມ້ເພື່ອສົ່ງອອກ; ການວາງແຜນ, ການປູກ ແລະປົກປັກຮັກສາປ່າໄມ້. ຄຽງຄູ່ບັນດາການເຄື່ອນໄຫວ ແລະການຊ່ວຍເຫຼືອດ້ານງົບປະມານ, ເຕັກນິກໃຫ້ແກ່ແຂວງ ສະຫວັນນະເຂດແລ້ວ, ການຮ່ວມມືລະຫວ່າງສອງຝ່າຍໃນໄລຍະ ນີ້ຕົ້ນຕໍແມ່ນໄດ້ດຳເນີນໄປດ້ວຍຮູບການຮ່ວມທຸລະກິດ, ຮ່ວມກັນແລະການ ລົງທຶນໂດຍກົງ.

ໃນຊຸມປີ 1991 ຫາ 1995, ບໍລິສັດປຸງແຕ່ງສົ່ງອອກຜະລິດຕະພັນປ່າໄມ້ຫວຽດນາມ - ລາວ ແຂວງ ກວາງຈີ ໄດ້ຮ່ວມທຸລະກິດກັບບໍລິສັດຂຸດຄົ້ນ ແລະ ປຸງແຕ່ງຜະລິດຕະພັນປ່າໄມ້ສົ່ງອອກ ແຂວງສະຫວັນນະເຂດ ເພື່ອຂຸດຄົ້ນໄມ້ທ່ອນຢູ່ບັນ

ດາເມືອງນອງ ແລະເມືອງຟິນ. ໃນໄລຍະນີ້, ບໍລິສັດໄດ້ລົງທຶນກໍ່ສ້າງ ໂຮງງານປຸງແຕ່ງໄມ້; ພື້ນຖານການຜະລິດເຄື່ອງເຟີນິເຈີ, ຫັດຖະກໍາ, ຫວາຍ ແລະໄມ້ໄຜ່ຢູ່ແຂວງສະຫວັນນະເຂດ.

ໃນດ້ານການຂົນສົ່ງໄມ້ສົ່ງອອກ, ມີຫຼາຍບໍລິສັດ, ໂຮງງານຂົນສົ່ງຂອງແຂວງກວາງຈິ ໄດ້ລົງນາມໃນສັນຍາຂົນສົ່ງໄມ້ທ່ອນສົ່ງອອກໃຫ້ບັນດາວິສາຫະກິດຢູ່ແຂວງສະຫວັນນະເຂດ ດ້ວຍຈໍານວນໄມ້ນັບເປັນພັນຕາແມັດຕໍ່ປີ. ຈາກບັນດາບ່ອນຂຸດຄົ້ນຢູ່ລາວ, ໄມ້ໄດ້ຖືກຂົນສົ່ງຕາມທາງຫຼວງແຫ່ງຊາດ ເລກ 9 ແລະທາງ 15Bໄປຍັງທ່າກໍາປັ່ນເກືອຫວຽດ (ກວາງຈິ), ແລ້ວສົ່ງອອກໄປຍັງຈີນ, ຍີ່ປຸ່ນ, ສ. ເກົາຫຼີ, ໄຕ້ຫວັນ ແລະປະເທດອື່ນໆໃນໂລກດ້ວຍທາງທະເລ.

ຄຽງຄ້າງກັນນັ້ນ, ວຽກງານວາງແຜນຜັງ, ປູກປ່າ ແລະປົກປັກຮັກສາປ່າໃນໄລຍະນີ້ ແມ່ນໄດ້ສອງແຂວງໃຫ້ຄວາມເອົາໃຈໃສ່ໃນການຮ່ວມມືລົງທຶນເພື່ອສະກັດກັ້ນການຂຸດຄົ້ນເຄື່ອງປ່າຂອງດົງ ຢ່າງບໍ່ມີລະບຽບ, ເຮັດໃຫ້ແຫຼ່ງຊັບພະຍາກອນອັນລໍ້າຄ່າຂອງແຂວງສະຫວັນນະເຂດຈົນໝົດກ້ຽງ. ແຂວງສະຫວັນນະເຂດໄດ້ມີນະໂຍບາຍບຸລິມະສິດ ເພື່ອຊຸກຍູ້ບັນດາວິສາຫະກິດກວາງຈິຊຸກຍູ້ການຮ່ວມມືໃນດ້ານນີ້.

ແຕ່ປີ 1989 ຫາ 1991, ຕາມຂໍ້ຕົກລົງການຮ່ວມມືກັບແຂວງສະຫວັນນະເຂດ, ຂະແໜງປ່າໄມ້ ແຂວງ ກວາງຈິ ໄດ້ຜັນຂະຫຍາຍໂຄງການສໍາຫຼວດ ແລະວາງແຜນປ່າໄມ້ໃຫ້ບັນດາເມືອງນອງ ແລະເມືອງຟິນ. ຜ່ານການລົງສໍາຫຼວດຂໍ້ມູນ, ແຂວງສະຫວັນນະເຂດ ໄດ້ວາງແຜນຜັງລະອຽດບັນດາເຂດທີ່ຈະໄດ້ຂຸດຄົ້ນ ແລະບັນດາເຂດປ່າທີ່ຕ້ອງປູກຄືນໃໝ່, ພ້ອມດຽວກັນນັ້ນ, ດໍາເນີນ

ມອບທີ່ດິນ ແລະມອບປ່າໃຫ້ບັນດາຄອບຄົວເພື່ອເບິ່ງແຍງ ແລະ ປົກປັກຮັກສາ. ແຂວງສະຫວັນນະເຂດກໍ່ມີນະໂຍບາຍບຸລິມະສິດໃຫ້ບັນດາວິສາຫະກິດຂອງກວາງຈິ ໃນການລົງທຶນປູກປ່າ. ປີ 2005, ບັນດາວິສາຫະກິດກວາງຈິ ເລີ່ມລົງທຶນປູກບັນດາປະເພດພືດອຸດສາຫະກຳທີ່ມີມູນຄ່າສົ່ງອອກສູງຄືຢາງພາລາ, ກາເຟ, ໝາກພິກໄທ. ໃນປີ 2007, ບໍລິສັດຫຸ້ນສ່ວນ ຢາງພາລາ QuaSa Geruco (ໂດຍບໍລິສັດໃຫຍ່ຢາງພາລາຫວຽດນາມ ຮ່ວມທຶນກັບບໍລິສັດຢາງພາລາກວາງຈິໄດ້ສ້າງຕັ້ງຂຶ້ນຢູ່ແຂວງສະຫວັນນະເຂດ) ໄດ້ລົງທຶນໃນເນື້ອທີ່ທັງໝົດແມ່ນ 18.600 ເຮັກຕາ, ໃນນັ້ນໄດ້ປູກຢາງພາລາ 2.800 ເຮັກຕາ ລວມຍອດການລົງທຶນແມ່ນ 150 ຕື້ດົ່ງ ຢູ່ເມືອງພີນ ແລະເມືອງນອງ.

ແຕ່ປີ 2015 ຫາ 2019, ຢູ່ແຂວງສະຫວັນນະເຂດ, ບັນດາອົງການ ແລະບຸກຄົນຕ່າງປະເທດ, ໃນນັ້ນມີວິສາຫະກິດ ກວາງຈິ ແລະຫວຽດນາມສືບຕໍ່ຜັນຂະຫຍາຍບັນດາໂຄງການປູກຕົ້ນຢາງພາລາ, ປູກຕົ້ນວັດຖຸດິບຜະລິດເຈ້ຍ, ປູກຕົ້ນເອົາໝາກມີຄຸນນະພາບສູງ…

ສາມາດເວົ້າໄດ້ວ່າ ການຮ່ວມມືດ້ານປ່າໄມ້ລະຫວ່າງສອງແຂວງແຕ່ປີ 1989 ຫາ 2019 ບໍ່ພຽງແຕ່ໄດ້ປະກອບສ່ວນສ້າງເງື່ອນໄຂສະດວກໃຫ້ແຂວງສະຫວັນນະເຂດຂອງລາວ ໃນການຊຸກຍູ້ການຂຸດຄົ້ນຊັບພະຍາກອນປ່າເພື່ອພັດທະນາເສດຖະກິດ, ປົກປັກຮັກສາ ແລະພັດທະນາແຫຼ່ງຊັບພະຍາກອນທີ່ລ້ຳຄ່າເທົ່ານັ້ນ, ຫາກຍັງຊ່ວຍໃຫ້ແຂວງກວາງຈິສ້າງວຽກເຮັດງານທຳໃຫ້ຄົນງານນັບພັນຄົນອີກດ້ວຍ.

ໃນປີ 2020 ແລະ2021, ການລະບາດຂອງພະຍາດໂຄວິດ-19 ໄດ້ສົ່ງຜົນກະທົບຢ່າງກວ້າງຂວາງ ແລະເລິກເຊິ່ງຫາທຸກປະເທດໃນທົ່ວໂລກ. ເຖິງຢ່າງໃດກໍຕາມ, ຢູ່ແຂວງກວາງຈິ, ບັນດາການເຄື່ອນໄຫວການທູດ, ໃນນັ້ນບັນດາການເຄື່ອນໄຫວຮ່ວມມືກັບບັນດາແຂວງເພື່ອນລາວທີ່ມີຊາຍແດນຕິດກັບແຂວງ ຍັງຄົງໄດ້ຮັບການປັບປຸງ ແລະຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບສະພາບການປ້ອງກັນ, ຕ້ານພະຍາດໃນສະພາບການໃໝ່. ບັນດາຂັ້ນການນຳແຂວງ, ບັນດາທ້ອງຖິ່ນທີ່ຮ່ວມຊາຍແດນ, ບັນດາອົງການຈັດຕັ້ງມະຫາຊົນ, ບັນດາພະແນກ, ຂະແໜງການຂອງສອງແຂວງ ຍາມໃດກໍ່ຮັກສາລະບອບການແລກປ່ຽນຂໍ້ມູນຂ່າວສານ, ສົມທົບກັນເຮັດວຽກເປັນປະຈຳ ແລະບັນລຸໄດ້ໝາກຜົນການຮ່ວມມືຢ່າງແທດຈິງ. ກວາງຈິ ແລະ ສະຫວັນນະເຂດ ຍັງສົມທົບ ແລະຊ່ວຍເຫຼືອເຊິ່ງກັນ ແລະກັນເພື່ອພັດທະນາເສດຖະກິດ (ໃນນັ້ນໄດ້ສຸມໃສ່ການຮ່ວມມື ໃນຂົງເຂດກະສິກຳ ແລະປ່າໄມ້) ແລະແກ້ໄຂຄວາມທຸກຍາກ...

*2.2. ການຮ່ວມມືດ້ານອຸດສາຫະກຳ ແລະການກໍ່ສ້າງ.*

ໃນໄລຍະແຕ່ປີ 1992 ຫາ 2014, ບົນພື້ນຖານການພັດທະນາຂອງເສດຖະກິດ, ແຂວງສະຫວັນນະເຂດ ແລະກວາງຈິ ສືບຕໍ່ຊຸກຍູ້ການຮ່ວມມືໃນຂົງເຂດອຸດສາຫະກຳ, ການກໍ່ສ້າງພື້ນຖານ ແລະຄົມມະນາຄົມ ເພື່ອປະກອບສ່ວນເຂົ້າໃນພາລະກິດ "ຫັນເປັນອຸດສາຫະກຳ ແລະກັນເປັນທັນສະໄໝ".

ການຮ່ວມມືໃນດ້ານອຸດສາຫະກຳ-ຫັດຖະກຳ:

ແຕ່ປີ 1989 ຫາ 2014, ການຮ່ວມມືດ້ານອຸດສາຫະກຳ - ຫັດຖະກຳໄດ້ມີຄວາມກ້າວໜ້າຢ່າງກະໂດດຂັ້ນ, ປະກອບ ສ່ວນໃນການພັດທະນາເສດຖະກິດຂອງ

ສອງແຂວງຢ່າງພໍສົມຄວນ.

ໃນຊຸມປີ 1991 ຫາ 1998, ຍ້ອນນະໂຍບາຍລົງທຶນໄປຕ່າງປະເທດຂອງຫວຽດນາມ ຍັງມີບາງຂໍ້ບົກຜ່ອງ, ແຫຼ່ງທຶນຂອງບັນດາວິສາຫະກິດຍັງຖືກຈໍາກັດ ສະນັ້ນສອງແຂວງຍັງຄົງດໍາເນີນໂຄງການຂະໜາດນ້ອຍເປັນຕົ້ນຕໍ, ຮຽກຮ້ອງການລົງທຶນໜ້ອຍ. ໄລຍະນີ້, ບາງບໍລິສັດ, ໂຮງງານຜະລິດວັດສະດຸກໍ່ສ້າງຂອງກວາງຈິໄດ້ຮ່ວມທຸລະກິດ ແລະຮ່ວມກັນເພື່ອພັດທະນາການຜະລິດວັດສະດຸກໍ່ສ້າງຢູ່ແຂວງສະຫວັນນະເຂດ (ບໍລິສັດຫຸ້ນສ່ວນກະເບື້ອງກວາງຈິຮ່ວມທຸລະກິດກັບຂະແໜງອຸດສາຫະກໍາ ສະຫວັນນະເຂດສະໜອງຖ່ານຫີນ ແລະເຕັກນິກເພື່ອໃຫ້ແຂວງສະຫວັນນະເຂດ ພັດທະນາການຜະລິດກະເບື້ອງ ; ລົງທຶນຍົກລະດັບໂຮງງານກະເບື້ອງຢູ່ແຂວງສະຫວັນນະເຂດ...). ໃນຂົງເຂດວິສະວະກໍາກົນຈັກ, ການຮ່ວມມືລະຫວ່າງສອງຝ່າຍ ໄດ້ສຸມໃສ່ຍົກລະດັບບັນດາໂຮງງານ,ໂຮງຈັກເກົ່າ, ທັງລົງທຶນກໍ່ສ້າງໂຮງງານກົນຈັກໃຫມ່ຈໍານວນຫນຶ່ງ.

ການຮ່ວມມືຜະລິດສິນຄ້າສົ່ງອອກລະຫວ່າງສອງຝ່າຍໃນຊຸມປີນີ້ກໍໄດ້ພັດທະນາຢ່າງແຂງແຮງກວ່າ. ໂບັນດາໂຮງງານຜະລິດໄມ້ໄຜ່, ຫວາຍ ແລະ ຫັດຖະກໍາເພື່ອສົ່ງອອກຢູ່ແຂວງສະຫວັນນະເຂດ (ໂດຍ ບໍລິສັດຂຸດຄົ້ນຜະລິດຕະພັນປ່າໄມ້ກວາງຈິຮ່ວມທຸລະກິດກັບບໍລິສັດຜະລິດເຄື່ອງຫັດຖະກໍາສະຫວັນນະເຂດລົງທຶນກໍ່ສ້າງ) ໄດ້ເຄື່ອນໄຫວຢ່າງມີປະສິດທິຜົນ. ບັນດາບໍລິສັດຮ່ວມທຸລະກິດການຕັດຫຍິບສົ່ງອອກຢູ່ແຂວງສະຫວັນນະເຂດ ໂດຍບໍລິສັດຂາເຂົ້າ-ຂາອອກກວາງຈິ ລົງທຶນກໍ່ສ້າງ ໄດ້ສ້າງວຽກເຮັດງານທໍາໃຫ້ແຮງງານນັບຮ້ອຍຄົນຂອງບັນດາທ້ອງຖິ່ນຂອງສອງເບື້ອງ.

ນັບແຕ່ປີ 1999 ເປັນຕົ້ນມາ, ພາຍຫຼັງມີການກໍານົດກ່ຽວກັບການລົງທຶນ

ຂອງບັນດາວິສາຫະກິດຫວຽດນາມໄປຕ່າງ ປະເທດ ແລະນະໂຍບາຍໜູນຊ່ວຍ, ຊຸກຍູ້ ບັນດາວິສາຫະກິດຫວຽດນາມ ເຂົ້າມາລົງທຶນຢູ່ລາວຂອງລັດຖະບານຫວຽດນາມ, ການເຄື່ອນໄຫວລົງທຶນການຜະລິດ ແລະດຳເນີນທຸລະກິດຂອງບັນດາວິສາຫະກິດ ແຂວງກວາງຈິ ຢູ່ແຂວງສະຫວັນນະເຂດ ໄດ້ພັດທະນາຢ່າງວ່ອງໄວ; ການລົງທຶນ ໄດ້ເພີ່ມຂຶ້ນຫຼາຍກວ່າປຽບກັບໄລຍະຜ່ານມາ. ບໍລິສັດ ດາວຮຸ່ງ ໄດ້ລົງທຶນ 1 ລ້ານ USD ເພື່ອສ້າງໂຮງງານດິນຈີ່ຢູ່ແຂວງສະຫວັນນະເຂດ. ນອກຈາກນັ້ນ, ມີວິສາ ຫະກິດເອກະຊົນຈຳນວນໜຶ່ງໄດ້ລົງທຶນກໍ່ສ້າງບັນດາ ອຸປະກອນໄຟຟ້າພົນລະເຮືອນ, ເຄື່ອງເຟີນີເຈີຢູ່ຫຼາຍທ້ອງຖິ່ນຂອງແຂວງ. ບໍລິສັດການຢາກວາງຈິ ໄດ້ລົງທຶນກໍ່ສ້າງ ໂຮງງານປຸງແຕ່ງ; ໂຮງງານໄຟຟ້າ ແລະນ້ຳປະປາ ແຂວງກວາງຈິ ໄດ້ລົງທຶນຍົກລະດັບ ໂຮງງານນ້ຳປະປາໃຫ້ແຂວງສະຫວັນນະເຂດ...

ບົນຈິດໃຈຂອງສັນຍາວ່າດ້ວຍການຮ່ວມມື ດ້ານພະລັງງານໄຟຟ້າທີ່ ລັດຖະບານສອງປະເທດໄດ້ລົງນາມໃນປີ 1998, ຂະແໜງໄຟຟ້າກວາງຈິໄດ້ລົງທຶນ ຍົກລະດັບ, ສ້ອມແປງ ແລະກໍ່ສ້າງໂຄງການໄຟຟ້ານ້ຳຕົກຈຳນວນໜຶ່ງ, ພ້ອມກັນ ນັ້ນກໍ່ສ້າງສາຍສົ່ງໄຟຟ້າຈຳນວນໜຶ່ງສະໜອງໄຟຟ້າໃຫ້ແຂວງສະຫວັນນະເຂດ. ພ້ອມ ກັນນັ້ນ, ໄດ້ລົງທຶນຍົກລະດັບກິດຈະການໄຟຟ້ານ້ຳຕົກຢູ່ເມືອງເຊໂປນ; ລົງທຶນກໍ່ສ້າງ 35 kV ຈາກດົງຮ່າ-ດ່ານສາກົນລາວບາວ ຫາເມືອງເຊໂປນເພື່ອສະໜອງໄຟຟ້າ ໃຫ້ແກ່ດ່ານສາກົນແດນສະຫວັນ ແລະເມືອງເຊໂປນ, ເມືອງນອງ, ເມືອງພີນ ແລະເມືອງວິລະບູລີ. ຮອດປີ 2014, ຂະແໜງການໄຟຟ້າຂອງແຂວງ ກວາງຈິ ໄດ້ ສະໜອງໄຟຟ້າໃຫ້ສອງແຂວງຂອງລາວ ດ້ວຍກຳລັງ 160 ລ້ານ KW/ຊມ, ເທົ່າກັບ 10 ລ້ານ USD.

ໃນຊຸມປີມໍ່ໆມານີ້, ປະລິມານການຜະລິດໄຟຟ້າທີ່ຂາຍໃຫ້ແຂວງສະຫວັນນະເຂດຂອງບໍລິສັດໄຟຟ້າກວາງຈິຖືກຫຼຸດລົງຍ້ອນຝ່າຍເບື້ອງລາວສາມາດສະໜອງໄຟຟ້າດ້ວຍຕົນເອງ.

*ການຮ່ວມມືໃນການກໍ່ສ້າງ:*

ການຮ່ວມມືດ້ານການກໍ່ສ້າງແຂວງສະຫວັນນະເຂດກັບກວາງຈິ ແຕ່ປີ 1989 ເປັນຕົ້ນມາ ໄດ້ຮັບການປະຕິບັດໃນຫຼາຍຮູບແບບ, ໂດຍມີການເຂົ້າຮ່ວມຂອງຫຼາຍພາກສ່ວນເສດຖະກິດ, ທັງພາກລັດ ແລະ ພາກເອກະຊົນ. ນອກຈາກບັນດາຮູບແບບການຮ່ວມມື, ຮ່ວມທຸລະກິດແລ້ວ, ບັນດາວິສາຫະກິດຍັງໄດ້ຊຸກຍູ້ການລົງທຶນກໍ່ສ້າງບັນດາກິດຈະການດ້ວຍຮູບການຮັບເໝົາໂດຍກົງ. ຢູ່ແຂວງສະຫວັນນະເຂດ, ແຕ່ປີ 2003 – 2004, ແຂວງກວາງຈິ ໄດ້ລົງທຶນກໍ່ສ້າງ ໂຮງຮຽນ 2 ແຫ່ງ ຢູ່ເມືອງເຊໂປນ. ປີ 2005, ໄດ້ສ້າງໂຮງຮຽນປະຖົມຢູ່ເມືອງພີນ. ປີ 2006, ໄດ້ລົງທຶນ 300 ລ້ານດົ່ງເພື່ອສ້າງສະຖານີຄວບຄຸມດ່ານຊາຍແດນແດນວິໄລຢູ່ເມືອງນອງ. ປີ 2012, ກວາງຈິ ໄດ້ສົມທົບກັບ ກະຊວງປ້ອງກັນປະເທດລົງທຶນກໍ່ສ້າງຫໍພິພິທະພັນພັນທະມິດສູ້ຮົບລາວ-ຫວຽດນາມຢູ່ບ້ານດົງ, ເມືອງເຊໂປນ. ໃນຂະນະນັ້ນ, ແຂວງກວາງຈິໄດ້ລົງທຶນ 600 ລ້ານດົ່ງເພື່ອກໍ່ສ້າງໂຮງຮຽນປະຖົມຢູ່ເມືອງສະໝ້ວຍ. ໃນຊຸມປີ 2011 – 2013, ແຂວງກວາງຈິ ໄດ້ລົງທຶນ 6 ຕື້ດົ່ງເພື່ອກໍ່ສ້າງສໍານັກງານອະທິການບໍດີຂອງໂຮງຮຽນການເມືອງ ແລະບໍລິຫານງານແຂວງສະຫວັນນະເຂດ.

ສົກປີ 2017-2019, ແຂວງກວາງຈິໄດ້ຫັກງົບປະມານ 06 ຕື້ດົ່ງ ເພື່ອໜູນຊ່ວຍແຂວງສະຫວັນນະເຂດລົງທຶນກໍ່ສ້າງ 02 ໂຄງການຄື: ໂຮງຮຽນມັດທະຍົມຕອນຕົ້ນບ້ານໂພນໄຊ ແລະສຸກສາລາບ້ານແດນສະຫວັນ; ໄລຍະ 2020-2022, ໜູນຊ່ວຍ

06 ຕື້ກີບເພື່ອກໍ່ສ້າງ 3 ກິຈະການຄື: ໂຮງຮຽນອະນຸບານສູນກາງເມືອງນອງ, ສຸກສາລາເຂດຊາແລນ ແລະກິດຈະການທີ່ພັກໃຫ້ແພດໝໍ, ສຸກສາລາແດນວິໄລ; ສະໜອງງົບປະມານ 12 ຕື້ກີບໃຫ້ບັນດາອົງການ, ຫົວໜ່ວຍໃນແຂວງປະຕິບັດບັນດາການຝຶກອົບຮົມ, ບຳລຸງສ້າງ, ສິ່ງມອບເຕັກນິກ, ການຈັດຊື້ອຸປະກອນໜູນຊ່ວຍບັນດາອົງການ, ຫົວໜ່ວຍຢູ່ແຂວງສະຫວັນນະເຂດ.

*2.3.ການຮ່ວມມືດ້ານການຄົມມະນາຄົມ-ຂົນສົ່ງ*

ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ແລະຄວາມຕ້ອງການການເດີນ ທາງໄປມາທີ່ນັບມື້ນັບເພີ່ມຂຶ້ນຂອງປະຊາຊົນສອງເບື້ອງ, ແຂວງສະຫວັນນະເຂດ ແລະແຂວງກວາງຈິຈຶ່ງສືບຕໍ່ຊຸກຍູ້ການຮ່ວມມືໃນຂົງເຂດຄົມມະນາຄົມຂົນສົ່ງ. ແຕ່ປີ 1989 ຫາ 2014, ໃນຂົງເຂດຄົມມະນາຄົມ ແລະຂົນສົ່ງ, ສອງແຂວງໄດ້ສຸມໃສ່ການຍົກລະດັບ, ສ້ອມແປງ ແລະກໍ່ສ້າງບັນດາກິດຈະການຄົມມະນາຄົມ, ພ້ອມທັງຊຸກຍູ້ການຮ່ວມມືການຂົນສົ່ງສິນຄ້າ.

ກວາງຈິໄດ້ເອົາໃຈໃສ່ລົງທຶນຍົກລະດັບ ແລະສ້າງບັນດາເສັ້ນທາງຈະລາຈອນທີ່ສຳຄັນເຊື່ອມຕໍ່ສອງເບື້ອງ, ໃນນັ້ນທາງຫຼວງແຫ່ງຊາດ 9 ໄດ້ຖືເປັນເສັ້ນທາງສຳຄັນເພື່ອສ້າງເງື່ອນໄຂສະດວກໃຫ້ແຂວງສະຫວັນນະເຂດຊຸກຍູ້ການນຳເຂົ້າ ແລະສົ່ງອອກສິນຄ້າອອກໄປຕ່າງປະເທດ ແລະແຂວງກວາງຈິ ໄດ້ລົງທຶນການຜະລິດ ແລະເຮັດທຸລະກິດສິນຄ້າຢູ່ບັນດາທ້ອງຖິ່ນຂອງລາວ. ກະຊວງຄົມມະນາຄົມ ແລະການຂົນສົ່ງໄດ້ລົງທຶນຍົກລະດັບທາງຫຼວງແຫ່ງຊາດ 9 (ທັງຢູ່ແຂວງກວາງຈິ ແລະແຂວງຂອງລາວ). ປີ 2005, ກະຊວງປ້ອງກັນປະເທດໄດ້ລົງທຶນກໍ່ສ້າງເສັ້ນທາງລະຫວ່າງ

ແຂວງທີ່ເຊື່ອມຕໍ່ບັນດາເມືອງນອງ, ເຊໂປນ. ແຂວງກວາງຈິໄດ້ລົງທຶນ 12.488 ຕື້ດົ່ງ ເພື່ອກໍ່ສ້າງເສັ້ນທາງໃໝ່ຫາ 3 ຄູ່ດ່ານປະເພນີຄື: ຕະຫຼຸງ (ເຮືອງຮວາ) - ກະໂລ (ເຊໂປນ), ບ້ານແຈນ (ເຮືອງຮວາ) - ບ້ານ ໃໝ່ (ເຊໂປນ), ບ້ານແທ່ງ (ເຮືອງຮວາ) - ແດນວິໄລ (ເມືອງນອງ) ດ້ວຍລວງຍາວ ທັງໝົດ 4.69 ກິໂລແມັດ.

ການປະຕິບັດສັນຍາ ແລະອະນຸສັນຍາກ່ຽວກັບການຈັດຕັ້ງປະຕິບັດສັນຍາ ເພື່ອສ້າງເງື່ອນໄຂສະດວກໃຫ້ແກ່ພາຫະນະທາງບົກໄດ້ໄປມາຜ່ານຊາຍແດນ ລະຫວ່າງ ລັດຖະບານແຫ່ງ ສ.ສ ຫວຽດນາມ ແລະລັດຖະບານແຫ່ງ ສ.ປ.ປ ລາວ; ນັບແຕ່ປີ 1996 ເປັນຕົ້ນມາ, ລະຫວ່າງແຂວງກວາງຈິ ແລະແຂວງສະຫວັນນະເຂດ, ສອງສາຍຂົນສົ່ງຜູ້ໂດຍສານໄດ້ຮັບການສ້າງຕັ້ງຂຶ້ນໂດຍສະຫະກອນຂົນສົ່ງລົດຍົນ ລາວບາວ ແລະບໍລິສັດຫຸ້ນສ່ວນລົດຍົນເລກ 1 ກວາງຈິ ເພື່ອເຂົ້າຮ່ວມຂຸດຄົ້ນ, ຮັບໃຊ້ໃຫ້ແກ່ການໄປມາ. ແຕ່ວ່າ, ມາຮອດປີ 2012, ບັນດາສາຍການຂົນສົ່ງຜູ້ໂດຍສານເຫຼົ່ານີ້ໄດ້ຖືກຢຸດເຊົາ. ໃນດ້ານການຂົນສົ່ງສິນຄ້າລະຫວ່າງສອງແຂວງກວາງຈິ ແລະ ແຂວງສະຫວັນນະເຂດ ແລະ ສາລະວັນ, ພະແນກຄົມມະນາຄົມ ແລະການຂົນສົ່ງກວາງຈິໄດ້ອອກປຶ້ມອະນຸຍາດລົດຂົນສົ່ງລະຫວ່າງປະເທດໃຫ້ປະມານ 2.500 ຄັນຕໍ່ປີ.

ເດືອນສິງຫາ 2017, ແຂວງກວາງຈິ ໄດ້ສົມທົບກັບແຂວງສະຫວັນນະເຂດ ຈັດຕັ້ງພິທີເປີດການກໍ່ສ້າງຂົວສະເອີດ, ເຊິ່ງເປັນຂົວເຊື່ອມຕໍ່ 2 ດ່ານຊາຍແດນສາກົນ ລາວບາວ ແລະ ແດນສະຫວັນ ດ້ວຍຍອດມູນຄ່າກໍ່ສ້າງ 32,9 ຕື້ດົ່ງ ຈາກແຫຼ່ງທຶນ ODA ຂອງຫວຽດນາມຊ່ວຍເຫຼືອ ໃຫ້ລາວ ປີ 2017. ມາຮອດປະຈຸບັນ, ຂົວສະເອີດໄດ້ກໍ່ສ້າງສຳເລັດ ແລະ ໄດ້ມອບຮັບເອົາເຂົ້ານຳໃຊ້, ຕອບສະໜອງຄວາມຕ້ອງການດ້ານການສັນຈອນທີ່ເປັນມື້ນັບພົ່ມຂຶ້ນດ້ານຈຳນວນຄົນ, ສິນຄ້າ ແລະ ພາຫະນະໄປມາຜ່ານ

ດ່ານ, ປະກອບສ່ວນພັດທະນາເສດຖະກິດ-ສັງຄົມລະຫວ່າງ 2 ແຂວງເວົ້າສະເພາະ ແລະ ສອງປະເທດຫວຽດນາມ ແລະ ລາວ ເວົ້າລວມ.

ຄຽງຂ້າງນັ້ນ, ໃນຊຸມປີມໍ່ໆມານີ້, ການວາງແຜນໂຄງລ່າງຄົມມະນາຄົມທີ່ເຊື່ອມຕໍ່ກວາງຈິ ແລະສະຫວັນນະເຂດ ກໍໄດ້ຮັບຄວາມເອົາໃຈໃສ່. ແຂວງກວາງຈິໄດ້ສົມທົບກັນຢ່າງຕັ້ງໜ້າກັບບັນດາກະຊວງ, ຂະແໜງການສູນກາງ ແລະພາກສ່ວນທີ່ກ່ຽວຂ້ອງເພື່ອສໍາເລັດການວາງແຜນຜັງທ່າບົກບິນແລວເສດຖະກິດທາງເລກ 9; ວາງແຜນຜັງສາຍທາງດ່ວນກາມໂລ້-ລາວບາວ...ໃນຂອບເຂດການຮ່ວມມື ລະຫວ່າງແຂວງກວາງຈິ ແລະສະຫວັນນະເຂດ, ພະແນກຄົມມະນາຄົມແລະຂົນສົ່ງກວາງຈິ ໄດ້ຈັດຕັ້ງຄະນະຜູ້ແທນເຂົ້າຮ່ວມບັນດາກອງປະຊຸມ, ສໍາມະນາ, ສົນທະນາ, ການຮ່ວມມືລົງທຶນຄື: ກອງປະຊຸມຮ່ວມມືດ້ານການຂົນສົ່ງ ຫວຽດນາມ - ລາວ ທີ່ແຂວງສະຫວັນນະເຂດ ໃນປີ 2007; ກອງປະຊຸມເຊື່ອມຕໍ່ຄົມມະນາຄົມການຂົນສົ່ງຜ່ານດ່ານຊາຍແດນເຂດອະນຸພາກພື້ນແມ່ນໍ້າຂອງປີ 2019 ທີ່ແຂວງສະຫວັນນະເຂດ…

ບົນພື້ນຖານການຮ່ວມມືທີ່ສະເໝີພາບຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະຍາດການບຸລິມະສິດໃຫ້ກັນ, ແຂວງສະຫວັນນະເຂດ ແລະກວາງຈິໄດ້ເສີມຂະຫຍາຍແຫຼ່ງກໍາລັງພາຍໃນ ແລະທ່າແຮງຂອງຕົນເຂົ້າຂະບວນການຮ່ວມມືພັດທະນາຄົມມະນາຄົມ ແລະການຂົນສົ່ງ. ຜົນສໍາເລັດໃນການຮ່ວມມືດັ່ງກ່າວໄດ້ສ້າງເງື່ອນໄຂໃຫ້ສອງແຂວງ, ພິເສດແມ່ນແຂວງຂອງລາວ ໄດ້ຊຸກຍູ້ການ ເຄື່ອນໄຫວນໍາເຂົ້າ-ສົ່ງອອກ ແລະຕອບສະໜອງຄວາມຕ້ອງການໄປມາຂອງປະຊາຊົນນັບມື້ ນັບເພີ່ມຂຶ້ນ.

*2.4. ການຮ່ວມມືດ້ານການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ*

ໃນໄລຍະປີ 1989 ຫາ 2014, ວົງເງິນການນຳເຂົ້າ ແລະສົ່ງອອກລະຫວ່າງສອງແຂວງນັບມື້ນັບເພີ່ມຂຶ້ນ. ການເຂົ້າຮ່ວມການນຳເຂົ້າ ແລະສົ່ງອອກລະຫວ່າງສອງຝ່າຍບໍ່ພຽງແຕ່ແມ່ນລັດວິສາຫະກິດເທົ່ານັ້ນ, ຫາກຍັງມີບັນດາວິສາຫະກິດເອກະຊົນ ແລະບຸກຄົນເຂົ້າຮ່ວມອີກດ້ວຍ. ການນຳເຂົ້າ ແລະສົ່ງອອກຂອງສິນຄ້າໄດ້ຮັບການເປີດກວ້າງທັງດ້ານປະລິມານ ແລະປະເພດ, ບໍ່ພຽງແຕ່ເພື່ອຮັບໃຊ້ຄວາມຕ້ອງການຜະລິດ ແລະການບໍລິໂພກຢູ່ທ້ອງຖິ່ນຂອງ 3 ແຂວງເທົ່ານັ້ນ, ຫາກຍັງເປັນການແລກປ່ຽນກັບຄູ່ຮ່ວມມືທີ 3 (*ໃນຮູບແບບການນຳເຂົ້າຊົ່ວຄາວແລ້ວ ສົ່ງອອກຄືນໃໝ່*).

ຍ້ອນຄວາມຮຽກຮ້ອງຕ້ອງການດ້ານການແລກປ່ຽນສິນຄ້າ ແລະການເດີນທາງໄປມານັບມື້ນັບເພີ່ມຂຶ້ນ, ແຂວງສະຫວັນນະເຂດ ແລະກວາງຈິໄດ້ສະເໜີໃຫ້ລັດຖະບານຂອງສອງປະເທດຍົກລະດັບບັນດາດ່ານຊາຍແດນ ແລະເປີດບາງເສັ້ນທາງຕື່ມອີກ. ນອກຈາກດ່ານຊາຍແດນສາກົນລາວບາວແລ້ວ, ສອງຝ່າຍຍັງໄດ້ສືບຕໍ່ເປີດຕື່ມບາງດ່ານປະເພນີຄື: ຕະຫຼຸງ (ຕາແສງເຮືອງວຽດ, ເມືອງເຮືອງຮວາ, ແຂວງກວາງຈິ) - ກະໂລ (ເມືອງເຊໂປນ, ແຂວງສະຫວັນນະເຂດ). ບ້ານແຈນ (ຕາແສງເຮືອງຝຸ່ງ, ເມືອງເຮືອງຮວາ, ແຂວງກວາງຈິ) - ບ້ານໃໝ່ (ເມືອງເຊໂປນ, ແຂວງສະຫວັນນະເຂດ), ບ້ານແທ່ງ (ຕາແສງ, ເມືອງເຮືອງຮວາ, ແຂວງກວາງຈິ) - ແດນວິໄລ (ເມືອງນອງ, ແຂວງສະຫວັນນະເຂດ) ເພື່ອຊຸກຍູ້ການພົບປະແລກປ່ຽນສິນຄ້າລະຫວ່າງສອງແຂວງ ແລະ ສອງປະເທດ.

ການເຄື່ອນໄຫວນຳເຂົ້າ ແລະສົ່ງອອກຂອງແຂວງສະຫວັນນະເຂດ ແລະ

ແຂວງກວາງຈິ ໃນຊຸມປີນີ້ໄດ້ຮັບການຊຸກຍູ້ໂດຍຜ່ານການນຳເຂົ້າ ແລະສົ່ງອອກຢ່າງເປັນທາງການ ແລະບໍ່ເປັນທາງການ. ການເຄື່ອນໄຫວ ນຳເຂົ້າ-ສົ່ງອອກລະຫວ່າງແຂວງສະຫວັນນະເຂດ ແລະແຂວງກວາງຈິ ຕົ້ນຕໍແມ່ນປະຕິບັດຜ່ານດ່ານຊາຍແດນສາກົນ ລາວບາວ-ແດນສະຫວັນ, ແມ່ນໜຶ່ງໃນບັນດາດ່ານຊາຍແດນທີ່ມີບົດບາດສຳຄັນໃນການເຄື່ອນໄຫວການຄ້າລະຫວ່າງສອງປະເທດ ລາວ-ຫວຽດນາມ. ຕາມຂໍ້ມູນຂອງກອງບັນຊາການປ້ອງກັນຊາຍແດນ ແລະກົມພາສີແຂວງກວາງຈິ, ໃນປີ 1998, ໂດຍສະເລ່ຍປີມີພາຫະນະຜ່ານດ່ານຊາຍແດນ 1.573 ຄັນ, ຜູ້ເຂົ້າ-ອອກເມືອງມີ 4.168 ຄົນ. ປີ 2008, ສະເລ່ຍປີມີພາຫະນະຜ່ານດ່ານຊາຍແດນ 55.508 ຄັນ, ສິນຄ້າປະມານ 4 ລ້ານໂຕນ ແລະຄົນເຂົ້າ-ອອກເມືອງ 61.000 ຄົນ. ວົງເງິນການນຳເຂົ້າ-ສົ່ງອອກຂອງແຂວງກວາງຈິ ກັບແຂວງສະຫວັນນະເຂດ ແຕ່ປີ 2006 ຫາ 2008, ສະເລ່ຍບັນລຸໄດ້ 536,335 ລ້ານໂດລາສະຫະລັດ/ປີ; ສົກປີ 2012 – 2014 ເພີ່ມຂຶ້ນເປັນ 993.053 ລ້ານ USD/ປີ.

ຊຸກຍູ້ການເຄື່ອນໄຫວການຄ້າ, ແຂວງສະຫວັນນະເຂດ ແລະກວາງຈິ ໄດ້ສົມທົບກັນພັດທະນາ ແລະສ້າງລະບົບຕະຫຼາດຢູ່ລຽບຕາມຊາຍແດນສອງປະເທດ. ຕາມເສັ້ນທາງຫຼວງແຫ່ງຊາດ 9, ແຂວງສະຫວັນນະເຂດ ແລະກວາງຈິ ໄດ້ລົງທຶນກໍ່ສ້າງເຂດການຄ້າສອງຝັ່ງດ່ານສາກົນລາວບາວ-ແດນສະຫວັນ.

ເພື່ອຊຸກຍູ້ການເຄື່ອນໄຫວດ້ານການຄ້າ, ແຂວງສະຫວັນນະເຂດ ແລະກວາງຈິ ໄດ້ສົມທົບກັນພັດທະນາ ແລະສ້າງລະບົບບັນດາຕະຫຼາດຢູ່ລຽບຕາມຊາຍແດນສອງປະເທດ. ຕາມເສັ້ນທາງຫຼວງແຫ່ງຊາດເລກ 9, ແຂວງສະຫວັນນະເຂດ ແລະກວາງຈິ ໄດ້ລົງທຶນກໍ່ສ້າງເຂດການຄ້າສອງຝັ່ງດ່ານສາກົນລາວບາວ-ແດນສະຫວັນ.

ແຂວງກວາງຈິ ໄດ້ລົງທຶນກໍ່ສ້າງເຂດການຄ້າລາວບາວ; ມາຮອດປີ 2005, ໄດ້ຍົກລະດັບເປັນເຂດເສດຖະກິດການຄ້າພິເສດລາວບາວ. ໃນປີ 2002 ແຂວງສະຫວັນນະເຂດ ໄດ້ສ້າງເຂດການຄ້າຊາຍແດນແດນສະຫວັນ. ຢູ່ທີ່ນີ້, ການເຄື່ອນໄຫວການຄ້າຂອງນັກທຸລະກິດລາວ, ຫວຽດນາມ ແລະບາງນັກທຸລະກິດຕ່າງປະເທດ ຄືໄທ ແລະຈີນ ໄດ້ດຳເນີນໄປຢ່າງຄຶກຄື້ນ.

ບັນດາວິສາຫະກິດກວາງຈິໄດ້ຍູ້ແຮງການລົງທຶນກໍ່ສ້າງບັນດາສະຖານທີ່ທຸລະກິດ ແລະບັນດາບ່ອນຕົວແທນຈຳໜ່າຍ ຢູ່ແຂວງສະຫວັນນະເຂດ. ກົງກັນຂ້າມ, ວິສາຫະກິດແຂວງສະຫວັນນະເຂດຈຳນວນໜຶ່ງ ກໍໄດ້ລົງທຶນດຳເນີນທຸລະກິດຢູ່ກວາງຈິ (ບັນດາວິສາຫະກິດກວາງຈິໄດ້ເປີດຕົວແທນຈຳໜ່າຍສິນຄ້າ; ບໍລິສັດການຢາແຂວງກວາງຈິ ໄດ້ເປີດຮ້ານຂາຍຢາແຜນຕາເວັນຕົກ ຢູ່ເມືອງພີນ ແລະເຊໂປນ). ມີວິສາຫະກິດຫຼາຍແຫ່ງຢູ່ແຂວງກວາງຈິ ໄດ້ເປີດສຳນັກງານຜູ້ຕາງໜ້າຢູ່ແຂວງສະຫວັນນະເຂດເພື່ອດຳເນີນບັນດາການເຄື່ອນໄຫວການຄ້າ, ການລົງທຶນ ແລະການທ່ອງທ່ຽວ.

ເພື່ອສ້າງເງື່ອນໄຂ ໃຫ້ແກ່ບັນດາວິສາຫະກິດໄດ້ແນະນຳຜະລິດຕະພັນ, ປະກອບສ່ວນຊຸກຍູ້ການເຄື່ອນໄຫວການຄ້າ ລະຫວ່າງສອງຝ່າຍກໍຄືກັບບັນດາປະເທດອື່ນໆໃນໂລກ, ແຕ່ລະປີ, ພະແນກການຄ້າ ແລະພະແນກອຸດສາຫະກຳການຄ້າສອງແຂວງໄດ້ສົມທົບກັນເພື່ອຈັດຕັ້ງງານຕະຫຼາດນັດ. ໃນປີ 2008, ງານຕະຫຼາດນັດໄດ້ຈັດຂຶ້ນຢູ່ເຂດເສດຖະກິດການຄ້າພິເສດລາວບາວ. ມາຮອດປີ 2012, ງານຕະຫຼາດນັດໄດ້ຈັດຂຶ້ນຢູ່ແຂວງສະຫວັນນະເຂດ. ຜ່ານງານຕະຫຼາດນັດ, ບັນດາວິສາຫະກິດຂອງສອງແຂວງ ແລະ ສອງປະເທດໄດ້ລົງນາມໃນສັນຍາຊົມໃຊ້

ຜະລິດຕະພັນຂອງກັນ.

ຂະແໜງການທ່ອງທ່ຽວແຂວງກວາງຈິໃນແຕ່ລະປີມີບັນດາລາຍການຮ່ວມມື ເພື່ອໂຄສະນາເຜີຍແຜ່ການທ່ອງທ່ຽວຂອງລາວ, ໃນນັ້ນໄດ້ເອົາໃຈໃສ່ຫາບັນດາແຫຼ່ງທ່ອງທ່ຽວຂອງແຂວງສະຫວັນນະເຂດ. ແຕ່ປີ 2005-2014, ແຂວງກວາງຈິ-ຫວຽດນາມ, ສະຫວັນນະເຂດ-ລາວ ແລະມຸກດາຫານ-ໄທ ໄດ້ປ່ຽນຜຽນກັນຈັດຕັ້ງກອງປະຊຸມຮ່ວມມືພັດທະນາ ການ ທ່ອງທ່ຽວປະຈໍາປີ 07 ຄັ້ງ ລະຫວ່າງສາມແຂວງຂອງສາມປະເທດ ເພື່ອອໍານວຍຄວາມສະດວກໃຫ້ແກ່ການພັດທະນາການທ່ອງທ່ຽວ, ຊຸກຍູ້, ເຜີຍແຜ່ການຕະຫຼາດໃຫ້ທົ່ວເຖິງ, ພັດທະນາແຫຼ່ງຊັບພະຍາກອນມະນຸດກ່ຽວກັບດ້ານການທ່ອງທ່ຽວ ບົນແລວເສດຖະກິດຕາເວັນອອກ-ຕາເວັນຕົກ.

ປະຕິບັດບົດບັນທຶກກອງປະຊຸມກ່ຽວກັບການຮ່ວມມືດ້ານການຄ້າ, ການລົງທຶນ, ການທ່ອງທ່ຽວ, ແຮງງານ ແລະ ສື່ມວນຊົນສາມແຂວງ ແລະສາມປະເທດ (ກວາງຈິ - ສະຫວັນນະເຂດ - ມຸກດາຫານ), ພະແນກອຸດສາຫະກໍາການຄ້າກວາງຈິໄດ້ເປັນເຈົ້າພາບ ແລະສົມທົບກັບສະຖາບັນແມ່ນໍ້າຂອງໄດ້ຈັດກອງປະຊຸມສໍາມະນາສາກົນກ່ຽວກັບ “ອັບເດດຖານຂໍ້ມູນ ວິສາຫະກິດຢູ່ບັນດາແຂວງບົນແລວເສດຖະກິດຕາເວັນອອກ-ຕາເວັນຕົກ (EWEC) ແລະສົ່ງເສີມການຄ້າເອເລັກຕຣົງ”. ກອງປະຊຸມສໍາມະນາໄດ້ແນະນໍາຖານຂໍ້ມູນຂອງວິສາຫະກິດຢູ່ບັນດາແຂວງບົນເສັ້ນທາງ EWEC; ຊຸກຍູ້ການຮ່ວມມືສ້າງແຜນ ປະຕິບັດໃຫ້ການປັບປຸງຖານຂໍ້ມູນ ແລະການພັດທະນາການຄ້າເອເລັກຕຣົງຂອງບັນດາປະເທດໃນເສັ້ນທາງ EWEC (ລວມທັງກວາງຈິ ແລະສະຫວັນນະເຂດ). ຈັກຕັ້ງເຮັດວຽກກັບຄະນະຜູ້ແທນຂອງກະຊວງອຸດສາຫະກໍາການຄ້າ ກ່ຽວກັບການສະໜອງຂໍ້ມູນຂ່າວສານເພື່ອສ້າງ

ແຜນການການຄ້າເຂດພູດອຍບົນເສັ້ນຊາຍແດນຫວຽດນາມ - ລາວ, ຜ່ານນັ້ນ ຈຶ່ງສືບຕໍ່ສະເໜີຄະນະຜູ້ແທນຄົ້ນຄວ້າບັນດາກົນໄກ ແລະນະໂຍບາຍພິເສດໃຫ້ເຂດເສດຖະກິດ-ການຄ້າພິເສດລາວບາວ.

ປີ 2017, ຄະນະກຳມະການປະຊາຊົນແຂວງກວາງຈິ ໄດ້ສົມທົບກັບຫ້ອງວ່າການປົກຄອງແຂວງສະຫວັນນະເຂດ, ສະຫະພັນບັນດານັກລົງທຶນຫວຽດນາມທີ່ລົງທຶນຢູ່ລາວ (AVIL) ແລະສະຫະພັນການຄ້າ ແລະອຸດສາຫະກຳ ແຂວງສະຫວັນນະເຂດ ໄດ້ຈັດຕັ້ງກອງປະຊຸມ "ຊຸກຍູ້ການຮ່ວມມືດ້ານການລົງທຶນ ແລະການຄ້າຫວຽດນາມ - ລາວ ຜ່ານດ່ານຊາຍແດນສາກົນ ລາວບາວ-ແດນສະຫວັນ"; ຜ່ານນັ້ນ, ສ້າງເງື່ອນໄຂສະດວກໃຫ້ບັນດາວິສາຫະກິດສືບຕໍ່ພັດທະນາ, ພ້ອມກັນນັ້ນໄດ້ດຶງດູດແຫຼ່ງສິນຄ້າສົ່ງອອກຈາກບັນດາໂຄງການຂອງວິສາຫະກິດຫວຽດນາມ ທີ່ມາລົງທຶນຢູ່ລາວ ຜ່ານດ່ານຊາຍແດນສາກົນ ລາວບາວ-ແດນສະຫວັນ; ປະກອບສ່ວນສ້າງບັນຍາກາດຟົດຟື້ນຂອງການເຄື່ອນໄຫວການຄ້າບົນແລວເສດຖະກິດຕາເວັນອອກ-ຕາເວັນຕົກ.

ປີ 2018, ພະແນກອຸດສາຫະກຳການຄ້າແຂວງກວາງຈິ ໄດ້ຈັດຕັ້ງຄະນະວິສາຫະກິດກວາງຈິໄປພົວພັນການຄ້າ, ສົ່ງເສີມການສົ່ງອອກບັນດາສິນຄ້າຜະລິດຕະພັນກະເສດ, ປ່າໄມ້ ແລະການປະມົງຂອງແຂວງກວາງຈິ ຢູ່ບັນດາແຂວງສະຫວັນນະເຂດ, ສາລະວັນ, ຈຳປາສັກ ແລະໄດ້ຈັດຕັ້ງກອງປະຊຸມກັບ ພະແນກອຸດສາຫະກຳການຄ້າຂອງບັນດາແຂວງ ດັ່ງກ່າວ; ໂດຍຜ່ານນັ້ນ, ວິສາຫະກິດກວາງຈີ້ຫຼາຍແຫ່ງໄດ້ເຊື່ອມຕໍ່ ແລະຮ່ວມມືກັບວິສາຫະກິດສະຫວັນນະເຂດເພື່ອດຳເນີນການຊື້-ຂາຍສິນຄ້າຂອງກັນແລະກັນ. ໄດ້ຮັບການປະຕິບັດໃນທຸກໆ 2 ປີ, ພະແນກ

ອຸດສາຫະກຳການຄ້າສອງແຂວງກວາງຈິ ແລະສະຫວັນນະເຂດ ໄດ້ຈັດຕັ້ງກອງປະຊຸມຮ່ວມມືພັດທະນາ ສອງຂະແໜງອຸດສາຫະກຳ ແລະການຄ້າຂອງສອງແຂວງ; ລົງນາມໃນບົດບັນທຶກຊ່ວຍຈຳກ່ຽວກັບເນື້ອໃນການຮ່ວມມື; ບົນພື້ນຖານນັ້ນ, ສອງຝ່າຍໄດ້ຕັ້ງໜ້າຈັດຕັ້ງການປະຕິບັດຜ່ານບັນດາການເຄື່ອນໄຫວສົ່ງເສີມການຄ້າ, ການເຊື່ອມຕໍ່ພົວພັນການຄ້າ; ຈັດຕັ້ງການພົບປະເຈລະຈາ, ກອງປະຊຸມ ແລະສຳມະນາ ລະຫວ່າງລັດຖະບານ ແລະປະຊາຄົມວິສາຫະກິດ ເພື່ອລົບລ້າງຄວາມຫຍຸ້ງຍາກ ແລະຂໍ້ຄົງຄ້າງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການພັດທະນາການຄ້າຂ້າມຊາຍແດນ.

ໃນຊຸມປີມໍ່ໆມານີ້, ສອງຝ່າຍຍັງໄດ້ຮ່ວມມືຈັດຕັ້ງງານວາງສະແດງສິນຄ້າການຄ້າ ແລະໂຄສະນາການທ່ອງທ່ຽວກວາງຈິ ປີ 2017 ຢ່າງສຳເລັດຜົນ; ງານວາງສະແດງສິນຄ້າອຸດສາຫະກຳການຄ້າເຂດພາກກາງ - ເຂດໄຕງວຽນ - ຂົວເຊື່ອມອາອຽນ - ກວາງຈິ 2018; ງານວາງສະແດງສິນຄ້າການຄ້າ ແລະໂຄສະນາການທ່ອງທ່ຽວກວາງຈິ ປີ 2019, ໂດຍມີການເຂົ້າຮ່ວມຂອງຫຼາຍວິສາຫະກິດ, ຫົວໜ່ວຍ, ອົງການສົ່ງເສີມການຄ້າ ຂອງລາວ ແລະໄທ. ໃນງານວາງສະແດງສິນຄ້າຄັ້ງນີ້, ບັນດາວິສາຫະກິດຂອງແຂວງສະຫວັນນະເຂດໄດ້ເຂົ້າຮ່ວມບັນດາຮ້ານວາງສະແດງສິນຄ້າເພື່ອແນະນຳຜະລິດຕະພັນ ODOP, ອາຫານປະຈຳແຂວງໃຫ້ເພື່ອນມິດ ແລະນັກທ່ອງທ່ຽວແຂວງກວາງຈິ.

ສາມາດເວົ້າໄດ້ວ່າ, ແຕ່ປີ 1990 ມາຮອດປັດຈຸບັນ, ບົນພື້ນຖານການພັດທະນາຂອງເສດຖະກິດ, ການເຄື່ອນໄຫວ ການຄ້າລະຫວ່າງສອງແຂວງໄດ້ມີບັນດາບາດກ້າວບຸກທະລຸອັນສຳຄັນ, ວົງເງິນນຳເຂົ້າ ແລະສົ່ງອອກລະຫວ່າງສອງ

ແຂວງໄດ້ ເພີ່ມຂຶ້ນຢ່າງວ່ອງໄວ (ແຕ່ປີ 1990 ຫາເດືອນ 4/2022, ວົງເງິນນຳເຂົ້າ-ສົ່ງອອກຜ່ານສອງດ່ານຊາຍແດນສາກົນລາວບາວ ແລະລາໄລບັນລຸໄດ້ 8.729.114.910 ໂດລາສະຫະລັດ; ພາຫະນະຂົນສົ່ງເຂົ້າ-ອອກຜ່ານດ່ານ 2.341.470 ທ້ຽວ. ໄລຍະ 2017-04/2022 ວົງເງິນນຳເຂົ້າ-ສົ່ງອອກຜ່ານສອງດ່ານຊາຍແດນສາກົນລາວບາວ ແລະລາໄລບັນລຸໄດ້ 2.020 ລ້ານໂດລາສະຫະລັດ, ພາຫະນະຂົນສົ່ງເຂົ້າ-ອອກຜ່ານດ່ານ 2.293.902 ທ້ຽວ. ສົ່ງອອກ, ເກັບງົບປະມານແຫ່ງລັດບັນລຸ 1.354 ຕື້ດົ່ງ). ໃນຊຸມປີມໍ່ໆມານີ້, ຫຼາຍໂຄງການລົງທຶນການຜະລິດຢູ່ເຂດເມືອງເຊໂປນໄດ້ປະກອບສ່ວນ ເຮັດໃຫ້ສິນຄ້າຜ່ານດ່ານຊາຍແດນ ລາວບາວ-ແດນສະຫວັນເພີ່ມຂຶ້ນຢ່າງໄວວາ. ໃນປີ 2021, ພາຫະນະຂົນສົ່ງເຂົ້າ-ອອກຜ່ານດ່ານ 177.811 ທ້ຽວ. ວົງເງິນນຳເຂົ້າ-ສົ່ງອອກ 474,4 ລ້ານໂດລາສະຫະລັດ, ລວມຍອດມູນຄ່າການຂົນສົ່ງຢືມທາງ 12.168 ຕື້ ໂດລາສະຫະລັດ. ໃນແຕ່ລະມື້, ມີພາຫະນະ 500 ກວ່າຄັນໄດ້ ຂົນສົ່ງເຂົ້າ-ອອກຜ່ານດ່ານຊາຍແດນ. ບັນດາໝາກຜົນທີ່ບັນລຸໄດ້ໃນການພົວພັນດ້ານການຄ້າລະຫວ່າງສອງແຂວງໄດ້ປັບປຸງຊີວິດການເປັນຢູ່ຂອງປະຊາຊົນຢ່າງພໍສົມຄວນ, ພ້ອມກັນນັ້ນສ້າງເງື່ອນໄຂໃຫ້ສອງຝ່າຍເລັ່ງ ລັດຊຸກຍູ້ລະດັບ ການພັດທະນາເສດຖະກິດ - ສັງຄົມ ແລະປະກອບສ່ວນຊຸກຍູ້ການພົວພັນດ້ານການຄ້າລະຫວ່າງສອງປະເທດ.

ພິເສດ, ປະຕິບັດບົດບັນທຶກເນື້ອໃນການເຮັດວຽກເປັນທາງການຂອງຄະນະຜູ້ແທນຂັ້ນສູງແຂວງກວາງຈິກັບແຂວງສະຫວັນນະເຂດ (18 ກຸມພາ 2022) ແລະສາລະວັນ (20 ກຸມພາ 2022), ຄະນະປະຈຳພັກແຂວງກວາງຈິໄດ້ສ້າງຕັ້ງຄະນະປະຕິບັດງານແຂວງກວາງຈິ ເພື່ອສຶກສາບັນດາກົນໄກ ແລະນະໂຍບາຍສະເພາະ

ເພື່ອປະກອບຄຳເຫັນການສົມທົບກັບແຂວງສະຫວັນນະເຂດ, ສະເໜີໃຫ້ລັດຖະບານສອງປະເທດ ສ້າງເຂດເສດຖະກິດການຄ້າຂ້າມຊາຍແດນຮ່ວມລາວບາວ-ແດນສະຫວັນ. ນີ້ແມ່ນບາດກ້າວໃໝ່ ແລະທີ່ພົ້ນເດັ່ນໃນການຮ່ວມມືດ້ານການຄ້າ, ການລົງທຶນລະຫວ່າງສອງແຂວງ ກວາງຈິ - ສະຫວັນນະເຂດ.

ກຳນົດຄວາມສຳຄັນຂອງວຽກງານວາງແຜນຜັງ ແລະປະສານການວາງແຜນຜັງເພື່ອຍາດແຍ່ງຄວາມສາມາດບົ່ມຊ້ອນ, ທ່າໄດ້ປຽບ ແລະກາລະໂອກາດທີ່ພົ້ນເດັ່ນຂອງແຕ່ລະແຂວງ, ກວາງຈິກໍໄດ້ແນະນຳ ແລະ ຊ່ວຍເຫຼືອບໍລິສັດຮ່ວມມື Sakae Holding - Surbana Jurong (ສິງກະໂປ) ຊ່ວຍໃຫ້ແຂວງສະຫວັນນະເຂດ ວາງແຜນພັດທະນາເສດຖະກິດ - ສັງຄົມ; ໂດຍສະເພາະ ການວາງແຜນຜັງເຂດການຄ້າຊາຍແດນແດນສະຫວັນ.

*2.5. ກ່ຽວກັບການປະສານສົມທົບໃນການຄຸ້ມຄອງເຄື່ອນໄຫວການຄ້າຊາຍແດນ:*

ແຂວງກວາງຈິ ໄດ້ຈັດຕັ້ງການໂຄສະນາເຜີຍແຜ່, ເຊື່ອມຊຶມ ແລະຜັນຂະຫຍາຍປະຕິບັດ ສັນຍາການຄ້າຊາຍແດນຫວຽດນາມ - ລາວ ຢ່າງຄົບຖ້ວນ ແລະເຂັ້ມແຂງ ແລະບັນດາເອກະສານທາງດ້ານກົດໝາຍທີ່ກ່ຽວຂ້ອງເຖິງການເຄື່ອນໄຫວການຄ້າຊາຍແດນ. ຊີ້ນຳກົມພາສີປະຕິບັດໃຫ້ດີວຽກງານປະຕິຮູບລະບຽບການດ້ານພາສີເປັນປະຈຳ, ສ້າງເງື່ອນໄຂສະດວກໃຫ້ແກ່ການເຄື່ອນໄຫວຄ້າຂາຍ, ແລກປ່ຽນສິນຄ້າຂອງນັກທຸລະກິດຊາຍແດນ ແລະປະຊາຊົນຊາວຊາຍແດນ; ບັນດາການບໍລິການ ສະໜັບສະໜູນການຄ້າຊາຍແດນ ແລະຫັນເປັນຄວາມສະດວກດ້ານການຄ້າຢູ່ດ່ານຊາຍແດນ. ປະຕິບັດການສົມທົບໃຫ້ດີກັບກຳລັງທະຫານຊາຍແດນ

ແລະພາສີດ່ານແດນສະຫວັນ, ໃນການລຶບລ້າງຄວາມຫຍຸ້ງຍາກຢ່າງທັນການ, ແກ້ໄຂລະບຽບການຜ່ານດ່ານຢ່າງວ່ອງໄວ ແລະສ້າງສະດວກສະບາຍໃຫ້ແກ່ນັກທຸລະກິດ ແລະ ປະຊາຊົນຊາວຊາຍແດນ.

ໂດຍໄດ້ຮັບຄວາມເຫັນດີຈາກລັດຖະບານຫວຽດນາມ ແລະ ລັດຖະບານລາວ, ວັນທີ 6 ກຸມພາ 2015, ສອງແຂວງກວາງຈິ ແລະສະຫວັນນະເຂດໄດ້ສົມທົບກັນຈັດຕັ້ງພິທີເປີດຕົວແບບກວດກາ "ປະຕູດຽວ ບ່ອນຢຸດດຽວ" ຢ່າງເປັນທາງການຢູ່ຄູ່ດ່ານສາກົນລາວບາວ (ກວາງຈິ) ແລະແດນສະຫວັນ (ສະຫວັນນະເຂດ); ຢືນຢັນຄວາມຕັດສິນໃຈຂອງຫວຽດນາມ ແລະ ລາວ ເວົ້າລວມ, ຂອງສອງແຂວງ ກວາງຈິ ແລະ ສະຫວັນນະເຂດ ໂດຍສະເພາະ ໃນການເພີ່ມທະວີການຮ່ວມມືຊຸກຍູ້ການປະຕິຮູບລະບຽບການບໍລິຫານໃນຂົງເຂດນຳເຂົ້າ - ສົ່ງອອກ, ເຂົ້າ-ອອກເມືອງຕາມທິດສີວິໄລ, ທັນສະໄໝ, ປະກອບສ່ວນອັນສຳຄັນເຂົ້າໃນການຊຸກຍູ້ການຮ່ວມມື ແລະການພັດທະນາ ບົນແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ (EWEC).

3. ການຮ່ວມມືດ້ານວັດທະນະທຳ-ສັງຄົມ, ການສຶກສາ-ກໍ່ສ້າງ, ວິທະຍາສາດ ແລະ ເຕັກໂນໂລຊີ ແລະ ບັນດາດ້ານອື່ນໆ

*3.1. ການຮ່ວມມືດ້ານວັດທະນະທຳ ແລະ ກິລາ*

ຄຽງຄູ່ກັບການພັດທະນາຢ່າງແຂງແຮງ ຂອງບັນດາຂະແໜງເສດຖະກິດ, ແຕ່ປີ 1989 ຮອດປະຈຸບັນ, ດ້ານວັດທະນະທຳ, ຂໍ້ມູນຂ່າວສານ ແລະສື່ມວນຊົນຂອງແຂວງກວາງຈິ ແລະແຂວງສະຫວັນນະເຂດໄດ້ພັດທະນາໃນທຸກດ້ານ, ປະກອບສ່ວນໃນການຍົກສູງຊີວິດທາງດ້ານຈິດໃຈໃຫ້ປະຊາຊົນຢ່າງພໍສົມຄວນ. ໃນໄລຍະນີ້, ການຮ່ວມມືດ້ານວັດທະນະທຳ, ຂໍ້ມູນຂ່າວສານ ແລະການສື່ມວນຊົນ ລະຫວ່າງ

ສອງຝ່າຍສືບຕໍ່ໄດ້ຮັດແໜ້ນ ແລະເພີ່ມທະວີ, ໃນນັ້ນສຸມໃສ່ບາງເນື້ອໃນຕົ້ນຕໍຄື: ຊຸກຍູ້ການພົບປະແລກປ່ຽນ, ຮ່ວມມືວັດທະນະທໍາສິລະປະ, ກິລາ ແລະບັນດາການເຄື່ອນໄຫວມິດຕະພາບ: ເພີ່ມທະວີການຊ່ວຍເຫຼືອເຊິ່ງກັນ ແລະກັນໃນບັນດາຂົງເຂດໜັງສືພິມ, ວັນນະຄະດີສິລະປະ, ການພິມ, ຈໍາໜ່າຍ, ຫໍພິພິທະພັນ, ສໍາເນົາເກັບມ້ຽນ ແລະດ້ານອື່ນໆ; ການຮ່ວມມືລົງທຶນເພື່ອພັດທະນາລະບົບຂໍ້ມູນຂ່າວສານ - ການສື່ມວນຊົນ.

ການພົບປະແລກປ່ຽນວັດທະນະທໍາ, ສິລະປະ ແລະກິລາໄດ້ກາຍເປັນມູນເຊື້ອໃນການພົວພັນຮ່ວມມືດ້ານວັດທະນະທໍາລະຫວ່າງສອງແຂວງ ແລະໄດ້ຮັບການຮັກສາໄວ້ເປັນປະຈໍາຂອງສອງປະເທດໃນຊຸມປີ 1989 ເຖິງປະຈຸບັນ, ພິເສດແມ່ນໃນໂອກາດງານບຸນໃຫຍ່ຕ່າງໆຂອງສອງປະເທດ. ເນື່ອງໃນໂອກາດ ວັນສະຖາປະນາສາທາລະນະລັດ ປະຊາທິ ປະໄຕ ປະຊາຊົນລາວຄົບຮອບ 20 ປີ (2 ທັນວາ 1975 – 2 ທັນວາ 1995), ຄະນະສິລະປະແຂວງກວາງຈິ ໄດ້ໄປ ຢ້ຽມຢາມ ແລະສະແດງສິລະປະຢູ່ເມືອງສະຫວັນ (ແຂວງສະຫວັນນະເຂດ). ເນື່ອງໃນໂອກາດສະເຫຼີມສະຫຼອງ ວັນເຊັນສົນທິສັນຍາ ມິດຕະພາບ ແລະການຮ່ວມມື ລາວ-ຫວຽດນາມ ຄົບຮອບ 30 ປີ (1977 – 2007) ແລະວັນສ້າງຕັ້ງສາຍພົວພັນການທູດ ລະຫວ່າງສອງປະເທດຄົບຮອບ 45 ປີ (1962 – 2007), ຄະນະສິລະປະແຂວງ ສະຫວັນນະເຂດໄດ້ມາຢ້ຽມຢາມ ແລະສະແດງສິລະປະຢູ່ເມືອງເມືອງດົງຮ່າ (ກວາງຈິ). ຄະນະສິລະປະແຂວງກວາງຈິໄດ້ໄປຢ້ຽມຢາມ ແລະສະແດງສິລະປະຢູ່ທ້ອງຖິ່ນ ຫຼາຍແຫ່ງຂອງແຂວງສະຫວັນນະເຂດ. ເນື່ອງໃນໂອກາດ ວັນສໍາຄັນດັ່ງກ່າວ, ພະແນກວັດທະນະທໍາ, ກິລາ ແລະທ່ອງທ່ຽວ ແຂວງກວາງຈິ ໄດ້ສົ່ງບັນດາທີມກິລາບານເຕະ,

ບານສິ່ງ ແລະຕິດອກປີກໄກ່ໄປແຂ່ງຂັນກິລາແບບມິດຕະພາບຢູ່ແຂວງສະຫວັນນະເຂດ.

ເນື່ອງໃນໂອກາດສະເຫຼີມສະຫຼອງ ວັນສ້າງຕັ້ງສາຍພົວພັນການທູດລະຫວ່າງສອງປະເທດ ຄົບຮອບ 50 ປີ (1962 – 2012), ແຂວງກວາງຈີໄດ້ຊ່ວຍແຂວງສະຫວັນນະເຂດກະກຽມເນື້ອໃນຈຳນວນໜຶ່ງເພື່ອ ຈັດຕັ້ງວາງສະແດງຢູ່ຫໍພິພິທະພັນ ພັນທະມິດການຕໍ່ສູ້ ຫວຽດນາມ - ລາວ ຄື: ສົມທົບກັບບໍລິສັດວິຈິດສິນຮ່າໂນ້ຍ ເພື່ອສ້າງໂຄງຮ່າງການວາງສະແດງ; ໄດ້ມອບ ຮູບສາລະຄະດີ 12 ແຜ່ນ, ແຜນວາດປັ້ນນູນມີໄຟຊີ້ບອກ 01 ແຜ່ນ ກ່ຽວກັບບັ້ນຮົບ “ໄຊຊະນະທາງເລກ 9 - ລາວໃຕ້, ປີ 1971” ຮັບໃຊ້ການວາງສະແດງ; ສະໜອງເອກະສານຈຳນວນໜຶ່ງ, ວັດຖຸທີ່ມີຂະໜາດໃຫຍ່ເຊັ່ນ: ເຮືອບິນ, ລົດຕັງ; ແນະນຳຊ່ວຍເຫຼືອຝຶກອົບຮົມໃຫ້ບັນດາພະນັກງານອະທິບາຍ; ປະສານສົມທົບກັບຄະນະໂຄສະນາສຶກສາສູນກາງລາວ ແລະຫໍພິພິທະພັນ ໄກສອນ ພົມວິຫານ ດຳເນີນເກັບກຳວັດຖຸເພື່ອໃຊ້ວາງສະແດງຢູ່ຫໍພິພິທະພັນບ້ານດົງ (ແຂວງສະຫວັນນະເຂດ).

ຂະແໜງວັດທະນະທຳ-ກິລາ ກວາງຈີ ກໍໄດ້ສ້າງທຸກເງື່ອນໄຂໃຫ້ຂະແໜງວັດທະນະທຳ-ກິລາ ແຂວງສະຫວັນນະເຂດມາຝຶກຝົນຫຼໍ່ຫຼອມ ແລະແຂ່ງຂັນ ເພື່ອຍົກລະດັບວິຊາສະເພາະ. ການຝຶກອົບຮົມໃຫ້ພະນັກງານຜູ້ຄຸ້ມຄອງວັດທະນະທຳ ແລະ ນັກສະແດງໃຫ້ແຂວງສະຫວັນນະເຂດ ໄດ້ສືບຕໍ່ຜັນຂະຫຍາຍຢ່າງມີປະສິດທິຜົນ.

ໃນຂົງເຂດໜັງສືພິມ, ວັນນະຄະດີ ແລະສິລະປະ, ຫໍພິພິທະພັນ, ຫ້ອງສະໝຸດ, ການພິມ, ຈຳໜ່າຍ ແລະການແປ ເອກະສານ, ກວາງຈີທັງໄດ້ປະກອບ

ສ່ວນເຂົ້າໃນການກໍ່ສ້າງ ແລະບໍາລຸງ, ວິຊາຊີບ-ວິຊາສະເພາະ, ທັງສ້າງທຸກເງື່ອນໄຂ ໜູນຊ່ວຍໃຫ້ພະນັກງານ, ລັດຖະກອນບັນດາຂະແໜງໃນການເຄື່ອນໄຫວ ວິຊາ ສະເພາະ. ຫໍພິພິທະພັນແຂວງກວາງຈິໄດ້ຊ່ວຍໃຫ້ ຫໍພິພິທະພັນແຂວງສະຫວັນ ນະເຂດເກັບກໍາບັນດາວັດຖຸ, ປະເມີນຜົນການວາງສະແດງ, ສາລະຄະດີຮູບພາບ ກ່ຽວກັບນໍ້າໃຈ ສາມັກຄີຕໍ່ສູ້ ຫວຽດນາມ - ລາວ. ສູນເກັບມ້ຽນເອກະສານກວາງຈິ ໄດ້ແນະນໍາໃຫ້ບັນດາພະນັກງານເກັບມ້ຽນເອກະສານ ຂອງແຂວງສະຫວັນນະເຂດ ໃນການກໍ່ສ້າງເປັນລະບົບເກັບມ້ຽນເອກະສານທຸກຂັ້ນ ແລະທຸກຂະແໜງການກໍ ຄືປະສົບການໃນວຽກງານຮັກສາຄວາມລັບເອກະສານທີ່ເກັບມ້ຽນ.

ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເຄືອຂ່າຍ ການຊື່ມວນຊົນຢ່າງທັນການ, ແຂວງກວາງຈິ ໄດ້ຕັ້ງໜ້າຊ່ວຍເຫຼືອ ແລະຮ່ວມມືກັບ ແຂວງສະຫວັນນະເຂດ. ສະຖານີວິທະຍຸ ກະຈາຍສຽງ-ໂທລະພາບແຂວງກວາງຈິໄດ້ ລົງທຶນ ຍົກລະດັບສະຖານີວິທະຍຸກະຈາຍສຽງ-ໂທລະພາບເມືອງເຊໂປນ (ແຂວງ ສະຫວັນນະເຂດ); ພ້ອມກັນນັ້ນໄດ້ຝຶກອົບຮົມໃຫ້ພະນັກງານວິຊາຊີບ ແລະພະນັກງານ ເຕັກນິກໂທລະພາບຈໍານວນໜຶ່ງໃຫ້ແຂວງສະຫວັນນະເຂດ.

ນອກຈາກນັ້ນ, ສະມາຄົມມິດຕະພາບລາວ-ຫວຽດນາມ, ຫວຽດນາມ-ລາວ ຂອງສອງແຂວງໄດ້ມີ ການເຄື່ອນໄຫວຫຼາຍຢ່າງທີ່ມີຄວາມແທດຈິງ, ທັງປະກອບສ່ວນ ຊຸກຍູ້ການພົວພັນຮ່ວມມືຮອບດ້ານ, ທັງໂຄສະນາ ເຜີຍແຜ່ຢ່າງເລິກເຊິ່ງ ແລະສຶກສາ ໃຫ້ບັນດາລຸ້ນໜຸ່ມ. ໄດ້ຮັບການເອົາໃຈໃສ່ຊ່ວຍເຫຼືອ ແລະອໍານວຍຄວາມສະດວກ ຂອງຄະນະພັກແຂວງ, ຄະນະກໍາມະການປະຊາຊົນແຂວງ, ໃນແຕ່ລະປີ, ສະມາຄົມ ມິດຕະພາບຫວຽດນາມ - ລາວ ແຂວງກວາງຈິ ໄດ້ຈັດຕັ້ງການເດີນທາງ “ຢ້ຽມຢາມ

ຄືນບັນດາສະໜາມຣົບເກົ່າ" ໃຫ້ບັນດາພະນັກງານ, ນັກຣົບທີ່ເຄີຍໄດ້ຕໍ່ສູ້ ແລະ ຮັບໃຊ້ຢູ່ໃນສະໜາມຣົບຂອງປະເທດລາວ. ທະຫານ ຊາຍແດນແຂວງກວາງຈິ ໄດ້ປະກອບສ່ວນໃນການລົບລ້າງຮີດຄອງປະເພນີອັນຫຼ້າຫຼັງ, ການເຊື່ອຖືແບບງົມງວາຍ ແລະ ກໍ່ສ້າງແບບແຜນດໍາລົງຊີວິດ ທີ່ມີວັດທະນະທໍາອັນປອດໄສໃຫ້ແກ່ປະຊາຊົນຢູ່ລຽບຕາມສອງເບື້ອງຊາຍແດນ.

*3.2. ການຮ່ວມມືດ້ານສາທາລະນະສຸກ*

ດ້ວຍຄວາມຮຽກຮ້ອງຕ້ອງການດ້ານການກວດ ແລະປິ່ນປົວພະຍາດ ແລະ ຍົກສູງສຸຂະພາບໃຫ້ແກ່ພະນັກງານ ແລະປະຊາຊົນ, ການຮ່ວມມືດ້ານສາທາລະນະສຸກລະຫວ່າງແຂວງກວາງຈິ ແລະແຂວງສະຫວັນນະເຂດ ສືບຕໍ່ໄດ້ຮັບການຜັນຂະຫຍາຍຢ່າງກວ້າງຂວາງ, ໂດຍສຸມໃສ່ບັນດາເນື້ອໃນຕົ້ນຕໍຄື: ການປະສານສົມທົບ ແລະຊ່ວຍເຫຼືອເຊິ່ງກັນ ແລະກັນໃນໄລຍະປະຕິບັດໂຄງການປ້ອງກັນ ແລະສະກັດກັ້ນການແຜ່ລະບາດພະຍາດຂ້າມຊາຍແດນໃນເຂດອະນຸພາກພື້ນແມ່ນໍ້າຂອງ; ຊຸກຍູ້ການຮ່ວມມືລົງທຶນກໍ່ສ້າງສະຖານທີ່ກວດ ແລະປິ່ນປົວພະຍາດ; ຍົກສູງປະສິດທິພາບວຽກງານການກວດ ແລະປິ່ນປົວພະຍາດ.

ໃນໄລຍະປະຕິບັດໂຄງການປ້ອງກັນ ແລະສະກັດກັ້ນການແຜ່ລະບາດພະຍາດຂ້າມຊາຍແດນໃນເຂດອະນຸພາກພື້ນແມ່ນໍ້າຂອງ, ແຂວງກວາງຈິໄດ້ຊ່ວຍເຫຼືອຢ່າງຕັ້ງໜ້າທັງວິຊາສະເພາະເຕັກນິກ ແລະບຸກຄະລາກອນໃຫ້ແຂວງສະຫວັນນະເຂດ. ໂຄງການສັກຢາວັກຊີນເປີດກວ້າງປ້ອງກັນບັນດາພະຍາດໄຂ້ຍຸງລາຍ, ໄຂ້ເລືອດອອກ, ຖອກທ້ອງ ແລະປ້ອງກັນ ແລະສະກັດກັ້ນໂລກເອດສຢູ່ແຂວງ ສະຫວັນນະເຂດ ແມ່ນໄດ້ປະຕິບັດຖືກຕາມແຜນການປິ່ນປົວພະຍາດທີ່ກໍານົດໄວ້. ການ

ກວດພົບ, ແບ່ງເຂດ ແລະລົບລ້າງການລະບາດຂອງພະຍາດໄດ້ດຳເນີນຢ່າງທັນການ. ການຮ່ວມມືພັດທະນາບັນດາພື້ນທີ່ວັດຖຸຜະລິດຢາ ແລະການຮ່ວມທຸລະກິດຜະລິດຢາສະໜຸນໄພຈຳນວນໜຶ່ງ ຈາກວັດຖຸດິບທີ່ມີຢູ່ຂອງແຂວງສະຫວັນນະເຂດ ໄດ້ຮັບການຜັນຂະຫຍາຍ ຢ່າງມີປະສິດທິຜົນຈາກສອງຝ່າຍ. ບໍລິສັດການຢາກວາງຈີໄດ້ສົມທົບກັບບັນດາພະແນກສາທາລະນະສຸກແຂວງສະຫວັນນະເຂດ ເພື່ອເປີດຕົວແທນຈຳໜ່າຍຢາຫຼວງ ເພື່ອຕອບສະໜອງຄວາມຕ້ອງການປິ່ນປົວພະຍາດໃຫ້ປະຊາຊົນ. ດ້ວຍຄວາມມານະພະຍາຍາມຂອງຂະແໜງສາທາລະນະສຸກບັນດາທ້ອງຖິ່ນຂອງແຂວງສະຫວັນນະເຂດ ແລະການຊ່ວຍເຫຼືອ ແລະຮ່ວມມືຂອງຂະແໜງສາທາລະນະສຸກ ແລະການຢາແຂວງກວາງຈີ, ແຂວງສະຫວັນນະເຂດໄດ້ລົບລ້າງຄວາມສ່ຽງຈາກບັນດາພະຍາດຕ່າງໆ.

ນອກຈາກການກວດ, ປິ່ນປົວພະຍາດແລະດູແລຄົນເຈັບໂດຍບໍ່ເສຍຄ່າໃຫ້ບັນດາການນຳແຂວງສະຫວັນນະເຂດ ຕາມສັນຍາປະຈຳປີທີ່ໄດ້ລົງນາມແລ້ວ, ຂະແໜງສາທາລະນະສຸກກວາງຈີ ໄດ້ອະນຸຍາດໃຫ້ບັນດາໂຮງໝໍເມືອງຢູ່ເຂດຊາຍແດນ, ໂຮງໝໍແຂວງຜັນຂະຫຍາຍປະຕິບັດຮູບແບບກວດ ແລະປິ່ນປົວຕາມຄວາມຕ້ອງການໃຫ້ປະຊາຊົນສອງແຂວງຂອງລາວ. ເພື່ອປະຕິບັດໂຄງການນີ້ເປັນຢ່າງດີ, ສະຖານທີ່ສາທາລະນະສຸກ ຢູ່ລຽບຕາມຊາຍແດນໄດ້ຮັບການຍົກລະດັບໂດຍຂະແໜງສາທາລະນະສຸກກວາງຈີ, ລົງທຶນອຸປະກອນ, ແລະຢາ. ຂະແໜງສາທາລະນະສຸກແຂວງກວາງຈີໄດ້ລົງທຶນກໍ່ສ້າງສຸກສາລາຢູ່ເທດສະບານລາວບາວ (ໃກ້ກັບດ່ານຊາຍແດນລາວບາວ-ແດນສະຫວັນ). ບັນດາສະຖານທີ່ນີ້ໄດ້ສົມທົບກັບແພດທະຫານຊາຍແດນ ເພື່ອກວດພະຍາດໃຫ້ແກ່ປະຊາຊົນຢູ່ເຂດຊາຍແດນແຂວງ

ກວາງຈີ, ທັງກວດ ແລະປິ່ນປົວພະຍາດໃຫ້ແກ່ປະຊາຊົນແຂວງສະຫວັນນະເຂດ. ປີ 2013, ມີຄົນເຈັບ 1.046 ຄົນ ຈາກບັນດາທ້ອງຖິ່ນຂອງແຂວງສະຫວັນນະເຂດໄດ້ມາກວດ, ປິ່ນປົວພະຍາດ ແລະຮັບການແຈກຢາໂດຍບໍ່ເສຍຄ່າ, ດ້ວຍລວມມູນຄ່າທັງໝົດ 25 ລ້ານກວ່າດົ່ງ. ສົກປີ 2014-2015, ກອງບັນຊາການທະຫານຊາຍແດນ ໄດ້ປະສານສົມທົບກັບອົງການກາແດງແຂວງ ລົງໄປກວດ ແລະແຈກຢາຟຣີໃຫ້ແກ່ຄົນເຈັບ 300 ກວ່າຄົນຂອງຊາວບ້ານກະຕູບ, ເມືອງເຊໂປນ, ແຂວງສະຫວັນນະເຂດ, ຈຳນວນຢາປິ່ນປົວຟຣີແມ່ນ 12 ລ້ານກວ່າດົ່ງ.

ການຮ່ວມມືລົງທຶນກໍ່ສ້າງບັນດາໂຮງໝໍ ແລະ ບັນດາສະຖານທີ່ສາທາລະນະສຸກຢູ່ແຂວງສະຫວັນນະເຂດ ກໍໄດ້ຮັບຄວາມເອົາໃຈໃສ່ຂອງທັງສອງຝ່າຍ. ໃນປີ 2018-2019, ແຂວງກວາງຈີ ໄດ້ໜູນຊ່ວຍແຂວງສະຫວັນນະເຂດ 3.019 ຕື້ດົ່ງ ເພື່ອກໍ່ສ້າງສຸກສາລາແດນສະຫວັນ. ຂະແໜງສາທາລະນະສຸກແຂວງກວາງຈີໄດ້ສົມທົບກັບວິສາຫະກິດ ຈຳນວນໜຶ່ງປະກອບທຶນກໍ່ສ້າງໂຮງໝໍ ແລະ ສະຖານທີ່ກວດ ແລະ ປິ່ນປົວພະຍາດ ຈຳນວນໜຶ່ງ ຢູ່ແຂວງສະຫວັນນະເຂດ.

ນອກຈາກນັ້ນ, ວຽກງານບຳລຸງວິຊາຊີບ ແລະວິຊາສະເພາະໃຫ້ແກ່ພະນັກງານສາທາລະນະສຸກແຂວງສະຫວັນນະເຂດ ກໍໄດ້ສືບຕໍ່ປະຕິບັດດ້ວຍດີ. ໃນແຕ່ລະປີ, ວິທະຍາໄລການແພດກວາງຈີ ໂດຍສະເລ່ຍແລ້ວໄດ້ກໍ່ສ້າງນັກສຶກສາຕ່າງປະເທດ 10 ຄົນ ຂອງແຂວງສະຫວັນນະເຂດ. ວຽກງານຝຶກອົບຮົມ ວິຊາສະເພາະໃຫ້ແກ່ພະນັກງານປ້ອງກັນການລະບາດແມ່ນໄດ້ຈັດຂຶ້ນຕາມການກຳນົດໃນແຕ່ລະປີ.

ປະຕິບັດວຽກງານປ້ອງກັນ ແລະ ຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ-19, ແຂວງກວາງຈີ ໄດ້ສົມທົບ, ຊ່ວຍເຫຼືອແຂວງສະຫວັນນະເຂດໃນການ

ໂຄສະນາ, ສຶກສາໃຫ້ປະຊາຊົນຮ່ວມມືເພື່ອປ້ອງກັນ ແລະຕ້ານການແຜ່ລະບາດຂອງພະຍາດ. ຊີ້ນຳບັນດາກຳລັງໜ້າທີ່ຈັດຕັ້ງການລາດຕະເວນ, ຄວບຄຸມ ແລະ ຄຸ້ມຄອງບັນດາການເຄື່ອນໄຫວນຳເຂົ້າ ແລະສົ່ງອອກ, ເຂົ້າ-ອອກເມືອງຂ້າມຊາຍແດນ, ຮັບປະກັນການພົວພັນການຄ້າສິນຄ້າລະຫວ່າງ 2 ເບື້ອງຊາຍແດນ ກໍຄືວຽກງານປ້ອງກັນ ແລະຕ້ານການແຜ່ລະບາດຂອງພະຍາດ. ໃນໄລຍະທີ່ໂລກລະບາດພະຍາດໂຄວິດ-19 ຖືກເກີດຂຶ້ນ, ບັນດາກຳລັງ, ອົງການເຈົ້າໜ້າທີ່ກ່ຽວຂ້ອງໄດ້ແກ້ໄຂບັນຫາທີ່ເກີດຂຶ້ນໃນໄລຍະປິດດ່ານຊາຍແດນຢ່າງທັນທີ່ ແລະສົມທົບກັບຝ່າຍລາວກ່ຽວກັບບັນດາມາດຕະການປ້ອງກັນ ແລະຕ້ານການແຜ່ລະບາດພະຍາດໂຄວິດ-19 ພ້ອມກັນນັ້ນຊ່ວຍເຫຼືອອຸປະກອນຮັບໃຊ້ໃນວຽກງານປ້ອງກັນ ແລະຕ້ານການແຜ່ລະບາດພະຍາດ. ໃນປີ 2021, ກ່ອນໂລກລະບາດພະຍາດໂຄວິດ-19 ຖືກກັບຄືນຢູ່ລາວ ແລະຫວຽດນາມ, ແຂວງກວາງຈິ ໄດ້ຊ່ວຍເຫຼືອພາຫະນະອຸປະກອນການແພດ ຮັບໃຊ້ໃນວຽກງານປ້ອງກັນແລະຕ້ານການລະບາດພະຍາດໂຄວິດ-19 ໃຫ້ບັນດາເມືອງຊາຍແດນຂອງແຂວງສະຫວັນນະເຂດ ດ້ວຍຍອດມູນຄ່າກວ່າ 300 ລ້ານດົ່ງ. ...[21]

[21]ນອກນັ້ນ, ກອງບັນຊາການທະຫານແຂວງ ກວາງຈິ ໄດ້ໜູນຊ່ວຍກອງບັນຊາການທະຫານແຂວງສະຫວັນນະເຂດ ດ້ວຍເຄື່ອງມືອຸປະກອນການແພດ ເພື່ອປ້ອງກັນ ແລະຕ້ານພະຍາດໂຄວິດ-19, ດ້ວຍລວມມູນຄ່າ 2 ຄັ້ງ, ເປັນຍອດມູນຄ່າ 435 ລ້ານດົ່ງ. ຄະນະຊາວໜຸ່ມກອມມູນິດໂຮ່ຈິມິນ ແຂວງກວາງຈິໄດ້ໜູນຊ່ວຍຄະນະຊາວໜຸ່ມແຂວງ ສະຫວັນນະເຂດ ດ້ວຍຜ້າອັດປາກ 13.000 ອັນ; ນ້ຳຢາຂ້າເຊື້ອ 470 ລິດ ແລະ ເຄື່ອງໃຊ້ຈຳເປັນອື່ນໆຈຳນວນໜຶ່ງ ດ້ວຍລວມມູນຄ່າທັງໝົດປະມານ 300 ລ້ານດົ່ງ. ພະແນກການຕ່າງປະເທດ, ສະຫະພັນບັນດາອົງການມິດຕະພາບແຂວງ, ສະມາຄົມມິດຕະພາບຫວຽດນາມ - ລາວ ໄດ້ຂົນຂວາຍໃຫ້ບໍລິຈາກຊ່ວຍເຫຼືອໃຫ້ອຳນາດການປົກຄອງ ແລະສະມາຄົມມິດຕະພາບລາວ-ຫວຽດນາມ ແຂວງສະຫວັນນະເຂດ ບັນ

*3.3. ການຮ່ວມມືດ້ານການສຶກສາ-ບຳລຸງສ້າງ, ຍົກສູງຄຸນນະພາບຊັບພະຍາກອນມະນຸດ*

ບົນຂົງເຂດການບຳລຸງສ້າງຊັບພະຍາກອນມະນຸດ, ການຮ່ວມມືລະຫວ່າງແຂວງກວາງຈິ ແລະ ແຂວງສະຫວັນນະເຂດໄດ້ມີການປ່ຽນແປງຢ່າງຕັ້ງໜ້າ; ຮູບແບບການຮ່ວມມືດ້ານການບຳລຸງສ້າງທີ່ຫຼາກຫຼາຍໃນນັ້ນໄດ້ສຸມໃສ່ການຮ່ວມກັນ ແລະ ການແລກປ່ຽນດ້ານການສຶກສາລະຫວ່າງໂຮງຮຽນຂອງສອງແຂວງ.

ໂຮງຮຽນການເມືອງ ເລຢວນ ແຂວງກວາງຈິໄດ້ສົມທົບກັບ ແຂວງສະຫວັນນະເຂດ ເປີດສີກຮຽນຝຶກອົບຮົມ 11 ຊຸດ ລວມມີພະນັກງານ 250 ຄົນໄປຮຽນທິດສະດີການເມືອງ ແລະການຄຸ້ມຄອງລັດຊັ້ນກາງ. ວິທະຍາໄລສ້າງຄູກວາງຈິ ໄດ້ປະຕິບັດແຜນຮ່າງ “ຝຶກອົບຮົມໃຫ້ຄູສອນແຂວງສະຫວັນນະເຂດ ໄລຍະ 2012-2015” ຢ່າງມີປະສິດທິຜົນ ແລະ ພ້ອມກັນນັ້ນ, ໄດ້ສົມທົບກັບ ວິທະຍາໄລສ້າງຄູ ແຂວງສະຫວັນນະເຂດ ກ່ຽວກັບການແລກປ່ຽນຄູ, ຮ່ວມກັນໃນ ການສອນພາສາຫວຽດນາມ, ພາສາລາວ; ລາຍການວິທະຍາໄລສ້າງຄູດົນຕີ, ວິຈິດສິນ. ວິທະຍາໄລສ້າງຄູກວາງຈິ ໄດ້ກໍ່ສ້າງໃຫ້ ແຂວງສະຫວັນນະເຂດນັກສຶກສາ ຈຳນວນ 10 ຄົນທີ່ມີລະດັບຄວາມຮູ້ວິທະຍາໄລ ຄະນະຄະນິດສາດ-ໄອທີ; ຮັບນັກສຶກສາລາວ ມາຮຽນວິທະຍາໄລສ້າງຄູຈຳນວນ 25 ຄົນ ດ້ວຍວິຊາດົນຕີ, ວິຈິດສິນ, ອະນຸບານ ແລະ ປະຖົມ; ໄດ້ຮັບ ສອນພາສາຫວຽດນາມ ໃຫ້ພະນັກງານຂອງແຂວງ

---

ດາອຸປະກອນການແພດເພື່ອປ້ອງກັນ ແລະ ຕ້ານພະຍາດໂຄວິດ-19 ເປັນມູນຄ່າເກືອບ 80 ລ້ານດົ່ງ.

.

ສະຫວັນນະເຂດ ຈຳນວນ 15 ທ່ານ ມາຮຽນທິດສະດີ ການເມືອງຢູ່ໂຮງຮຽນການເມືອງ ເລຢວນ; ເປີດຊຸດຮຽນພາສາລາວໃຫ້ນັກຮຽນ 32 ຄົນ ທີ່ເປັນພະນັກງານລັດຖະກອນຂອງແຂວງກວາງຈີ, ສອນໂດຍຄູສອນຂອງວິທະຍາໄລສ້າງຄູແຂວງສະຫວັນນະເຂດ... ນອກຈາກການກໍ່ສ້າງໃນລະບົບປົກກະຕິແລ້ວ, ວິທະຍາໄລສ້າງຄູກວາງຈີ ຍັງເປີດຊຸດອົບຮົມວິຊາຊີບເປັນຫຼາຍຊຸດໃຫ້ແກ່ພະນັກງານຄູອາຈານຫຼາຍຮ້ອຍຄົນ ຂອງແຂວງສະຫວັນນະເຂດ.

ເພື່ອຍົກສູງຄຸນນະພາບວິຊາສະເພາະ ໃຫ້ຄູສອນຢູ່ແຂວງສະຫວັນນະເຂດ, ຂະແໜງການສຶກສາ ແລະກໍ່ສ້າງແຂວງກວາງຈີ ໄດ້ຊຸກຍູ້ຮູບແບບການແລກປ່ຽນຄູສອນ, ບຳລຸງສ້າງເປັນປະຈຳ ແລະ ບຳລຸງປະຈຳທີ່ຕາມແຕ່ລະໄລຍະ. ຂະແໜງການສຶກສາ ແລະ ກໍ່ສ້າງແຂວງກວາງຈີ ໄດ້ສົ່ງຄູສອນທີ່ມີປະສົບການບັນດາວິຊາຄະນິດສາດ, ຟີຊິກ, ເຄມີ, ຊີວະສາດ, ວິທະຍາສາດຄອມພິວເຕີ ເພື່ອໄປບຳລຸງວິຊາຊີບ, ວິຊາສະເພາະ ໃຫ້ແກ່ຄູອາຈານຂອງແຂວງສະຫວັນນະເຂດເພື່ອສອນພາສາຫວຽດນາມ.

ຂະແໜງສຶກສາທິການແຂວງສະຫວັນນະເຂດ ຍັງໄດ້ສ້າງເງື່ອນໄຂສະດວກໃຫ້ແຂວງກວາງຈີ ຈັດຕັ້ງການຮຽນ-ການສອນພາສາລາວໃຫ້ພະນັກງານຈຳນວນໜຶ່ງ ແລະຮັບນັກສຶກສາເຂົ້າຮຽນວິຊາພາສາລາວ ເພື່ອກະກຽມເຂົ້າຮຽນຢູ່ມະຫາວິທະຍາໄລແຫ່ງຊາດລາວ. ໃນປີ 2009, ດ້ວຍການຊ່ວຍເຫຼືອ ຂອງແຂວງສະຫວັນນະເຂດ, ພະແນກການຕ່າງ ປະເທດແຂວງກວາງຈີ ໄດ້ສົມທົບກັບພະແນກສຶກສາທິການ ແລະກິລາຂອງແຂວງສະຫວັນນະເຂດ ໄດ້ຈັດຊຸດຮຽນພາສາລາວໃຫ້ແກ່ພະນັກງານ-ລັດຖະກອນຂອງແຂວງກວາງຈີ ຈຳນວນ 54 ຄົນ.

ສາມາດເວົ້າໄດ້ວ່າ, ການຮ່ວມມືດ້ານການສຶກສາ-ກໍ່ສ້າງລະຫວ່າງແຂວງກວາງຈິ ແລະແຂວງສະຫວັນນະເຂດ ໄດ້ປະກອບສ່ວນແກ້ໄຂແຫຼ່ງຊັບພະຍາກອນມະນຸດເພື່ອພັດທະນາເສດຖະກິດ - ສັງຄົມໃຫ້ແຂວງສະຫວັນນະເຂດຢ່າງທັນການ.

*3.4. ການຮ່ວມມືດ້ານວິທະຍາສາດ ແລະ ເຕັກໂນໂລຊີ*

ແຂວງກວາງຈິ ໄດ້ພ້ອມກັບແຂວງສະຫວັນນະເຂດ ເພື່ອຜັນຂະຫຍາຍໜ້າທີ່ຮ່ວມມືສາກົນ ກ່ຽວກັບບັນດາບັນຫາວິທະຍາສາດ ແລະ ເຕັກໂນໂລຊີທີ່ຕ່າງຝ່າຍຕ່າງມີຄວາມສົນໃຈເປັນຕົ້ນແມ່ນ: ການສໍາຫຼວດພື້ນຖານເງື່ອນໄຂດ້ານທໍາມະຊາດເພື່ອຮັບໃຊ້ການພັດທະນາເສດຖະກິດ, ປົກປັກຮັກສາສິ່ງແວດລ້ອມຢູ່ເຂດຊາຍແດນແຫ່ງຊາດຂອບເຂດສອງແຂວງກວາງຈິ ແລະສະຫວັນນະເຂດ; ກໍ່ສ້າງຂໍ້ອ້າງອີງວິທະຍາສາດພັດທະນາເສດຖະກິດ - ສັງຄົມ ແລະ ປົກປັກຮັກສາສິ່ງແວດລ້ອມຢູ່ເຂດເສດຖະກິດກໍາລັງຜັກດັນ ກວາງຈິ - ສະຫວັນນະເຂດ ໃນແລວເສດຖະກິດຕາເວັນອອກ - ຕາເວັນຕົກ".

ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງກວາງຈິ ໄດ້ສົມທົບກັບພະແນກວິທະຍາສາດ ແລະເຕັກໂນໂລຊີແຂວງສະຫວັນນະເຂດຈັດຕັ້ງກອງປະຊຸມສໍາມະນາ "ຕີລາຄາໝາກຜົນການເຄື່ອນໄຫວຮ່ວມມືສາກົນດ້ານວິທະຍາສາດ ແລະເຕັກໂນໂລຊີ"; ໜູນຊ່ວຍແຂວງສະຫວັນນະເຂດກ່ຽວກັບອຸປະກອນເຕັກໂນໂລຊີ, ບໍາລຸງສ້າງພະນັກງານວິຊາການປູກເຫັດ, ສ້າງຫ້ອງທົດລອງ, ໂຮງງານຜະລິດແນວພັນ, ຄັງເກັບວັດຖຸດິບ, ຕິດຕັ້ງໄຟຟ້າ ແລະນໍ້າປະປາ ແລະອື່ນໆ ເນື້ອໃນບັນດາສົກຮຽນອົບຮົມໄດ້ຕອບສະໜອງຄວາມ

ຮຽກຮ້ອງ ກ່ຽວກັບການຍົກລະດັບວິຊາຊີບໃນບັນດາດ້ານ ເຕັກໂນໂລຊີ ຂໍ້ມູນ, ນຳໃຊ້ຄວາມກ້າວໜ້າທາງວິທະຍາສາດ, ເຕັກໂນໂລຊີ ແລະ ມາດຕະຖານການວັດແທກຄຸນນະພາບ, ປະກອບສ່ວນເຂົ້າໃນການປະຕິບັດ ລາຍການລັດຖະບານເອເລກຕຣົງຂອງລັດລາວ ແລະເພີ່ມທະວີວຽກງານການຄຸ້ມຄອງກ່ຽວກັບລະບົບການວັດແທກຂອງພະແນກວິທະຍາສາດ ແລະເຕັກໂນໂລຊີແຂວງສະຫວັນນະເຂດ.

ນອກຈາກນັ້ນ, ກະຊວງວິທະຍາສາດ ແລະເຕັກໂນໂລຊີຫວຽດນາມ ແລະກະຊວງວິທະຍາສາດ ແລະເຕັກໂນໂລຊີລາວໄດ້ມອບໃຫ້ລາວບັນຊີລາຍຊື່ບັນດາໂຄງການພາຍໃຕ້ອະນຸສັນຍາກ່ຽວກັບວິທະຍາສາດ ແລະ ເຕັກໂນໂລຊີລະຫວ່າງລັດຖະບານຫວຽດນາມ ແລະລັດຖະບານລາວປະຕິບັດແຕ່ແຜນການປີ 2012-2013.

## ພາກທີ III.

## ສືບຕໍ່ເພີ່ມພູນຄູນສ້າງການພົວພັນຮ່ວມມືມິດຕະພາບ ລະຫວ່າງ ແຂວງ ກວາງຈິ ແລະແຂວງສະຫວັນນະເຂດນັບມື້ນັບຍືນຍົງ

ຕິດພັນກັບປະຫວັດສາດການພົວພັນແບບພິເສດຫວຽດນາມ-ລາວ, ໃນຕະຫຼອດໄລຍະການກໍ່ສ້າງ ແລະພັດທະນາ, ການພົວພັນມິດຕະພາບ ແລະການຮ່ວມມືລະຫວ່າງແຂວງກວາງຈິ ແລະແຂວງສະຫວັນນະເຂດ ໄດ້ພັດທະນາຢ່າງບໍ່ຢຸດຢັ້ງທັງລວງກວ້າງ ແລະລວງເລິກ. ສາຍພົວພັນນັ້ນໄດ້ຮັບຮອງ ແລະຕີລາຄາສູງຈາກສູນກາງພັກ ແລະລັດຖະບານຂອງສອງປະເທດ ແລະໄດ້ອີງຄະນະພັກ, ອຳນາດການປົກຄອງ ແລະປະຊາຊົນສອງແຂວງເຄົາລົບ, ຮັກສາ ແລະ ເສີມຂະຫຍາຍຜ່ານບັນດາສະໄໝ ແລະຈະເປັນພາກພູມໃຈຂອງປະຊາຊົນແຂວງກວາງຈິ ແລະແຂວງສະຫວັນນະເຂດຕະຫຼອດໄປ. ກວາງຈິ ແລະສະຫວັນນະເຂດ ພວມປະເຊີນໜ້າກັບກາລະໂອກາດໃໝ່ຫຼາຍຢ່າງ, ພິເສດແມ່ນກາລະໂອກາດຈາກກະແສການລົງທຶນໃໝ່ຂອງຕ່າງປະເທດ ເຂົ້າສອງປະເທດ ແລະຈາກບັນດາໂຄງການຄົມມະນາຄົມຍຸດທະສາດຂອງຫວຽດນາມ ແລະລາວເຊື່ອມຕໍ່ກັບບັນດາປະເທດໃນອະນຸພາກພື້ນ

ແມ່ນ້ຳຂອງ (GMS) ສ້າງເງື່ອນໄຂສະດວກໃຫ້ແກ່ສອງແຂວງຊຸກຍູ້ການຮ່ວມມື ພ້ອມກັນພັດທະນາ.

ເພື່ອຫັນເປັນລະອຽດທັດສະນະ, ແຜນນະໂຍບາຍ ແລະນະໂຍບາຍຂອງພັກ ແລະລັດກ່ຽວກັບສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ຄວາມສາມັກຄີແບບພິເສດ ແລະການຮ່ວມມືຮອບດ້ານລະຫວ່າງ ສອງປະເທດຫວຽດນາມ-ລາວເວົ້າລວມ, ລະຫວ່າງກວາງຈິ ແລະແຂວງສະຫວັນນະເຂດເວົ້າສະເພາະ ໃຫ້ນັບມື້ນັບແທດຈິງ ແລະເກີດດອກອອກຜົນໃນໄລຍະຈະມາເຖິງ, ການນຳສອງແຂວງໃຫ້ຄຳໝັ້ນສັນຍາສືບຕໍ່ເພີ່ມທະວີ ແລະສະແດງສາຍພົວພັນທີ່ເປັນມູນເຊື້ອ, ຄວາມສາມັກຄີແບບພິເສດ ແລະການຮ່ວມມືຢ່າງຮອບດ້ານໃຫ້ເລິກເຊິ່ງກ່ວາອີກ:

ສອງຝ່າຍໄດ້ຊຸກຍູ້ການຮ່ວມມືຢ່າງມີປະສິດທິຜົນໃນຂົງເຂດ: ການຕ່າງປະເທດ, ການທະຫານ, ປ້ອງກັນຄວາມສະຫງົບ, ຊາຍແດນ, ເສດຖະກິດ, ການຄ້າ, ການລົງທຶນ, ການທ່ອງທ່ຽວ, ການປະຕິຮູບດ້ານບໍລິຫານ, ການສຶກສາ, ບຳລຸງສ້າງ, ສາທາລະນະສຸກ, ວິທະຍາສາດ ແລະເຕັກໂນໂລຊີ... ຕາມບັນດາເນື້ອໃນສັນຍາທີ່ໄດ້ລົງນາມ. ສືບຕໍ່ຮັກສາການພົວພັນມິດຕະພາບ, ຊ່ວຍເຫຼືອເຊິ່ງກັນ ແລະກັນ.

- ກ່ຽວກັບເສດຖະກິດ, ການຄ້າ, ການລົງທຶນ, ການທ່ອງທ່ຽວ: ຜັນຂະຫຍາຍບັນດາການເຄື່ອນໄຫວພັດທະນາການຄ້າຊາຍແດນ ລະຫວ່າງສອງແຂວງ. ເພີ່ມທະວີການຈັດຕັ້ງບັນດາການເຄື່ອນໄຫວສົ່ງເສີມການລົງທຶນ, ຍົກສູງປະສິດທິຜົນການລົງທຶນ, ອຳນວຍຄວາມສະດວກ, ໜູນຊ່ວຍ ແລະແກ້ໄຂບັນດາຄວາມຫຍຸ້ງຍາກ, ຂໍ້ຄົງຄ້າງຂອງບັນດາວິສາຫະກິດຂອງ ສອງແຂວງ; ຍົກສູງປະສິດທິຜົນການນຳໃຊ້ແຫຼ່ງທຶນການຊ່ວຍເຫຼືອ ຂອງຫວຽດນາມຢູ່ລາວໃຫ້ບັນດາໂຄງການ

ດ້ວຍແຫຼ່ງທຶນ ໜູນຊ່ວຍຂອງລັດຖະບານຫວຽດນາມ ແລະບັນດາໂຄງການລົງທຶນຂອງແຂວງກວາງຈິ, ໜູນຊ່ວຍແຂວງສະຫວັນນະເຂດ. ສຸມໃສ່ແກ້ໄຂບັນດາຄວາມຫຍຸ້ງຍາກກ່ຽວກັບການເຄື່ອນໄຫວດ້ານການຄ້າ, ພິເສດແມ່ນການນຳເຂົ້າ ແລະສົ່ງອອກສິນຄ້າ ແລະ ການແລກປ່ຽນຜະລິດຕະພັນກະເສດຢູ່ບິນເສັ້ນຊາຍແດນ ແລະການເຄື່ອນໄຫວຂົນສົ່ງສິນຄ້າ. ສ້າງເງື່ອນໄຂໃຫ້ ວິສາຫະກິດພາຍໃນ ແລະຕ່າງປະເທດຊອກຫາກາລະໂອກາດຮ່ວມມື ແລະການລົງທຶນໃນບັນດາຂົງເຂດທີ່ສອງແຂວງມີຄວາມສາມາດບົ່ມຊ້ອນ ແລະມີທ່າໄດ້ປຽບຄື: ກະສິກຳ, ພະລັງງານທົດແທນ, ການບໍລິການ Logistics... ຊຸກຍູ້ການພັດທະນາການທ່ອງທ່ຽວ, ສ້າງບັນດາຈຸດ ແລະສາຍທ່ອງທ່ຽວ, ສົມທົບກັນຈັດຕັ້ງກອງປະຊຸມ, ກອງປະຊຸມສຳມະນາ ແລະງານວາງສະແດງສິນຄ້າ ລະຫວ່າງສອງແຂວງ ແລະບັນດາແຂວງບົນແລວເສດຖະກິດຕາເວັນອອກ-ຕາເວັນຕົກ. ໄດ້ຈັດຕັ້ງກອງປະຊຸມຮ່ວມມືດ້ານການຄ້າ, ການລົງທຶນ, ການທ່ອງທ່ຽວ, ແຮງງານ ແລະ ສື່ມວນຊົນຢູ່ 3 ແຂວງ - 3 ປະເທດ (ກວາງຈິ - ສະຫວັນນະເຂດ - ມຸກດາຫານ). ປະສານຄົ້ນຄວ້າພັດທະນາໂຄງການສາຍສົ່ງໄຟຟ້າ 500KV ເຊື່ອມຕໍ່ແຕ່ກວາງຈິ-ລາວ-ໄທ.

- ສອງຝ່າຍສືບຕໍ່ຊຸກຍູ້ການປະຕິຮູບລະບຽບການບໍລິຫານ, ລົບລ້າງບັນດາຂໍ້ຈຳກັດທີ່ຍັງຄົງຄ້າງ, ປະຕິບັດ ຮູບແບບການກວດກາ "ປະຕູໜຶ່ງ-ບ່ອນຢຸດດຽວ" ຢູ່ຄູ່ດ່ານສາກົນລາວບາວ-ແດນສະຫວັນຢ່າງມີປະສິດທິຜົນ. ລົງທຶນພື້ນຖານໂຄງລ່າງ, ປະຕິບັດລະບຽບການຍົກລະດັບຄູ່ດ່ານທ້ອງຖິ່ນຕາຫຼຸງ (ກວາງຈິ) - ກະໂລ (ສະຫວັນນະເຂດ) ໃຫ້ກາຍເປັນຄູ່ດ່ານຊາຍແດນສາກົນ, ສົມທົບກັນແກ້ໄຂຄວາມ

ຫຍຸ້ງຍາກເພື່ອຊຸກຍູ້ການເຄື່ອນໄຫວການຄ້າຊາຍແດນ, ສ້າງເງື່ອນໄຂໃຫ້ປະຊາຊົນສອງເບື້ອງ ຊາຍແດນເພື່ອພັດທະນາການຜະລິດ ແລະການບໍລິໂພກຜະລິດຕະພັນ. ຈຸດພົ້ນເດັ່ນໃນການພົວພັນຮ່ວມມືລະຫວ່າງ ສອງແຂວງແມ່ນໃນການຢ້ຽມຢາມ ແລະ ເຮັດວຽກຂອງຄະນະຜູ້ແທນແຂວງກວາງຈິ ໃນເດືອນ 2/2022, ສອງແຂວງໄດ້ລົງນາມໃນບົດບັນທຶກຊ່ວຍຈຳ. ປະສານສົມທົບກັນຄົ້ນຄວ້າບັນດາກົນໄກ ແລະ ນະໂຍບາຍສະເພາະເພື່ອຍື່ນສະເໜີຕໍ່ກົມການເມືອງ ແລະ ລັດຖະບານຂອງສອງປະເທດໃຫ້ທົດລອງກໍ່ສ້າງເຂດເສດຖະກິດຂ້າມຊາຍແດນລວມລາວບາວ - ແດນສະຫວັນ. ແຂວງກວາງຈິແນະນຳ ແລະສະໜັບສະໜູນກຸ່ມບໍລິສັດ Sakae Holding - Surbana Jurong (ສິງກະໂປ) ຊ່ວຍໃຫ້ແຂວງສະຫວັນນະເຂດວາງແຜນພັດທະນາເສດຖະກິດ-ສັງຄົມ, ວາງແຜນລະອຽດຂອງເຂດການຄ້າຊາຍແດນສະຫວັນ. ເພີ່ມທະວີດຶງດູດການລົງທຶນເຊິ່ງກັນ ແລະກັນແລະການລົງທຶນຂອງຕ່າງປະເທດເຂົ້າສອງແຂວງ, ມີໂບຍາຍພິເສດໃຫ້ແກ່ການລົງທຶນຢູ່ເຂດຊາຍແດນ.

- ແລກປ່ຽນ ແລະ ສົ່ງມອບເຕັກໂນໂລຊີ, ເຕັກນິກ ແລະສ້າງບັນດາຮູບແບບເສດຖະກິດທີ່ມີປະສິດທິຜົນ ແລະຍືນຍົງ, ພັດທະນາກະສິກຳນຳໃຊ້ເຕັກໂນໂລຊີສູງ, ພັດທະນາຊົນນະບົດ, ຍົກສູງຄວາມສາມາດ, ປ່ຽນໃໝ່ກົດບັນຍັດ, ນະໂຍບາຍໃນການຄຸ້ມຄອງການຜະລິດກະສິກຳ - ປ່າໄມ້. ກໍ່ສ້າງບັນດາໂຄງການຮ່ວມມືໄລຍະຍາວ, ມອບສິ່ງວິທະຍາສາດ ແລະເຕັກໂນໂລຊີ ລະຫວ່າງແຂວງກວາງຈິ ແລະແຂວງສະຫວັນນະເຂດ.

- ຍົກສູງຄຸນນະພາບ ແລະປະສິດທິຜົນຂອງການຮ່ວມມືດ້ານການສຶກສາ, ບຳລຸງສ້າງ ແລະພັດທະນາຊັບພະຍາກອນມະນຸດ. ກວາງຈິສືບຕໍ່ໄດ້ຮັບ ແລະບຳລຸງ

ສ້າງພາສາຫວຽດ, ທິດສະດີການເມືອງ, ແລະວິຊາສະເພາະລະບົບວິທະຍາໄລ, ຝຶກອົບຮົມ, ບຳລຸງສ້າງວິຊາຊີບວິຊາສະເພາະໃຫ້ພະນັກງານ ແລະນັກຮຽນຂອງແຂວງສະຫວັນນະເຂດ. ສະເໜີແຜນການແລກປ່ຽນນັກສຶກສາທີ່ເປັນພະນັກງານ, ລັດຖະກອນຂອງອົງການ, ຂະແໜງການຈຳນວນໜຶ່ງລະຫວ່າງແຂວງກວາງຈິ ແລະແຂວງສະຫວັນນະເຂດ, ແນະນຳ ແລະຄັດເລືອກພະນັກງານ, ນັກຮຽນຈາກແຂວງກວາງຈິ ໄປຝຶກອົບຮົມຢູ່ມະຫາວິທະຍາໄລແຫ່ງຊາດລາວ.

ຈັດຕັ້ງບັນດາຄະນະຜູ້ແທນການແພດ ເພື່ອພົບປະແລກປ່ຽນກ່ຽວກັບວິຊາສະເພາະ, ປະສົບການໃນການຄຸ້ມຄອງ ແລະສ້າງເຄືອຂ່າຍດ້ານສາທາລະນະສຸກ, ສະໜອງຂໍ້ມູນຂ່າວສານ ແລະປະສານສົມທົບກັນໃນການປ້ອງກັນພະຍາດລະບາດຂ້າມຊາດຢ່າງທັນການ. ເຊື່ອມຕໍ່ການບໍລິການກວດ ແລະປິ່ນປົວພະຍາດທາງໄກ, ແຂວງກວາງຈິສ້າງເງື່ອນໄຂສະດວກໃຫ້ ປະຊາຊົນແຂວງສະຫວັນນະເຂດໄດ້ໄປກວດ ແລະປິ່ນປົວພະຍາດຢູ່ບັນດາບ່ອນກວດ ແລະປິ່ນປົວພະຍາດຂອງແຂວງ, ພິເສດ ແມ່ນບັນດາຂະແໜງສະເພາະແຂວງກວາງຈິ ທີ່ມີທ່າແຮງຄືບັນດາພະຍາດກ່ຽວກັບຕາ.

- ວ່າດ້ວຍວຽກງານດ້ານປ້ອງກັນຄວາມສະຫງົບ, ຊາຍແດນ ແລະການຮ່ວມມືມິດຕະພາບ: ບັນດາອົງການເຈົ້າໜ້າທີ່ ແລະອຳນາດການປົກຄອງບັນດາທ້ອງຖິ່ນຕາມເສັ້ນຊາຍແດນ ໄດ້ສົມທົບ, ຕິດຕາມ, ກວດກາ, ປ້ອງກັນ ແລະ ສະກັດກັ້ນບັນດາເປົ້າໝາຍມີການຈັດຕັ້ງເຄື່ອນໄຫວທີ່ຜິດກົດໝາຍ, ເຮັດໃຫ້ເກີດຄວາມບໍ່ໝັ້ນຄົງ, ຄ້າຂາຍຢາເສບຕິດ ແລະອາວຸດ, ຂຸດຄົ້ນ ແລະຄ້າຂາຍຊັບພະຍາກອນທຳມະຊາດຢ່າງຜິດກົດໝາຍ, ການເຂົ້າອອກເມືອງຢ່າງຜິດກົດໝາຍ ແລະບັນດາການລະ

ເມີດອື່ນໆ; ປ້ອງກັນ ແລະຕ້ານອາດຊະຍາກຳຂ້າມຊາດ, ບັນດາການກະທຳເລີຍເຖືອດຂອງບັນດາກຳລັງປໍລະປັກ. ຄຸ້ມຄອງ ແລະປົກປັກຮັກສາເສັ້ນຊາຍແດນ, ລະບົບຫຼັກໝາຍແຫ່ງຊາດ.. ສືບຕໍ່ຜັນຂະຫຍາຍ ຮູບແບບການແຮກສ່ຽວ "ບ້ານ-ບ້ານ" ໃຫ້ມີປະສິດທິຜົນ; ສືບຕໍ່ສົມທົບເປັນຢ່າງດີ ແລະມີປະສິດທິຜົນໃນການຊອກຄົ້ນ, ທ້ອນໂຮມອັດຖິທະຫານອາສາສະໝັກ ແລະນັກຊ່ຽວຊານຫວຽດນາມ ທີ່ເສຍສະຫຼະຊີວິດຢູ່ເຂດລະຫວ່າງສອງແຂວງ. ສະກັດກັ້ນ ແລະຈຳກັດຢ່າງສຸດຂີດ ການເກີດຂຶ້ນໃໝ່ ແລະເກີດຂຶ້ນອີກປະກົດການຂອງຊາວອົບພະຍົບແບບເສລີ ແລະ ຄົນທີ່ແຕ່ງງານໂດຍບໍ່ໄດ້ຈົດທະບຽນຢູ່ເຂດຊາຍແດນ ລະຫວ່າງແຂວງກວາງຈິ ແລະ ແຂວງສະຫວັນນະເຂດ. ແຂວງກວາງຈິໄດ້ສົມທົບກັບກະຊວງຕຳຫຼວດຫວຽດນາມ ໜູນຊ່ວຍແຂວງ ສະຫວັນນະເຂດ ກໍ່ສ້າງກອງບັນຊາການ ປກສ ຢູ່ 19 ກຸ່ມບ້ານຊາຍແດນຂອງແຂວງ ດ້ວຍງົບປະມານສະໜັບສະໜູນ 550 ລ້ານດົ່ງ/ສຳນັກງານ (ໃນນັ້ນ, ກະຊວງຕຳຫຼວດຫວຽດນາມໄດ້ໜູນຊ່ວຍ 150 ລ້ານດົ່ງ/ສຳນັກງານ, ແຂວງກວາງຈິ ໜູນຊ່ວຍ 400 ລ້ານດົ່ງ/ສຳນັກງານ).

- ເພີ່ມທະວີວຽກງານຂໍ້ມູນຂ່າວສານການຕ່າງປະເທດ; ຂໍ້ມູນຂ່າວສານ ແລະໂຄສະນາເຜີຍແຜ່ໃຫ້ປະຊາຊົນທຸກຊັ້ນວັນນະ, ພິເສດແມ່ນລຸ້ນໜຸ່ມກ່ຽວກັບສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງປະເທດຫວຽດນາມ - ລາວ, ລະຫວ່າງສອງແຂວງກວາງຈິ - ສະຫວັນນະເຂດ.

ປະຈຸບັນ, ຍັງມີຫຼາຍພື້ນທີ່ງົບປະມານໃນການພົວພັນຮ່ວມມືລະຫວ່າງສອງແຂວງທີ່ຕ້ອງໄດ້ເອົາໃຈໃສ່, ເປັນຕົ້ນແມ່ນ ໃນຂົງເຂດການຄ້າ, ການລົງທຶນ,

ການທ່ອງທ່ຽວ ແລະອື່ນໆ, ເຊິ່ງຍັງບໍ່ສົມ ກັບການເສີມຂະຫຍາຍຄວາມສາມາດບົ່ມຊ້ອນ, ທ່າໄດ້ປຽບຂອງແຕ່ລະແຂວງ. ໃນໄລຍະຕໍ່ໜ້າ, ບັນດາເນື້ອໃນນີ້ຕ້ອງໃຫ້ສອງຝ່າຍລະອຽດດ້ວຍບັນດາການເຄື່ອນໄຫວທີ່ແທດກັບຕົວຈິງ ເພື່ອສົມກັບຄວາມສາມາດບົ່ມຊ້ອນ, ທ່າໄດ້ປຽບແລະ ພິເສດແມ່ນການພົວພັນມູນເຊື້ອອັນດີງາມຂອງສອງແຂວງ.

## ສະຫຼຸບ

1. ການສ້າງສາຍພົວພັນແບບພິເສດຫວຽດນາມ - ລາວ, ລາວ - ຫວຽດນາມ ແມ່ນການປະດິດສ້າງທິດສະດີປະຕິວັດປົດປ່ອຍຊາດ. ສິ່ງມະຫັດສະຈັນຂອງການພົວພັນແບບພິເສດ ຫວຽດນາມ - ລາວ - ລາວ - ຫວຽດນາມ ແມ່ນການສະແດງຄວາມສຳເລັດບັນລຸເຖິງລະດັບເປັນແບບຢ່າງ, ຖືກຕ້ອງ ແລະກົມກຽວຂອງການພົວພັນຊົນຊາດ ແລະສາກົນ; ສ້າງເງື່ອນໄຂສະດວກໃຫ້ສອງຝ່າຍເປັນເຈົ້າເພື່ອພັດທະນາແຫຼ່ງກຳລັງພາຍໃນຂອງຕົນ ແລະຮ່ວມກັນເພີ່ມທະວີກຳລັງແຮງຂອງກຸ່ມພັນທະມິດ, ຮ່ວມມືຂອງປະຊາຊົນສອງປະເທດ. ນັ້ນແມ່ນມໍລະດົກວັດທະນະທຳອະວັດຖຸຂອງປະຊາຊົນສອງປະເທດຫວຽດນາມ - ລາວ, ດັ່ງທີ່ທ່ານປະທານປະເທດ ສຸພານຸວົງ ໄດ້ຕີລາຄາວ່າ: "ການພົວພັນມິດຕະພາບອ້າຍນ້ອງລະຫວ່າງປະຊາຊົນລາວ ແລະຫວຽດນາມແມ່ນຍິ່ງໃຫຍ່ແທ້ໆ. ບໍ່ມີບົດເພງ, ບົດກະວີໃດສາມາດສັນລະເສີນໄດ້ຫມົດ. ນ້ຳໃຈສາມັກຄີ ລາວ-ຫວຽດນາມສູງກວ່າພູຜາ, ຍາວກວ່າແມ່ນ້ຳ, ກວ້າງກວ່າມະຫາສະໝຸດ, ງາມກວ່າເດືອນເພັງ, ຫອມກວ່າດອກໄມ້ໃດໆທີ່ຫອມທີ່ສຸດໃນໂລກ. ສາຍມິດຕະພາບທີ່ດີງາມນັ້ນໄດ້ຮັບການເພີ່ມພູນຄູນສ້າງ ດ້ວຍຈິດໃຈອັນບໍລິສຸດທີ່ບໍ່ມີສັດຕູໃດສາມາດທຳລາຍໄດ້."[22]

ການພົວພັນແບບພິເສດຫວຽດນາມ - ລາວ, ລາວ - ຫວຽດນາມ ແມ່ນການສັງລວມຄຸນທາດການປະຕິວັດອັນບໍລິສຸດຜຸດຜ່ອງ, ມີຄວາມຮັບຜິດຊອບອັນສູງສົ່ງ

---

[22] ບົດກ່າວຄຳເຫັນທີ່ມີດຕິງ ຢ່າງມີກຽດເພື່ອຕ້ອນຮັບຄະນະຜູ້ແທນປະຊາຊົນລາວ ຢູ່ຫໍບາດິ່ງ, ຮ່າໂນ້ຍ ວັນທີ 25/5/1971. ລົງພິມໃນຫນັງສືພິມ ປະຊາຊົນ ວັນທີ 2 ເດືອນມິຖຸນາ 1971.

ແລະຄວາມຮັກແພງຈິງຮັກພັກດີອັນເຕັມປ່ຽງ ເຊິ່ງປະຊາຊົນ ແລະຊົນຊາດ ຫວຽດນາມ - ລາວ ໃຫ້ຕໍ່ກັນໃນໄລຍະການຕໍ່ສູ້, ອອກແຮງງານປະດິດສ້າງເພື່ອ ຄວາມເອກະລາດ, ເສລີພາບ, ເພື່ອພາລະກິດສ້າງສາ ແລະປ້ອງກັນປະເທດ. ບົນບັນ ດາໄລຍະການປະຕິວັດອັນຫຍຸ້ງຍາກ, ສັບສົນ ແລະການໄຊຊະນະອັນສະຫງ່າລາສີ ຂອງປະຊາຊົນສອງປະເທດ ຫວຽດນາມ - ລາວ, ລ້ວນແຕ່ໄດ້ສະແດງຢ່າງຈະ ແຈ້ງບົດບາດສຳຄັນ, ຄຸນຄ່າການປະຕິວັດ, ມະນຸດສະທຳ ແລະປະສິດທິຜົນອັນໃຫຍ່ ຫຼວງຂອງສາຍພົວພັນແບບພິເສດ ຫວຽດນາມ - ລາວ, ລາວ - ຫວຽດນາມ. ໃນ ໄລຍະຈະມາເຖິງ, ຍາມໃດກໍຕ້ອງຮໍ່າຮຽນ ແລະເຊື່ອມຊຶມບັນດາທັດສະນະ, ຫຼັກການ ແລະວິທີການສ້າງສາຍພົວພັນແບບພິເສດຫວຽດນາມ - ລາວ, ລາວ - ຫວຽດນາມ ແລະໝູນໃຊ້ໃນທຸກການເຄື່ອນໄຫວທີ່ກ່ຽວຂ້ອງເຖິງການພົວພັນນັ້ນ. ພ້ອມກັນນັ້ນ, ຕ້ອງມີສະຕິລະວັງຕົວ ແລະຕໍ່ສູ້ຢ່າງບໍ່ຜ່ອນຜັນຕໍ່ບັນດາທັດສະນະ ແລະເລ່ລ່ຽມເຮັດໃຫ້ຕໍ່າລົງ ຫຼືທຳລາຍສາຍພົວພັນແບບພິເສດຫວຽດນາມ - ລາວ - ລາວ - ຫວຽດນາມ. ພວກເຮົາຕ້ອງຮັບຮູ້ວ່າ, ສາຍພົວພັນລະຫວ່າງ ລາວ-ຫວຽດນາມ ເຖິງວ່າແມ່ນມີຄ່າກວ່າເພັດພອຍອັນລໍ້າຄ່າທີ່ສຸດ, ແຕ່ກໍຍັງຕ້ອງໄດ້ເບິ່ງ ແຍງເພີ່ມພູນຄູນສ້າງຢ່າງເປັນປະຈຳເພື່ອໃຫ້ຜ່ອງໃສຕື່ມອີກ. ເພື່ອເພີ່ມທະວີປັບ ປຸງສາຍພົວພັນສາມັກຄີ ລາວ-ຫວຽດນາມໃນສະພາບການໃໝ່, ພະນັກງານ ສະມາຊິກພັກຕ້ອງມີຄວາມຮັບຮູ້ ແລະເຊື່ອມຊຶມທັດສະນະ, ທ່າທາງກໍຄືວິ ທີປະກອບຄຳເຫັນ ແລະແກ້ໄຂບັນດາບັນຫາຕົວຈິງທີ່ມັກເກີດຂຶ້ນໃຫ້ຖືກຕ້ອງ.

ປະຈຸບັນ, ສະພາບການຂອງໂລກ ແລະພາກພື້ນພວມມີການຜັນແປໄປຫຼາຍ ຢ່າງ, ບໍ່ສາມາດຄາດເດົາໄດ້. ໂລກາພິວັດ ແລະການເຊື່ອມໂຍງເສດຖະກິດສາກົນ

ແລະພາກພື້ນແມ່ນທ່າອ່ຽງທົ່ວໄປ ແລະເສົາຄ້ຳຫຼັກຂອງຂະບວນການນີ້ແມ່ນການຫັນເປັນເສລີທາງດ້ານການຄ້າ. ດ້ວຍຖານະສຳຄັນຂອງເຂດອາຊີຕາເວັນອອກສ່ຽງໃຕ້, ບັນດາປະເທດໃຫຍ່ ແລະພັດທະນາ ແລ້ວນັບມື້ນັບມີຄວາມສົນໃຈ ແລະເພີ່ມທະວີເປີດກວ້າງການພົວພັນ, ພິເສດແມ່ນການຮ່ວມມືດ້ານເສດຖະກິດ, ການຄ້າ ແລະການລົງທຶນ. ນີ້ແມ່ນເງື່ອນໄຂສະດວກໃຫ້ແກ່ການພັດທະນາຂອງແຕ່ລະປະເທດ, ໃນນັ້ນມີຫວຽດນາມ ແລະລາວ. ກິດຈະການປ່ຽນໃໝ່ປະເທດຫວຽດນາມ - ລາວດ້ວຍການພັດທະນາຢ່າງວ່ອງໄວ, ພ້ອມກັບບັນດາໝາຜົນການຮ່ວມມືທີ່ບັນລຸໄດ້ລະຫວ່າງຫວຽດນາມ ແລະລາວ ຮຽກຮ້ອງຕ້ອງເພີ່ມທະວີການຮ່ວມມືຮອບດ້ານໃນໄລຍະໃໝ່. ການສືບຕໍ່ເພີ່ມທະວີ ແລະພັດທະນາສາຍພົວພັນແບບພິເສດ ແລະການຮ່ວມມືຮອບດ້ານລະຫວ່າງສອງປະເທດ ຫວຽດນາມ - ລາວບໍ່ພຽງແຕ່ແມ່ນຄວາມຮຽກຮ້ອງພັດທະນາແບບພາວະວິໄສ ເຊິ່ງຍັງເປັນຄວາມປາຖະໜາຂອງປະຊາຊົນ, ແມ່ນຄວາມຮັບຜິດຊອບຂອງການນຳແຕ່ລະປະເທດ ແລະຍັງເປັນປັດໄຈເພື່ອຮັບປະກັນໃຫ້ການປະຕິບັດປະສົບຜົນສຳເລັດການກໍ່ສ້າງ, ປົກປັກຮັກສາ ແລະການພັດທະນາແບບຍືນຍົງ, ການເຊື່ອມໂຍງສາກົນຢ່າງສຳເລັດຂອງແຕ່ລະປະເທດ. ໃນສະພາບການໃດກໍຕາມ, ສອງປະເທດ ຫວຽດນາມ - ລາວ ຈະມານະພະຍາຍາມຈົນສຸດຄວາມສາມາດ, ຮ່ວມກັນປົກປັກຮັກສາ ແລະເພີ່ມພູນຄູນສ້າງສາຍພົວພັນແບບພິເສດຫວຽດນາມ - ລາວ ໃຫ້ນັບມື້ນັບພັດທະນາ, ຂຽວສົດງົດງາມໝັ້ນຄົງຂະໜົງແກ່ນໄປຊົ່ວກາລະນານ ແລະ ສືບຕໍ່ໃຫ້ຄົນລຸ້ນຫຼັງ ເພື່ອຄວາມພັດທະນາຈະເລີນຮຸ່ງເຮືອງຂອງແຕ່ລະປະເທດ, ເພື່ອສັນຕິພາບ, ສະຖຽນລະພາບ, ການຮ່ວມມື ແລະ ການພັດທະນາຢູ່ໃນພາກພື້ນ ແລະທົ່ວໂລກ

2. ການພົວພັນລະຫວ່າງແຂວງກວາງຈິ ແລະສະຫວັນນະເຂດ ແມ່ນການສືບຕໍ່ "ສາຍພົວພັນບ້ານໃກ້ເຮືອນຄຽງເປັນມິດ" ໃນປະຫວັດສາດ ແລະ"ຄວາມສາມັກຄີແບບພິເສດ, ພັນທະມິດຕໍ່ສູ້" ໃນຊຸມປີຕໍ່ສູ້ຄຽງບ່າຄຽງໄຫຼ່ກັນເພື່ອຕ້ານສັດຕູຮ່ວມຂອງສອງແຂວງ. ຈາກການໃກ້ຄຽງທາງດ້ານພູມສັນຖານ, ຄວາມຄ້າຍຄືກັນໃນສະພາບທໍາມະຊາດ, ເສດຖະກິດແລະວັດທະນະທໍາ; ເປັນຈຸດທີ່ຕັ້ງຍຸດທະສາດ ແລະຄວາມສາມາດບົ່ມຊ້ອນເພື່ອພັດທະນາເສດຖະກິດຂອງສອງແຂວງ, ປະຊາຊົນແຂວງສະຫວັນນະເຂດ ແລະປະຊາຊົນແຂວງກວາງຈິ ໄດ້ສ້າງການພົວພັນບ້ານໃກ້ເຮືອນຄຽງທີ່ເປັນມິດ. ລັກສະນະທີ່ພົ້ນເດັ່ນແມ່ນຄວາມສາມັກຄີ, ຄວາມສັດຊື່, ຄວາມຮັກແພງເຊິ່ງກັນ ແລະກັນ. ສູງກວ່າໝູ່ແມ່ນນໍ້າໃຈຮັກຊາດ, ຈິດໃຈຕໍ່ສູ້ທີ່ບໍ່ຍ່ອມຈໍານົນ ແລະອົງອາດກ້າແກ່ນ ເພື່ອປົກປັກຮັກສາເອກະລາດ ແລະອິດສະລະພາບ. ມູນເຊື້ອອັນດີງາມນັ້ນໄດ້ຮັບການເພີ່ມພູນຄູນສ້າງຜ່ານຫຼາຍຮຸ່ນຄົນ, ແມ່ນພື້ນຖານອັນໜັກແໜ້ນເຊື່ອມຕໍ່ປະຊາຊົນສອງແຂວງ, ໄດ້ຮັບການຈາລຶກໃນປະຫວັດສາດມູນເຊື້ອຕໍ່ສູ້ຕ້ານສັດຕູຜູ້ຮຸກຮານ, ກໍ່ສ້າງ, ປ້ອງກັນບ້ານເກີດເມືອງນອນ ແລະປະເທດຊາດ. ໃນປະຫວັດສາດແຫ່ງການຕໍ່ສູ້ຕ້ານຜູ້ຮຸກຮານຂອງສອງປະເທດ ໄດ້ມີຫຼາຍເຫດການທີ່ພົ້ນເດັ່ນສະແດງໃຫ້ເຫັນຄວາມສາມັກຄີ, ຕິດພັນຂອງປະຊາຊົນແຂວງກວາງຈິ ແລະສະຫວັນນະເຂດ. ເພື່ອປ້ອງກັນເສັ້ນຊາຍແດນ, ປົກປັກຮັກສາຜືນແຜ່ນດິນຂອງປະເທດ, ປະຊາຊົນກວາງຈິ ແລະສະຫວັນນະເຂດໄດ້ຮ່ວມກັນເພື່ອຕ້ານພວກສະຫຍາມມາຮຸກຮານເປັນຫຼາຍຄັ້ງ. ກວາງຈິ ແລະສະຫວັນນະເຂດໄດ້ສາມັກຄີກັນຕ້ານຜູ້ຮຸກຮານ ແລະລຸກຮືຂຶ້ນເພື່ອຍາດເອົາອໍານາດການປົກຄອງຢ່າງໄຊຊະນະ (ກ່ອນປີ 1930 ຫາ 1945). ປະຫວັດແຫ່ງສາຍພົວພັນແບບພິເສດລະຫວ່າງກວາງ

ຈິ ແລະສະຫວັນນະເຂດ ເມື່ອຍັງບໍ່ທັນມີພັກໄດ້ປະຣອຍປະທັບຢ່າງເລິກເຊິ່ງ. ມູນເຊື້ອນັ້ນໄດ້ເສີມຂະຫຍາຍຕື່ມອີກ ຫຼັງຈາກທີ່ພັກກອມມູນິດອິນດູຈີນໄດ້ຮັບການສ້າງຕັ້ງຂຶ້ນ. ນັບແຕ່ພັກກອມມູນິດອິນດູຈີນໄດ້ກຳເນີດຂຶ້ນໃນປີ 1930, ປະຊາຊົນສອງແຂວງໄດ້ຮ່ວມກັນໃນຊຸ້ມຕະບອງດຽວກັນເພື່ອຕໍ່ສູ້ປົດປ່ອຍຊາດ. ຄວາມສາມັກຄີແບບພິເສດ ແລະພັນທະມິດຕໍ່ສູ້ຕ້ານສັດຕູລວມຂອງປະຊາຊົນສອງແຂວງໄດ້ສ້າງກຳລັງແຮງສັງລວມ ປະກອບສ່ວນນຳການປະຕິວັດຂອງສອງປະເທດຈາກໄຊຊະນະໜຶ່ງໄປສູ່ອີກໄຊຊະນະອື່ນ. ພາຍຫຼັງການປະຕິວັດ ເດືອນສິງຫາ ປີ 1945 ຢູ່ຫວຽດນາມ ແລະການລຸກຮື້ຂຶ້ນຍຶດອຳນາດການປົກຄອງຢູ່ລາວໄດ້ຮັບໄຊຊະນະ, ພ້ອມກັບກອງທັບ ແລະປະຊາຊົນຂອງສອງປະເທດ, ກອງທັບ ແລະປະຊາຊົນສອງແຂວງ ສືບຕໍ່ຮ່ວມມືກັນຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝະລັ່ງ ແລະຈັກກະພັດອາເມລິກາຜູ້ຮຸກຮານເພື່ອສຳເລັດພາລະກິດປົດປ່ອຍປະເທດຊາດ. ສາຍພົວພັນໄດ້ຮັບການຫຼໍ່ຫຼອມໃນຕະຫຼອດຊຸມປີທີ່ທຸກຍາກລຳບາກ. ການພົວພັນມິດຕະພາບ ແລະການຮ່ວມມືຮອບດ້ານລະຫວ່າງສອງແຂວງ ໃນພາລະກິດສ້າງສາ ແລະປ້ອງກັນປະເທດຊາດແມ່ນການສືບຕໍ່ມູນເຊື້ອປະຫວັດສາດຂອງສອງຝ່າຍ. ນັ້ນແມ່ນທັງຄວາມຕ້ອງການ ແລະ ໜ້າທີ່ຂອງແຕ່ລະຝ່າຍໃນໄລຍະການປະຕິວັດໃໝ່.

3. ການພົວພັນລະຫວ່າງແຂວງກວາງຈິ ແລະສະຫວັນນະເຂດ ເປັນຮູບພາບໂດຍຫຍໍ້ ຂອງການພົວພັນຮ່ວມມືແບບພິເສດ ແລະຮອບດ້ານຫວຽດນາມ - ລາວ, ເປັນການສະແດງອອກທີ່ມີຊີວິດຊີວາຂອງການພົວພັນສອງປະເທດໃນໄລຍະປະຕິວັດໃໝ່. ການພົວພັນຮ່ວມມືລະຫວ່າງແຂວງກວາງຈິ ແລະແຂວງສະຫວັນນະເຂດ ໄດ້ຮັບການປະຕິບັດຜ່ານບັນດາໄລຍະ ບົນພື້ນຖານບັນດາແຜນນະໂຍບາຍ

ແລະນະໂຍບາຍຂອງພັກ, ລັດ ແລະລັດຖະບານສອງປະເທດ. ບັນດາຜົນງານທີ່ບັນລຸໄດ້ກໍຄືບັນດາຂໍ້ຈຳກັດ ແລະຄົງຄ້າງໃນການພົວພັນຮ່ວມມືລະຫວ່າງສອງແຂວງໄດ້ສ່ອງແສງໃຫ້ເຫັນສະພາບຕົວຈິງຂອງການພົວພັນສອງປະເທດຢ່າງຄົບຖ້ວນ. ໃນສະພາບການທີ່ມີການປ່ຽນແປງຫຼາຍຢ່າງໃນໂລກ ແລະພາກພື້ນ, ການພົວພັນລະຫວ່າງສອງແຂວງຍັງໄດ້ພັດທະນາຢ່າງແຂງແຮງ ແລະບັນລຸໄດ້ບັນດາຜົນງານທີ່ສຳຄັນຫຼາຍຢ່າງ. ບົນຈິດໃຈປ່ຽນໃໝ່, ພວກເຮົາໄດ້ເສີມຂະຫຍາຍແຫຼ່ງກຳລັງພາຍໃນເພື່ອຂຸດຄົ້ນບັນດາຄວາມສາມາດບົ່ມຊ້ອນ ແລະ ທ່າແຮງທີ່ມີຢູ່, ສ້າງບາດກ້າວບຸກທະລຸທີ່ສຳຄັນໃນຂົງເຂດເສດຖະກິດ, ບົນພື້ນຖານນັ້ນ, ຍົກສູງການພົວພັນສອງຝ່າຍໃຫ້ຂຶ້ນບາດກ້າວໃໝ່, ມີຄຸນນະພາບ ແລະປະສິດທິຜົນກວ່າອີກ. ດ້ວຍວິທີການຮ່ວມມືທີ່ສະເໝີພາບ, ຜ່ານບັນດາສັນຍາຍຸດທະສາດໄລຍະຍາວ ແລະປະຈຳປີ, ການພົວພັນລະຫວ່າງ ສອງແຂວງໄດ້ຮັບການຜັນຂະຫຍາຍຢ່າງມີປະສິດທິຜົນ ແລະເລິກເຊິ່ງໃນຫຼາຍຂົງເຂດ, ໃນນັ້ນມີການຮ່ວມມືດ້ານເສດຖະກິດ, ການຄ້າ, ວັດທະນະທຳ, ການສຶກສາ - ບຳລຸງສ້າງໄດ້ກາຍເປັນຂອດຂໍກະແຈ. ບັນດາຜົນງານທີ່ບັນລຸໄດ້ໃນການພົວພັນລະຫວ່າງສອງຝ່າຍ ໄດ້ປະກອບສ່ວນອັນສຳຄັນເຂົ້າໃນການພັດທະນາຂອງເສດຖະກິດ - ສັງຄົມຂອງສອງແຂວງ, ພ້ອມກັນນັ້ນປະກອບສ່ວນຊຸກຍູ້ການພົວພັນມິດຕະພາບ ແລະການຮ່ວມມືຮອບດ້ານລະຫວ່າງສອງປະເທດຫວຽດນາມ - ລາວ ພັດທະນາ.

4. ປະຈຸບັນ, ເຖິງວ່າບັນລຸໄດ້ບາງຜົນງານອັນສຳຄັນກໍ່ຕາມ, ແຕ່ການພົວພັນລະຫວ່າງສອງແຂວງຍັງຖືກຈຳກັດ, ບໍ່ສົມກັບຄວາມສາມາດບົ່ມຊ້ອນ ແລະບໍ່ຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການ ແລະຄວາມປາດຖະໜາຂອງສອງ

ຝ່າຍ. ຂໍ້ຈຳກັດເຫຼົ່ານີ້ຕ້ອງໄດ້ຮັບການວິເຄາະເພື່ອຊອກຫາສາເຫດເພື່ອມີວິທີການແກ້ໄຂໃນໄລຍະຈະມາເຖິງ. ຂຸດຄົ້ນຢ່າງມີປະສິດ ທິຜົນກວ່າບັນດາຄວາມສາມາດບົ່ມຊ້ອນ ແລະທ່າແຮງຂອງແຕ່ລະຝ່າຍ ໂດຍສະເພາະແມ່ນຄວາມສາມາດບົ່ມຊ້ອນກ່ຽວກັບທີ່ດິນ ແລະຊັບພະຍາກອນແຮ່ທາດຂອງສະຫວັນນະເຂດ ແລະທ່າແຮງດ້ານແຮງງານ, ການຕະຫຼາດ ແລະເຕັກນິກຂອງແຂວງກວາງຈິ.

5. ໃນສະພາບການໂລກາພິວັດພວມດຳເນີນໄປຢ່າງວ່ອງໄວ ແລະໄດ້ຮັບຜົນກະທົບຢ່າງເລິກເຊິ່ງ, ສາຍພົວພັນແບບພິເສດຫວຽດນາມ - ລາວ ໂດຍສະເພາະແມ່ນການພົວພັນຮ່ວມມືລະຫວ່າງແຂວງສະຫວັນນະເຂດ ແລະກວາງຈິພວມປະສົບກັບຄວາມຫຍຸ້ງຍາກ, ສິ່ງທ້າທາຍ. ການເພີ່ມຂຶ້ນອິດທິພົນຂອງບັນດາປະເທດໃນໂລກ ແລະໃນພາກພື້ນ ແມ່ນຄວາມຫຍຸ້ງຍາກ ແລະສິ່ງທ້າທາຍຕໍ່ການພົວພັນຮ່ວມມືລະຫວ່າງສອງແຂວງ. ເຖິງແນວໃດກໍຕາມດ້ວຍມູນເຊື້ອອັນດີງາມລະຫວ່າງສອງແຂວງທີ່ມີມາແຕ່ດົນນານ ແລະບັນດາທ່າແຮງໃນການພົວພັນລະຫວ່າງສອງປະເທດ, ແນ່ນອນວ່າການພົວພັນລະຫວ່າງແຂວງສະຫວັນນະເຂດ ແລະກວາງຈິຈະສືບຕໍ່ໄດ້ຮັບການເພີ່ມທະວີ ແລະຮັດແໜ້ນກວ່າໃນໄລຍະຈະມາເຖິງ.